

# ເກີດມາ
# ເປັນຜູ້ນຳ

ປວັດຂອງ

# ຢອຣ໌ຊ ວ່ຊິງຕັນ

ໂດຍ: ໂທມັສ ເຈ. ຟລີມິງ

ແປເປັນລາວໂດຍ: ອູເຕ ຄຳວົງສາ

# ເກີດມາ ເປັນຜູ້ນໍາ

ປວັດຂອງ

# ປອຣ໌ຊ ວໍຊິງຕັນ

ແຕ່ງໂດຍ ໂທມັສ ເຈ. ຟລີມິງ

ແປເປັນລາວໂດຍ ອູແດ ຄໍາວົງສາ

## ສ າ ຣ ະ ບ າ ນ


໑. ຕອນຢູ່ທີ່ຊາຍແດນ........................ໜ້າ

໒. ນັກສຳຣວດໜຸ່ມ........................ "

໓. ຣຽນຮູ້ ຈາກປະສົບການ................ "

໔. ຊີວິດໃໝ່........................... "

໕. ຊອກທາງຈັດຕັ້ງກອງທັບ................ "

໖. ຊອກທາງ ເຮັດໃຫ້ເປັນປະເທດ........... "

໗. ການທອນໂຮມກຳລັງ.................... "

໘. ຄວາມເຂັ້ມແຂງ ແລະຄວາມສລຽວສລາດ..... "

໙. ບັ້ນ ຊັຍຊນະ......................... "

໑໐. ການກໍ່ຕັ້ງໃຫ້ເປັນຊາດຂຶ້ນ (ການເຮັດໃຫ້-
ຊາດເກີດຂຶ້ນໄດ້)..................... "

໑໑. ການຈາກໄປອັນແສນເສົ້າ............... "

# ໑. ຕອນທີ່ຢູ່ຊາຍແດນ

ມື້ນຶ່ງ ເປັນມື້ໜາວຈ້າວຈົ້ວ ໃນເດືອນທັນວາ. ມີຊາຍສອງຄົນພາກັນເຮັດວຽກ ຕລອດວັນຢູ່ແຄມແມ່ນ້ຳ ອາລີເຣູມີ ທີ່ໜາວເຢືອກເຢັນ. ເຂົາເຈົ້າພາກັນເຮັດເຮືອ ເພື່ອໃຊ້ຂ້າມນ້ຳ. ຜູ້ນຶ່ງນັ້ນເປັນຄົນຕ່ຳເຕ້ຍ ມີຊື່ວ່າ ຄຣິສໂຕຟ ກິສ, ຜູ້ທີ່ເຄີຍປະຈຳຢູ່ຊາຍແດນມາແລ້ວ. ສ່ວນຜູ້ນຶ່ງນັ້ນເປັນຄົນສູງ ຊື່ວ່າ ປອຣ໌ຊ ວໍຊິງຕັນ.

ທ່ານວໍຊິງຕັນ ມີຮູບຮ່າງສູງກວ່າຫລາຍໆຄົນ ໃນບັນດາຄົນສ່ວນມາກ ເຊິ່ງເປັນຄົນພຍາດແດ ທີ່ບໍ່ມີອາຫານດີກິນພຽງພໍແດ່ ອັນພາໃຫ້ເຂົາເຈົ້າບໍ່ໃຫຍ່ເຕີບໂຕໄດ້ເຕັມສ່ວນ. ແຂນຂາຂອງລາວນັ້ນຍາວເປັນພິເສດ, ແລະມືກໍ່ໃຫຍ່ກວ່າມືໝູ່ທັງຫລາຍ ມືຂອງລາວແຂງແຮງແລະເຂັ້ມແຂງຕ່າງໝູ່ ເນື່ອງມາຈາກບ່າ ແລະ ໜ້າອົກກວ້າງ. ເວລາຍັງນ້ອຍ ລາວສາມາດແກວ່ງໝາກຍານໄປໄດ້ໄກກວ່າໝູ່.

ເວລາເຮືອວຽກ ທ່ານວໍຊິງຕັນ ຕ້ອງໃຊ້ໝົດເຫື່ອແຮງ ຂອງລາວ ເພື່ອສູ້ກັບຄວາມໜາວຢູ່ແຄມແມ່ນ້ຳ ອາລີ ເຣນີ. ບ່ອນທີ່ທ່ານວໍຊິງຕັນ ແລະທ່ານກິສ ພາກັນເຮັດເຮືອນັ້ນ, ດຽວນີ້ ເປັນສ່ວນນຶ່ງຂອງເມືອງ ພິສເບີກ, ແປນຊິນວານີອາ ຢູ່ພາກຕາເວັນອອກຂອງສະຫະຣັດ. ໃນປີ ໑໗໕໓ ມີປ່າຕຶບດົງໜາອັນສູດຊົ່ວຕາ ຫຸ້ມພູມີພາກນັ້ນຢູ່. ບັດນີ້ຊາຍທັງສອງ ຮູ້ສຶກເມື່ອຍແລວ ເຂົາເຈົ້າໄດ້ພາກັນເຮັດວຽກ ມາຕັ້ງຫລາຍມື້ຫລາຍເວັນ ຢູ່ທ່າມກາງອາກາດອັນໜາວສະບັ້ນ ຈົນວ່າບ່ອນໃດ ທີ່ມີນ້ຳນ້ອຍນ້ຳຕື້ນ ກໍ່ກາຍເປັນນ້ຳກ້ອນເລີຍ, ທາງນ້ຳຈະດື່ມກໍບໍ່ມີ ໃນທີ່ສຸດເວລາກໍຄ່າຍຄ່ຳ ແສງຕາເວັນລັບປ່າ ພູເຂົາເສັຽແລວ. ເຮືອນ້ອຍຂອງເຂົາເຈົ້າ ກໍສຳເຣັດພໍດີ. ເຂົາເຈົ້າຈຶ່ງກຽມ ຫາໄມ້ພາຍໄວທໍ່ ຄົບແລວກໍລົງເຮືອ ພາກັນອອກເດີນທາງສຽງພັຍອັນຕະຣາຍຕໍ່ໄປ.

ເຂົາເຈົ້າໄດ້ພົບພໍ້ກັບຄວາມລຳບາກຢ່າງເຕັມທີ ໃນຂັ້ນຕົ້ນ. ແຮງຂອງທ່ານວໍຊິງຕັນ ສູ້ກັບແຮງນ້ຳພັດບໍ່ໄຫວ, ເຮືອຈຶ່ງໄຫຼໄປຕຳໂງ່ນນ້ຳກ້ອນ ເກືອບປິ້ນຂວ້ຳ. ນ້ຳພັດເຮືອຊັດໄຫຼໄປມາ ຄືກັນກັບໄມ້ແປນນ້ອຍໆ ຢູ່ກາງແກ່ງ. ເພື່ອເອົາເຮືອອອກຈາກບ່ອນນ້ຳໄຫຼ ພັດແຮງໂພດນັ້ນ ທ່ານວໍຊິງຕັນ ຈຶ່ງຕັ້ງໃຈສັກໄມ້ຖໍ່ລົງ ຊູອກໄປໃນພື້ນນ້ຳ ເພື່ອຢາກຈັ້ງເຮືອໄວ ສັກຊອກໄປມາເລີຍໄປຖືກແປ່ວນ້ຳກ້ອນ ໄຫຼທັ່ງແຮງບ່ອນນຶ່ງ.

ຍາມນັ້ນ ເປັນຍາມທີ່ພາໃຫ້ວໍຊິງຕັນ ຮັບຮູ້ວ່າ ກຳລັງກະແສນ້ຳຮ້າຍແຮງທີ່ສຸດ ແມ່ນຍາມທີ່ໄມ້ຖໍ່ຂອງລາວ ຍັ່ງເຖິງ

ພົ້ນນ້ຳແລ້ວ, ເຮືອລາວກໍຕິດເຝືອນປົ່ນປົ່ນເຫັນ· ຈົນຈ້ວງບໍ່ຢູ່ ແລະຫົວສີກລົງນ້ຳ ໜາວເປັນປານນ້ຳກອນ. ເຮືອໄຫຼອອກໄປ ຢ່າງໄວ ຈົນວ່າທ່ານກິສ ເພື່ອນຂອງລາວກໍພໍແຕ່ແນມເຫັນກັນ ເທົ່ານັ້ນ ແຕ່ກໍຊ່ອຍຫຍັງກັນບໍ່ທັນ. ມັນເປັນຈັງຫວະນຶ່ງ ພໍດີ ກັບທ່ານວໍຊິງຕັນເດແຂນພົ້ນນ້ຳຂຶ້ນມາ. ມືໃຫຍ່ຂອງລາວ ທັນ ຄ້ວໄປຈອງແຄມເຮືອໄວ້ໄດ້ ແລ້ວກໍປີນຂຶ້ນເຮືອທັນທີ.

ເຄື່ອງນຸ່ງລາວກໍປຽກທັງເປັນນ້ຳກອນເຂົ້າອີກ. ທ່ານ ວໍຊິງຕັນ ຈຶ່ງເຫັນວ່າຈະໄປໜ້າກໍບໍ່ໄດ້ ຈະກັບຄືນກໍບໍ່ເປັນ. ລາວເລີຍບອກໃຫ້ທ່ານກິສ ຈອດເຮືອໄວ້ກ່ອນ ຈອດໄດ້ແລ້ວ ເຂົາເຈົ້າກໍພາກັນຄາງຄືນ ສັ່ນໜາວຢູ່ ໂດຍບໍ່ມີຟືນມີໄຟຫຍັງ ໝົດ ໃນທີ່ສຸດ ກໍມີແຕ່ພາກັນຍ່າງໄປມາ ເມື່ອຍແລ້ວ ກໍພາກັນ ເອົາມືເອົາຕີນຕົບກັນແກ້ໜາວ ພໍໃຫ້ພົ້ນຢູ່ໄດ້ ເຂົາເຈົ້າເຫັນ ວ່ານານແຈງຫຼາຍ ທ່ານກິສທົນໜາວບໍ່ໄດ້ ກໍເກີດມີອາການ ເຈັບຕີນເຈັບມື ສ່ວນທ່ານວໍຊິງຕັນ ເຖິງແມ່ນຕົກນ້ຳປຽກ ກໍຍັງ ທົນໄດ້ດີຢູ່ ຮຸ່ງເຊົ້າມາລາວກໍໄປເລາະເບິ່ງແມ່ນ້ຳ ໃນທັນໃດ ທ່ານວໍຊິງຕັນ ທັງນອນທັງຮ້ອງໄປບອກເພື່ອນຍາກຂອງລາວວ່າ ນ້ຳອັນເປັນສັດຕຣູຂອງເຮົານັ້ນ ດຽວນີ້ ໄດ້ກັບປ່ຽນເປັນກອນ ແຂງໝົດແລ້ວ. ເຮົາລົງຍ່າງຂ້າມແມ່ນ້ຳນີ້ໄປໄດ້ເລີຍ.

ຍາມທີ່ ທ່ານວໍຊິງຕັນ ໄດ້ຊັຍຊະນະພົ້ນພັຍ ຈາກແມ່ນ້ຳ ອາລີເຣນີ ນັ້ນ ພໍດີຢູ່ໃນວັຍ ໒໑ ປີ ພໍດີ ລາວເດີນທາງມາກໍ ເກືອບໄປຮອດເມືອງ ຜ່ານດິນແດນອັງກວາງໃຫຍ່ໄພສານແລະ ໜາວ ທັງໄດ້ຊາບຂ່າວອີກວ່າ ມີສົງຄາມໂລກເກີດຂຶ້ນແລ້ວ,

ໂດຍແມ່ນປະເທດຝຣັ່ງເສດ ໄດ້ສົ່ງປືນໃຫ້ພວກອິນເດັຽ ແລະໄດ້ສ້າງຄ່າຍຂຶ້ນ ໃສ່ດິນ ທີ່ພວກອັງກິດຄຸ້ມຄອງຢູ່. ດິນແດນເຂດນີ້ ຕິດກັບທິດໃຕ້ ຂອງເວິງໜອງນ້ຳ ເອຣິກ ທາງພາກຕາເວັນອອກ ສຽງເໜືອຂອງປະເທດ ພວກຝຣັ່ງເສດ ໄດ້ທາງທາ ເພື່ອຄວບຄຸມເອົາເຂດທົ່ງກວ້າງ ໂອຮາຍໂອ ຖວາຍແກ່ເຈົ້າຊີວິດຂອງເຂົາ. ສ່ວນທ່ານຮາເບີດ ດິນວິດດີ ທີ່ເປັນຜູ້ປົກຄອງຝ່າຍອັງກິດ ຢູ່ເຂດເວີຊີເນັຽ ຕາເວັນອອກສຽງໃຕ້ນັ້ນ ໄດ້ຕັດສິນວ່າ ຕ້ອງບັງຄັບຝຣັ່ງເສດໃຫ້ຖອຍຄືນ ຫລືວ່າສູ້ກັນ ຢູ່ໝົດເຂດຂອງເວີຊີເນັຽ ລາວເຫັນວ່າ ມີແຕ່ຄົນຜູ້ດຽວທີ່ສມັກປາກເດີນທາງເຂົ້າຜ່າປ່າເລິກ ແລະນ້ຳອັນໜາວເຢັນໄດ້ ແມ່ນຊາຍໜຸ່ມທີ່ຊື່ວ່າ ຢອຣ໌ຊ ວໍຊິງຕັນນັ້ນເອງ.

ເປັນທີ່ຮັບຮູ້ກັນແລ້ວວ່າ ຊາຍໜຸ່ມຜູ້ນີ້ ມີຄວາມຮອບຮູ້ເທົ່າທຽມກັບທ່ານກົສອາຍໃຫຽ ທີ່ມີອາຍຸ ໔໔ ປີ ຢູ່ແລ້ວ ທ່ານວໍຊິງຕັນ ຈຶ່ງຟ້າວຈັດຕັ້ງກຸ່ມນ້ອຍຂຶ້ນເຈັດຄົນ ແລ້ວນຳເຂົາເຈົ້າເດີນທາງ ຝົ້ນປ່າເລິກໄພສົນ ເຖິງ ໔໐໐ ໄມ ໃນຍາມໜາວອີກດ້ວຍ ເພື່ອໄປເຈຣະຈາກັບ ຜູ້ບັງຄັບຝ່າຍຝຣັ່ງເສດ.

ເວລາເດີນທາງໄປນັ້ນ ທ່ານວໍຊິງຕັນ ໄດ້ຜູກຮັກຜູກແພງ ໄວ້ກັບບັນດາຫົວໜ້າພວກອິນເດັຽທົ່ວໄປ ແລະພະຍາຍາມສືບຮູ້ ວ່າຝຣັ່ງເສດໄດ້ວາງແຜນເຮັດຫຍັງແດ່. ເພື່ອພົບພໍ້ ກັບທະຫານຝຣັ່ງເສດ ຢູ່ໃນປ່າ ລາວກໍໄດ້ກິນເຂົ້າ ຊຸມກັນແລະຍົວະເຂົາດື່ມ ແຕ່ລາວເອງບໍ່ດື່ມ ບໍ່ນານ ພວກຝຣັ່ງເສດກໍໄຂຄວາມລັບ ເຣື່ອງແຜນການກອງທັບເຂົາອອກມາສູ່ຟັງ. ໃນ

ທີ່ສຸດລາວຈຶ່ງຮູ້ແຜນທັງມວນ ທີ່ຝຣັ່ງເສດກຽມໄວ້ຕີເອົາທົ່ງໂຮ ຮາຍໂຮ.

ທ່ານວໍຊິງຕັນ ຈຶ່ງຮີບນຳເອົາຂ່າວ ກັບມາແຈ້ງ ທີ່ເວີຊີເນັຽ ວັນເດືອນຜ່ານພົ້ນໄປຮອດອາຍຸລາວໄດ້ ໒໒ ປີ ລາວຈຶ່ງກັບໄປສູ່ເຂດຊາຍແດນອີກ ເພື່ອນຳໜ້າກອງທັບ ຍາມໃດພວກສະຫາຍຝ່າຍອິນເດັຽ ມາໃຫ້ຂ່າວບ່ອນທະຫານຝຣັ່ງເສດຢູ່ ຜູ້ບັນຊາການໜຸ່ມກ່າຫານ ກໍສັ່ງໃຫ້ຕີບຸກ ໄປເລີຍໆ ໃຊເວລາໝົດຄືນຢ່າງບໍ່ເຊົາ ບໍ່ນານລາວກໍສາມາດນຳກອງທັບສີດຕູ ທີ່ນອນຫຼັບ ໄດ້ໝົດທຸກຄົນ ໃນທັນໃດນັ້ນ ທ່ານວໍຊິງຕັນ ຜູ້ເກັ່ງກາ ກໍຍ່າງອອກໄປບ່ອນກາງແຈ້ງ ຮ້ອງປ່າວໄປບອກວ່າຝຣັ່ງເສດຖືກລ້ອມແລ້ວ ໃຫ້ຍອມຈຳນົນໂດຍດີ.

ຝ່າຍຝຣັ່ງເສດ ກໍຊາກປືນຍິງຕອບໄປໃສ່ ຖືກຜູ້ນຶ່ງຕາຍແລະສອງຄົນຢູ່ຂ້າງໆທ່ານວໍຊິງຕັນ ລົ້ມຟຸບລົງ ທາງຝ່າຍພວກເວີຊີເນັຽ ກໍຍິງຕອບໄປໃສ່ພວກຝຣັ່ງເສດ ບຶດດຽວ ການຕໍ່ສູ້ກັນກໍສິ້ນສຸດລົງ ຝ່າຍຝຣັ່ງເສດຕາຍສິບຄົນ ຖືກຈັບໄດ້ ໒໑ ຄົນຄິດດີໃຈຫຼາຍ ທ່ານວໍຊິງຕັນ ຈຶ່ງມີໜັງສືໄປສົ່ງຂ່າວ ໃຫ້ຜູ້ປົກຄອງ ຄືທ່ານ ດິນວິດດີ ວ່າ ຖ້າວ່າກອງທັບຝຣັ່ງເສດ ຫາກສາມາດຮົບໄດ້ແຕ່ສ່ຳນັ້ນ ລາວແນ່ໃຈທີ່ສຸດວ່າ ຄົງໄດ້ຕີໃຫ້ເຂົ້າຖອຍຄືນໄປເນົ້າເຣິອານ ການາດາພູ້ນ ໝົດ.

ຄວາມຄິດທີ່ສະແດງອອກວ່າ ຕົນກາເກັ່ງນັ້ນ ຜິດຈາກຄວາມຈິງໄປເສັຽແລ້ວ ເຫດຜົນກໍຄືວ່າ ໃນອາທິດຕໍ່ມາ ເລີຍມີທະຫານຝຣັ່ງເສດ ໝູ່ໃໝ່ມາສູ້ຮົບກັບລາວອີກ ແລະຄົນຂອງ

ລາວ ຊຶ່ງບໍ່ເຄີຍໄດ້ຝຶກແອບກັນມາກ່ອນນັ້ນ ຢູ່ທີ່ຄ້າຍເນແຊດຊິ ຕີ ອັນເປັນຄ້າຍບໍ່ແຂງແຮງເທົ່າໃດ ແລະຫາກໍ່ຕັ້ງກັນຂຶ້ນໃໝ່ ຢູ່ເຂດຊຶ່ງວ່າ ກຣິເນີໂດ. ສະຖານທີ່ແຫ່ງນີ້ຢູ່ເບື້ອງຕາເວັນຕົກ ຂອງແມ່ນ້ຳ ອາລີເຣນີ ທີ່ເປັນດິນສູງ ແລະຣາບພຽງດີ. ທ່ານ ວໍຊິງຕັນຈັດຄົນຂອງລາວ ອອກຕໍ່ສູ້ ພະຍາຍາມຕີກັບພວກຝຣັ່ງ ເສດ ຢູ່ບ່ອນແປນໆເລີຍ ສ່ວນທະຫານຝຣັ່ງເສດ ທີ່ມີການຝຶກ ແອບ ຣຽບຮ້ອຍດີນັ້ນ ໄດ້ຫາກາວ ແລະມີບ່ອນກຳບັງຢູ່ເບື້ອງ ຫຼັງຕົ້ນໄມ້ ແລະໂງ່ນຫີນ ຈຶ່ງຍິງປືນສຸ່ມໃສ່ຄົນ ຂອງທ່ານວໍຊິງ ຕັນ ຕາຍຢ່າງງ່າຍໆຕັ້ງມາກມາຍກ່າຍກອງ ປານນັ້ນພວກເວີຊີ ເນັຽ ກໍ່ພົ້ນພັຍໄປໄດ້.

ໃນຄືນນັ້ນ ຄົນຂອງທ່ານວໍຊິງຕັນ ປະມານນຶ່ງສ່ວນສາມ ເກືອບເຖິງ ໔໐໐ ຄົນ ຖືກຂ້າຕາຍ ຫຼື ບາດເຈັບ ຝ່າຍຝຣັ່ງ ເສດ ໄດ້ສເນີບອກຕໍ່ພວກທີ່ຍັງມີຊີວິດຢູ່ ໃຫ້ເຂົາເອົາປືນຂອງ ເຂົາຕິດຕົວກັບຄືນເມືອ ຖ້າເຂົາຫາກຮັບວ່າ ຈະກັບເມືອຢູ່ເວີຊີ ເນັຽ ວໍຊິງຕັນພອງເບື້ອງຮອບໆໄປ ລາວຮູ້ວ່າ ຄົນຂອງ ລາວ ເສັຽຫວັງແລ້ວ ແລະມີບາງພວກພາກັນດື່ມເຫຼົ້າ ຫຼົ້ນຢູ່ແຈມີດພູມ ບໍ່ມີທາງໃດແລ້ວ ນອກຈາກຈະຮັບວ່າ ເສັຽໄຊຍເປັນເທື່ອທຳອິດ ຂອງລາວ.

ນັ້ນຕໍ່ໄປ ຄົນຂອງທ່ານວໍຊິງຕັນ ກໍ່ພາກັນກັບຄືນເມືອເວີຊີ ເນັຽ ເທື່ອລະນ້ອຍ ທັງເຈົ້ຽເອົາພວກເຈັບປ່ວຍເມືອນຳ ນັ້ນສົນ ຄວາມໝາຍ ສຳລັບວໍຊິງຕັນ ແມ່ນວັນທີ ໔ ເດືອນ ກໍຣະກະ ດາ (ກ) ຊຶ່ງໃນຂັ້ນຕໍ່ໄປພຸ້ນ ໄດ້ກາຍເປັນວັນເອກຣາດ ຂອງ

ຊາວອະເມຣິກັນ.

ເຈັດປີຕໍ່ມາ ຝຣັ່ງເສດແລະອັງກິດ ຈຶ່ງເກີດຂັດແຍ່ງອຳນາດກັນຂຶ້ນທີ່ເອີຣົບ ອິນເດັຽ ຕາເວັນຕົກ ອາຊີ ແລະອະເມຣິກັນ ຈົນເປັນເຫດໃຫ້ເກີດສົງຄາມໂລກຂຶ້ນ ເຊິ່ງເປັນຍາມທີ່ວໍຊິງຕັນ ໄດ້ເຫັນໄດ້ຣູ້ປືນໄຟ ແປກປລາດຢູ່ ທີ່ອະເມຣິກັນຫລາຍຄົນບໍ່ຮູ້ ວ່າເປັນຫຍັງຫນຸ່ມໃຫຍ່ລ້ຳສັນເວີຊີເນັຽຜູ້ນີ້ ທີ່ເກີດຢູ່ໄກລອນດອນ ແລະປາຣີ ຕັ້ງສາມພັນໄມ ເຊິ່ງຍາມນັ້ນມີອາຍຸພຽງ ໒໑ ປີ ຍັງສາມາດປາກົດຕົວຂຶ້ນ ຕໍ່ຕາຄົນທົ່ວໂລກໄດ້ ແມ່ນລາວມາແຕ່ໃສແທ້? ລາວເກີດມາກໍ່ບໍ່ໄດ້ກ້າເກັ່ງຢ່າງເຕັມປ່ຽມຫຼືມີກົງຈັກພາແລ່ນ ຮອບຮູ້ຕລອດປວັດການຢ່າງໃດດອກ. ດັ່ງນັ້ນໃຜກໍ່ບໍ່ສາມາດຮູ້ເຖີງຄວາມຍິ່ງໃຫຍ່ຂອງວໍຊິງຕັນໄດ້ ຖ້າວ່າບໍ່ສຶກສາເບິ່ງຊີວະປວັດຂອງລາວແຕ່ຍັງນ້ອຍພຸ້ນມາ.

# ໒. ນັກສຳຣວດໜຸ່ມ

ທ່ານຢອຣ໌ຊ ເປັນລູກຊາຍຜູ້ທີ່ສາມ ຂອງທ່ານໂອກູສຕິນ ວໍຊິງຕັນ ຊຶ່ງເປັນຜູ້ບຸກບັ່ນເຮັດວຽກນາ ຈົນຮັ່ງມີເປັນດີ ມີດິນດອນອັນກວ້າງໃຫຍ່ ຢູ່ເວີຈີເນັຍ ທັງເປັນຂາຫຸ້ນສ່ວນບໍຣິສັດໜຶ່ງ ກິຈການຢ່າງມາກມາຍ ແຕ່ກຳໄລບໍ່ຫລາຍເທົ່າໃດ. ທ່ານໂອກູສຕິນ ແຕ່ເມື່ອຍັງນ້ອຍຮຽນຢູ່ແອໄປບີແລ້ວກໍເຂົ້າຮຽນ ທີ່ໂຮງຮຽນສຳຄັນ ຢູ່ທີ່ອັງກິດ ລາວໄດ້ສົ່ງລູກຊາຍສອງຄົນຜູ້ກົກແລະຜູ້ທີ່ສາມຂອງເມັຽກົກລາວໄປເຂົ້າໂຮງຮຽນດຽວກັນ ທ່ານຢອຣ໌ຊ ທີ່ເປັນລູກຊາຍກົກຂອງມາຣີບານ ເມັຽຜູ້ທີ່ສອງຂອງໂອກູສຕິນ ກໍສົມຄວນຈະຖືກສົ່ງເຂົ້າໂຮງຮຽນທີ່ມີຊື່ສຽງນັ້ນ ເໝືອນກັນ ແຕ່ບັງເອີນວ່າ ເວລາທ່ານ ຢອຣ໌ຊ ອາຍຸໄດ້ ໑໑ ປີ ພໍ່ຂອງລາວ ຊຶ່ງເຄີຍເປັນຄົນມີເຮື່ອມີແຮງ ເໜືອກວ່າຕັ້ງຫລາຍຄົນ ເລີຍມີອາການປ່ວຍຢ່າງກະທັນຫັນຮອດວັນທີ ໑໒ ເດືອນເມສາ (໔) ໑໗໔໓ ກໍເລີຍຕາຍໄປ.

ຕໍ່ແຕ່ນັ້ນໄປ ທ່ານຢອ໌ຣຊ ວໍຊິງຕັນ ກໍບໍ່ມີຜູ້ເອົາໃຈໃສ່ ທັງເປັນຜູ້ເສັຽປຽບໃຫ້ໝູ່ ໃນຄອບຄົວດ້ວຍ ເວົ້າຕາມກົດ ໝາຍຂອງອັງກິດແລ້ວ ຜູ້ເປັນລູກຊາຍກົກ ຊຶ່ງແມ່ນທ່ານ ລໍຣັງ ວໍຊິງຕັນ ພຸ່ນເປັນຜູ້ໄດ້ຮັບດິນມູນ ແລະເງິນຄຳຫຼາຍກວ່າໝູ່ ສ່ວນທ່ານຢອ໌ຣຊ ວໍຊິງຕັນ ກໍເລີຍບໍ່ມີທຶນທາງ ໄດ້ໄປຮຽນຢູ່ທີ່ ແອ້ໂປບີ ນຳໝູ່. ລາວເລີຍໄດ້ຢູ່ໄຮ່ຢູ່ນານຳແມ່ກັບນ້ອງສາວ ຜູ້ນຶ່ງ ແລະນ້ອງຊາຍຂອງລາວສາມຄົນ ມາຣີບານ ແມ່ຂອງ ລາວເປັນຄົນຮ້າງໃຫຍ່ ໃຈກ້າແຕ່ຄຽດງ່າຍ ຜູ້ຄົນທັງຫຼາຍ ກໍ ເກງກົວລາວ ຫຼາຍປີຕໍ່ມາ ມີພີ່ນ້ອງຂອງທ່ານວໍຊິງຕັນ ທີ່ເຄີຍ ຫຼິ້ນນຳກັນມາແຕ່ນ້ອຍພຸ້ນ ເວົ້າວ່າລາວຍັງຈື່ໄດ້ດີຢູ່ວ່າລາວຢ້ານ ມາຣີບານ ນີ້ຫຼາຍກວ່າພໍ່ແມ່ລາວເອງ ຕັ້ງຫຼາຍສິບເທື່ອ. ຕໍ່ ມາບໍ່ນານ ກໍປາກົດວ່າທ່ານຢອ໌ຣຊ ກັບແມ່ຜູ້ໃຈກ້າຂອງລາວນັ້ນ ບໍ່ຄ່ອຍລົງຮອຍກັນປານໃດ ໃນຫຼາຍສິ່ງ ຫຼາຍຢ່າງ. ມື້ນຶ່ງ ທ່ານຢອ໌ຣຊ ເອົາມ້າທີ່ແຂງແຮງຕົວນຶ່ງມາແອບຂີ່ ສ່ວນແມ່ຂອງ ລາວຊຶ່ງເປັນຜູ້ນຶ່ງ ທີ່ຂີ່ມ້າເກັ່ງ ກໍສົນໃຈນຳການແອບ ຈຶ່ງໄປ ເບິ່ງລູກຊາຍ ທີ່ເປັນຜູ້ຂີ່ມ້າເກັ່ງຄືກັນ ເພື່ອຢາກແນະນຳລູກ ບາງສິ່ງບາງຢ່າງ ແຕ່ລູກຊາຍບໍ່ມີຄວາມລຳບາກຫຍັງ ເພື່ອບັງ ຄັບແລະຂີ່ມ້າ ດ້ວຍວ່າຂາລາວຍາວຫຼາຍ ຈົນຮອບຕົວມ້າໄດ້ດີ ແລະແຂນລາວ ກໍຍາວທັງແຮງ ຈະດຶງມ້າໃຫ້ຢຸດ ກໍໄດ້ງ່າຍໆ ສ່ວນມ້າຢູ່ທົ່ງນານັ້ນ ກໍແຂງແຮງຄືກັນ ແຕ່ວ່າ ເມື່ອມາແລ່ນ ເຕັ້ນອ້ອມເດີ່ນໄປມາ ບໍ່ເຊົາ ເຖິງສີ່ຊົ່ວໂມງເຕັມໆ. ແລະ ຫນຸ່ມແຫນ້ນຜູ້ຂີ່ມ້າ ກໍຍັງບໍ່ເມື່ອຍແລະກໍບໍ່ຕົກມ້າຈັກເທື່ອ ມາກໍສູ

ບໍ່ໄຫວ ເລີຍເກີດມີເລືອດໄຫລທົ່ວອອກປາກ ແລ້ວລົ້ມລົງເກືອກ ດິນຕາຍ. ອາດຈະແມ່ນ ເວລາທີ່ແມ່ເຫັນມາຕົວແຂງແຮງນັ້ນ ຕາຍຍອມລູກຊື້ນຫຼາຍ ແມ່ຈຶ່ງມາຄິດວ່າຕົນຈະໃຊ້ສິດອຳນາດ ເວົ້ານຳປອຣ໌ຊູ ລູກຊາຍຜູ້ນັ້ນ ຄືທີ່ຕົນເຄີຍໃຊ້ສິດ ເວົ້ານຳພວກ ນ້ອງຊາຍແລະນ້ອງສາວ ຂອງປອຣ໌ຊູນັ້ນ ຄົງບໍ່ໄດ້ຜົນ.

ຫຼັງຈາກພໍ່ຕາຍ ຫຼາຍເດືອນຕໍ່ມາ ທ່ານປອຣ໌ຊູ ໄດ້ໃຊ້ ເວລາສ່ວນຫຼາຍ ໄປຢ້ຽມຢາມພວກອ້າຍຂອງລາວ ທ່ານໂອກຸສ ຕິນ ແລະ ທ່ານລໍລັງເຊີ ເຂົາເປັນອ້າຍນ້ອງ ກັນ ເພາະວ່າ ແມ່ຂອງ ໂອກຸສຕິນ ແລະລໍລັງເຊີ ເປັນເມັຽກົກ ອີສຕິນ ຫຼື ໂອກຸສຕິນ ເປັນຜູ້ຫນ້າຮັກ ຊອບດື່ມແລະມີນາງຫຼາຍຕົວໄວ ແລນ ແຂ່ງຂັນກັນ ແຕ່ວ່າ ແມ່ນທ່ານລໍລັງເຊີ ຜູ້ອ້າຍອາຍຸ ໔໘ ປີ ທີ່ທ່ານປອຣ໌ຊູ ຮັກຫຼາຍກວ່າ ດ້ວຍຄວາມຮູ້ສຶກວ່າແມ່ນ ຜູ້ນັ້ນ ທີ່ ເຄີຍໃຫ້ຄວາມເຫັນໃຈຕໍ່ກັນ ວ່າເປັນກຳພາພໍ່ ທ່ານ ລໍລັງເຊີ ເຣີ່ມຊີວິດດ້ວຍການເປັນທະຫານ ລາວເຂົ້າຮັບໃຊ້ ໃນກອງທັບ ເຮືອ ໃນປີ ໑໗໔໑ ຢູ່ໃຕ້ບັງຄັບບັນຊາຂອງທ່ານແອດເວີດ ເວີ ນົງ ຢູ່ໃນຈຳພວກເວີຊີເນັຽ ສີ່ຄົນທີ່ຈະຖືກເລື່ອນຂັ້ນເປັນນາຍ ຮ້ອຍໃນກອງທັບ ເລີຍແມ່ນທ່ານລໍລັງເຊີ ຜູ້ນຶ່ງໃນຈຳນວນນັ້ນ ເປັນຜູ້ໄດ້ຮັບກຽດຈາກທຸກຄົນ ລາວເລີຍແຖມຊື່ເຮືອນ ຂອງພໍ່ ລາວວ່າ "ເມົ້າ ເວີນົງ" ເພື່ອເປັນກຽດສັນຍາຮັກຂອງເວີນົງ ນາຍຜູ້ບັງຄັບບັນຊາຂອງລາວ.

ຝ່າຍສອງອ້າຍນ້ອງ (ໂອກຸສຕິນ ແລະ ລໍລັງເຊີ) ຜູ້ ພຍາຍາມ ສອນ ບາງສິ່ງ ບາງຢ່າງທີ່ເຂົາເຈົ້າຮຽນມາ ໃຫ້

ແກ່ ຢອຣ໌ຊ ນ້ອງຂອງຕົນ ເຫັນເປັນເຊັ່ນນັ້ນ ເມື່ອຮອດຍາມໜາວມາ ແມ່ຂອງລາວຈຶ່ງໄດ້ຕັດສິນໃຈວ່າ ໃຫ້ລາວໄປເຂົ້າໂຮງຮຽນຢູ່ ຟຣເດຣິກສະເບີກ ທີ່ເວີຈີເນັຽ ຜູ້ສົ່ງຂ່າວໃຫ້ເຂົາຮູ້ກ່ຽວກັບການຮຽນ ຂອງທ່ານຢອຣ໌ຊ ແມ່ນພີ່ນ້ອງຂອງທ່ານຢອຣ໌ຊເອງ ເວລາຫວ່າງ ນ້ອງຊາຍຂອງລາວຊື່ ທ່ານຊາມູແອນ ມັກແລ່ນຫຼິ້ນກັບໝູ່ ສ່ວນທ່ານຢອຣ໌ຊ ແທບບໍ່ໄປຫຼິ້ນໃສຫາເຄື່ອງຮຽນຢູ່ກັບໂຮງຮຽນນັ້ນ ຊາຍໜຸ່ມຜູ້ນີ້ມີໃຈເຂັ້ມແຂງຢາກໄດ້ຢາກດີແທ້ໆ ບໍ່ນານທ່ານຢອຣ໌ຊ ກໍຮຽນຈົບຈາກ ໂຮງຮຽນ ແລະອານາຄົດຂອງລາວ ທາງດຽວ ກໍປາກົດວ່າກຽມໄປເຮັດນານຳແມ່ຜູ້ໃຈແຂງຂອງລາວ ທ່ານຢອຣ໌ຊກໍໄປເລົ່າບັນຫາຫຍຸ້ງຍາກ ສູ່ອ້າຍ ລໍຣັງເຊ ຟັງ. ເມື່ອທ່ານລໍຣັງເຊ ຊາຍແລ້ວກໍຄິດຫາທີມທາງຕ່າງໆ ເພື່ອເອົານ້ອງ ອອກຈາກຄວາມຄວບຄຸມ ຂອງແມ່ໃຫ້ໄດ້.

ອ້າຍລາວບອກວ່າ ແຕ່ກ່ອນພຸ້ນ ເຄີຍມີຄົນໃນຄອບຄົວຂອງ ທ່ານຢອຣ໌ຊ ຜູ້ນຶ່ງເຄີຍເຮັດວຽກ ຢູ່ກຳປັ່ນທ່ຽວທະເລເປັນຫຼັງແລ້ວ ຈຶ່ງບໍ່ໃຫ້ທ່ານຢອຣ໌ຊ ໄປທ່ຽວທະເລຄືກັນ ແລະບາງທີ ເມື່ອໄປຮອດອັງກິດແລ້ວ ຈຶ່ງທົດລອງຂໍເປັນນາຍທ້າຍຢູ່ນຳກຳປັ່ນອັງກິດກໍຕ້ອງໄດ້ແມ່ນບໍ່? ທ່ານຢອຣ໌ຊ ກໍຮັບທັນທີແລ້ວສອງອ້າຍນ້ອງກໍຂຽນໜັງສືຫາກັນຢ່າງລັບໆ ບໍ່ໃຫ້ແມ່ຮູ້ແຕ່ຢາກໃຫ້ແມ່ຮັບຮູ້ໂຄງການນຳ ແລະອະນຸຍາດໃຫ້ໄປຕາມທີ່ກະກັນໄວ້ ທ່ານລໍຣັງເຊ ຈຶ່ງໄປຊວນໝູ່ຜູ້ສຳຄັນຫຼາຍຄົນມາລົມເຣື່ອງນີ້ນຳແມ່ ແຕ່ວ່າ ແມ່ບໍ່ໃຫ້ຕັດພົ້ນຈັກຢ່າງ ວ່າເປັນ

ຫຼັງ ຢອ໌ຣຊ ບໍ່ຄວນໜີຈາກແມ່ໄປ. ຮອດຂັ້ນສຸດທ້າຍ ກໍວ່າ ແຕ່ບໍ່ໃຫ້ໄປ.

ຍາມນັ້ນ ທ່ານຢອ໌ຣຊ ມີອາຍຸ ໑໔ ປີ ລາວຂຽນໜັງສື ບໍ່ເກັ່ງປານໃດ ແຕ່ເກັ່ງທາງໄລ່ເລກທາງຄຳນວນ ສ່ວນທ່ານລໍ່ ຣັງເຊີ ຈຶ່ງຄິດອອກວ່າ ວິຊາການຄຳນວນຄົງເປັນການດີ ແກ່ ທ່ານຢອ໌ຣຊ ທີ່ຈະພາລາວພາຍຈາກທົ່ງໄຮ່ທົ່ງນາໄດ້ ໃນສມັຍ ນັ້ນ ຢູ່ເວີຈີເນັຽ ຜູ້ໃດເປັນນັກຄຳນວນ ກໍຖືວ່າເປັນຜູ້ສຳຄັນ ລາວເອງໄດ້ທຳການສຳຮວດເບິ່ງດິນໃໝ່ ຢູ່ແຖວຕາເວັນຕົກ ແຫ່ງນັ້ນແລ້ວວ່າເໝາະສົມໃຫ້ຄົນໄປສືບຊາວຢູ່ໄດ້.

ສ່ວນດິນທີ່ເປັນປ່າເລິກດົງໜາ ຕໍ່ສາຍພູ "ບລູຣິສເຊີ ເມົາເຕັນ" ໄປພຸ້ນ ທ່ານລໍ່ຣັງເຊີ ແລະພວກເພື່ອນຂອງລາວ ກໍໄດ້ກະໂຕງການວ່າ ຈະຕັ້ງເປັນພວກເປັນຄນະຂຶ້ນ ເພື່ອມາ ຈັບຈອງເອົາດິນ ຢ່າງກວ້າງຂວາງ ຢູ່ເຂດທົ່ງພຽງຂອງແມ່ນ້ຳ ໂອຮາຍໂອ.

ບໍ່ນານ ທ່ານຢອ໌ຣຊ ກໍເຮັດວຽກໄດ້ ແລະຮຽນເຮັດ ວຽກໃໝ່ອັນນີ້ຕໍ່ໄປ ເມື່ອອາຍຸລາວໄດ້ ໑໔ ປີ ລາວກໍໄດ້ຮັບ ຄ່າຈ້າງເຮັດວຽກ ທາງການສຳຮວດ ລາວພະຍາຍາມໃຊ້ ເວລາ ໃຫ້ຫຼາຍຂຶ້ນ ຢູ່ນຳທ່ານ ລໍ່ຣັງເຊີ ຢູ່ "ເມົ້າ ເວີນັ່ງ" ທ່ານລໍ່ຣັງເຊີ ມີຄອບຄົວແລ້ວ ເມັຽລາວແມ່ນລູກສາວຂອງທ່ານ ວິນລຽມແຟຟັກ ເຈົ້າຂອງເຮືອນແບລວີວ ອັນເປັນເຮືອນງາມ ຫຼັງນຶ່ງ ຕັ້ງຢູ່ແຖວແຄມນ້ຳ ໃກ້ງກັບ ເມົ້າເວີນັ່ງ ຢູ່ເວີຈີເນັຽ ແຕ່ປາງຢອ໌ຣຊ ວໍຊິງຕັນພຸ້ນ ຄອບຄົວແຟຟັກນີ້ ມີຊື່ສຽງຫຼາຍ

ຫຼອດ ໂທມາສ ແຟຟັກ ເຄີຍເປັນເຈົ້າຂອງດິນ ແລະປ່າໄມ້ທີ່ກວ້າງໃຫຍ່ຫຼາຍ ໃນເຂດທົ່ງຂອງ ເວີຈີເນັຍ ທ່ານວິນລຽມແຟຟັກ ກັບທ່ານຫຼອດ ໂທມາສແຟຟັກ ເປັນພີ່ນ້ອງແລະໝູ່ຮັກແພງກັນ. ດັ່ງນັ້ນ ວິນລຽມຈຶ່ງມີໜ້າທີ່ ຮັກສາດິນແດນຂອງຫຼອດໂທມາສໄວ້ບໍ່ໃຫ້ເສັຽຫາຍຈາກການລັກເອົາດິນ ທີ່ພວກເວີຈີເນັຍເຄີຍມາລັກເອົາຢູ່ເລື້ອຍໆ.

ຫຼອດແຟຟັກ ມາແຕ່ປະເທດອັງກິດ ໃນປີ ໑໗໔໑ ຍາມຮ້ອນ ເພື່ອມາຢູ່ເຮືອນງານໝີ່ຊື່ວ່າແບລວິວ ເມື່ອເຮືອນກໍ່ງາມ ຣະດູການກໍ່ອົບອຸ່ນດີແລ້ວ ຫຼອດແຟຟັກ ຈຶ່ງໄດ້ເຊື້ອເຊີນບັນດາຄົນສຳຄັນ ຢູ່ເວີຈີເນັຍ ໃຫ້ລົງເຮືອມາຕາມແມ່ນ້ຳ ໂປໂຕມັກເພື່ອໄປຢ້ຽມຢາມ ແລະເບິ່ງເຮືອນງານຫຼັງນັ້ນ ຝ່າຍທ່ານຢອຣ໌ຊໜຸ່ມອາຍຸພຽງ ໑໖ ປີ ກໍ່ຮູ້ສຶກດີໃຈຫຼາຍ ເພາະຖືກເຊີນໄປຄືກັນຝ່າຍຄອບຄົວແຟຟັກ ຕລອດຮອດ ຫຼອດໂທມາສ ທີ່ເປັນຄົນບໍ່ຟັງໃຜງ່າຍໆ ກໍ່ປາກົດວ່າ ມາສະແດງຄວາມຮັກໄຄ່ຕໍ່ນ້ອງຊາຍຜູ້ມີຮ່າງສູງ ຂອງທ່ານລໍຣັງເຊີ ຢູ່ໃນຈົດໝາຍ ທີ່ທ່ານຢອຣ໌ຊຂຽນຫາທ່ານແຊັກ ນ້ອງຊາຍຂອງລາວນັ້ນ ລາວໄດ້ເວົ້າວ່າລາວຄວນຈະໃຊ້ເວລາໃຫ້ຫຼາຍທີ່ສຸດ ມາຢູ່ແບລວິວ ທີ່ ຕັ້ງຕົນຕັ້ງຕົວໃໝ່.

ສ່ວນພວກຜູ້ສາວ ທີ່ທ່ານຢອຣ໌ຊ ເຄີຍພ້ອນນຳ ເຂົ້າບໍ່ເອົາໃຈໃສ່ພໍປະມານ ບໍ່ນານລາວກໍ່ຮູ້ວ່າ ພວກລູກສາວຜູ້ຮັ່ງມີຢູ່ເວີຈີເນັຍນັ້ນ ບໍ່ສົນໃຈນຳຜູ້ທີ່ ບໍ່ໄດ້ຮຽນມາຈາກໂຮງຮຽນອັງກິດ ແລະຜູ້ບໍ່ຮັ່ງບໍ່ມີເງິນຫຼາຍ ຢູ່ໃນຈົດໝາຍການນຶ່ງ ທີ່ທ່ານ

ຢອ໌ຊຂຽນຫາພີ່ນ້ອງລາວ ຊື່ ໂຣບິນ ວໍຊິງຕັນ ລາວຈົ່ມວ່າ ສາວງາມຜູ້ນຶ່ງບໍ່ມັກລາວ ການນຶ່ງອີກທີ່ສົ່ງຫາຄູ່ຮັກນາງຊານລີ ສາວງາມຜູ້ຢູ່ ຟແຣດຣິກສະເບີກ ໄດ້ຈົ່ມວ່າ ລາວຂຽນຫາເຖິງ ສາມເທື່ອແລ້ວ ກໍບໍ່ໄດ້ຮັບຄຳຕອບ.

ມາບັດນີ້ ຫອດແຟຟັກ ກໍຫາງເຫີນຫ່າງໄປດິນແດນຂອງ ລາວ ຢູ່ພາກຕາເວັນຕົກ ແລະລາວໄດ້ຂໍໃຫ້ໜຸ່ມ ຢອ໌ຊ ຕິດ ຕາມໄປນຳ ໃນຖານະເປັນນັກສຳຮວດຜູ້ນຶ່ງອີກ ໃນບັນດານັກ ສຳຮວດອື່ນໆ ລາວກໍຮັບໄປທັນທີ ຕິດຕາມດ້ວຍລູກຊາຍຂອງ ເຈົ້າເຮືອນແບລວີວ ຊື່ວ່າ- ຢອຣ໌ຊ ວິນລຽມແຟຟັກ ຊຶ່ງມີອາຍຸ ແກ່ກວ່າ ວໍຊິງຕັນ ເຈັດປີ ມີໜ້າຕາຍິ້ມແຍ້ມແຈ່ມໃສ ທັງເປັນ ບ່າວ ທີ່ໄດ້ຮຽນມາແຕ່ປະເທດອັງກິດດ້ວຍ ສ່ວນຢອ໌ຊ ບໍ່ ແມ່ນແຕ່ດີໃຈ ໄດ້ມີເພື່ອນຜູ້ສຳຄັນເທົ່ານັ້ນ ລາວຍັງສົນໃຈ ເຣື່ອງຊາຍແດນຕື່ມອີກ ລາວເອົາໃຈໃສ່ແທ້ໃນການຮຽນຮອບຮູ້ ຊຶ່ງລາວເຣີ່ມລົງມືບັນທຶກເຫດການທີ່ລາວປະສົບພົບພໍ້ ທີ່ເກີດຂຶ້ນ ປະຈຳວັນ ໃສ່ໃນປຶ້ມນ້ອຍໄວ້ ສິ່ງຕ່າງໆເຫຼົ່ານັ້ນເອງ ແມ່ນສິ່ງ ທີ່ລາວຈະຕ້ອງທຳຕໍ່ໄປ ຕລອດຊີວິດຂອງລາວ.

ເຖິງແມ່ນວ່າ ລາວໄດ້ໃຊ້ເວລາແຕ່ຍັງນ້ອຍ ເຣັດໄຣ ເຣັດນາມາແລ້ວກໍດີ ທ່ານຢອ໌ຊ ກໍຍອມຮັບວ່າ ບໍ່ເກັ່ງໃນທາງ ນັ້ນ ຄືຜູ້ອື່ນ. ຕົວຢ່າງ ໃນຍາມເດີນທາງ ຄືນໜຶ່ງ ລາວຕັດ ສິນໃຈເຂົ້ານອນຂ້າງໃນ ແທນທີ່ຈະນອນຟິງໄຟຢູ່ນອກ. ພໍ່ ເມື່ອລາວສັງເກດເຫັນວ່າ ຕຽງນອນ ຂອງລາວບໍ່ໄດ້ດີກວ່າຢູ່ ຂ້າງນອກ ລາວຈຶ່ງຟ້າວນຸ່ງເຄື່ອງ ແລ້ວອອກໄປຢູ່ນຳໝູ່ຂ້າງ

ນອກ.

ຫຼາຍປີຜ່ານໄປ ລະນະເດີນທາງໄດ້ພົບເຫັນ ພວກອິນເດັຽ ທີ່ກັບເມືອເຮືອນ ບາງຄົນພາຍກະໂຫຼກຫົວຂອງສັດຕູຂອງເຂົາໄປນຳ ທາງໜາທາບໜັງ ທາງຫຼັງທາບຫົວ. ສ່ວນທ່ານວໍຊິງຕັນ ກໍທຳການສຳຣວດກວດເບິ່ງທີ່ດິນ ອັນກວາງໃຫຍ່ ເພື່ອຈະເຮັດເປັນບ່ອນ ໃຫ້ຄົນທີ່ປະສົງສັບສາວ ຈັບຈອງ ຢູ່ໄດ ລາວມັກແລະພໍໃຈ ນຳວຽກນີ້ ແລະເງິນກໍໄດຫຼາຍຂຶ້ນ ຮອດພັນລະຈັດໂດລາ ໃນເດືອນທັນວາ ຂອງປີນັ້ນ ລາວໂດໄປເຂົ້າໂຮງຮຽນ ທີ່ວິນລຽມ ແລະມາຣີ ຮຽນຢູ່ເມືອງ ວິນລຽມເບີກ ເວີຊີເນັຽ ເພື່ອຮຽນເຣື່ອງການສຳຣວດຕື່ມອີກ ດ້ວຍຄວາມຊ່ວຍເຫລືອຂອງທານລໍຣ໌ງເຊີ ແລະທານແຟຟັກ ທານຟອຣ໌ຊຈຶ່ງສາມາດ ໄດເປັນນັກສຳຣວດຜູ້ນຶ່ງ ໃນຈຳນວນນັກສຳຣວດຂອງ ຣັດເວີຊີເນັຽ ພໍດີອາຍຸຂອງທານຟອຣ໌ຊ ກໍໄດ ໑໗ ປີ ແລະເປັນຣະດູຮອນອີກດວຍ.

ໃນຂັ້ນຕໍ່ໄປ ໜຸ່ມວໍຊິງຕັນ ກໍທຳງານເປັນນັກສຳຣວດ ບາງຄັ້ງກໍເຮັດວຽກໃຫທານ ລອດແຟຟັກ ແລະບາງຄັ້ງກໍເຮັດວຽກໃຫຄົນອື່ນ ເປັນເວລາຢູ່ຕັ້ງສາມປີ ລາວໄດກະໂຄງການເຮັດຖນົນໃຫເມືອງໃໝ່ ຊຶ່ງສຳຣວດແລວກໍໄດຊື່ວາ ເມືອງອາເລັກຊັງດຣີອາ ລາວເຮັດວຽກໄດເກັ່ງດີ ຈົນເຖົ້າສຸມມື້ ເຂົາຍັງສັງເກດເຫັນງານທີ່ເລີາສຳຣວດໄວຢູ່ຫຼາຍ ບ່ອນທີ່ເມືອງເວີຊີເນັຽ ລາວໄດຈົດບັນທຶກລາຍຮັບ ລາຍຈາຍຂອງລາວໃສປຶ້ມຢາງຮຽບຮອຍ ເພື່ອຊ່ວຍຄວາມຊົງຈຳ ບາງທີລາວໄດເງິນມາ

ແລ້ວ ກໍເອົາໄປຊ້ອນໄວ້ ເຖິງວ່າຍັງໜຸ່ມກໍຕາມ ທ່ານວໍຊິງຕັນ ກໍສະແດງໄດ້ວ່າ ຕົນເປັນຜູ້ມີຫົວຄິດດີ ແລະທຳງານກໍໄດ້ດີເຊັ່ນດຽວກັນ.

ຍາມໃດ ວໍຊິງຕັນ ບໍ່ເຮັດວຽກແລ້ວ ລາວກໍໄປຫຼິ້ນຢູ່ ເມືອງແບລວົວ ແລະເມົ້າເວີນົງ ພູນເປັນສ່ວນຫຼາຍ ວໍຊິງຕັນ ໄດ້ຊອກຮູ້ຊອກຮຽນ ຢູ່ນຳບ້ານເຮືອນ ຢູ່ແຖວແມ່ນ້ຳ ໂປໂຕແມັກ ນັ້ນ ເປັນຄວາມຮູ້ ທີ່ໂຮງຮຽນບໍ່ສອນໃຫ້ລາວໄດ້. ລາວສັງເກດໄດ້ວ່າ ຜູ້ຄົນເຮັດສິ່ງໃດໄປແລ້ວ ເຂົາເຈົ້າໄດ້ເຮັດຕາມທີ່ເຂົາເຈົ້າເວົ້າ ແລະພະຍາຍາມເຂົ້າໃຈ ໃນຄວາມຮູ້ສຶກຂອງເຂົາເຈົ້າ ຕໍ່ສິ່ງຕ່າງໆ.

ສ່ວນພວກແຟມີກັນນີ້ ທີ່ເຄີຍເປັນຕົວຢ່າງອັນດີຂອງຄອບຄົວ ທີ່ມີຊື່ສຽງຂອງຊາວອັງກິດຢູ່ແລ້ວ ໄດ້ພ້ອມພາກັນຕໍ່ສູ້ເພື່ອເສຣີພາບເລື້ອຍໆມາ ເປັນຕັ້ງກວ່າ ຮ້ອຍ ໆ ປີ ເຂົາເຈົ້າມີກຳລັງໃຈແລະຊອງທາງສຶກສາເບິ່ງຊີວິດແລະປະວັດຂອງບັນພະບຸຣຸດ ໂຣມັນ ອັນເປັນສັນຊາດ ທີ່ກ້າຫານແລະມີກຽດ.

ທ່ານລໍຣັງ ວໍຊິງຕັນ ກໍເຫັນດີຮ່ວມຄວາມຄິດ ທາງຮັກບ້ານຮັກເມືອງ ຮັກປະເທດຂອງຕົນດ້ວຍ ພວກລໍຣັງ ແລະວໍຊິງຕັນນີ້ ເຊື່ອທີ່ສຸດວ່າ ຊີວິດນີ້ ເປັນເຣື່ອງຂອງໜ້າທີ່ ແລະກຽດທາງສ່ວນຕົວ ແລະທາງສ່ວນຣວມ ບໍ່ມີໜ້າທີ່ການອັນໃດ ທີ່ວ່າຈະສູງກວ່າ ຫຼື ຍິ່ງໃຫຍ່ກວ່າ ໜ້າທີ່ຮັບໃຊ້ປະເທດຊາດຂອງຕົນເອງ ແຕ່ວ່າ ບໍ່ມີໃຜດອກທີ່ສາມາດຈະຮັບໃຊ້ປະເທດຊາດຂອງຕົນໄດ້ດີ ໃນເມື່ອຄົນບໍ່ສາມາດຄວບຄຸມຕົນເອງໄດ້ເສັຽ

ກ່ອນ.

ຄວາມຄິດທັງຫຼາຍທີ່ເຫຼ່າມານີ້ ໄດ້ນຳມາເຈາະຈົງຂຽນກັນລົງເປັນເນື້ອຄວາມ ໂດຍນັກຂຽນນິຄິນອັງກິດ ຊື່ວ່າ ໂຊເຊັຟ ອັດດີສັນ ໃນທຳນອງເຣື່ອງ ຄໂຕ ຊຶ່ງນຳມາອ່ານມາໃຊ້ກັນຢູ່ເລື້ອຍ ຢູ່ເມືອງແບລວິວ ໃນເຣື່ອງ ຄູໂຕນີ້ ມີຄົນໂຣມັນຜູ້ນຶ່ງບອກວິທີທີ່ລາວເຮັດໃຫ້ທະຫານມີຄວາມກ້າຫານ ແລະພາເຂົາຊາບຊຶ້ງ ນຳແຕ່ຄວາມເສຣີ ຢ່າງສຸດຊຶ້ງ ຈົນກະທັ່ງວ່າ ເຂົາບໍ່ຢ້ານຮອດຄວາມຕາຍ ແຕ່ສ່ວນສຳຄັນແທ້ນັ້ນ ແມ່ນເຣື່ອງ ຄູໂຕ ທີ່ຊີ້ໃຫ້ເຫັນວ່າ ຖ້າຜູ້ໃດຫາກ ຮຽນເປັນນາຍຕົວເອງໄດ້ຜູ້ນັ້ນອາດເປັນຜູ້ຍິ່ງໃຫຍ່ໄດ້ ທ່ານໂຊເຊັຟ ອັດດີສັນ ໄດ້ແນະນຳໃຫ້ເຮົາສຶກສາເບິ່ງແບບຂອງ ຄໂຕ ນັ້ນ ເພື່ອຈະໄດ້ຮູ້ວ. ຄົນຜູ້ດີ ແລະຜອງໃສ່ຈະສາມາດເປັນໃຫຍ່ໄດ້ງ່າຍດາຍ ປານເປັນເທວະດາພຸ້ນແລ້ວ ທ່ານວໍຊິງຕັນ ກໍເລີຍເກີດມີຄວາມສົນໃນຈຳເຣື່ອງ ຄູໂຕ ຢູ່ເລື້ອຍ.

ຄວາມຮູ້ສຶກອັນແຮງກ້າ ວ່າຢາກມີກຽດ ແລະ ຢາກຮັບໃຊ້ໃນໜ້າທີ່ນີ້ ກໍເກີດມີເປັນສ່ວນໆໃນໂຕວຂອງ ທ່ານຢອຣ໌ຊວໍຊິງຕັນ ຕລອດຊີວິດເລີຍ ມັນເປັນແສງສວ່າງອັນນຶ່ງ ໃຫ້ລາວເຫັນໂລກໜ່ວຍນຶ່ງອີກ ຊຶ່ງເໜືອໄປກວ່າ ການຊ່ວງມາ ການໂຣ່ເນື້ອ ການເຕັ້ນລຳ ແລະນາງແສນາງສາວ ທີ່ຊາວໜຸ່ມອາຍຸສຳກັນ ຢູ່ເມືອງເວີຈີເນັຽ ເຄີຍສົນໃຈໃຝ່ຝັນກັນນັ້ນ.

ການທີ່ໄດ້ຢູ່ລ້ຽງເຄີຍກັບພວກ ແຟຟັກ ແລະພວກລໍຮັງນັ້ນກໍເປັນທາງຊ່ວຍທ່ານຢອຣ໌ຊ ອີກທາງນຶ່ງ ຄືວ່າ ເວລາທ່ານ

ປອຣ໌ຊໄດ້ຢູ່ນຳຄົນພວກນີ້ ລາວປາກົດວ່າ ໄດ້ຢູ່ໃຈກາງຂອງ
ຄວາມຮູ້ ຫຼາຍສິ່ງຫຼາຍຢ່າງ ຍາມຄ່ຳມາລາວໄດ້ສະດັບຮັບຟັງ
ເຂົາເຈົ້າເວົ້າລົມກັນ ເຂົາເຈົ້າໄດ້ລົມກັນເຖິງເຣື່ອງໂຄງການ
ຂອງບໍຣິສັດ ໂອຣາຍໂອ ທີ່ຈະຊ່ວຍໃຫ້ຜູ້ຄົນໄດ້ຈັບຈອງ ຢູ່ແຖວ
ທົ່ງພຽງຂອງແມ່ນ້ຳ ໂອຣາຍໂອ ອັນເປັນທົ່ງພຽງບ່ອນທີ່ພວກ
ອັງກິດແລະພວກຝຣັ່ງເສດ ປະສົງຢາກຄວບຄຸມນັ້ນເອງ ທ່ານລໍ
ຣັງ ເຄີຍເປັນຫົວໜ້າ ບໍຣິສັດນີ້ມາແລ້ວ ດ້ວຍຄວາມຮູ້ທີ່ມີຢູ່
ໃນຈົດໝາຍຫຼາຍໆສະບັບ ທີ່ສົ່ງມາຈາກກຸງລອນດອນແລະດ້ວຍ
ມີໂອກາດໄດ້ໝັ່ນພົບພໍ້ ປະຊຸມນຳທ່ານຜູ້ປົກຄອງເຂດເວີຊີເນັຽ
ນັ້ນ ການຮຽນຮູ້ກັບນະໂຍບາຍອັນຍິ່ງໃຫຍ່ຂອງໂລກ ກໍກາຍ
ເປັນຂອງງ່າຍ ຂອງສະບາຍ ແກ່ໜຸ່ມປອຣ໌ຊ ວໍຊິງຕັນ.

ສ່ວນຄວາມເສົ້າໂສກສລົດໃຈກໍມີຢູ່ ຕິດຕາມທ່ານ
ປອຣ໌ຊ ຢູ່ເຖິງສີ່ປີເຕັມ ຄືວ່າ ທ່ານປອຣ໌ຊ ຜູ້ທີ່ເປັນທະຫານດີ
ທີ່ເປັນຄ້າຍໆກັບພໍ່ ຫຼືອ້າຍຜູ້ນຶ່ງຂອງທ່ານປອຣ໌ຊນັ້ນ ໄດ້ເຈັບ
ປ່ວຍເປັນເວລາເຫິງນານ ແລະກໍໄດ້ເສັຽຊີວິດໄປ ເຖິງແມ່ນ
ວ່າທ່ານລໍຣັງ ເສັຽຊີວິດໄປແລ້ວກໍດີ ທ່ານປອຣ໌ຊ ກໍຍັງໄດ້ຮັບ
ຄວາມອຸ້ມຊູຕໍ່ໄປອີກ ຄາວຍັງມີຊີວິດຢູ່ນັ້ນ ທ່ານລໍຣັງ ໄດ້ມອບ
ເງິນພຽງພໍ ໄວ້ກັບເມັຽລາວ ແລະປະເຣືອນຢູ່ ເມົ້າເວີນົງ
ໄວ້ໃຫ້ທ່ານປອຣ໌ຊ ຕໍ່ໄປພຸ້ນເມັຽທ່ານລໍຣັງ ຈຶ່ງມີຜົວໃໝ່ອີກ
ທ່ານວໍຊິງຕັນ ບໍ່ເຄີຍລົມສູ່ໃຜຟັງເລີຍ ກ່ຽວກັບຄວາມຮູ້ສຶກຂອງ
ລາວ ຕໍ່ການສູນເສັຽທ່ານລໍຣັງໄປ ສິ່ງອື່ນໆ ກໍເຊັ່ນດຽວກັນ ຢູ່
ໃນຊີວິດຂອງລາວແລ້ວ ທ່ານວໍຊິງຕັນ ບໍ່ມັກສະແດງຄວາມຮູ້ສຶກ

ໃຫ້ໃຜຮູ້ທາງວາຈາ ແຕ່ດ້ວຍການເຮັດການທຳເທົ່ານັ້ນ ເຊັ່ນ ຕົວຢ່າງ ເມື່ອລາວໄດ້ຢູ່ເປັນເຈົ້າຂອງເຮືອນ ເມົ້າ ເວີນິງ ລາວໄດ້ເອົາຮູບຂອງ ທ່ານ ລໍຣັງ ວາງໄວ້ເທິງໂຕະຫ້ອງອ່ານ ໜັງສືຂອງລາວສເມີ ສຳລັບຮູບຂອງທ່ານແອດເວີດ ເວີນິງ ກໍ ເຊັ່ນດຽວກັນ ລາວກໍບໍ່ຍອມຍົກຍ້າຍ ກະທັ່ງຕະກຽງຢູ່ໃນຫ້ອງ ຊຶ່ງທ່ານເວີນິງ ມອບໄວ້ເປັນຂອງຂວັນໃຫ້ແກ່ທ່ານລໍຣັງ. ຫຼາຍ ປີຕໍ່ມາ ຫຼັງຈາກມີຊັຍຊະນະຢູ່ເມືອງ ຢອກທາວແລ້ວ ທ່ານ ວໍ ຊິງຕັນ ໄດ້ເຊີນເອົາພວກນາຍທະຫານອັງກິດ ທີ່ຖືກກັກໄວ້ ມາ ກິນແລງນຳ ລາວມີມູນ ພໍດີມີຜູ້ນຶ່ງເວົ້າວ່າ ລາວກໍໄດ້ເຂົ້າໂຮງ ຮຽນ ທີ່ ແອໂປບີ ພ້ອມປີດຽວກັນກັບທ່ານລໍຣັງ ເປັນລູກສິດຢູ່ ພູ້ນ ທ່ານວໍຊິງຕັນ ຈຶ່ງຝາວຂຽນຈົດໝາຍຫາຜູ້ບັນຊາການກອງ ທັບເຮືອຂອງຝຣັ່ງເສດ ທ່ານຟັງຊົວ ເດີກຣາດ ຮ້ອງຂໍໃຫ້ປ່ອຍ ຜູ້ເວົ້ານີ້ ທີ່ເປັນເພື່ອນຂອງອາຍຸຕົນ ຊຶ່ງຍາມນັ້ນ ອາຍໄດ້ສືບຊີ ວິດມາ ກໍເປັນເວລາ ໘໔ ປີກວ່າແລ້ວ.

ກ່ອນເວລາຈະມີການປະທະກັນຄັ້ງນຶ່ງອີກ ໄດ້ມີນາຍທະ ຫານໜຸ່ມຜູ້ນຶ່ງ ໄດ້ຮັບຂ່າວຈາກຄອບຄົວວ່າ ໃຫ້ຝາວໄປຢ້ຽມ ເບິ່ງອາຍ ທີ່ກຳລັງປ່ວຍໜັກ ເພາະຢ້ານຈະບໍ່ລອດແລ້ວ ນາຍ ທະຫານໜຸ່ມຜູ້ນັ້ນ ກໍໄດ້ຮັບອະນຸຍາດໃຫ້ໄປ ແລ້ວກໍມີຜູ້ໃໝ່ຮັບ ໜ້າທີ່ແທນໄວ້ ພໍດີຮອດຍາມຈະໄປແທ້ງ ບັງເອີນມີຜູ້ນຶ່ງມາ ຖາມເຖິງເຣື່ອງ ຄວາມກ້າຫານຂອງຕົນໆກໍເລີຍເກີດມີຫົວໃຈ ຄຽດແຄ້ນຂຶ້ນ ຈຶ່ງຝາວຈັບເອົາປືນແລ້ວເລີຍເຂົ້າບຸກໄປນຳໝູ່ ທະຫານຊ້ຳ ລາວດັນສັດຕູໄວ້ຢ່າງສຸດຄວາມກ້າຫານ ຢູ່ຕລອດ

ວັນ.  ເມື່ອຊາຍເຊັ່ນນັ້ນ ທ່ານວໍຊິງຕັນ ຈື່ງເອີ້ນຜູ້ກ່ຽວມາລົມ
ກັນແບບເປັນກັນເອງ  ຢ່າງທະຫານຕໍ່ທະຫານ, ວໍຊິງຕັນຈື່ງ
ສັນຣະເສີນວ່າ ລາວເປັນນັກຕໍ່ສູ້ຜູ້ກ້າຫານແທ້ ຕໍ່ໄປ ວໍຊິງຕັນ
ເລີຍແຖມຄຳຊ່ວຍຄວາມເຫັນອົກເຫັນໃຈວ່າ  "ເຈົ້າຄວນທີ່ຈະ
ໄປຢ່ຽມເບື່ງອ້າຍຂອງເຈົ້າແດ່".

## ໕. ຮຽນຮູ້ຈາກປະສົບການ

ເຣື່ອງຂອງທ່ານຈອນ ເອັຟ ແຄນເນດີ ເມື່ອຍາມອ້າຍໃຫຍ່ລາວເສັຽຊີວິດໄປນັ້ນ ກໍເປັນເຣື່ອງທີ່ຄ້າຍຄືກັນກັບເຣື່ອງຂອງທ່ານວໍຊິງຕັນ ຄືວ່າທ່ານວໍຊິງຕັນ ເມື່ອອາຍລໍຣົງຕາຍແລວລາວຕ້ອງໄດ້ຮັບເອົາໜ້າທີ່ ເປັນຜູ້ນຳຄອບຄົວຂອງລາວຕໍ່ໄປ. ເຖິງແມ່ນວ່າ ອາຍຸຍັງອ່ອນ ມີພຽງ ໒໐ ປີກໍຕາມ ຊາວແຟຟັກກໍເຫັນດີແລະພ້ອມກັນຮອງຂໍນຳທ່ານຜູ້ປົກຄອງເມືອງ ເວີຊີເນັຽວ່າ ຂໍໃຫ້ຊອກຫາໜ້າທີ່ການໃຫ້ທ່ານວໍຊິງຕັນເຮັດແນວໃດແນວນຶ່ງ ຢ່າງນາຍແມ່ທັບເຂດຊຸມຄອງ ແບບດຽວກັນກັບຂອງອາຍລໍຣົງທີ່ຕາຍໄປນັ້ນ ຫລາຍເດືອນຜ່ານໄປ ທ່ານຊອກ ຈຶ່ງໄປສມັກເຮັດການໃນຍາມໜາວ ຢູ່ນຳຄາຍຂອງຝຣັ່ງເສດ ຢູ່ທີ່ເມືອງເລັກອີຣີ ສິ່ງນັ້ນເປັນເຣື່ອງທີ່ອາຍ ລໍຣົງ ຂອງລາວ ເຄີຍຢາກໃຫ້ເຮັດຢູ່ແຕ່ໃດແລວ.

ເມື່ອມີໃຜຫາກກ່າວຫາວ່າ ທ່ານວໍຊິງຕັນ ຍັງໜຸ່ມໂພດສຳລັບເຮັດວຽກເຮັດການ ຊາວແຟຟັກກໍຕອບໄປທັນທີວ່າ ເຂົາ

ເຈົ້າຮູ້ດີແລ້ວ ຈຶ່ງອະທິບາຍໄປວ່າ "ເຊື້ອພວກວໍຊິງຕັນນີ້ ເປັນເຊື້ອທີ່ເກີດກ່ອນ" ສິ່ງນີ້ ກໍປາກົດວ່າມີຄວາມຈິງຢູ່ ສຳລັບຄົນທີ່ມີອາຍຸແຕ່ ໘໑ ປີ ຄື ວໍຊິງຕັນນີ້ ລາວຍັງສາມາດສະແດງທ່າເທດທ່າພົມໄດ້ດີ ຕາມກໍຣະນີໃນຍາມນັ້ນ ເມື່ອເຮັດວຽກຢູ່ຄ່າຍຂອງຝຣັ່ງເສດນັ້ນ ລາວໄດ້ພຍາຍາມສ້າງສາມັກຄີຕລອດຮອດຄວາມຮັກແພງ ຈົນເປັນທີ່ພໍໃຈຂອງສາມຫົວໜ້າໃຫຍ່ໆ ຂອງຊາວອິນເດັຽ ຫົວໜ້າເຫລົ່ານີ້ເປັນໝູ່ພວກຂອງຝ່າຍອັງກິດແຕ່ກໍຍິນດີຕິດຕາມໄປນຳທ່ານວໍຊິງຕັນ ເພື່ອສະແດງອອກ ໃຫ້ຝ່າຍອັງກິດເຫັນວ່າ ເຂົາກໍເປັນນາຍເຂົາເອງ ແລະສາມາດເຮັດສິ່ງໃດສິ່ງນຶ່ງໄດ້ຕາມທີ່ເຂົາປະສົງ ເມື່ອຫົວໜ້າເຫລົ່ານີ້ມາຮອດຄ່າຍ ພວກຝຣັ່ງເສດກໍຟ້າວປະຈົບປະແຈງຫາເຫລົ້າຢາມາສູ່ ພອມກັບສັນຍາວ່າຈະໃຫ້ຂອງຈ້າງຣາງວັນດ້ວຍ ຖ້າ ວ່າພວກຫົວໜ້າເຫລົ່ານີ້ ຫາກຈະຮັບໃຊ້ຝ່າຍຝຣັ່ງເສດ.

ຜູ້ບັງຄັບບັນຊາຝ່າຍຝຣັ່ງເສດ ເປັນຜູ້ມີອາຍຸສູງແກ່ກວ່າທ່ານວໍຊິງຕັນຫລາຍ ທ່ານວໍຊິງຕັນຍ່າງເຂົ້າໄປລົມນຳຜູ້ບັນຊາຝ່າຍຝຣັ່ງເສດຢ່າງບໍ່ຕື່ນເຕັ້ນຕົກໃຈຫຍັງ ເພື່ອບອກໃຫ້ຊາບວ່າການຍົວະເຍົ້າຄົນໃຫ້ໄປເຂົ້າຝ່າຍຝຣັ່ງເສດນັ້ນ ຄົງບໍ່ສຳເຣັດຜົນ ແລະຈະເປັນການຍາກລາງ ທີ່ວ່າຈະໃຫ້ເຂົາໜີພ່າຍໄປ. ຜູ້ບັນຊາການຝຣັ່ງຮູ້ສຶກຄານໃຈ ຈຶ່ງຟ້າວຫາຂອງຕ້ອນໃສ່ມືໃຫ້ພວກຫົວໜ້າອິນເດັຽແລ້ວ ກໍໃຫ້ເຂົາໜີໄປ ມື້ໜ້າ ເວລາທ່ານວໍຊິງຕັນ ທາງຫາກຽມຈະລົງກຳປັ່ນເພື່ອເດີນທາງ ຜູ້ບັນຊາການຝຣັ່ງເສດ ຍັງມາທົດລອງອີກເປັນຄັ້ງສຸດທ້າຍ ຍົວະ

ເຍົ້າບໍ່ໃຫ້ພວກອິນເດັຽນໜີໄປດ້ວຍວິທີເກືອເຫຼົ້າຈີນໃຫ້ເມົາ.

ເວລານັ້ນ ທ່ານວໍຊິງຕັນ ກໍເຂົ້າຂັດຂວາງຂອງພວກອິນເດັຽກັບຂອງເມົາໄວ້ ແລ້ວກ່າວເຕືອນພວກອິນເດັຽວ່າ ເຂົາໄດ້ສັນຍາຮັບຕິດຕາມມາເຖິງຂັ້ນນີ້ແລ້ວ ເຂົາຄວນຈະເດີນທາງຕໍ່ໄປ ຍັງໜຸ່ມກໍຈິງ ແຕ່ກ້າເວົ້າກ້າວ່າໄດ້ເຊັ່ນນີ້ ສະແດງວ່າກ້າຫານດີສົມຄວນ ພວກຫົວໜ້າຊາວອິນເດັຍ ອາດເກີດຄຽດແຄ້ນຂຶ້ນກໍເປັນໄດ້ ແຕ່ສິ່ງທີ່ທ່ານວໍຊິງຕັນ ກ່າວເວົ້າໄປນັ້ນລ້ວນແລ້ວແຕ່ຄວາມຈິງ ແລ້ວເຂົາຈຶ່ງຍອມໄປນຳໂດຍບໍ່ມີປາກສຽງຖຽງອີກຈັກຄຳເລີຍ.

ໄດ້ຫລາຍອາທິດຕໍ່ມາ ກໍເກີດມີບັນຫາບາງປະການໃສ່ທ່ານວໍຊິງຕັນ ລາວຈຳເປັນປະຄົນຂອງລາວ ໃຫ້ຍາງນຳມາທີ່ຕ່າງຂອງຄອຍຍ່າງໄປບໍ່ໄດ້ໄວທັນໃຈ ລາວເອງກັບຜູ້ຮອງອີກຜູ້ນຶ່ງ ຊື່ວ່າ ຄຣິສໂຕເຟີ ກິຊຕ໌ ຈຶ່ງພາກັນເດີນທາງລັດປ່າໄປ. ຕາມທາງໄປເລີຍໄປພໍ້ອິນເດັຽຜູ້ນຶ່ງ ເປັນຜູ້ນຳທາງພາກັນໄປ. ຍ່າງໄປຮອດບ່ອນແປນລະຫວ່າງຕົ້ນໄມ້ແຫ່ງນຶ່ງ ອິນເດັຽໜຸ່ມທີ່ເປັນຜູ້ນຳທາງຈຶ່ງອວຍໜ້າຄືນແລະຍິງປືນໃສ່.

ທ່ານວໍຊິງຕັນ ຈຶ່ງຮ້ອງຖາມ ທ່ານກິຊຕ໌ວ່າ "ເຈົ້າຖືກເຈັບບໍ່?".

ທ່ານກິຊຕ໌ຕອບຄືນວ່າ "ບໍ່"

ໜຸ່ມອິນເດັຽກໍຟ້າວແລ່ນໄປບັງຕົ້ນໄມ້ກຽມຍິງອີກ ແຕ່ທ່ານວໍຊິງຕັນ ແລ່ນນຳແລະທັນດຶງເອົາປືນມັນໄວ້ ທ່ານກິຊຕ໌ກໍຍົກປືນລາວຂຶ້ນວ່າຈະຍິງ ໜຸ່ມອິນເດັຽກໍຄິດວ່າຄົງຈະໄປບໍ່ພົ້ນ

ຈຶ່ງປືນຢູ່ຖ້າໃຫ້ຍິງ ທ່ານວໍຊິງຕັນ ຈຶ່ງໂຈະທ່ານກິຊຕ໌ໄວ້ ແລະບອກວ່າຈະຂ້າຄົນຊຶ່ງບໍ່ມີແນວປ້ອງກັນຕົວບໍ່ໄດ້ ແລະລາວກໍ່ປ່ອຍໃຫ້ໜໍ່ອິນເດັຽໜີໄປ ເມື່ອມີທ່າທີເຊັ່ນນັ້ນເກີດຂຶ້ນແລ້ວ ທ່ານວໍຊິງຕັນແລະກິຊຕ໌ ກໍ່ຕ້ອງໄດ້ຍ່າງຈົນໝົດຄືນ ຈົນໃຫ້ພົ້ນປ່າໄປເພາະຄິດສົງສັຍວ່າໜໍ່ອິນເດັຽນັ້ນອາດໄປນຳເອົາພວກມັນມາຕິດຕາມຂ້າພວກຕົນ.

ເຖິງແມ່ນວ່າ ໃນລະຫວ່າງປີທີ່ທ່ານວໍຊິງຕັນ ມີສິ່ງສະແດງໃຫ້ເຫັນວ່າ ທ່ານມີຄວາມຄຽມຄົມ ແລະຄວາມຮອບຮູ້ດີເຊັ່ນນັ້ນກໍ່ດີ ແຕ່ເຫັນວ່າ ຢູ່ໃນກິຣິຍາທ່າທີຂອງທ່ານແລ້ວ ຍັງມີບາງສິ່ງບາງຢ່າງ ຍັງເປັນກິຣິຍາເກືອບວ່າ ຄືກັນກັບເດັກນ້ອຍຢູ່. ລາວມັກຄຽດໄວເມື່ອມີຄົນວ່າສິ່ງໃດທີ່ລາວຮູ້ເຮັດແລ້ວນັ້ນບໍ່ຖືກໝົດ ເຊັ່ນວ່າ ເວລາລາວເສັຽໃຈກັບມ້າແຕຄາຍ ເນແຊດຊິຕີ ເສັຽໃຈຫລາຍແລ້ວກໍ່ຮ້ອງປ່າວຮ້າຍໃຫ້ຜູ້ທີ່ສົງສັຍວ່າ ລາວບໍ່ໄດ້ເອົາໃຈໃສ່ຕໍ່ສູ້ຕາມສົມຄວນ ລາວຂຽນໄປເວົ້າໃຫ້ຮອດທ່ານຜູ້ປົກຄອງເມືອງ ມາຣິແລນຢ່າງຈົບໃຈແທ້ ເພາະວ່າທ່ານຜູ້ປົກຄອງເວົ້າວ່າ ເຣື່ອງຂອງຄ່າຍ ເນແຊດຊິຕີນັ້ນ ບໍ່ສຳຄັນຫຍັງ ທ່ານຜູ້ປົກຄອງໄດ້ພຍາຍາມປ່ຽນຄວາມຮູ້ສຶກຂອງທ່ານວໍຊິງຕັນ ໂດຍອະທິບາຍສູ່ລາວຟັງວ່າ ມີຜູ້ຄົນຜູ້ບໍ່ດີເປັນຜູ້ສືບສໍ່ແລະເປັນເຣື່ອງຂອງໜັງສືພິມ ທີ່ເວົ້າແຕ່ຄວາມບໍ່ຈິງເທົ່ານັ້ນດອກ.

ໂສກເສົ້າເສັຽໃຈເຕັມທີ ຍ້ອນວ່າ ຖືກເສັຽຊັຍແລ້ວທ່ານວໍຊິງຕັນ ຈຶ່ງໄປຢູ່ນຳອ້າຍ ແຈກກ໌ຂອງລາວຢູ່ທີ່ເມົາເວີນົງ

ຢູ່ທີ່ນັ້ນກໍເກີດມີບັນຫາໃຫຍ່ມາໃສ່ລາວອີກ ລາວເຫັນວ່າລາວຫຶງ
ໄປມັກເມັຽຂອງໝູ່ຮັກໝູ່ແພງຂອງລາວເອງ ແມ່ນທ່ານປອ໌ຣຊ
ວິລລຽມ ແຟຟັກ ທີ່ເຄີຍເປັນໝູ່ກັນມາ ແຕ່ປາງໄປເຮັດວຽກ
ເຮັດການສຳຣວດຄາວກ່ອນພູ້ນ ຊຶ່ງມີເມັຽງາມ ຊື່ວ່າ ຊາລລີ
ແຄຣີ ມາຢູ່ເຮືອນທີ່ແບນວີວນຳກັນ ຜູ້ຍິງຄົນນັ້ນມີຄວາມຮູ້ຫລາຍ
ເວົ້າລົມເກັ່ງ ແລະມັກວາງທ່າທີໃສ່ຜູ້ຊາຍ ເປັນຜູ້ຍິງທີ່ຖືກຕາ
ຖືກໃຈຂອງທະຫານໜຸ່ມຜູ້ບໍ່ມັກປາກ ແລະສ່ວນມາກແມ່ນຜູ້ທີ່ບໍ່
ເກັ່ງບໍ່ສາມາດ ຫາງຜູ້ສາວມາກ່ອນ.

ທ່ານວໍຊິງຕັນ ເປັນໜຸ່ມ ຊາຍໂສດ ມາເຖິງເຂດອາຍຸ
໒໖ ປີແລວ ຊີວິດຂອງລາວຈຶ່ງຕອງການຄວາມລາບລົ້ນ ມ່ວນ
ຊື່ນບາງເລັກນ້ອຍ ລາວຕອງການຫາຜູ້ຍິງຊ່ວຍຫຍິບປັກຖັກແສ່ວ
ເສື້ອໃຫ້ນຸ່ງ ທາງເມົ້າເວີນົງ ກໍຊວນແຜ່ນແພຕັດວັດແຫກເປັນ
ຮູບແລ້ວ ສົ່ງໄປຫາທາງແບນວີວພູ້ນ ແລວນາງຊາລລີ ກໍຊອກ
ໃຫ້ຜູ້ໃດຜູ້ນຶ່ງຫຍິບເປັນພິເສດ ຢູ່ທີ່ແບນວີວນັ້ນທ່ານວໍຊິງຕັນ ແລະ
ອາຍໃຫຍ່ຂອງລາວ ກໍກິນເຂົ້າຊຸມກັນຫລາຍໆໂອກາດຢ່າງທັມ
ມະດາເລື້ອຍຢູ່ ເກືອບເວົ້າໄດວ່າ ສ່ວນຫລາຍແລວແມ່ນຢູ່ນຳ
ກັນພູ້ນຫລາຍກວາຢູ່ເມົ້າເວີນົງ ບ່ອນບໍ່ມີຜູ້ຍິງຢູ່ນຳ ແລະ ເປັນ
ບ່ອນເສົ້າໆຊວນໃຫຄິດ ເຫັນແຕທ່ານລໍຣັງ ທີ່ຕາຍແລວແລວນັ້ນ
ທ່ານປອ໌ຣຊ ວໍຊິງຕັນ ເລີຍເກີດມີຄວາມຮັກຄວາມມັກ ກັບນາງ
ຊາລລີ ແຟຟັກ ເທື່ອລະເລັກເທື່ອລະນ້ອຍ ໂດຍບໍ່ຮູ້ສຶກຕົວ.

ມັນເລີຍກາຍເປັນຄວາມຮູ້ສຶກ ຢ່າງຈົມຫົວຈົມຫາຍໄປ
ໝົດ ທ່ານວໍຊິງຕັນ ເປັນຄົນໜຶ່ມກຽດຜູ້ນຶ່ງ ຈຶ່ງເກັບຄວາມຮູ້ສຶກ

ແຫ້ງຂອງຕົນໄວ້ ໃຫ້ເປັນຄວາມລັບ ເພື່ອກຽດຂອງນາງຊາລລີ ສະຖານໃດກໍ່ຕາມ ລາວກໍ່ບໍ່ສາມາດຈະລືມຊາລລີໄດ້ ຈົນຄາຍໆ ກັບວ່າ ຈະຍ້າຍແບບວົວໃຫ້ຮ້າງຈາກ ໂປໂຕເມັກ ຫນີຈາກຮອຍຍິ້ມແລະແສງຕາຫວານຂອງຊາລລີນັ້ນ ແມ່ນບໍ່ໄດ້ເດັດຂາດແລະຕໍ່ໆໄປ ທ່ານວໍຊິງຕັນ ກໍ່ຖືກເອີ້ນໄປຊຸມເຂົ້າຊຸມນ້ຳ ໄປ ຟ້ອນໄປລຳ ໃຫ້ເປັນໂອກາດໄດ້ເພີນຈິດ ສນິດສນົມກັນຈົນແທບກັບວ່າບໍ່ເຫັນກັນຢູ່ບໍ່ໄດ້.

ສີ່ປີເຕັມໆ ທ່ານວໍຊິງຕັນ ພຍາຍາມບັງຄັບຈິດໃຈຕົນເອງ ຜູ້ຊາຍສ່ວນມາກທີ່ມີອາຍຸສຳລາວນີ້ ກ່ອນຈະມີເມັຽ ແລະເຣີ່ມຕົ້ນເປັນຄອບຄົວ ກໍ່ຕ້ອງໄດ້ໃຊ້ເວລາເປັນຕັ້ງຫລາຍ ປີ ລາວພໍ່ທີ່ຈະກັບຄືນໄປປະຕິບັດຊີວິດທະຫານ ຕາມທີ່ລາວເຄີຍຄິດໄວ້ຍາມຢູ່ຄາຍ ເນແຊຸດຊິຕີ ນັ້ນແລ້ວ ຖາວານາງຊາລລີບໍ່ມາຜູກມັດຈິດໃຈລາວໄວ້.

ມີທ່ານນາຍພົນຄົນອັງກິດຜູ້ນຶ່ງ ທີ່ເປັນຜູ້ດີ ແລະມີຊື່ວ່າທ່ານ ວິລລຽມ ບູຮາດດັອກ ໄດ້ນຳກອງທັບເສື້ອແດງ ຜ່ານມາທາງນັ້ນ ແລະໄດ້ສເນີຫນ້າທີ່ ອັນສຳຄັນໃຫ້ທ່ານວໍຊິງຕັນ ເຂົ້າຮ່ວມກັບກອງທັບອັງກິດ ທ່ານວໍຊິງຕັນກໍ່ໄດ້ຮັບດ້ວຍຄວາມພໍໃຈໃນຄນະນັ້ນ ພໍດີແມ່ນແມ່ຂອງທ່ານວໍຊິງຕັນ ມາເຖິງ ແລະໄດ້ອະທິບາຍສູ່ລູກຊາຍຟັງຫລາຍຢ່າງ ເພື່ອບໍ່ໃຫ້ລູກເອົາຊີວິດໄປສ່ຽງພັຍໃນກອງທັບອີກ ທ່ານວໍຊິງຕັນ ຈຳເປັນຈຶ່ງໄດ້ຂຽນຈົດຫມາຍໄປຫາທ່ານນາຍພົນ ເພື່ອຂໍໂຈະໄວ້ກ່ອນ ແລ້ວຈຶ່ງຂໍເຂົ້າຮ່ວມໃນອັນຕໍ່ໄປພູນ.

ຕໍ່ມາ ທ່ານວໍຊິງຕັນ ກໍຫຼີກໜີ້ຈາກ ນາຣິບາລ ແມ່ຂອງ ລາວ ຕາມເຣື່ອງນີ້ວ່າ ລາວຂໍໃຫ້ແມ່ລາວ ເຊື່ອຖືພະຄຸນທັມ ພູນ ເພື່ອໃຫ້ລາວມີຊີວິດ ສ່ວນແມ່ກໍຂຽນຫາລູກບໍ່ໄດ້ຂາດ ເພື່ອ ບອກລູກ ຊອກໃຊ້ໄປຊ່ວຍວຽກໄຮ່ວຽກນາໃຫ້ ທ່ານວໍຊິງຕັນ ພຍາຍາມອົດໄວ້ບໍ່ຄຽດໃຫ້ແມ່ ແລ້ວຕອບແມ່ໄປວ່າ ລູກໄດ້ເຖິງ ທາງມາຮອດກາງດົງກາງປ່າແລ້ວ ເລີຍບໍ່ມີທາງຈະຊ່ວຍແມ່ໄດ້.

ລາວໄດ້ຂຽນຫານາງຊາລີແຟຟັກ ເພື່ອອະທິບາຍເຖິງ ຄວາມຫຍຸ້ງຍາກສູ່ຟັງ ແລະບອກວ່າ ຄວາມສຳຄັນທຸກຢ່າງຂໍໃຫ້ ແມ່ນນາງເອງຂຽນໄປບອກ ໄກກັນແລ້ວ ທ່ານວໍຊິງຕັນ ກໍເລີຍ ມີວຽກຫລາຍອັນມາເປັນອຸປສັກ ດັ່ງປາກົດມີນາຍທະຫານຂອງ ທ່ານນາຍພົນ ບຣາດດັອກ ຜູ້ນຶ່ງເກີດລະແວງຂຶ້ນວ່າ ທ່ານວໍຊິງ ຕັນ ບໍ່ແມ່ນຄົນອັງກິດ ແຕ່ແມ່ນຄົນອະເມຣິກັນ ນີ້ເອງເປັນສິ່ງທີ່ ໄດ້ພາໃຫ້ເຮົາເຂົ້າໃຈຄວາມນຶກຄິດຂອງວໍຊິງຕັນໄດ້ຍາກ. ແຕ່ ທຸກສິ່ງທຸກຢ່າງ ທີ່ວໍຊິງຕັນຄິດ ຫລືເຮັດຫຍັງຢູ່ທີ່ເວີຈີເນັຽ ຍາມ ລາວຍັງໜຸ່ມພູ່ນ ກໍເປັນຄ້າຍກັບວ່າ ລາວລ້ງລາວເຄີຍມາແລ້ວ ຢ່າງວ່າຫລັກສູດການຮຽນ ເຄື່ອງນຸ່ງຂອງຖື ແລະເຄື່ອງຂອງ ໃນເຮືອນໃນບ້ານ ຕລອດຮອດຫຼວງລອນດອນເອງ ກໍເປັນບ່ອນທີ່ ວ່າ ວໍຊິງຕັນໄດ້ຜ່ານຮອບຮູ້ມາໝົດແລ້ວ ຈົນບໍ່ມີແນວແປກແກຫູ ແກຕາໄດ້.

ບັດນີ້ ວໍຊິງຕັນກໍຊາບວ່າ ທ່ານບຣາດດັອກ ແລະພວກ ນາຍທະຫານຂອງເຂົາເຈົ້າ ເວົ້າລົມກັນວ່າ ພວກອະເມຣິກັນ ເຮັດວຽກມາເສັຽຫາຍພຽງໃດ ແລະບໍ່ໜ້າເຊື່ອໄດ້ ພວກອັງ

ກໍດີຂໍ້ສັງເກດທີ່ຖືກຕ້ອງແລ້ວ ທີ່ວ່າສິ່ງທີ່ເຂົາເຫັນມານັ້ນ ແມ່ນຄວາມຈິງ - ມີນັກການເມືອງຜູ້ນຶ່ງຊື່ວາງ ບັງຊາແມງ ຝຣັ່ງແລັງ ເກີດສົນໃຈຢາກຫາທາງກູ້ກຽດໄວ້ ໃນສິ່ງທີ່ເຂົ້າໃຈກັນຜິດ ແລະເພື່ອເປັນສິ່ງປະກັນຕໍ່ໄປ ສ່ວນທ່ານວໍຊິງຕັນ ບໍ່ໃຫ້ໂອກາດແກ່ບຣາດດ໊ອກ ກ່າວຄວາມບໍ່ດີບໍ່ງາມ ຂອງຊາວອະເມຣິກັນເລີຍ ໃນປີຕໍ່ໆໄປ ມີຊາວເມືອງເວີຊີເນັຽຜູ້ນຶ່ງຊຶ່ງເຄີຍເປັນທະຫານໃນຍາມນັ້ນ ເຄີຍເຫັນ ແລະຈຳໄດ້ວ່າ ວໍຊິງຕັນຢູ່ໃນທ່າແລະເຄື່ອງແບບສີຟ້າຂອງທະຫານ ໄດ້ໂຕ້ຕອບກັບບຣາດດ໊ອກວ່າ ຜູ້ຊົ່ວກໍມີຢູ່ແຕ່ບາງຄົນເທົ່ານັ້ນ ແຕ່ບໍ່ແມ່ນຊົ່ວໝົດທັງເມືອງດອກ.

ຝ່າຍບຣາດດອກ ກໍຍອມຟັງໄດ້ ໂດຍບໍ່ຄຽດເຄືອງປະການໃດ ເພາະມັນມີອັນໃດອັນນຶ່ງ ໃນຕົວຂອງວໍຊິງຕັນ ທີ່ພາໃຫ້ບຣາດດ໊ອກເກີດຄວາມພໍໃຈໄດ້ ອາດຈະເປັນຍ້ອນວ່າ ລາວເຊື່ອ ເພາະວ່າ ລາວເຄີຍເວົ້າມານັ້ນ ຫລືວ່າ ຍ້ອນວໍຊິງຕັນນັ້ນເປັນຄົນຊຶ່ງໜ້າເຊື່ອຖືກໍໄດ້ ເຊັ່ນເວລາວໍຊິງຕັນຍັງໜຸ່ມໆຢູ່ນັ້ນກໍມັກມີຄົນອາຍຸແກ່ ຊ່ວຍເຫລືອລາວຢູ່ເລື້ອຍ ສ່ວນບຣາດດ໊ອກເອງ ຊຶ່ງເປັນຄົນເຄີຍຮ້າຍ ເຄີຍຂູ່ນາບທະຫານ ຢູ່ເລື້ອຍ ກໍຍອມຮັບຟັງວໍຊິງຕັນລົມ ແທນທີ່ຈະຮ້າຍຂາດໃຫ້ວໍຊິງຕັນ ທ່ານບຣາດດ໊ອກຊ້ຳຍັງແລະຊັກຊວນອວນພວກຂອງລາວໃຫ້ຮັກແພງເອົາໜຸ່ມຜູ້ນັ້ນ.

ໃນອາທິດຕໍ່ໆມາ ຊາຍໜຸ່ມຜູ້ນັ້ນກໍກາຍເປັນຜູ້ກ້າຫານບໍ່ເກງກົວແກ່ການທີ່ຝຣັ່ງ ແລະພວກອິນເດັຽ ຈະມາຮົບເລວກັບ

ທັບຂອງພວກເສື້ອແດງ ເຖິງແມ່ນວ່າ ຈະນອນປ່ວຍຢູ່ເປັນຫລາຍອາທິດກໍຕາມ ວໍຊິງຕັນ ຍັງພາທະຫານໄປຕໍ່ຕານໄດທຸກພາກ ລາວທຳຄົນເປັນຄົນຂອງພວກບຣາດດ໊ອກເອງ ແລະພຍາຍາມໂອບໂລມພວກທີ່ໂຕນໜີ ແຕກອນດວຍຄວາມຢານນັ້ນ ໃຫເຂົາເຈົ້າມາຢ່າງເດີມ ມາສູ້ອງຕົວທີ່ຕານຫລັງມາຖືກຍິງ ແລະວໍຊິງຕັນເອງ ກໍຍັງບໍ່ຕາຍແຕນອຍດຽວ ພໍດີລູກປືນໄປຖືກບຣາດດ໊ອກຕາຍກັບບ່ອນ ພວກທະຫານຢານພາກັນແລ່ນພາຍ ຍັງແຕ່ທານວໍຊິງຕັນກັບໝູ່ອີກເລັກນອຍ ທີ່ພາກັນຢູ່ເພື່ອນຽນຄາບທານນາຍພົນທີ່ຕາຍນັ້ນ ແລະພິຈາຣະນາ ເກັບເອົາເຄື່ອງທີ່ເຫຼືອຢູ່ສນາມຣົບໄປພຽນໄວ. ພໍເມື່ອຝ່າຍບຣາດດ໊ອກ ເສັຽຊັຍ ແລວຄວາມຄິດຂອງວໍຊິງຕັນກໍເລີຍປ່ຽນ ລາວບໍ່ນຶກວ່າທະຫານອັງກິດຈະກາເກັ່ງເຖິງພຽງນັ້ນເລີຍ ລາວຂຽນໄປສົ່ງຂາວອາຍ ແຈກຂອງລາວວ່າ ໄດສູນເສັຽ ທະຫານຫລາຍຄົນທີ່ເຄີຍຣົບເປັນຄັ້ງໃຫຍດັ່ງນີ້ ຖາວາລາວບໍ່ໄດຢູ່ບໍ່ໄດເຫັນເອງ ລາວອາດຈະ ບໍ່ເຊື່ອໃນເຣື່ອງນັ້ນເລີຍ ລາວຂຽນຫາແມ່ລາວ ເພື່ອເປັນ ການສົ່ງຂາວວາ ລາວຍັງມີຊີວິດຢູ່ ແລະເວົ້າວາ ພວກທະຫານແຕກໜີປານໂຕສັດ.

ຫລາຍມື້ຕໍ່ມາ ຈຶ່ງກັບຄືນໄປ ເມົາເວີນົງ ດວຍຄວາມອິດເມື່ອຍ ຍອມການຕໍ່ສູ້ ໃນຄືນທີ່ລາວໄປຮອດນັ້ນ ກໍໄດຮັບຈົດໝາຍການນຶ່ງ ຈາກນາງຊາລລີ ແຟຝັກ ທີ່ເວົ້າວ່າ ນາງໄດໄຫວວອນຊ່ວຍໃຫໄດກັບຄືນດວຍຄວາມປອດພັຍແລວກໍເຮັດເປັນຜູໃຈດຳ ຢູ່ໂດຍບໍ່ໃຫນາງໄດພົບໜາເລີຍ ໃນແລງວັນນັ້ນ.

ຖ້າຮູ້ວ່າ ລາວຫາກບໍ່ມາປັຽມປານນາງເຊັ່ນນັ້ນ ນາງຄິດວ່າຈະຂອນໜູໄປຖ້າຢູ່ ເມົ້າເວີນົງ "ມ໋ອນເຊົ້າແຕຣູດິກ" ເພື່ອເປັນການລະມັດລະວັງແລວ ນາງຊາລີ ຈຶ່ງຂໍໃຫ້ຜູ້ຍິງອີກສອງຄົນເຊັນຊື່ລົງຂາງງຊີຂອງຕົນໃນຈົດໝາຍນັ້ນນຳດວຍ.

ເວລາ ຫລືໂອກາດຕ່າງໆ ຂອງນາງຊາລີ ໄດ້ສິ້ນສຸດເສັ້ຽແລວບັດນີ້ ເນື່ອງຈາກວ່າ ສົງຄາມໂລກ ຊຶ່ງລະເບີດຂຶ້ນຄາວເມື່ອທ່ານວໍຊິງຕັນ ໄດຮູ້ກັບປືນໄຟເປັນຄັ້ງແຣກນັ້ນ ໄດຫຍັບເຂົ້າມາໃກ ເວີຊີເນັຽແລວ ພວກທະຫານຂອງພວກບຣາດດັອກ ກໍໄດຖອຍທັບກັບໄປ ຟີລາແດນເຟັຽພູນ ປະປ່ອຍເຂດຂອງເວີຊີເນັຽທັງໝົດໄວ້ໃນເງື້ອມມືຂອງພວກຝຣັ່ງ ແລະພວກອິນເດັຽ ພວກຄົນຊຶ່ງຢູ່ເຂດຊຸ້ມຄອງກໍພາກັນຄອງຖາ ໃຫໜຸ່ມ ໘໔ ປີ ປອ໌ຣຊ ວໍຊິງຕັນ ມາຊ່ວຍເອົາອອກຈາກເງື້ອມມືຂອງສັດໆ.

ນັກການເມືອງທັງຫລາຍ ຢູ່ ວີລຽມຊ໌ເບີກ ຈຶ່ງສົ່ງຈົດໝາຍໄປເມົ້າເວີນົງ ເພື່ອຖາມວໍຊິງຕັນວ່າລາວຈະຍິນດີຮັບໃຊກອງທັບຫລືບໍ່ ລາວຈຶ່ງຕອບຄືນເປັນຄຳຂາດວ່າບໍ່ ເວັ້ນໄວ້ແຕສະພາຂອງເບີກແກດຊ໌ ຫາກຈະອະນຸມັດເງິນພຽງພໍ ເພື່ອຣັດເສິກໃຫ້ ແລະມອບສິດໃຫ້ຜູ້ບັນຊາການເລືອກເອົາ ນາຍທະຫານໄດດ້ວຍຕົນເອງ ວັນທີ່ຜ່ານມາພຸ້ນເປັນເຣື່ອງທີ່ອອນປະສົບປະການຂອງຄົນໜຸ່ມເອງ ທ່ານປອ໌ຣຊ ວໍຊິງຕັນ ເຄີຍເສັຽຊັຍມາສອງຄັ້ງໃຫ້ຍແລວກໍຈິງ ແຕ່ມັນກໍເປັນບົດຮຽນອັນລ້ຳຄ່າ ໃຫ້ລາວຫລາຍຢ່າງ ສະພາຈຶ່ງຟາວອະນຸມັດເງິນ ແລະໄພ່ພົນໃຫ

ຕາມທີ່ລາວຂໍໄວ້ ທາງສະພາຍັງໄດ້ແຕ່ງຕັ້ງໃຫ້ລາວ ເປັນຜູ້ບັນຊາການສູງສຸດຂອງກອງທັບອີກດວຍ.

ກ່ອນຈະໄປຕໍ່ສູ້ກັບຝຣັ່ງເສດ ວໍຊິງຕັນ ຕ້ອງໄດ້ຕໍ່ສູ້ຢ່າງຮຸນແຮງກັບແມ່ລາວເອງກ່ອນ ຊຶ່ງມາຫ້າມບໍ່ໃຫ້ໄປ ເທື່ອນຈຳເປັນໄດ້ເວົ້າແຮງແດ່ ລາວອະທິບາຍວ່າ ບໍ່ແມ່ນລາວຂໍໄປດອກ ຫລືຂໍເປັນຜູ້ບັງຄັບດອກ ແລະອີກຢ່າງນຶ່ງ ຖ້າວ່າບໍ່ໄປ ຍິ່ງຈະເສັຽກຽດຊູ້ອີກ ການເສັຽກຽດອາດພາໃຫ້ແມ່ໂສກເສົ້າ ກວ່າການໄປອີກດວຍ.

ສ່ວນອີກທາງນຶ່ງ ວໍຊິງຕັນ ກໍ້ລົງແລະສລາຄມາແລ້ວ ໃນລະຫວ່າງສອງເດືອນ ຫລັງຈາກທີ່ລາວເສັຽຊັຍທີ່ບຣາດດອກແລ້ວ ກໍໄດ້ກັບໄປທີ່ອາເລັກຊັງເດັຽ ເວີຊີເນັຽ ມັນເປັນເວລາທີ່ຜູ້ຄົນທາງການເລືອກຕັ້ງເອົາຜູ້ແທນເຂົ້ານັ່ງສະພາ ເບີກແກດ ສຳລັບຕັ່ງນຶ່ງ ໃນຈຳນວນຕັ່ງຂອງຜູ້ແທນໃນສະພານັ້ນ ພວກປ່ອນບັດຈະຕ້ອງພິຈາຣະນາ ຕັດສິນໃຈວ່າ ຈະເລືອກເອົາຜູ້ນຶ່ງໃນລະຫວ່າງສອງຄົນ ຄືຜູ້ນຶ່ງ ແມ່ນຄົນໃກ້ຄຽງຂອງວໍຊິງຕັນ ແລະຜູ້ນຶ່ງແມ່ນນັກການເມືອງ ຊື່ວ່າ ວິນລຽມ ເປນີ ຊຶ່ງເປັນຄົນຮາງນອຍ ແລະມັກຍອງແຕ່ຕົນເອງ ມື້ນຶ່ງເປນີ ແລະວໍຊິງຕັນພົບກັນ ຢູ່ຖນົນເລີຍເກີດອາລະວາດກັນຂຶ້ນ ທ່ານເປນີເອົາໄມ້ຄ້ອນທີ່ຕົນຖືຢູ່ ຕີຟາດທ່ານວໍຊິງຕັນ ຜູ້ບັນຊາການສູງສຸດຈົນຕົກຕະຄອງ ໝູ່ພວກກໍແລ່ນໄປໂອມເອົາຂຶ້ນ ແລະກຽມພ້ອມຈະແກ້ຄືນ ແຕ່ວ່າວໍຊິງຕັນ ລຸກຂຶ້ນໄດ້ແລ້ວ ເຫັນວ່າບໍ່ເຈັບບ່ອນໃດແລ້ວກໍຍ່າງໜີໄປ.

ມື້ເຊົ້າມາ ທ່ານເປມີ ຈຶ່ງໄດ້ຮັບຈົດໝາຍຈາກທ່ານວໍຊິງຕັນ ວ່າຂໍນັດພົບກັນ ຂາວກະຈາຍໄປທົ່ວເມືອງ ແລະຜູ້ໃດກໍເຂົ້າໃຈວ່າ ທ່ານວໍຊິງຕັນ ຫວັງຈະສູ້ນຳກັບທ່ານເປມີຄືນ ຖ້າວ່າທ່ານເປມີຫາກບໍ່ຂໍໂທດແລ້ວ ຜູ້ຄົນຄິດວ່າລາວຈະຕອງເຈັບກັບປືນຂອງທ່ານວໍຊິງຕັນ ເປັນແນ.

ຮອດຍາມແລ້ວ ທ່ານເປມີ ກໍຄ່ອຍຍ່າງໄປຫາທີ່ນັດພົບ ແລະຕິດຕາມໄປດ້ວຍ ຜູ້ຢາກເບິ່ງຢ່າງລັບລີ້ ພວກທີ່ຖ້າເບິ່ງວ່າສອງຄົນຈະສູ້ກັນແນວໃດ ກໍພາກັນຕົກສະເງີ້ຢູ່ ເພາະວ່າບໍ່ເຫັນມີປືນພາຫນ້າໄມ້ອັນໃດຫມົດ ພໍເມື່ອສອງຄົນພົບກັນແລ້ວ ທ່ານວໍຊິງຕັນ ຜູ້ບຸນຍາການ ຈຶ່ງຍື່ນມືໄປສັມຜັດມືກັບທ່ານເປມີ ແລ້ວເວົ້າວ່າ "ທ່ານເປມີເອີຍ ຂອຍຮູ້ສຶກວ່າ ວານນີ້ ຂອຍໄດ້ຜິດໄປແລ້ວ" ລາວບອກກັບທ່ານເປມີວ່າ ຖ້າວ່າ ການຈັບການຕີລາວວານນີ້ ຫາກເປັນການຫນຳໃຈຄັກແລ້ວ ແລະຖ້າຫາກວ່າພໍດີພໍງາມແລ້ວ ລາວເລີຍວ່າ "ແຕ່ນີ້ໄປ ເຮົາມາຈັບມືກັນເປັນເພື່ອນຮັກກັນເທາະ".

ນີ້ຈຶ່ງແມ່ນກິຣິຍາຂອງຄົນຫນຸ່ມ ທີ່ເຄີຍຄວບຄຸມ ຄວາມຮູ້ສຶກຂອງຕົນມາແລ້ວ ບໍ່ດົນກໍຈຶ່ງສາມາດ ບັງຄັບສິ່ງຍາກໆໄດ້ຢ່າງສະບາຍ ດ້ວຍການກ່າວເວົ້າ ວ່າຕົນຜິດ ເມື່ອໄດ້ຍິນຄວາມເວົ້າອັນມ່ອນເອັ້ນນັ້ນແລ້ວ ທ່ານເປມີ ກໍເລີຍປ່ຽນຈິດປ່ຽນໃຈ ຈາກເປັນສັດຕູມາເປັນເພື່ອນຮັກ ເພື່ອນແພງຂອງວໍຊິງຕັນ ຈົນຕລອດຊີວິດທາງຄອບຄົວ ຂອງທ່ານເປມີ ກໍພາກັນເລົ່າເຣື່ອງນີ້ແລ້ວ ເລົ່າອີກສູ່ກັນຟັງຈົນຮອດ ໔໐ ປີ.

ທ່ານວໍຊິງຕັນ ຮູ້ສຶກວ່າ ລາວຈະຕ້ອງການໃຊ້ພົບໄຫວຫລາຍ ສູ້ກັບຢູ່ເຂດຊາຍແດນ ຄວາມຫຍຸ້ງຍາກມີຢູ່ອ້ອມຮອບຕົວລາວ ແລະມັນກໍມັກເກີດມີບັນຫາທຸກຄັ້ງ ທີ່ລາວຊອກເກນທະຫານ ເພື່ອຮັບໃຊ້ໃນກອງທັບຂອງລາວ ຜູ້ຄົນກໍບໍ່ຢາກລຳລຽງມາແລະອົດ ສຳລັບຂົນເຄື່ອງ ຫລືບໍ່ຢາກສົ່ງອາຫານໃຫ້ແກ່ນາຍທະຫານ ທີ່ໄປຕໍ່ສູ້ຕາງເຂົາ ພວກທີ່ທ່ານວໍຊິງຕັນ ເກນໄດ້ກໍມີນ້ອຍ ທັງເປັນພວກບໍ່ດີ ເປັນນັກດື່ມຫລືວ່າ ເປັນຄົນຂີ້ຢ້ານ.

ເມື່ອມີບັນຫາຫຍຸ້ງຍາກເກີດຂຶ້ນເຊັ່ນນີ້ ພວກອິນເດຍໄດ້ໂອກາດກໍພາກັນຈູດຢາວເຜົາເຮືອນ ຈັບເກນເອົາພວກຜູ້ຍິງໜີໄປ ທ່ານວໍຊິງຕັນ ຊາບຂ່າວຂອງສິ່ງຮ້າຍເກີດຂຶ້ນທຸກວັນ ລາວສັງເກດວ່າ ຜູ້ຄົນບໍ່ຄຳນຶງເຖິງເຫດທີ່ບ້ານເມືອງໄດ້ເປັນໄປ. ມີຈົດໝາຍສົ່ງມາຫາລາວທຸກມື້ ເພື່ອຮ້ອງຂໍຄວາມຊ່ວຍເຫລືອແລະທ່ານວໍຊິງຕັນ ກໍໄດ້ຕອບໄປວ່າ ລາວຍິນດີສລະໄດ້ເຖິງຊີວິດ ໃນການຕໍ່ຕ້ານກັບສັດຕູ ເພື່ອໃຫ້ປະຊາຊົນຂອງລາວໄດ້ຢູ່ດີ

ໝູ່ເພື່ອນພ້ອງໃນເຂດ ວິລລຽມສ໌ເບີກ ມີຄວາມເຂົ້າອົກເຂົ້າໃຈລາວດີທຸກຄົນ ເຊັ່ນທ່ານ ບີເວີລີ ຣາບິຮຊັນ ທີ່ເປັນສະມາຊິກໃນສະພາ ເບີກແກດຊ໌ ໄດ້ຂຽນຈົດໝາຍໄປເວົ້າວ່າ ໝົດທຸກຄົນ ມີຫວັງວ່າທ່ານຢອຣ໌ຊ ຄົງຈະສາມາດທຳໃຫ້ການຕໍ່ສູ້ ສຽງສຸດໄດ້ໂດຍດີ ພວກສັດຕູຂອງລາວອັນມີທ່ານຜູ້ປົກຄອງ ຊື່ທ່ານ ດິນວິດດີ ຮວມຢູ່ດ້ວຍນັ້ນ ໄດ້ເວົ້າວ່າ ນາຍທະຫານແລະພົນທະຫານ ຂອງ ວໍຊິງຕັນ ນັ້ນ ມັກດື່ມແລະມັກຜິດຖຽງກັນຫລາຍ ກວ່າຈະເປັນທະຫານດີ.

ທ່ານວໍຊິງຕັນໄດ້ຕອບໄປວ່າ ໃນການປະທະກັນ ໔໐ ຄັ້ງ ມີການສູນເສັຽຄົນໄປ ໑໐໐ ຄົນ ແຕ່ກອງພົນມັນເປັນສິ່ງລຳບາກທີ່ສຸດ ທີ່ທ່ານວໍຊິງຕັນ ຈະຍອມຮັບຮູ້ຄວາມເສັຽຫາຍຢ່າງບໍ່ຄຽດບໍ່ເຄືອງເປັນແບບນີ້ ລາວໄດ້ຂຽນໄປເລົ່າສູ່ພວກນັກການເມືອງຢູ່ ວິລລຽມຊ໌ເບີກຟັງວ່າ ພວກລາວໄດ້ລຶດລະໜ້າທີ່ກໍຫລາຍຄັ້ງກໍເປັນຄືແບບໜຸ່ມແຂງແຮງ ເສິກທີ່ເຂດຊາຍແດນຄ່ອຍໆດຳເນີນໄປເລື້ອຍໆ ພວກອັງກິດສັງເກດໄດ້ວ່າ ການາດາ ແມ່ນບ່ອນທີ່ຝຣັ່ງເສດຂະຫຍາຍອິດທິພົນ ຢູ່ທາງພາກເໜືອຂອງອະເມຣິກາ ອັນເປັນບ່ອນກອງທັບໃຫຍ່ ຂອງເຂົາຣົບກັນ ສ່ວນວໍຊິງຕັນແຫຢູ່ເບື້ອງຫລັງ ເປັນຜູ້ບັນຊາບໍ່ຊື່ນບໍ່ບານ ແລະຄຸມແຕ່ສ່ວນນ້ອຍຂອງເຂດຣົບກັນ ເຖິງແມ່ນວ່າລາວເອງບໍ່ຮູ້ສຶກຫຍັງເລີຍ ລາວກໍໄດ້ຮຽນຮູ້ຫລາຍສິ່ງຫລາຍຢ່າງ ລາວຮູ້ຈັກວ່າຄວນເຮັດແນວໃດ ນຳພວກນັກກົດໝາຍ ພວກນັກການເມືອງທີ່ເຂົາກໍຄຶດວ່າເຂົາເອງກໍເປັນນາຍພົນໄດ້ ລາວຮູ້ຈັກອີກວ່າການສອນຄົນໃຫ້ເປັນທະຫານທີ່ດີນັ້ນ ກໍເປັນການລຳບາກເໝືອນກັນ ມີເທື່ອນຶ່ງທະຫານແລ່ນໜີປະຜູ້ບັນຊາການຂອງເຂົາ ໃຫ້ພວກອິນດ້ຽນຂ້າຖິ້ມ ທ່ານວໍຊິງຕັນຈຶ່ງໄດ້ຈັດການຢ່າງວ່ອງໄວ ລາວໄດ້ຂໍສິດນຳສະພາເບີກແກດຊ໌ ເພື່ອເອົາຕົວຜູ້ພາໜີໂຕນໜີໄປຍິງຖິ້ມ ທາງສະພາກໍເຫັນດີ ແລະຜູ້ພາໜີໂຕນໜີກໍຖືກຍິງແທ້.

ຕໍ່ມາ ທ່ານວໍຊິງຕັນ ຮູ້ສຶກວ່າ ການຣົບເສິກຣົບເສືອນີ້ກໍຫລາຍສົມຄວນແລ້ວ ເລີຍຄຶດຢາກມີເມັຍ ພໍເມື່ອເດີນທາງໄປ

ຣາຊການທະຫານທີ່ເມືອງບິຊຸຕົງ  ລາວໄດ້ແວ່ຢູ່ເມືອງນິວຢອກຫລາຍວັນເພື່ອຢ້ຽມຢາມນາງມາຣີຟີລິບຊ໌ ເປັນສາວທັງງາມທັງມີທີ່ດິນຫລາຍ ເຖິງແມ່ນວ່າວໍຊິງຕັນ ສົນໃຈນຳນາງກໍຈິງ  ແຕ່ກໍບໍ່ມີຫຍັງເລີຍເກີດຂຶ້ນ  ໄດ້ປີກວ່າແລ້ວ ລາວຈຶ່ງຖາມເພື່ອນຜູ້ນຶ່ງ ຢູ່ນິວຢອກນັ້ນວ່າ  ຜູ້ສາວສົນໃຈນຳລາວແດ່ບໍ່ ເພື່ອນຂອງລາວຕອບໄປວ່າ  ໃຫ້ເຮັດແບບທະຫານເອົາ ໂດຍໃຫ້ຍາງມານິວຢອກພໍ້ ເພື່ອມາຈັດການບັງຄັບໃຫ້ຜູ້ສາວແຕ່ງດອງກັນເຮືອງຢ່າງນີ້ ບໍ່ແມ່ນວິທີທີ່ວໍຊິງຕັນ ມັກເຮັດເລີຍ.

ຫລາຍເດືອນຜ່ານໄປ ທ່ານວໍຊິງຕັນໄດ້ເດີນທາງໄປວິລລຽມຊ໌ເບີກ ເລີຍໄປຢຸດພັກຢູ່ທີ່ "ທຳນຽບຂາວ" ທີ່ເປັນເຮືອນຂອງນາງມາກຕາ ດັນດຣິດເຊີ ຄັຊຕິຊ  ສາວໝ້າຍໜຸ່ມໆ ເປັນແມ່ໝ້າຍມາໄດ້ ໗ ເດືອນແລ້ວ ນາງມາກຕາ ຄັຊຕິຊ ເປັນຜູ້ຍິງເສດຖີ ຂອງເມືອງເວີຈີເນັຽ ມີເຮືອນຫລັງໃຫຍ່  ຊຶ່ງແນ່ນອນແລ້ວວ່າ  ຄົນສຳຄັນຄືວໍຊິງຕັນນີ້ ກໍຄົງໄດ້ເຄີຍຢ້ຽມຢາມກັນມາກ່ອນແລ້ວ ທັງສອງກໍຮູ້ຈັກຮັກແພງກັນດີຂຶ້ນ ແລະກະວ່າຈະແຕ່ງດອງກັນ.

ເຂົາເຈົ້າມີອາຍຸພໍໄລ່ເລັ່ຽກັນ ວໍຊິງຕັນ ໒໗ ປີ  ແລະນາງມາກຕາ ແກ່ກວ່າເກົ້າເດືອນ  ວໍຊິງຕັນ ມີເຮືອນຫາກບໍ່ມີເນັຽ ນາງມາກຕາມີດິນທີ່ຕ້ອງການຜູ້ບົວຣະບັດ  ຜູ້ໃດທີ່ເຄີຍຮູ້ປວັດຂອງທ່ານຢອຣ໌ຊ ວໍຊິງຕັນ  ຄົງເຫັນເຮືອງນີ້ເປັນຄືເຮືອງທຸຣະຂອງຄວາມຕົກລົງປົງໃຈແທ້ ຄວາມຈິງກໍຄືວ່າທ່ານຢອຣ໌ຊແລະນາງມາກຕາ ນີ້  ບໍ່ໄດ້ເອົາກັນດ້ວຍຄວາມຮັກອັນຍິ່ງໃຫຍ່

ດອກ ຝ່າຍວໍຊິງຕັນກໍພຍາຍາມລືມຄວາມຮັກອັນຕົນເຄີຍມີ ນຳນາງຊາລີ ແຟຟັກພູນ ແລະຝ່າຍນາງມາກຕາ ກໍເປັນແມ່ໝ່າຍມີລູກຕິດມາຕັ້ງ ສີ່ຄົນ ແຕ່ເຖິງຢ່າງໃດກໍດີ ຄວາມຮັກທີ່ເກີດມີນັ້ນ ກໍແມ່ນຮັກລະຫວ່າງທັງສອງເຂົາເຈົ້າແທ້ ເວລາວໍຊິງຕັນຈາກໄປແນວໜ້າ ລາວກໍຂຽນຫານາງມາກຕາ ເພື່ອສົ່ງຂ່າວຄວາມຮູ້ສຶກຊາບຊຶ້ງສູ່ຟັງ.

ຄວາມຮັກໃນຖານະເປັນໝູ່ເພື່ອນຮັກກັນ ໄດ້ເກີດມີຢູ່ຢ່າງຍືດເຍື້ອຍາວນານແທ້ ລະຫວ່າງວໍຊິງຕັນແລະມາກຕາຄັຊຕິຊ ຈົນວ່າເກືອບຮອດ ໔໐ ປີ ມີເວລາໜຶ່ງ ຫລັງຈາກທີ່ທ່ານວໍຊິງຕັນໄດ້ເປັນປະທານາທິບໍດີຄັ້ງທີສອງນີ້ ທ່ານໄດ້ກັບມາຢ້ຽມຢາມເຮືອນ ທ່ານໄດ້ລືມເອົາສານຂອງນາງມາກຕາ ຕິດຕົວມານຳ ແຕ່ຮູ້ສອດເຫັນສານແລ້ວ ເລີຍເວົ້າທັງຍິ້ມຢອກວໍຊິງຕັນວ່າ ລາວໄດ້ພົບເຫັນສານສົ່ງຫາທ່ານນັ້ນເປັນຮອຍມືຂຽນຈາກຜູ້ຍິງ ທ່ານວໍຊິງຕັນ ຈຶ່ງຕອບໄປວ່າ ຖ້າສານເຫຼົ່ານັ້ນຫາກຖືກໄຂອ່ານ ຈະຕ້ອງແນ່ນອນທີ່ສຸດວ່າ ສານເຫຼົ່ານັ້ນ ຄົງມີໝາຍປາຍທາງໝູ່ຄູ່ກັນພຸ້ນຫລາຍກວ່າ ຈະກ່ຽວກັບເຣື່ອງຮັກທາງຊູ້ສາວ.

ສຳລັບທ່ານວໍຊິງຕັນແລ້ວ ລາວຖືວ່າ ຄວາມຮັກແພງກັນໃນສະຖານະໝູ່ຄູ່ກັນເປັນສິ່ງສຳຄັນຢູ່ມາກ ລາວຮູ້ສຶກວ່າມັນເປັນສິ່ງໜັກໜາ ມີກຽດແກ່ມະນຸດຄົນເຮົາແທ້ ທ່ານວໍຊິງຕັນ ຖືວ່າຄວາມຮັກລະຫວ່າງຜົວແລະເມັຍ ເປັນຄວາມຮັກຢ່າງຖນຸຖນອມເປັນຄວາມຮັກທີ່ບໍ່ປ່ຽນແປງ ແລະມີຣາຄາມາກ ຫລາຍປີຕໍ່ມາວໍຊິງຕັນຈຶ່ງຂຽນຫາພີ່ນ້ອງຂອງນາງມາກຕາ ຊຶ່ງເປັນສາວຫລັງ

ວ່າຈະແຕ່ງດອງກັນ ລາວໄດ້ບອກນາງວ່າ ຄວາມຮັກເປັນສິ່ງ ນຶ່ງທີ່ອ່ອນຊ້ອນ ແລະສວຍງາມ ແຕ່ວ່າ ຄືເຮົາຮູ້ນັ້ນແລ້ວວ່າ ຂອງງາມແລະອ່ອນຊ້ອນນີ້ ອາດພາເພີນຈົນໂພດໄປກໍ່ເປັນໄດ້ ລາວຖືວ່າບໍ່ມີອັນໃດດອກ ຈະມີຄວາມສຳຄັນ ລື່ນໄປກວ່າຄວາມ ເຂົ້າໃຈກັນໄດ້ ແລະກິຣິຍາມາຣະຍາດດີ.

ໃນສັດຕະວັດ ກ່ອນວໍຊິງຕັນເກີດພຸ້ນ ໄດ້ມີຄົນອັງກິດຊື່ວ່າ ທ່ານຟຣັງຊິສ ເບກອນ ເປັນນັກແຕ່ງໜັງສື ໄດ້ຂຽນໄວ້ວ່າ ບໍ່ ມີໃຜດອກທີ່ຈະສາມາດ ເວົ້າເຣື່ອງລູກຊາຍຂອງຕົນໃຫ້ຖືກຕ້ອງ ດີກວ່າຜູ້ທີ່ເປັນພໍ່ ຫລືວ່າ ຈະເວົ້ານຳເມັຽຂອງຕົນໄດ້ດີໄດ້ຄັກ ກວ່າ ນອກຈາກຜູ້ທີ່ເປັນຜົວເອງ ແຕ່ວ່າ ສຳລັບຈະເວົ້າລົມ ກັນເຣື່ອງໝູ່ຄູ່ແລ້ວ ໃຜຢາກເວົ້າຢາກລົມຫຍັງກັນ ກໍ່ພໍເວົ້າໄດ້ ເມື່ອມາປຽບນາງມາກາຕາ ຄັຊຕິຊູ ຊຶ່ງມີວາດຊົງເປັນໜ້າຮັກ ແລະມີມາຣະຍາດອັນອ່ອນຫວານແລ້ວ ກໍ່ແປວ່າ ທ່ານຢອຣ໌ຊ ໄດ້ ໝູ່ຄູ່ ຜູ້ທີ່ເວົ້າລົມກັນໄດ້ຢ່າງສະບາຍ ຢ່າງເວົ້າມາບັນນີ້.

ໃນຫລາຍສັດຕະວັດມາແລ້ວ ມີນັກແຕ່ງໜັງສືຄົນໂຣມັນ ຜູ້ ນຶ່ງຊື່ວ່າ ເຊເນກາ ໄດ້ຂຽນໄວ້ວ່າ ຄວາມຮັກແບບເປັນມິດ ເປັນເພື່ອນກັນນີ້ ເຄີຍໄດ້ບຸນເປັນຄຸນຍອນ ແຕ່ສ່ວນວ່າຄວາມ ຮຳມັກກັນແບບຊູ້ສາວນີ້ ບາງທີກໍ່ເປັນເຂັນຍອນ ທ່ານວໍຊິງຕັນ ໄດ້ຮຽນຮັກຈາກປະສົບປະການທີ່ແຄນຂຸ່ນເຄືອງ ຄືກັນກັບຂໍ້ຄວາມທີ່ ກ່າວມານີ້ເປັນປຽບເລີຍ ຄືວ່າ ເວລາທ່ານວໍຊິງຕັນ ໄດ້ໝັ້ນນາງ ມາກາຕາໄວ້ເພື່ອແຕ່ງດອງຮຽບຮ້ອຍແລ້ວ ປະມານສາມ ອາທິດ ກ່ວາ ລາວເລີຍໄດ້ຮັບສານ ສະບັບນຶ່ງຈາກນາງຊາລີ ແຟຟັກ

ນາງໄດ້ຂຽນຕາມທີ່ເຄີຍຂຽນໃນທ່າທີທົວເປີ້ຍ ທັ່ງຕວງວ່າເຫດ
ຜົນທີ່ພາໃຫ້ວໍຊິງຕັນ ໂສກເສົ້າເວົ້າຈົ່ມວ່າ ແຕ່ເສີກນານແລວ
ນັ້ນ ມັນຄົງເປັນຍອນຫຼົງໝູ່ມຮັກຕ່າງຫາກ.

ນາງຊາລລີ ບໍ່ເຄີຍຮູ້ເລີຍວ່າ ທ່ານວໍຊິງຕັນ ຮັກຕົນ
ພຽງໃດ ຈົນເຖິງວັນນຶ່ງທີ່ວໍຊິງຕັນຕອບຈົດໝາຍຂອງຕົນຢ່າງ
ຍືດຍາວ ວໍຊິງຕັນເວົ້າວ່າ ມັນເປັນຄວາມຈິງແທ້ທີ່ລາວມີຮັກ
ແລະຜູ້ຍິງທີ່ລາວຮັກນັ້ນ ຕໍ່ບໍ່ຕາມນາງຊາລລີ ກໍ່ເລີຍຮູ້ຈັກເອງ.
ຜູ້ຍິງຜູ້ນັ້ນ ເປັນຜູ້ມີຄວາມສາມາດຫຼາຍຮອບດ້ານ ຈົນວ່າ ຊິງ
ຕັນພົບເຫັນແລວ ຫນີບໍ່ພົ້ນ ລາວໄດ້ຂຽນວ່າ ແຮງອັນທີ່ດູດດຶງ
ຈິດໃຈ ລາວຫລາຍ ກໍ່ແມ່ນຄວາມສວຍງາມຂອງນາງ ແລະ
ເວລາຕັ້ງພົ້ນໆຄັ້ງ ທີ່ລາວເຄີຍຊາບຊຶ້ງຊື່ນບານ ທີ່ພາໃຫ້ລາວ
ຫວນຄິດເຖິງ ແລະລາວພຍາຍາມຢາກລືມສິ່ງເຫຼົ່ານັ້ນ ຜົນທີ່ສຸດ
ຂອງເຣື່ອງ ກໍ່ໄດ້ບອກລາວວ່າ ບໍ່ມີທາງທີ່ຈະລືມໄດ້ ລາວກໍ່ມີ
ແຕ່ບອກກັບນາງຢ່າງງ່າຍໆວ່າ ຢ່າລະແວງສົງສັຍຫຍັງ ແລະ
ຢ່າຟ້າວປະກາດໃນເຣື່ອງນີ້ເພາະ "ດ້ວຍວ່າໂລກນີ້ ບໍ່ຈຳເປັນ
ຫຍັງຈະຕ້ອງມາຮູ້ຈັກເຫດຮູ້ຈັກຜົນ ຂອງຄວາມຮັກ ຂອງຂ້າພະ
ເຈົ້າດອກ..."

ມັນຈຳເປັນ ທີ່ຈະຕ້ອງຂຽນເວົ້າໄປໃນແບບນີ້ ເພື່ອວ່າ
ເມື່ອມີຄົນພົບບອກໄດ້ອ່ານຈົດໝາຍກໍ່ບໍ່ເປັນຫຍັງ ແຕ່ຕາມຈິງ
ແລວ ແມ່ນທ່ານປອຣ໌ຊ ວໍຊິງຕັນ ຢາກບອກໃຫ້ນາງຊາລລີ ຮູ້
ເປັນຄັ້ງສຸດທ້າຍວ່າ ລາວໄດ້ຮັກນາງແລະພ້ອມກັນນັ້ນ ກໍ່ຢາກຮູ້
ວ່ານາງໄດ້ຮັກລາວບໍ່ ຄຳຕອບຂອງນາງສິ່ງໄປຫາໄດ້ເສັຽໄປ

ເຮົາມີແຕ່ຄຳຕອບຂອງວໍຊິງຕັນ "ອັນນີ້ ແມ່ນເຮົາບໍ່ເຂົ້າໃຈຄວາມໝາຍ ຂອງຈົດໝາຍຂອງພວກເຮົາບໍ່?" ຄວາມຄິດນີ້ແມ່ນທ່ານວໍຊິງຕັນ ຫາກຄິດຖາມຕົນເອງ ແລະຄິດວ່າຄົງຈະເປັນເຊັ່ນນັ້ນແທ້ ຊຶ່ງຕົນກໍບໍ່ຫວັງຢາກໃຫ້ມັນເປັນແນວນັ້ນເພາະວາ ລາວບໍ່ສາມາດ ຈະບອກໃຫຮູຢ່າກເປີດເຜີຍວ່າຄູ່ຮັກຂອງລາວ ແມ່ນຜູ້ໃດກັນແທ້ ລາວນຶກວ່ານາງຊາລລີ ຄົງຈະບໍ່ຈຳເປັນຕວງທາຣູອີກແລວ.

ສີ່ເດືອນຕໍ່ມາ ລາວກໍແຕ່ງດອງກັບນາງມາກຕາ ຄັຊຕິຊ ແລະພາເມັຽເມືອຢູ່ເຮືອນທີ່ເມົາເວີນົງ ຄວາມສົມບູດສົມຣັກແພງຂອງວໍຊິງຕັນຕໍ່ນາງມາກຕາ ກໍມີມາກູຫລາຍ ແຕ່ສ່ວນນາງມາກຕານັ້ນ ມີຫລາຍແນວສະແດງອອກໃຫຮູວາ ບໍ່ດູ້ນໃຈນຳວໍຊິງຕັນປານໃດ ຜົວຜູ້ກົກຂອງລາວພຸນ ມີອາຍຸແກກວາລາວ ໔໐ ປີ ສ່ວນທ່ານວໍຊິງຕັນ ມີຮູບຮາງສູງທັງເປັນນາຍພັນເອກ ອາດຈະເປັນຜູ້ງາມທີ່ສຸດແກລາວ ນາງມາກຕາຈຶ່ງໄດຮັກສາ ມຣົມເຄື່ອງນຸ່ງຊຸດສີຂາວ ທີ່ລາວນຸ່ງໃນວັນບາສີແຕ່ງດອງກັບທ່ານພັນເອກ ຜູ້ຮູບຮາງສູງໃຫຍ່ ນັ້ນໄວ້ຈົນຕລອດຊີວິດ.

# ໔. ຊີວິດໃໝ່

ວໍຊິງຕັນມີຄວາມສຸກໃຈເປັນອັນມາກໃນການດຳຣົງຊີວິດເປັນເຣື່ອງສ່ວນຕົວເອງ ໃນນາມວ່າຢອ໌ຣຊ ວໍຊິງຕັນ ເປັນພໍ່ເຮືອນເມົ້າເວີນົງຢູ່ ເປັນເວລາເຖິງ ໑໖ ປີ ຄືໃນປີ ໑໗໕໙ ເຖິງ ໑໗໗໔. ລາວຈຶ່ງຂຽນໄປສົ່ງຂ່າວໃຫ້ພີ່ນ້ອງຂອງລາວຢູ່ທີ່ອັງກິດວ່າ ດຽວນີ້ລາວເປັນບ້ານເປັນເຮືອນມີເມັຽເປັນຄອບຄົວດີແລ້ວ ຢູ່ທີ່ນັ້ນ ລາວຫວັງວ່າ ຈະໄດ້ພົບກັບຄວາມສຸກອັນນີ້ໄປຕັ້ງຫລາຍປີອີກທັງຈະດີກວ່າຈະໄປສ້ຽງຊີວິດອັນກວ້າງໄກໄປກັບເຣື່ອງສັບສົນຂອງແຜ່ນດິນດັ່ງເຄີຍຜ່ານມານັ້ນ.

ໃນລະຫວ່າງ ໑໖ ປີນີ້ ສ່ວນນາງຊາລລີ ແຟຟັກ ແລະຜົວຂອງລາວກໍບໍ່ໄດ້ໜີຈາກແບ່ນວີວໄປມາທາງໃດເລີຍ ຄອບຄົວຂອງວໍຊິງຕັນ ແລະຄອບຄົວຂອງແຟຟັກ ໝັ່ນໄດ້ພົບພໍ້ກັນຢູ່ເລື້ອຍ ຈົນວ່າຢູ່ໃນປຶ້ມປະຕິທິນນ້ອຍຂອງວໍຊິງຕັນມັກມີໝາຍວ່າ "ເຊີນຮັບອາຫານຄ່ຳນຳຄອບຄົວແຟຟັກ" ນັ້ນຫລາຍແທ້ ແຕ່ເຖິງຮັກກັນຫລາຍປານນັ້ນ ວໍຊິງຕັນກໍບໍ່ເຄີຍກ່າວເຣື່ອງຮັກອັນເຄີຍມີກ່ອນຍາມມີເມັຽພຸ້ນ ອອກມາສູ່ຟັງແຕ່ຄຳດຽວເລີຍ.

ຄວາມຄິດຫຼາຍຢ່າງຂອງວໍຊິງຕັນ ແມ່ນໄດ້ມາຈາກນາງຊາລີ ກ່ຽວກັບຊີວິດໃໝ່ ແລະວຽກຂອງລາວຢູ່ເມົ້າເວີນົງ ຄືວ່າຝ່າຍນາງມາກຕານ໌ເປັນຄົນຮັ່ງມີຈຶ່ງເກີດມີເຣື່ອງຕ້ອງການຈະທຳສັນຍາຕ່າງໆແລະມີດິນດອນ ທີ່ຈະຕ້ອງການສົນຊ່ວຍດ້ວຍ ດັ່ງນັ້ນ ທ່ານວໍຊິງຕັນຈຶ່ງຕ້ອງໄດ້ລຸກແຕ່ສີ່ໂມງເຊົ້າ ເພື່ອຂີດຂຽນໜັງສື ແລະໄລ່ບັນຊີຕ່າງໆໄວ້ໃຫ້ເປັນທີ່ຮຽບຮ້ອຍດີ.

ສິ່ງນັ້ນແມ່ນແຕ່ສ່ວນນຶ່ງເທົ່ານັ້ນໃນສິ່ງດີທັງຫຼາຍ ທີ່ວໍຊິງຕັນເຄີຍເຮັດເຄີຍທຳມາແລ້ວ ບໍ່ນານ ນອກຈາກວ່າລາວຈະເປັນຄົນສ້າງຮົ້ວສ້າງສວນ ດ້ວຍຄວາມຄິດອັນໃໝ່ໆແລ້ວ ລາວໄດ້ສ້າງຕົນ ຈົນກາຍເປັນນັກທຸຣະກິດຄົນສຳຄັນຜູ້ນຶ່ງໃນອະເມຣິກາ ລາວໄດ້ສັ່ງຊື້ປຶ້ມຈາກອັງກິດກ່ຽວເຣື່ອງການປູກຝັງ ລ້ຽງສັດແຜນໃໝ່ມາໃຊ້ ບໍ່ນານວຽກໄຮ່ການນາແລະລ້ຽງສັດທີ່ເມົ້າເວີນົງກໍປ່ຽນໃໝ່ໝົດ ລາວເຮັດແບບຕ່າງຈາກພໍ່ນາຜູ້ອື່ນໂດຍການຕັ້ງຕົ້ນປູກເຂົ້າ ບໍ່ນານກໍ່ຕັ້ງໂຮງສີເຂົ້າຂຶ້ນ ຈົນວ່າເຂົ້າຂອງເມົ້າເວີນົງ ໄດ້ຂາຍດີທີ່ສຸດ ຢູ່ໃນທ້ອງຕລາດຢູ່ໃກ້ຄຽງນັ້ນ ຕໍ່ໆໄປ ລາວກໍໄດ້ລ້ຽງສັດແຖມເຂົ້າອີກ ລາວພຍາຍາມປູກຕົ້ນໝາກໄມ້ຕື່ມອີກ ແລະຈັດຕັ້ງເປັນບໍຣິສັດຫາປາຕາມແຄມແມ່ນ້ຳເພື່ອຕຶກປາໄປຂາຍ.

ຢູ່ເມົ້າເວີນົງເອງ ມີຄົນເຖິງ ໓໐໐ ຄົນ ທຳງານໃຫ້ວໍຊິງຕັນຢູ່ທົ່ງນາຂອງນາງຄັດຊຕິຊ ກໍມີຄົນທຳງານໃຫ້ເຖິງ ໒໐໐ ນັ້ນສະແດງໃຫ້ເຮົາຮູ້ວ່າ ມັນເປັນວຽກງານໃຫຍ່ສົມຄວນ ຢູ່ທີ່ອະເມຣິກາ ຜູ້ຄົນໃນສັຕວັດທີ່ ໑໘ ເຊື່ອ ແລະເຂົ້າໃຈວ່າຄົນ

ທຸກຄົນຄວນເປັນນາຍຕົນເອງ ແລະສິດອັນທີ່ນຶ່ງກໍແມ່ນໃຫ້ມີສິດບໍ່ເຮັດບໍ່ສ້າງຫຼັງ ທ່ານວໍຊິງຕັນບໍ່ເຊື່ອຖືເຣື່ອງນີ້ ລາວຂື້ນມາເພື່ອເລາະລຽບເບິ່ງວຽກ ເພື່ອໃຫ້ວຽກສຳເຣັດແລ້ວໄວເທົ່າທີ່ຈະໄວໄດ້.

ເຖິງແມ່ນວ່າ ທ່ານວໍຊິງຕັນ ໄດ້ຮັບດິນດອນຈາກພໍ່ແລະອ້າຍຂອງລາວ ໄດ້ຮັບດິນແລະຊັບສິນຈາກເມັຽຂອງລາວກໍດີ ຊັບສິນເຫຼົ່ານັ້ນເກີດເປັນມີຣາຄາສູງຂື້ນຍ້ອນ ກໍຍ້ອນວຽກຈາກນ້ຳເຫື່ອນ້ຳແຮງຂອງວໍຊິງຕັນນັ້ນເອງ ຄືເວລາວໍຊິງຕັນສິ້ນຊີວິດໄປນັ້ນ ເມົ້າເວີນົງໄດ້ຂຍາຍພື້ນທີ່ກວ້າງອອກໄດ້ເຖິງ ໑ໝື່ນຕະລາງໄມ້ ກ່າວເຖິງຄຸນຄ່າຣາຄາຂອງລາວແລ້ວ ລາວຄິດໄດ້ເຖິງເຄິ່ງລ້ານໂດລານ໌ ກໍທັງທີ່ວ່າວໍຊິງຕັນໄດ້ຢູ່ຮ້າງຈາກເມົ້າເວີນົງ ເປັນເວລາຫຼາຍປີດ້ວຍ.

ສຳລັບຊັບສິນດິນດອນຂອງລູກຂອງນາງມາກຕາ ທີ່ວໍຊິງຕັນ ໄດ້ຮັກສາບົວລະບັດມານັ້ນ ກໍເກີດມີຜົນດີຢ່າງບໍ່ນ້ອຍຄືກັນຈົນວ່າແຈກຄີຊຕີຊກາຍເປັນຜູ້ຮັ່ງມີທີ່ສຸດໃນເວີຊີເນັຽ ດ້ວຍພົນທີ່ເກັບໄດ້ນັ້ນມາກມູນຂື້ນຮອດກວ່າສອງທົບ ແຕ່ເມື່ອເວລາວໍຊິງຕັນໄດ້ບົວລະບັດມາ.

ໃນລະຫວ່າງນີ້ ທ່ານວໍຊິງຕັນ ຍັງໄດ້ປະຕິບັດວຽກການເປັນສະມາຊິກຂອງສະພາເບີກແຊຊ ທີ່ເວີຊີເນັຽ ນຳດ້ວຍລາວເປັນຄະນະຂອງເບີກແຊຊມາແລ້ວແຕ່ຄາວອາຍຸໄດ້ ໒໗ ປີ ຄືກ່ອນເວລາ ມີເມັຽ ທ່ານວໍຊິງຕັນໄດ້ເຂົ້າຮ່ວມວຽກກອງປະຊຸມຂອງສະພາເບີກແຊຊນີ້ມາໄດ້ ໑໕ ປີ ແລ້ວ ທ່ານປາຕຣິກແຮນ

ຣິ ແລະທ່ານທານັຊ ແຊຟເຟີຊົນ ເຄີຍເປັນຜູ້ສຳຄັນຫຼາຍໃນການກ່າວເຣື່ອງການເມືອງຕາມສມັຍນັ້ນ ສ່ວນທ່ານວໍຊິງຕັນບໍ່ເປັນຜູ້ມີໂວຫານຫຼາຍ ທ່ານທານັຊແຊຟ ເຟີຊົນວ່າທ່ານເຄີຍທຳງານຮ່ວມກັນກັບນາຍພົນວໍຊິງຕັນ ຢູ່ທີ່ສະພາເບີກແກຊ ກ່ອນຄັ້ງປະຕິວັດພູນ ແລະບໍ່ເຄີຍໄດ້ຍິນລາວເວົ້າຫລືກ່າວອັນໃດເກີນກວ່າສິບນາທີເລີຍ ແຕ່ເມື່ອລາວຫາກເວົ້າອັນໃດແລ້ວ ແມ່ນເປັນເຣື່ອງທີ່ມີຄວາມສຳຄັນແທ້.

ສ່ວນວໍຊິງຕັນເອງກໍຮູ້ດີຢູ່ໃນສິ່ງທີ່ລາວເຮັດ ຫຼາຍປີຕໍ່ມາລາວຈຶ່ງຂຽນຈົດໝາຍໄປຫາພີ່ນ້ອງຂອງລາວຜູ້ນຶ່ງທີ່ໜຸ່ມໆຢູ່ໃນຄະນະເບີກແກຊ ວໍຊິງຕັນມີຄວາມຊອບພໍໃຈນຳໜຸ່ມຜູ້ນັ້ນ ແລະລາວກໍ່ເຄີຍໄດ້ກ່າວເວົ້າຕໍ່ໜ້າຄະນະເບີກແກຊຜູ້ອື່ນອີກໄດ້ຢ່າງຮຽບຮ້ອຍດີ ໃນຈົດໝາຍທີ່ລາວຂຽນນັ້ນ ວໍຊິງຕັນໄດ້ຂຽນບອກແນະນຳໄປວ່າ ຖ້າຫາກຢາກສ້າງຄຳເວົ້າໃຫ້ເປັນໜ້າສົນໃຈແກ່ຄະນະແລ້ວ ບໍ່ຄວນທີ່ຈະປາກຫຼາຍ ແລະຄວນເວົ້າແຕ່ເຣື່ອງສຳຄັນເທົ່ານັ້ນ.

ເມື່ອໄດ້ນາງມາກຕາມາເປັນເມັຽ ທ່ານວໍຊິງຕັນ ກໍມີວຽກຫຼາຍອັນຕ່າງໆກັນມາເປັນພາຣະ ຄືວ່າລູກຂອງນາງມາກຕາມີສີ່ຄົນ ແຕ່ເສັຽຊີວິດໄປແລ້ວສອງຄົນ ຍັງແຕ່ສອງຄົນຜູ້ນຶ່ງອາຍຸຫົກປີຊື່ແຈກສັຊຕິຊ ແລະຜູ້ນຶ່ງອາຍຸສີ່ປີຊື່ ປັດຊີ ໃຫ້ພໍ່ນາ ວໍຊິງຕັນລ້ຽງ ລາວຂຽນໜັງສືໄປສັ່ງຊື້ປຶ້ມ ແລະເຄື່ອງຫຼິ້ນຢູ່ຫລອນດອນມາໃຫ້ລູກຫຼິ້ນຢູ່ເມົາເວີນົງ ລູກກໍຮັກພໍ່ນາ ແລະພໍ່ນາກໍຮັກລູກເທົ່າກັນ.

ຜູ້ລູກສາວຊື່ປີດຊະນັ້ນໄດ້ນຳຄວາມໂສກເສົ້າມາສູ່ຄອບຄົວ ວໍຊິງຕັນຫຼາຍ ເວລາລາວໃຫຍ່ມາເລີຍປ່ວຍໜັກ ທ່ານວໍຊິງຕັນກໍຕິດຕໍ່ນຳທ່ານໝໍຜູ້ເກັ່ງໆມາປິ່ນປົວຈົນສຸດໃຈ ໝົດເງິນນຳໝໍລະອຽຍໂດລາເທົ່າໃດກໍປາກົດວ່າ ບໍ່ມີໝໍໃດຊ່ວຍໄດ້ ຈົນ ລູກສາວຕ້ອງເສັຽຊີວິດໄປເວລາອາຍຸໄດ້ ໑໖ ປີ ວໍຊິງຕັນແລະມາກຕາ ມີຄວາມໂສກເສົ້າແສນທຸກແສນຣະທົມແທ້ໆ ທີ່ສູນເສັຽລູກໄປ.

ຄາວເມື່ອພວກເຂົາເຈົ້າແຕ່ງດອງກັນໃໝ່ໆນັ້ນ ນາງມາກຕາ ກໍມີຄວາມຍານຢູ່ແລ້ວວ່າ ຈະມີເຫດພັຍອັນໃດອັນນຶ່ງເກີດແກ່ລູກຂອງຕົນ ລາວພຽນແພງລູກຫຼາຍ ຍອມແຕ່ຢາກໃຫ້ລູກຢູ່ດີມີແຮງ ທ່ານວໍຊິງຕັນ ທີ່ດູລອງຊີ້ແຈງໃຫ້ເຫດໃຫ້ພົ້ນກັຍເມັຽຢູ່ເລື້ອຍໃນເລື່ອງນີ້ ແຕ່ກໍບໍ່ສູ້ໄດ້ຜົນປານໃດ ບໍ່ໄດ້ຜົນນັ້ນກໍອາດຈະເປັນຍ້ອນລູກເຈັບປ່ວຍນັ້ນແດ່ ແລະເມັຽກໍຮັກລູກຕົນຫຼາຍໂພດແດ່ ກໍເລີຍວ່າວໍຊິງຕັນຈະເວົ້າຫຍັງ ເຮັດຫຍັງ ຈະເບິ່ງແຍງບົວລະບັດສັ່ງສອນແນວໃດໃຫ້ກໍບໍ່ພໍຈະໄດ້ ຕາມທີ່ວໍຊິງຕັນເຄີຍຂຽນໄປເລົ່າສູ່ນາຍຄູຊູຟັງນັ້ນ ລາວຄິດຢາກໃຫ້ລູກຊາຍແຈັກດີຊຸຕິຊ ນັ້ນມີຄວາມຮູ້ທີ່ໃຊ້ໄດ້ຫຼາຍໆດ້ານ ບໍ່ແມ່ນຈະແລ່ນນຳແຕ່ຄອງເກົາຄີ ກັບມາ ແລ່ນເສັ້ງນັ້ນຢູ່ເລື້ອຍ ລາວຢາກໃຫ້ລູກຊາຍໄດ້ຮັບການສຶກສາ ຊຶ່ງລາວເອງບໍ່ມີໂຊກໄດ້ຮ່ຳໄດ້ຮຽນມາກ່ອນນັ້ນ ແຕ່ວ່າ ຍ້ອນກິຣິຍາຂອງທ້າວແຈັກເອງແດ່ແລະແມ່ກໍເອົາແຕ່ໃຈລູກແດ່ ວໍຊິງຕັນຈະພຍາຍາມຊ່ວຍອັນໃດກໍບໍ່ຄ່ອຍໄດ້ຜົນພໍປານໃດ ຍາມທ້າວແຈັກອາຍຸໄດ້ ໑໔ ປີ ວໍຊິງຕັນເຄີຍ

ຂຽນໄປເລົ່າສູ່ນາຍຄຣູຟັງວ່າ ທ້າວແຈກມັກສົນໃຈນຳແຕ່ໝາ, ມາ ແລະປືນ ບໍ່ດົນນານເທົ່ານາຍຄຣູໄດ້ຂຽນລາຍງານຄືນມາ ບອກວ່າທ້າວແຈກສົນໃຈນຳຜູ້ສາວຫຼາຍໂພດໄປ ພໍອາຍຸໄດ້ ໑໙ ປີ ທ້າວແຈກຈຶ່ງມີໂຄງການຈະແຕ່ງດອງກັບນາງງາມຜູ້ນຶ່ງຊື່ວ່າ ແນລລີ ຄາລູເວີດ ຢູ່ທີ່ອັນນາໂປລິຊ ມາຣີແລນ ໂດຍບໍ່ໃຫ້ວໍຊິງຕັນແລະບໍ່ໃຫ້ແມ່ຮູ້ເຣື່ອງນີ້.

ທ່ານວໍຊິງຕັນ ໄດ້ໂອບໂລມທັງສອງຄົນ ຂໍໃຫ້ຖ້າໄປຈົນຮຽນໜັງສືຈົບກ່ອນຈຶ່ງແຕ່ງດອງກັນ ແລະທັງສອງກໍຟັງຄວາມ ລາວຈຶ່ງຟ້າວສົ່ງທ້າວແຈກໄປນິວຢອກ ເພື່ອໄປເຂົ້າໂຮງຮຽນວິທຍາລັຍຄິງ (ຊຶ່ງກາຍເປັນວິທຍາລັຍໂກລັມເບັຍ) ຊຶ່ງລາວກະໄວ້ວ່າຢາກໃຫ້ຮຽນຢູ່ປະມານສອງປີ ແຕ່ເມື່ອນາງປັດຊີຜູ້ລູກສາວຕາຍໄປໃນເດືອນຕໍ່ມາ ນາງມາກຕາກໍເລີຍຂໍເອົາລູກຊາຍຫາຄືນເມືອຢູ່ນຳ ທ້າວແຈກກໍຕອງກັບເມືອໄວໆໄປແຕ່ງດອງກັບນາງແນນລີ ຜູ້ງາມນັ້ນຊ້ຳ ຊຶ່ງແມ່ນຍາມທີ່ວໍຊິງຕັນກຳລັງພຽນຢາກໃຫ້ລູກຮຽນ ແຕ່ກໍບໍ່ສາມາດຈະຮັດຫຍັງໄດ້ເຣື່ອງນີ້.

ຖ້າແມ່ນຜູ້ອື່ນແລ້ວອາດຈະຄຽດເຄືອງໃຈຫຼາຍ ແຕ່ວໍຊິງຕັນນີ້ ລາວບໍ່ປາກົດວ່າຈະຄຽດໃຫ້ແຈກເລີຍ ບໍ່ນານລາວກໍຂຽນຈົດໝາຍໄປຫາທ້າວແຈັກລູກຮັກ ເພື່ອຂໍໃຫ້ລູກແລະນາງແນນລີໄປຢາມຢູ່ເມົ້າເວີນົ່ງຢູ່ເລື້ອຍ.

ທ່ານວໍຊິງຕັນ ເປັນຄົນທີ່ຮັກເດັກນ້ອຍແຕ່ໃດມາ ຕົວຢ່າງຄື ຜູ້ຍິງຜູ້ນຶ່ງຊື່ວ່າ ນາງຈອນ ແລະທ່ານໂບແວ ພາກັນຈື່ບໍ່ລືມ ເວລາທີ່ທ່ານວໍຊິງຕັນ ໄປຢາມເຮືອນພວກເຂົາເຈົ້າ

ເວລານາງຍັງເປັນເດັກນ້ອຍຢູ່. ຍາມນັ້ນລາວກໍ່ໄຫ້ແລະສຳລືນຢູ່ແລ້ວ ແລະລາວກໍ່ອຸ້ມນາງແລ້ວກໍ່ຮ້ອງເພງໃຫ້ນາງຟັງດ້ວຍ ຫຼັງຈາກຄັ້ງນັ້ນເມື່ອເສັ້ງຊັຍໃຫຍ່ໃນເສິກປະຕິວັດແລ້ວ ລາວໄດ້ມາແວ່ເຊົາເຮືອນຢູ່ທົ່ງນາພວກເຂົາເຈົ້າຄືນນຶ່ງ ນາງກໍ່ຖາມຫາແຕ່ລາວ ຈົນໃນທີ່ສຸດ ແມ່ຂອງນາງກໍ່ຕ້ອງຂໍໃຫ້ວໍຊິງຕັນໄປນັ່ງເວົ້ານັ່ງລົມນຳເດັກນ້ອຍລູກຂອງຕົນ ຊຶ່ງວໍຊິງຕັນກໍ່ຍິນດີໄປເວົ້າລົມນຳນາງນ້ອຍນັ້ນ ວໍຊິງຕັນ ຈຶ່ງອຸ້ມນາງມາແລ້ວເວົ້າວ່າ "ຫຼາເຮີຍ ຫຼອວເບິ່ງນີ້ດູຄົນຜູ້ອິດເມື່ອຍຫຼາຍຍັງນຸ່ງເສື້ອເປື້ອນໆນີ້".

ໃນປີ ໑໗໘໓ ຫຼັງຈາກລາວລາອອກຈາກໜ້າທີ່ຜູ້ບັນຊາການແລະກັບເມືອຢູ່ເມົ້າເວີນົງ ທ່ານວໍຊິງຕັນເປັນຜູ້ນຶ່ງທີ່ຂຶ້ນຊື່ລືນາມຢູ່ໃນຈຳພວກນາຍພົນຜູ້ມີຊື່ສຽງທັງຫຼາຍຂອງໂລກ ແລະເປັນຜູ້ທຳໃຫ້ອັງກິດເສັ້ງຊັຍຍອມ ແນວໃດກໍ່ດີ ລາວກໍ່ບໍ່ເຄີຍລືມຫາເຄື່ອງຕ້ອນຂອງໝູ່ ເພື່ອໄປຕ້ອນລູກຂອງຄອບຄົວນາງມາກຕາ.

ທ່ານວໍຊິງຕັນມີທ່າທີ່ຍິ້ມແຍ້ມ ແລະເປັນໜ້າຮັກແກ່ໝົດທຸກຄົນໃນຄອບຄົວຂອງລາວ ລາວໄດ້ຂຽນໄປຫາທ່ານໂອກັສຕິນອ້າຍຂອງລາວວ່າການພົບກັນຢູ່ເມົ້າເວີນົງ ໄດ້ພາໃຫ້ຊຸ່ມໃຈແທ້ແລະຍັງຈະພາໃຫ້ຊື່ນໃຈຕໍ່ໄປຢູ່ ທ່ານວໍຊິງຕັນໄດ້ກ່າວເຖິງແຈັກອ້າຍຜູ້ຖ້ວນສອງຂອງລາວ ທີ່ລາວຮັກຫຼາຍທີ່ສຸດແຕ່ນ້ອຍໆມາຈົນຮອດໃຫຍ່ ເມື່ອລາວຕາຍແລ້ວ ວໍຊິງຕັນຈຶ່ງໜີຈາກເມົ້າເວີນົງໄປ ແຈກຊັນ ບຸຊໂຣດ ວໍຊິງຕັນບໍ່ສະນິດສະໜົມກັນດີປານໃດກັບ

ອ້າຍຊາມູແອລຂອງລາວ ຜູ້ທີ່ມີອາຍຸໃກ້ກັບລາວແລະຜູ້ນ້ອງຫຼ້າ ຊາກເລີ ນັ້ນກໍດີກັນ. ແຕ່ວ່າລາວກໍໄດ້ເອົາເງິນຊຸດໜູນເຂົາເຈົ້າຢູ່ເລື້ອຍ ເວລາຕ້ອງການ ຊາມູແອລບໍ່ເກັ່ງທາງທຸຣະກິດ ແລະຊາກເລີ ກໍຕາຍຍ້ອນການດື່ມຫຼາຍໂພດ.

ພວກທີ່ເປັນສາຍພີ່ສາຍນ້ອງຂອງຄອບຄົວລາວກໍຮັກແພງເຊັ່ນດຽວກັນ ລາວໝັ່ນໄປຢ້ຽມຢາມພວກເບີແວລ ບັຊເຊດ ອ້າຍເຂີຍຂອງນາງມາກຕາ ແລະພວກເພັຍດິງລຸຍ ນ້ອງເຂີຍຂອງລາວເອງ ຫຼັງຈາກນາງລູກສາວປັດຊີຕາຍແລ້ວ ລາວໄດ້ຂຽນໄປຂໍໃຫ້ພວກບັຊເຊັດວ່າ ຢາກຂໍໃຫ້ແມ່ຂອງນາງມາກຕາຊື່ວ່ານາງແດນດູຣິດ ມາຢູ່ເຮືອນລາວທີ່ເມົ້າເວີນົງພົ້ນນຳກັນ ສິ່ງນັ້ນຈະໄດ້ຊ່ວຍໃຫ້ນາງມາກຕາບໍ່ໂສກເສົ້າເຫງົາຫຼາຍ ຄົນຈຳພວກນັ້ນມີພວກລູກຂອງລາວແດ່ ແລະພີ່ນ້ອງຂອງຄອບຄົວຂອງເຂົາເຈົ້າ ໄດ້ໝັ່ນພາກັນໄປຫາມາສູ່ກັນເລື້ອຍທີ່ເມົ້າເວີນົງນັ້ນ

ສ່ວນແມ່ລາວນັ້ນບໍ່ໄດ້ຢູ່ໃກ້ກັນ ສະຖານໃດກໍດີລາວກໍໄດ້ໃຫ້ຄວາມຖະໜຸຖະໜອມແມ່ຢູ່ສເມີ ແລະໄປຢ້ຽມຢາມແມ່ຢູ່ ເດູຣິກເບີກບໍ່ໄດ້ຂາດ ເພື່ອໄປເບິ່ງຮົ້ວສວນໄຮ່ນາ ຫຼືວ່າສົ່ງເງິນລ້ຽງແມ່ເວລາຕ້ອງການ. ສ່ວນແມ່ທີ່ຮັກລູກຫຼາຍນັ້ນເຫັນວ່າຄວາມປະຕິບັດນັ້ນຍັງບໍ່ພຽງພໍ ດ່ວຍວ່າຕົນຄວບຄຸມເບິ່ງລູກຜູ້ກົກແລະເວົ້າວ່າຫຼັງໃຫ້ກໍບໍ່ໄດ້ຄືພວກຜູ້ອື່ນ ລາວເວົ້າລາວຈົ່ມວ່າ ລູກບໍ່ເບິ່ງບໍ່ແຍງລ້ຽງດູບົວລະບັດຕົນ ແລະເງິນຄຳຫຍັງກໍບໍ່ສົ່ງໃຫ້ແມ່ ລາວຈົ່ມໂພດຫຼາຍຕໍ່ຫຼາຍຈົນວໍຊິງຕັນໄດ້ຂໍໃຫ້ນ້ອງຊາຍຂອງລາວທານຊາກ ມາຮັບມາເຫັນນຳທຸກເທື່ອເວລາເອົາເງິນມາມອບໃຫ້

ແມ່ ສ່ວນທ່ານຊາກ ເອງກໍຈຳເປັນໄດ້ຈົດໄດ້ຈຳຂຽນບັນທຶກໄວ້ທຸກເທື່ອ ເພື່ອບໍ່ຢາກໃຫ້ແມ່ເວົ້າຈົ່ມຄວາມບໍ່ຈິງໃຫ້ຄອບຄົວຟັງ.

ທ່ານວໍຊິງຕັນເຮັດດີທຳດີຕໍ່ຄອບຄົວແລະຕໍ່ໝູ່ເພື່ອນຂອງລາວເຈັ່ນດຽວກັນ ລາວໄດ້ຂຽນໄປຫາທ່ານ ວິລຽມ ຣາຊີ ຜູ້ທີ່ໄດ້ເຮັດວຽກດ້ານສຳຣວດນຳຢູ່ທີ່ອາເລັກຊັງເດັຽ ເພື່ອຖາມວ່າລາວຈະຍິນດີໃຫ້ວໍຊິງຕັນສົ່ງລູກໄປໂຮງຮຽນບໍ່ ດ້ວຍວ່າວໍຊິງຕັນເຄີຍໄດ້ຊາບວ່າ ເດັກນ້ອຍພັກຣຳນັກຮຽນ ຫວັງວ່າຄຳສເນີຂອງຕົນຈະຖືກຮັບເອົາດ້ວຍຄວາມເຕັມໃຈ ຕາມທີ່ເຂົາຄິດຄາດໝາຍໄວ້ ທ່ານວໍຊິງຕັນຈຶ່ງບອກກັບທ່ານຣາຊີວ່າ ຈະຮັກສາເຣື່ອງນີ້ໄວ້ເປັນຄວາມລັບແລະຮູ້ແຕ່ສອງຄົນເຂົາເຈົ້າເອງເທົ່ານັ້ນ.

ໃນປີຕໍ່ໆໄປພຸ້ນ ທ່ານວໍຊິງຕັນກໍອອກຄ່າໃຊ້ຈ່າຍເປັນຄ່າຮ່ຳຮຽນສຶກສາໃຫ້ແກ່ເດັກຍິງ ແລະຊາຍ ໘໘ ຄົນຢູ່ໃນຄອບຄົວ ສຳລັບແຕ່ຄ່າໂຮງຮຽນໃຫ້ສອງຊາຍ ທີ່ແມ່ນລູກຂອງທ່ານຊາມູແອລ ນ້ອງຊາຍລາວ ລາວໄດ້ຈ່າຍໄປເຖິງ ໔,໐໐໐ ໂດລາ ຕໍ່ໄປຮອດເວລາໄດ້ເປັນປະທານາທິບໍດີແລ້ວ ທ່ານວໍຊິງຕັນຍັງຕ້ອງການເງິນຫຼາຍ ປະເທດກໍຫາຕັ້ງຕົນຕັ້ງຕົວໃໝ່ ແລະບໍ່ທັນຮູ້ທັນສລາດພໍທີ່ຈະເກັບທ້ອນຢ່ອມຊັບໄວ້ໄດ້ ແຕ່ປານນັ້ນຮອດທ້າຍປີມາ ລາວຍັງມີເງິນໄປທານຢ່າງລັບໆ ໃຫ້ແກ່ຄົນທຸກຈົນປະມານ ໕໐໐ ໂດລາ ມີເທື່ອນຶ່ງ ຄົນຜູ້ນຶ່ງຂຽນໜັງສືໄປຂໍທານເງິນ ໒໐ ໂດລາ ນຳວໍຊິງຕັນ ລາວເວົ້າໃນຈົດໝາຍວ່າຢາກຂໍເງິນນັ້ນເພື່ອລາວເອງບໍ່ແມ່ນເພື່ອຜູ້ໃດຜູ້ນຶ່ງ ເພາະຄົນຜູ້

ນັ້ນແນ່ໃຈວ່າ ທ່ານວໍຊິງຕັນຈະຮັກສາຄວາມລັບນັ້ນໄດ້ ຄົນຜູ້ນັ້ນກໍໄດ້ເງິນທີ່ລາວຂໍນັ້ນແທ້.

ເຖິງແມ່ນວ່າວໍຊິງຕັນດີແຕ່ກໍມີເວລາລາວຮ້າຍ ຄືວ່າມີຄົນຜູ້ນຶ່ງຊື່ວ່າ ມິວ ທີ່ຖືກໄລ່ອອກຈາກກອງທັບ ຍ່ອນໂຕນພາຍແນວໜ້າທີ່ຄາຍເນແຊດຊິຕີ ໄດ້ຂຽນໜັງສືມາຫາທ່ານວໍຊິງຕັນກ່າວຫາວ່າ ວໍຊິງຕັນບໍ່ທັນໄດ້ແບ່ງດິນຄ້າງໄປຕີເສິກນັ້ນໃຫ້ຕາມສັນຍາ ຄືກັບພວກທະຫານຜູ້ອື່ນທີ່ໄດ້ໄປແລ້ວ ວໍຊິງຕັນຈຶ່ງບອກກັບ ມິວ ວ່າ ບໍ່ຢາກເບິ່ງໜ້າຄົນທີ່ມັກຫາຄວາມເປັນເຊັ່ນນັ້ນແລະເຕືອນໄປວ່າ ຖ້າຫາກດື້ຂຽນຈົດໝາຍການທີ່ສອງມາອີກແບບການນີ້ ລາວຈະຢູ່ຍາກ ວໍຊິງຕັນ ຮູ້ດີແລ້ວໃນເລື່ອງນີ້ວ່າມິວ ເປັນນັກດື່ມນັກເມົາ ແລະສ່ວນທີ່ດິນກໍໄດ້ຮັບໄປໝົດຄືໝູ່ແລ້ວໃນຕອນທ້າຍຈົດໝາຍຂອງລາວໄດ້ແຈ້ງໃຫ້ຮູ້ວ່າ ລາວບໍ່ປະສົງຈະພົບພໍ້ຫລືຮູ້ຈັກກັບຄົນຈັ່ງໄຣແບບນັ້ນອີກຈັກເທື່ອ.

ໃນຍາມນັ້ນຢູ່ເມົ້າເວີນົງມີຄວາມອຸດົມສົມບູນ ແລະມ່ວນຊື່ນລື່ນເລີງດີ ວໍຊິງຕັນກໍຫຽວໄປທີ່ເຟຣເດຣິກເບີກ ເປັນບາງໂອກາດ ເພື່ອມ່ວນຊື່ນນໍາເພື່ອນຝູງ ໃນຈໍາພວກໝູ່ຂອງລາວນັ້ນມີຫລາຍຄົນເຄີຍໄດ້ຢູ່ກອງທັບນໍາກັນ ຊຶ່ງເຂົາເຈົ້າພາກັນຮ້ອງລໍາທໍາເພງ ດື່ມແລະໂອ້ລົມຫຼິ້ນຮ່ວມກັນ ປາກົດວ່າວໍຊິງຕັນມັກການຟ້ອນລາຍລໍາຫລາຍກວ່າສິ່ງອື່ນ ລາວລາຍລໍາໄປມາຢູ່ແນວນັ້ນຕັ້ງຈະເປັນ ໑໐ ຫາ ໒໐ ໂມ່ ພູນກໍວ່າໄດ້ ມີຫລາຍເທື່ອຟ້ອນກັນໝົດຄືນຈົນແຈ້ງ ຢຸດຕັ້ງແຕ່ຍາມເຂົ້າເຊົ້າເສບເທົ່ານັ້ນ.

ລາວມັກຟ້ອນເທົ່າກັນກັບລາວມັກໄປໂຮເນື້ອ ຂີ່ມ້າຕີວ

ສູງໃຫຍ່ຂອງລາວ ແລ້ວກໍຕີທອບໂດດຂ້າມຮົ້ວ ເຂົ້າລັບປ່າໄປ ທາງນອຍເປັນແລວໄປກໍມີ ແຕ່ວໍຊິງຕັນບໍ່ມັກ ລາວມັກໜົ້ນປ່າ ທາງຍາກໆໄປປະທາງດີທາງກວາງໃຫ້ຄົນອື່ນທຽວ.

ຄົນຜູ້ທີ່ມັກວຽກໝັ້ນເຮັດໝັ້ນສ້າງ ຄືວໍຊິງຕັນນີ້ ມັກມີ ຄວາມຕອງການຫາເຄື່ອງນຸ່ງພິເສດມານຸ່ງ ຄືວໍຊິງຕັນນີ້ ລາວ ໄດ້ສັ່ງຊື້ເຄື່ອງນຸ່ງຂອງລາວມາແຕລອນດອນມາໄວນຸ່ງ ລາວມັກ ແນວງ່າຍໆ ແລະແນວທົນທານທັງມີແສວໄໝ ເງິນໄໝຄຳໃສ່ ບາງບອນ.

ລາວມັກມີຂອງແກັມຂອງດື່ມ ຍາມກິນເຂົ້າແລ້ວກໍມັກນັ່ງ ເວົ້ານັ່ງລົມ ຊຸມແຊວກັບພວກເພື່ອນຝູງ ທັງຈາກູໄດເຮັດວຽກ ໃຫບານໃຫເມືອງ ແລະສາງຊື່ສຽງມາເປັນປີໆແລວ ວໍຊິງຕັນ ເຄີຍເວົ້າວາລາວຮູສຶກດີໃຈຫຼາຍທີ່ໄດມາຢູ່ເມົາເວີນົງນໍາໝູ່ຮັກ ໝູ່ແພງຜູ້ນ້ອງຫຼືສອງຄົນເທົ່ານີ້ ເປັນການດີກວາຈະໄດຢູ່ໃນວົງ ຂອງພວກຜູນໍາປະເທດທັງຫຼາຍຂອງເອີຣົບ.

ເມື່ອໃດວໍຊິງຕັນມີວຽກແລວ ກິຣິຍາລາວບໍ່ເປັນໜ້າຮັກ ປານໃດນໍາພວກທີ່ມາຫາລາວ ລາວບໍ່ມັກອະທິບາຍຫຍັງ ມີແຕ່ ທໍາເສີຍແລະເຮັດວຽກຕໍ່ໄປ ຄົນຜູ້ບໍ່ເຄີຍຮູ້ຈັກ ມັກຕື່ນວາເປັນ ຫຍັງຈຶ່ງເຫັນວາ ວໍຊິງຕັນມັກນຸ່ງເຄື່ອງແບບເຮັດວຽກຢູ່ເລື້ອຍໆ ມື້ນຶ່ງ ໃນຍາມຮອນ ມີຄົນມາຢາມ ມາຖາມຫາຢາກພົບ ທ່ານ "ນາຍພົນ" ຄົນໃນຄອບຄົວຈຶ່ງບອກວາເພິ່ນຂີ່ມ້າແລະນຸ່ງ ເຄື່ອງແບບອອກໄປແລວ ຖາເຈົ້າໄປພົບເຫັນຄົນ ຜູ້ຄືວານນີ້ ນັ້ນແມນທານນາຍພົນວໍຊິງຕັນ.

ເຖິງແມ່ນວ່າ ໄດ້ເຣັດວຽກແລະໄດ້ມ່ວນໄດ້ຊື່ນ ເທົ່າໆ ກັນຢູ່ທີ່ເວີຊີເນັຽນີ້ ທ່ານວໍຊິງຕັນກໍຍັງບໍ່ລືມແລະສົນໃຈນຳສ່ວນນຶ່ງອີກຂອງໂລກ ທີ່ລາວໄດ້ເຫັນ ຕໍ່ຈາກຟາກພູເຂົາໄປທາງຕາເວັນຕົກພຸ້ນຢູ່ສເມີ ຄວາມຝັນຫາພາກຕາເວັນຕົກນີ້ ຄ້າຍກັບວ່າລາວມັກຝັນຫາແຕ່ຫົວຄິດໃໝ່ໆ ເປັນຄວາມຄິດນ້ອຍໆຂອງທ່ານວໍຊິງຕັນເອງ ທີ່ມອງເຫັນການໄກໄວ ສຳລັບປວັດສາດຂອງອະເມຣິກັນ ຄວາມຄິດຂອງລາວກ່ຽວກັບພາກຕາເວັນຕົກໄດ້ໜັກແໜ້ນແລະຄຶບໜ້ານຳຊີວິດຂອງລາວໄປສເມີ ໃນປີຕໍ່ໆໄປລາວເຄີຍຂຽນໄວ້ວ່າ ພາກຕາເວັນຕົກນີ້ເປັນພາກທີ່ໃຫ້ຄວາມຫວັງວ່າຈະເປັນສະຖານທີ່ອຳນວຍຄວາມສົງບ ໃຫ້ແກ່ຄົນທຸກຍາກລຳບາກເຂັນໃຈ ພາກັນໄປຢູ່ອາສັຍເປັນສຸກໄດ້.

ໃນປີ ໑໗໘໔ ທ່ານວໍຊິງຕັນ ແລະ ດຣ. ເຈັມ ແຄຣກ ຜູ້ເຄີຍເປັນທ່ານໝໍຢູ່ໃນກອງພົນທະຫານ ແລະເປັນເພື່ອນສນິດສນົມຜູ້ນຶ່ງ ຂອງທ່ານວໍຊິງຕັນ ໄດ້ພາກັນອອກໄປສາລະວຕາມເຂດນອກຂອງໂອຮາຍໂອປະມານເຈັດອາທິດ ເຂົາເຈົ້າໄດ້ພາກັນສຶກສາເບິ່ງຄວາມສຳຄັນຂອງໜ້າດິນຫຼາຍໆແຫ່ງ ເວລາເດີນທາງໄປ ເຂົາເຈົ້າໄດ້ພົບຫົວໜ້າຂອງພວກອິນດ້ຽນຜູ້ນຶ່ງທີ່ເຄີຍຢູ່ນຳກອງທັບຝຣັ່ງທີ່ເສັຽຊັຍໃນການຕໍ່ສູ້ກັນທີ່ບຣາດດອກ.

ດຣ. ແຄຣກເລົ່າສູ່ພວກເຮົາຟັງວ່າ ຫົວໜ້າອິນດ້ຽນຜູ້ນັ້ນພໍແຕ່ເຫັນໜ້າວໍຊິງຕັນກໍຈຳໄດ້ທັນທີແລະເອີ້ນບອກໝູ່ເບິ່ງທັງແນະນຳວ່າຜູ້ສູງນີ້ແລ້ວແມ່ນນັກຣົບຜູ້ກ້າຫານແທ້ ເພາະວ່າ ພວກເຂົາໄດ້ແນປືນຈະຍິງແລ້ວ ແຕ່ວ່າມີອັນໃດອັນນຶ່ງຢ່າງ

ອະພິນິຫານມາປ້ອງກັນວໍຊິງຕັນໄວ້ ລາວເລີຍບໍ່ຕາຍ ແຕ່ຍາມນັ້ນ ຫົວໜ້າອິນເດັຽຜູ້ນັ້ນເວົ້າວ່າ ລາວເອງກໍເຖົ້າແລ້ວ ຍັງບໍ່ທີ່ໃດປີກໍຈະຕາຍ ແຕ່ວ່າລາວຢາກກ່າວອັນໃດອັນນຶ່ງໄວ້ ກ່ຽວກັບວໍຊິງຕັນແລະອະນາຄົດ ລາວຈຶ່ງເວົ້າໄວ້ວ່າ ມີພຣະອົງສັກສິດໄດ້ຊ່ວຍວໍຊິງຕັນເພື່ອໃຫ້ໄດ້ເປັນຫົວໜ້າຂອງປະເທດຊາດແລະເປັນຜູ້ນຳໜ້າຂອງຄົນທີ່ຈະເກີດມາອີກດ້ວຍ.

ການທີ່ໄດ້ພົບພໍ້ກັບຫົວໜ້າຂອງພວກອິນເດັຽ ແລະໄດ້ຍິນໄດ້ຟັງເຣື່ອງຂອງທ່ານວໍຊິງຕັນດັ່ງນີ້ ເປັນປະສົບປະການອັນນຶ່ງໃຫ້ແກ່ ດຣ. ແຄຣກຈຳໄວ້ສເມີ ລາວເລົ່ານິທານເຣື່ອງນີ້ຢູ່ເລື້ອຍເປັນຕັ້ງຫຼາຍປີ ແຕ່ວ່າວໍຊິງຕັນທາກບໍ່ເຄີຍວ່າຈະຂຽນມັນໄວ້ຈັກເທື່ອ ໃນຖານວ່າເປັນຜູ້ຮູ້ຈັກພວກຄົນອິນເດັຽດີ ລາວຈຶ່ງໃຫ້ຂໍ້ສັງເກດໄດ້ວ່າ ຊາວອິນເດັຽນີ້ມັກເທີດທູນຍົກຍອງຜູ້ທີ່ເຂົາຖືວ່າເປັນຄົນສຳຄັນ ກັບຫົວຄິດອັນນຶ່ງອີກທີ່ຫົວໜ້າອິນເດັຽເວົ້າວ່ານາຍພັນເອກ ຂອງເມືອງເວີຊີເນັຽຜູ້ລິກລັບທີ່ອາດຈະກາຍເປັນຜູ້ນຳໜ້າຂອງປະເທດຊາດໃນມື້ນຶ່ງຂ້າງໜ້ານັ້ນເປັນເຣື່ອງພາໃຫ້ລາວຄິດວ່າ ບໍ່ແມ່ນແຕ່ ຈະເປັນໄປບໍ່ໄດ້ເທົ່ານັ້ນແຕ່ມັນເປັນເຣື່ອງທີ່ໜ້າຢາກຫົວແທ້ໆ.

ເວລານັ້ນ ກໍພໍດີມີເຣື່ອງຫຍຸ້ງຍາກເກີດຂຶ້ນລະຫວ່າງປະເທດອັງກິດກັບຫົວເມືອງຂຶ້ນຂອງຕົນເອງ ໃນປີ ໑໗໖໔ ທ່ານວໍຊິງຕັນໄດ້ນັ່ງຟັງທ່ານ ປາຕຣິກ ແຮນຣີ ຢູ່ໃນທີ່ສະພາເບີກແກດກາວຂັດຂວາງເຈົ້າຊີວິດອັງກິດ ໃນປີ ໑໗໖໕ ເມື່ອຣັຖບານອັງກິດທົດລອງອີກໃໝ່ວ່າຈະເກັບສ່ວຍສາອາກອນນຳຫົວເມືອງຂຶ້ນ

ນັ້ນ ທ່ານ ປາຕຣິກແຮນຣີ ກໍໄດ້ກ່າວຄັດຄ້ານໃນເຣື່ອງນີ້ ສ່ວນທ່ານວໍຊິງຕັນ ບໍ່ເວົ້າຫຍັງແຕ່ຫາກເຮັດແນວນຶ່ງທີ່ໄດ້ຜົນດີ ລາວໄປທ່ຽວລົມນຳຊາວເວີຊີເນັຽປະມານ ໑໐໐໐ ຄົນ ເພື່ອຮ້ອງຂໍໃຫ້ເຂົາເຈົ້າພາກັນຮັງຮອງວ່າ ເຄື່ອງຂອງຕ່າງໆທີ່ອັງກິດເກັບພາສີນັ້ນ ຂໍບໍ່ໃຫ້ເອົາເຂົ້າມາໃນປະເທດເລີຍ ຢູ່ໃນຈົດໝາຍທີ່ວໍຊິງຕັນຂຽນໄປຫາທ່ານຢອ໌ຊ ມາຊົງຜູ້ຄົນໃກ້ຄຽງລາວນັ້ນຢືນຢັນວ່າ ວໍຊິງຕັນເຄີຍເຫັນມາແລ້ວເມື່ອຫົກປີກ່ອນພຸ້ນວ່າ ການຍາດແຍ່ງເອົາອຳນາດນີ້ ຈະສິ້ນສຸດລົງໄດ້ ກໍຕ້ອງໃຊ້ສນາມຣົບເປັນບ່ອນຕັດສິນບ່ອນສຸດທ້າຍ.

ທ່ານວໍຊິງຕັນໄດ້ບອກກັບທ່ານຢອ໌ຊມາຊົງວ່າ ປະເທດອັງກິດຈະບໍ່ເຊົາຈົນຮອດເມື່ອໃດວ່າ ປະເທດອະເມຣິກາຫາກບໍ່ເສັຽສິດເສຣີພາບໄປ ສະນັ້ນຈຶ່ງຈຳເປັນວ່າຈະຕ້ອງມີວິທີໃດວິທີນຶ່ງໄປລະງັບບໍ່ໃຫ້ສິ່ງນັ້ນເກີດຂຶ້ນ ທ່ານວໍຊິງຕັນ ໄດ້ຂຽນໄວ້ວ່າ ເຖິງຄາວຈຳເປັນມາຄົນເຮົາບໍ່ມີໃຜດອກວ່າຈະບໍ່ຈັບປືນໄປຕໍ່ສູ້ເອົາສິດເສຣີພາບໄວ້ ແຕ່ວ່າກ່ອນເຮົາຈະໃຊ້ປືນນັ້ນໃຫ້ຄິດວ່າໝົດວິທີທາງອື່ນເອົາຊນະບໍ່ໄດ້ແລ້ວຈຶ່ງໃຊ້ປືນ.

ເປັນລະຍະເວລາສີ່ປີທີ່ຣັຖບານອັງກິດ ຣົບກວນເກັບພາສີອາກອນນຳຫົວເມືອງຂຶ້ນ ເມື່ອປະເທດອັງກິດເຫັນວ່າຕົນບໍ່ມີອຳນາດໃສ່ຫົວເມືອງຂຶ້ນໄດ້ດັ່ງໃຈນັກແລ້ວ ຕົນກໍບໍ່ເຮັດບໍ່ທຳຫຍັງເພື່ອມອບອຳນາດໃຫ້ເຂົາ ທ່ານວໍຊິງຕັນ ກໍຊອມເບິ່ງຢູ່ວ່າຈະມີຫຍັງເກີດຂຶ້ນ ແລະກໍບໍ່ເຫັນວ່າມີຫຍັງເລີຍ ອັນຈະພາໃຫ້ລາວປ່ຽນຄວາມຄິດ ສ່ວນພວກແຟຝັກບໍ່ໄດ້ເຫັນພ້ອມນຳເລີຍ ເຖິງ

ວ່າເຂົາເຈົ້າພໍເຂົ້າໃຈເຖິງຄວາມຮູ້ສຶກຂອງຊາວອະເມຣິກັນວ່າ ມັນເປັນແນວໃດ ຄວາມຜູກພັນຂອງເຂົາເຈົ້າກັບປະເທດອັງກິດ ກໍ່ໃກວງອຽງໄປທາງຄິດຢາກໃຫ້ມັນຂາດກັນ. ໃນປີ ຄ.ສ.໑໗໗໖ ທ່ານຢອ໌ຊ ວິນລຽມແລະນາງຊານລີ ແຟຟັກ ພາກັນຕົກລົງໃຈ ໄປຢູ່ອັງກິດ ເພາະເຂົາເຈົ້າມີດິນດອນແລະພົນປໂຍດອັນອື່ນອີກ ຫຼາຍຢ່າງຢູ່ທີ່ນັ້ນ ໃນຕອນບ່າຍກ່ອນເຂົາເຈົ້າຈະອອກເດີນທາງ ເຂົາເຈົ້າໄດ້ພາກັນມາທີ່ເມົ້າເວີນົງເປັນຄັ້ງສຸດທາຍ ເພື່ອສັ່ງ ລາພວກວໍຊິງຕັນ ສ່ວນວໍຊິງຕັນແລະມາກຕາກໍພາກັນໄປທີ່ແບນ ວົວ ເປັນຄັ້ງສຸດທາຍຄືກັນ ໃນວັນທີ່ພວກນັ້ນອອກເດີນທາງ ມັນ ເປັນຄັ້ງສຸດທາຍ ທີ່ລາວພົບພໍ້ກັນກັບຜູ້ຍິງ ທີ່ລາວຮັກມາແຕ່ຄາວ ເປັນບາວໜຸ່ມ ໂລກໄດ້ປ່ຽນໄປໝົດແລ້ວ ທັງຊີວິດຂອງນາງ ຊານລີ ແລະຂອງທ່ານວໍຊິງຕັນ ຈຶ່ງບໍ່ເໝືອນແຕ່ກ່ອນອີກແລ້ວ.

# ໕. ຊອກທາງຈັດຕັ້ງກອງທັບ

ບໍ່ເທົ່າໃດເດືອນຕໍ່ມາກໍ່ເກີດມີຄວາມຫຍຸ້ງຍາກກັນກັບປະເທດອັງກິດຂຶ້ນ ເພື່ອສະແດງວ່າ ຕົນມີອຳນາດຫຼາຍ ຣັຖບານອັງກິດໄດ້ສັ່ງໃຫ້ເກັບພາສີຊາຂຶ້ນ ເພື່ອຕອບເຣື່ອງນີ້ ມີຄົນຈຳພວກນຶ່ງ ມາຈາກບອສຕັນ ນຸ່ງເຄື່ອງເປັນຄືພວກແອັກອິນເດັຽ ແລ້ວພາກັນເອົາຊາ ໓໔໐ ຫໍ່ໄປຖິ້ມລົງທະເລ ເປັນການປະທ້ວງ ສ່ວນຣັຖບານອັງກິດກໍ່ສັ່ງອັດທ່າເຣືອບໍ່ໃຫ້ກຳປັ່ນເຂົ້າ ແລະບໍ່ໃຫ້ອອກແກການປະທ້ວງນັ້ນເມື່ອໄດ້ຍິນວ່າສະພາເບີກແກດຈັດການເພື່ອຊ່ວຍຊາວບົສຕົງ ທາງຣັຖບານອັງກິດກໍ່ປະກາດບໍ່ໃຫ້ມີການປະຊຸມກັນຈັກຝ່າຍ ຊາວເມືອງເບີກແກດຊາວຫາຄົນຣວມທັງທ່ານວໍຊິງຕັນນຳດ້ວຍ ຈຶ່ງພາກັນນັດປະຊຸມກັນເປັນທາງລັບ.

ໃນຍາມເກີດຄວາມຫຍຸ້ງຍາກຢູ່ນັ້ນ ທ່ານວໍຊິງຕັນໄດ້ຂຽນຈົດໝາຍຫຼາຍສະບັບ ໄປຫາ ທ່ານບຣາຍແອນ ແຟຟັກ ທີ່

ເປັນອ້າຍຂອງ ທ່ານຢອຣ໌ຊ ວິນລຽມ ທັງເປັນເພື່ອນທີ່ດີອີກ ທາງແຟຟັກໄດ້ບອກກັບວໍຊິງຕັນວ່າ ບໍ່ສົມຄວນຈະຕ້ອງໃຊ້ກຳລັງ ເທື່ອໃນຍາມນັ້ນ ວໍຊິງຕັນຕອບຄືນວ່າ ລາວເຫັນພ້ອມນຳຢູ່ຖ້າ ຫາກວ່າຈະມີຫວັງມີຊັຍຊະນະ ແຕ່ວ່າລາວເອງບໍ່ປາກົດວ່າຈະມີ.

ທ່ານວໍຊິງຕັນ ບໍ່ເປັນຜູ້ມີນິສັຍວ່າ ຈະປ່ອຍໃຫ້ຄວາມຄິດໃດຄວາມຄິດໜຶ່ງ ອັນບໍ່ກົງກັນນັ້ນ ມາເປັນສິ່ງທຳລາຍຄວາມຮັກແພງກັນ ແຕ່ລາວກໍໄດ້ຕັດສິນໃຈໄວ້ແລ້ວໃນສິ່ງທີ່ຈະເຮັດຈະທຳ ເວລາເຂົ້າກອງປະຊຸມຄັ້ງວັນທີ່ ໑ ເດືອນແປດຢູ່ສະພາເບີກແກດ ລາວລຸກຂຶ້ນ ແລະປະກາດໃຫ້ທີ່ປະຊຸມຊາບວ່າ ລາວກຽມພ້ອມແລ້ວທີ່ຈະບັນຈຸເອົາຄົນຈຳນວນພັນຄົນ ແລະເອົາເງິນຂອງລາວເອງໃຊ້ເປັນຄ່າເງິນເດືອນເຂົາ ເພື່ອພາກັນເດີນໄປທີ່ບົສຕົງ.

ຄວາມຈິງຂອງເຣື່ອງ ກໍຄືວ່າ ທ່ານວໍຊິງຕັນເປັນຄົນຜູ້ທີ່ສຸາມ ຢູ່ໃນຈຳນວນຂອງພວກເວີຈີເນັຽເຈັດຄົນ ທີ່ຖືກເລືອກເຂົ້າຮ່ວມກອງປະຊຸມແຫ່ງຊາດຄັ້ງທີໜຶ່ງ ຈຳພວກຜູ້ນຳແລະຜູ້ທີ່ເປັນນັກປະຖະກະຖາເກັ່ງກໍມີຫຼາຍຜູ້ຫຼາຍຄົນພໍເລືອກໄດ້ຫຼາຍຢູ່ ແລະເຫດຜົນທີ່ວໍຊິງຕັນຖືກເລືອກເຂົ້າຮ່ວມປະຊຸມຄັ້ງນີ້ກໍສະແດງວ່າຜູ້ຄົນມີຄວາມນິຍົມນຳຄົນງຽບໆຜູ້ນີ້ຫຼາຍ.

ທ່ານວໍຊິງຕັນຊາບຂ່າວວ່າ ພວກອັງກິດແລະອະເມຣິກັນ ໄດ້ເກີດປະທະກັນ ຢູ່ທີ່ເລັກຊິງຕັນ ທາງທິດເໜືອ ຂອງບົສຕົງ ເຣື່ອງນີ້ເກີດຂຶ້ນບໍ່ດົນດຽວກ່ອນວໍຊິງຕັນຈະໄປປະຊຸມແຫ່ງຊາດຄັ້ງສອງ ເມື່ອໄປປະຊຸມຄັ້ງນີ້ ລາວໄດ້ນຸ່ງເຄື່ອງແບບສີຄາມຂອງ

ລາວເຄີຍນຸ່ງໃນກອງທັບທີ່ເວີຈີເນັຍ ນີ້ເປັນເຣື່ອງຂອງວໍຊິງຕັນ ຕ່າງຫາກ ເພື່ອໃຫ້ຄົນໃນກອງປະຊຸມ ຮູ້ສຶກເກີດມີຄວາມຕ້ອງການຄົນພາກໃຕ້ຜູ້ນຶ່ງ ມາເປັນຜູ້ນຳໜ້າກອງທັບໃຫຍ່ທາງພາກເໜືອທີ່ເຕົ້າໂຮມກັນຢູ່ນອກບົສຕົງ ອັນມີພວກອັງກິດຍຶດຄອງໄວ້ ວໍຊິງຕັນ ແລະໝູ່ພວກຫຼາຍຄົນອີກ ຈຶ່ງຖືກເລືອກຕັ້ງຂຶ້ນ ໃນຈຳພວກນີ້ມີສອງຄົນຄື ທ່ານໂຮຣາຕິໂອ ເກດ ແລະສາລີລີ ເຄີຍເປັນນາຍທະຫານອັງກິດມາແລ້ວ ແລະມີຜູ້ທີ່ສາມອີກຄືທ່ານຈອນແຮນຄອກ ເຄີຍເປັນປະທານຂອງກອງປະຊຸມແຫ່ງຊາດມາແລ້ວ ທ່ານຈອນ ອາດຳ ໄດ້ຂຽນບອກວ່າລາວຍັງຈື່ໄດ້ວ່າ ລາວໄດ້ລຸກຂຶ້ນໃນກອງປະຊຸມເພື່ອຂໍໃຫ້ແຕ່ງຕັ້ງວໍຊິງຕັນເປັນຜູ້ບັງຄັບສູງສຸດ ເຫັນດັ່ງນັ້ນວໍຊິງຕັນຈຶ່ງຍ່າງອອກຈາກຫ້ອງໄປ ເພື່ອໃຫ້ທຸກຄົນໄດ້ເວົ້າຢ່າງກົງໄປກົງມາກ່ຽວກັບເຣື່ອງຂອງລາວ ມີບາງຄົນທາງພາກເໜືອບໍ່ພໍໃຈປານໃດ ທີ່ເຫັນວ່າ ວໍຊິງຕັນເປັນຄົນພາກໃຕ້ຈະໄດ້ມາເປັນຄົນສຳຄັນເຊັ່ນນັ້ນ.

ຫຼາຍວັນຜ່ານໄປ ຫຼັງຈາກການລົງມະຕິແລ້ວ ກໍມີການມອບກອງບັນຊາການໃຫ້ລາວ ວໍຊິງຕັນກ່າວຮັບເປັນສຳນວນສັ້ນໆຕາມເຄີຍທີ່ວ່າ ລາວເປັນຄົນປາກຍາກແດ່ ລາວບໍ່ກ່າວຫຍັງຫຼາຍກ່ຽວເຣື່ອງສິດທິເສຣີພາບຂອງຄົນ ດັ່ງຫຼາຍໆຄົນເຄີຍຫາມາເວົ້າ ສ່ວນຄວາມເວົ້າ ທ່ານວໍຊິງຕັນ ແມ່ນຄວາມເວົ້າແລະຄວາມຄິດຂອງລາວເອງ ສິ່ງນີ້ແມ່ນກຽດທີ່ລາວໃຝ່ໃຈຫາໃນນາມຂອງພວກທ່ານລໍຣັງທີ່ມີມາໃນພາກສາຍພູດ້ານຕາວັນຕົກນີ້ ກຽດທີ່ເກີດແກ່ລາວຄັ້ງນີ້ ບໍ່ແມ່ນໄດ້ມາຈາກຄວາມຊົມເຊີຍ

ຈາກເຈົ້າຊີວິດອົງໃດເລີຍ ແຕ່ວ່າມັນເປັນພອນປະເສີດຂອງປະ
ຊາຊົນເສີມອບໝາຍໃຫລາວ.

ເມື່ອທ່ານວໍຊິງຕັນຖືກແຕ່ງຕັ້ງໃຫ້ເປັນຜູ້ບັນຊາການແລ້ວ ເຊັ່ນນີ້ ຄວາມຮູ້ສຶກອັ້ນຕັ້ນຂອງລາວເປັນຢ່າງໃດ ລາວບໍ່ສະອອນຫຼືເປັນສຸກດອກ ລາວສຳນຶກນຳແຕ່ຄວາມເປັນຈິງວ່າ ລາວອາດມີຄວາມພາດພັ້ງນັ້ນສເມີ ລາວຮູ້ດີຢູ່ສເມີວ່າ ຈະຕ້ອງເຊີໜາໄປສູ່ຮົບກັບຊາດນຶ່ງທີ່ເຂັ້ມແຂງທີ່ສຸດໃນໂລກ ຊຶ່ງຄິດເບິ່ງຄັກໆແລວລາວກໍບໍ່ທັນເຄີຍບັງຄັບຄົນເກີນກອງພັນເລີຍ ຫຼັງຈາກໄດ້ສະແດງຄວາມຂອບອົກຂອບໃຈນຳທີ່ປະຊຸມແຫ່ງຊາດ ຊຶ່ງມອບກຽດອັນສູງໃຫແລວນັ້ນ ທ່ານວໍຊິງຕັນແຈງວ່າ ຄວາມຮູດານກອງທັບທີ່ລາວມີ ກໍມີນອຍ ບໍ່ສົມກັບຄວາມໄວເນື້ອວາງໃຈອັນໃຫຍຫລວງທີ່ຖືກມອບໝາຍໃຫລາວເລີຍ ລາວຈຶ່ງຂໍຮອງໃຫທຸກຄົນໃນທີ່ປະຊຸມເຂົ້າໃຈວ່າ ລາວອາດຈະບໍ່ທັນສົມກັບກອງບັນຊາການນັ້ນເທື່ອ.

ທ່ານ ຢອຣ໌ຊ ວໍຊິງຕັນນີ້ ບໍ່ແມ່ນຜູ້ທີ່ມີປວັດຕິກັບທ່ານອາເລັກຊັງດູ ກຣິດ ຫຼືທ່ານນາໂປເລອົງ ຂອງຝຣັ່ງເສດນັ້ນດອກ ລາວບໍ່ໄດ້ຄິດວ່າລາວເປັນຄົນພິເສດດອກ ລາວຮູແລວວ່າອາດູມີການເສັຽຊັຍກໍເປັນໄດ ທຸກສິ່ງທຸກຢ່າງທີ່ລາວ ປະຕິຍານໃຫໄດກໍຄືວ່າ ລາວຈະທຳທຸກຢ່າງທີ່ລາວທຳໄດ ເພື່ອຈະນຳເອົາຄວາມເສີພາບມາໃຫໄດດັ່ງທຸກໆຄົນປາຖນາ ໃນເຣື່ອງນີ້ທ່ານວໍຊິງຕັນຈະບໍ່ຂໍຮັບເອົາເງິນເປັນຄ່າຕອບແທນເລີຍ ລາວີ ໄດບອກກັບທີ່ປະຊຸມແຫ່ງຊາດວ່າ ບໍ່ມີເງິນຈຳນວນໃດດອກຈະເອົາ

ມາຈ້າງໃຫ້ລາວຮັບໜ້າທີ່ອັນແສນຍາກນີ້ ຫຼືວ່າມາຈ້າງໃຫ້ລາວ
ພັດພາກຈາກຄວາມອົບອຸ່ນອັນແສນສຸກຂອງຊີວິດຄອບຄົວໄດ.

ບັດນີ້ທ່ານວໍຊິງຕັນຈຶ່ງຮູ້ສຶກວ່າຄິດຮອດເມັຽນາງມາກຕາ ຂຶ້ນມາ ລາວຈຶ່ງຂຽນຈົດໝາຍໄປອະທິບາຍສູ່ເມັຽຟັງວ່າບໍ່ແມ່ນລາວປະສົງຈະຢາກພາກຈາກເມັຽ ແລະຄອບຄົວດອກ ລາວໄດທຳທຸກວິທີທາງແລ້ວ ເພື່ອຫຼີກທາງທີ່ຄົນໄດໃຫ້ຄວາມເຊື່ອຖືລາວ ສ່ວນລາວເອງກໍ່ຮູ້ສຶກວ່າ ມັນເປັນເຣື່ອງຍິ່ງໃຫຍ່ເກີນໄປສຳລັບລາວ ແຕ່ຖ້າຫາກວ່າລາວຈະບໍ່ຮັບກໍອາດຈະກາຍເປັນສິ່ງເສັຽກຽດໃຫ້ແກ່ລາວເອງທັງຈະເປັນສິ່ງຊອກຊ້ຳເສັຽໃຈໃຫ້ໝູ່ພວກຂອງລາວ.

ພ້ອມໆກັນນັ້ນ ລາວກໍໄດ້ຂຽນໄປສົ່ງຂ່າວ ໃຫ້ທ່ານແຈັກເພື່ອຂໍໃຫ້ໄປເບິ່ງແຍງນາງມາກຕາໃຫ້ດວຍ ລາວຮູ້ແລ້ວວ່າເມັຽຄົງຈະໂສກເສົ້ານຳທີ່ວ່າຜົວຈາກໄກໄປ ແລະສິ່ງນັ້ນກໍເປັນການວຸ່ນວາຍໃຈ ບໍ່ນ້ອຍຄືກັນ.

ໃນ ວັນທີ່ ໔ມິ ເດືອນທົກ ລາວຈຶ່ງຂຶ້ນໄປພາກເໜືອເພື່ອໄປຮັບເອົາກອງບັນຊາການ ຂອງກອງທັບອະເມຣິກັນຢູ່ບົສຕັນ ໃນຈົດໝາຍສັ່ງລາທີ່ສົ່ງຫານາງມາກຕານັ້ນລາວໄດຂຽນໃນທຳນອງຢາກສະແດງວ່າ ມາກຕາ ນີ້ໄດແທນບ່ອນຂອງນາງຊານລີ ແຟຟັກ ຢູ່ໃນຫອງຫົວໃຈຂອງວໍຊິງຕັນນັ້ນມາກໍໄດຫຼາຍຟ້າຫຼາຍປີສົມຄວນແລ້ວ ລາວຈຶ່ງບອກກັບເມັຽຮັກວ່າຈະເປັນເວລາອັນເຫິງນານຫຼືຈະເປັນລະຍະອັນໄກກັນເທົ່າໃດກໍດີ ແຕ່ສິ່ງເຫຼົ່ານັ້ນຈະມາປ່ຽນແປງຄວາມຄິດຮອດຄິດເຖິງຂອງລາວຕໍ່ເມັຽຮັກບໍ່

ໄດ້ເດັດຂາດ.

ພໍຈົບຈາກຂຽນຄຳເຫຼົ່ານີ້ແລ້ວ  ທ່ານຢອຣ໌ຊ ວໍຊິງຕັນ ຜູ້ທີ່ມີກຽດຂອງຊາວຈີນເວີຊີເນັຍ ກໍປິ່ນຫຼັງໃສ່ຊີວິດທີ່ຜ່ານມານັ້ນ ແລວຕັ້ງໜາເດີນທາງໄປສູ່ອະນາຄົດຕໍ່ໄປ.

JOS Warsington

# ຜ. ຊອກທາງ ເຮັດໃຫ້ເປັນປະເທດ

ຕາມອ່ານເບິ່ງຈົດໝາຍຂອງທ່ານວໍຊິງຕັນທີ່ຂຽນມາໃນຫຼາຍເດືອນຕົ້ນນັ້ນ ລາວໄດບອກຂາວວ່າຄົນຢູ່ເຂດຊຸມຄອງພາກເໜືອນີ້ ບໍ່ມີຊີງວ່າຈະເປັນທະຫານດີໄດ ໃຫ້ສັງເກດອີກວ່າຜູ້ເປັນນາຍທະຫານກໍ່ບໍ່ດີລື່ນກັນເທົ່າໃດ ຕໍ່ມາບໍ່ນານກໍ່ສົ່ງຂາວມາອີກວ່າ ພວກອັງກິດເອງກໍ່ເປັນພວກທີ່ເໝັນແກແຕ່ໄດເງິນຈ້າງໄປຮັບ.

ບໍ່ນານກໍ່ເກີດມີການປ່ຽນແປງຂຶ້ນທັນທີ ພວກຜູ້ຄົນພາກັນຄິດໄດ້ວ່າ ອາດເປັນເຣື່ອງເນື່ອງມາຈາກສິ່ງທີ່ວໍຊິງຕັນສັງເກດໄດ້ເອງ ໃນຫຼາຍເດືອນຕົ້ນທີ່ລາວໄດ້ຮັບເອົາການບັງຄັບບັນຊາກອງທັບມານັ້ນ ຈຳນວນພົນອັນລວມມີ ໘໐,໐໐໐ ຄົນ ກໍ່ມີແຕ່ ໑໔.໐໐໐ ຄົນດັ່ງນີ້ ຕໍ່ມາກໍ່ແມ່ນຈຳນວນປືນກໍ່ມີແຕ່ສ່ວນນ້ອຍ ບໍ່

ຫຼາຍດັ່ງລາວຄຶດໄວ້ ຄຶດເບິ່ງແລ້ວວ່າ ສິ່ງເຫຼົ່ານີ້ ອາດພາໃຫ້ວໍຊິງຕັນຄົນແກເກີດຄຽດແຄ້ນເສັຽໃຈໄດ້ ແຕ່ວ່າຄົນຜູ້ນີ້ຢູ່ໃນວັຍອາຍຸ ໔໓ ປີ ນີ້ຍັງມີນິສັຍຈິດໃຈໜຸ່ມແໜ້ນຢູ່ ມີນາຍພົນຜູ້ນຶ່ງ ທີ່ເຄີຍເຫັນທ່ານວໍຊິງຕັນ ໃນຍາມມີຄົນມາສົ່ງຂ່າວບໍ່ດີກ່ຽວກັບເຣື່ອງປືນໃຫ້ຟັງ ລາວຍັງຈື່ໄດ້ຢູ່ວ່າທ່ານຜູ້ບັນຊາການສູງສຸດໄດ້ເຣັດແນວໃດໃນຍາມນັ້ນ ລາວບໍ່ສະແດງຫຍັງແລະບໍ່ປາກຈັກຄວາມ ເປັນຕັ້ງເຄິ່ງຊົ່ວໂມງ.

ໃນລະຍະເຄິ່ງຊົ່ວໂມງ ທີ່ລາວບໍ່ປາກນັ້ນ ຄົງຈະແມ່ນທ່ານວໍຊິງຕັນຄິດນຳລາວເອງ ແລະຄິດນຳພວກຜູ້ຄົນທີ່ລາວຈະເປັນຜູ້ນຳໜ້າ ລາວຄິດໄດ້ວ່າມັນບໍ່ແມ່ນເຣື່ອງທີ່ຈະຕ້ອງກຽມການສູ້ຣົບເອົາຫຍັງກັບປະເທດອັງກິດ ແລະເພື່ອຈະຄວບຄຸມໝົດທັງປະເທດອະເມຣິການັ້ນດອກ ຄວາມປາຖນາອັນດຽວຂອງເຂົ້າເຈົ້າກໍຄື ເພື່ອຣວມເປັນອັນນຶ່ງອັນດຽວກັນ ເພື່ອບໍ່ໃຫ້ມີວ່າ ພວກຄົນຂອງມາຊາຊູແຊດ ຄົນຂອງຄອນເນັກຕິແກດ ຄົນຂອງນິວຢອກ ຫຼືວ່າຄົນຂອງເວີຊິເນັຽ ແຕ່ວ່າຂໍໃຫ້ເປັນຄົນອະເມຣິກັນທົ່ວໆກັນໝົດ.

ພໍເມື່ອຕັດສິນເຊັ່ນນັ້ນແລ້ວ ທ່ານຢອຣຊ ວໍຊິງຕັນ ກໍກຽມທ່າເພື່ອຕັ້ງຕົ້ນຣົບ ແລະເພື່ອສ້າງໃຫ້ເປັນປະເທດອະເມຣິກາທີ່ຍັງບໍ່ທັນເກີດຂຶ້ນໄດ້ເທື່ອ ບັນຫາມີມາກຕັ້ນທີ ຄົນຈຳນວນ ໑໔,໐໐໐ ຄົນ ທີ່ລາວມີນັ້ນເປັນຄ້າຍໆກັບຄົນອັ່ງອໍກັນຫຼາຍກວ່າຈະເປັນຄົນດີຂອງກອງທັບ ຜູ້ໃດກໍມີທ່າທີບໍ່ປາກຟັງຄຳສັ່ງ ຜູ້ເປັນນາຍທະຫານທີ່ບໍ່ໄດ້ວຽກທີ່ຖືກໃຈກໍລາໜີອອກໄປ ທ່ານ

ວໍຊິງຕັນ ຈຳເປັນຕ້ອງໃຊ້ເວລາຢ່າງຍືດຍາວມາອະທິບາຍເຫດ
ຜົນນຳເຂົາເຈົ້າ ແລະຕ້ອງຂຽນໄປຫາສະພາຫຼວງຂໍໃຫຊອກຄົນ
ປ່ຽນນາຍທະຫານທີ່ລາອອກໄປນັ້ນດ້ວຍ ລາວຈຳເປັນຈັດໃຫ
ເປັນກອງພົນສມ່ຳສເມີກັນໝົດແລະຊອກຜູ້ບັງຄັບບັນຊາຜູ້ດີໆມາ
ໃສ່ ສິ່ງນີ້ກໍ່ເກີດມີບັນຫາຂຶ້ນລະຫວ່າງວໍຊິງຕັນແລະຣັດອື່ນໆ.

ຄອນເນັກຕີແກດກໍ່ບໍ່ຢາກໄດ້ຄົນທາງມາຊາຊູແຊດໃໝ່ມາ
ຢູ່ກອງພົນຂອງຕົນ ມາຊາຊູແຊດກໍ່ບໍ່ຢາກໄດ້ທະຫານ ຜູ້ຄົນທາງ
ໂຣດອາຍແລນມາຢູ່ນຳພວກຂອງຕົນ ແລະນິວແຮມເຊຍກໍ່ຄຽດ
ວ່າຄົນດີຂອງຕົນຖືກສົ່ງໜີໄປຢູ່ແຫ່ງອື່ນ ຜູ້ປົກຄອງຝ່າຍມາຣີ
ແລນ ກໍ່ຢາກຮອງຂໍໃຫທະຫານຂອງຕົນໄດ້ຢູ່ຮັບໃຊ້ໃນເຂດຂອງ
ຣັດຂອງຕົນເອງ ສ່ວນໂຄງການຕ່າງໆກໍ່ມີຄືການຈະຍົກກອງທັບ
ເຂົ້າປະເທດການາດາ ການສົ່ງກຳລັງໄປເສີມປ້ອງກັນນິວຢອກ
ທາງເຂດຊາຍແດນພູມກໍ່ອາດຖືກກອງທັບອັງກິດ ກັບແຂກພາກັນ
ມາຕີ.

- ທ່ານວໍຊິງຕັນ ມີໜ້າທີ່ຕ້ອງຫາທາງແກ້ໄຂບັນຫາຫຍຸ້ງ
ຍາກທັງໝົດເຫຼົ່ານີ້ ທັງຕ້ອງຈັດຕັ້ງກອງທັບຂຶ້ນເພື່ອໄປຕໍ່ສູ້ກັບ
ທະຫານອັງກິດ ໙.໐໐໐ ຄົນ ທີ່ກຽມຈະມາຕີບຕີຄາຍໃຫຍ່ຢູ່ທີ່
ບົສຕົງ ເພາະພວກອັງກິດເຫັນວ່າ ອະເມຣິກັນກຳລັງຕົກຢູ່ໃນ
ຄວາມອອນແອ.

ສິ່ງສຳຄັນທີ່ສຸດທີ່ອະເມຣິກາຕ້ອງການໃນຍາມບ້ານຍາມ
ເມືອງຄັບຂັນນັ້ນກໍ່ຄືການວາງໂຄງການໃຫດີ ຕັດສິນໃຈໃຫຮອບ
ຄອບ ມີໄພ່ພົນພຽງພໍພອມທັງສະບຽງເປັນຕົ້ນ ແລວຕໍ່ມາກໍ່ຕ້ອງ

ມີກອງທັບທີ່ສມັກສູ້ ແລະຕ້ານທານຫົວເສິກໄວ້ ແລະໃນທີ່ສຸດເພື່ອກຳກັບຄົນອະເມຣິກັນທີ່ຄອຍຮັບໃຊ້ໃນເປົ້າປີ ຈາກພູ້ ນີ້ ກໍຕ້ອງມີນາຍພົນຜູ້ສາມາດແລະເຂົ້າໃຈຈຶ່ງຈະເປັນຜູ້ນຳໜ້າຂອງກອງທັບນັ້ນໄດ້ ບໍ່ນານທ່ານວໍ່ຊິງຕັນກໍ່ສາມາດສະແດງໃຫ້ເຫັນໄດ້ວ່າເປັນຜູ້ຈະກຳສະຖານະການໄວ້ໄດ້.

ມື້ນຶ່ງທະຫານກອງພົນນັ້ນກໍ ຜິດກັນກັບທະຫານກອງພົນນີ້ ຄາວນຶ່ງກໍ່ເກີດມີນາຍທະຫານຜິດກັນກັບພົນທະຫານເປັນຈຳນວນມາກຂຶ້ນ ຜູ້ບັງຄັບບັນຊາຜູ້ນຶ່ງ ຟ້າວແລ່ນໄປລາຍງານໃຫ້ວໍ່ຊິງຕັນຊາບ ໃນທັນໃດວໍ່ຊິງຕັນບໍ່ໄດ້ລໍຊ້າ ຟ້າວໂດດຂຶ້ນຫຼັງມ້າຕີທອບໄປບ່ອນທີ່ນາຍແລະທະຫານຜິດກັນ.

ຄົນຜູ້ນຶ່ງແລ່ນໄປຫາປະຕູ ເພື່ອໄຂໃຫ້ມ້າແລ່ນອອກເດີ່ນ ແຕ່ວ່າ ວໍ່ຊິງຕັນໄປຮອດປະຕູນັ້ນກ່ອນຄົນໄຂແລ້ວ ມ້າຂອງວໍ່ຊິງຕັນບໍ່ໄດ້ລໍຊ້າ ມັນພາວໍ່ຊິງຕັນແລ່ນເຕັ້ນຂ້າມຮົ້ວເລັ່ງໄປເຂົ້າຜູ້ກາງບ່ອນຄົນກຳລັງຜິດຖຽງກັນຢູ່ທັນທີ ລາວຈຶ່ງໂດນຈາກຫຼັງມ້າລົງໄປລາກຄໍເສື້ອທະຫານທັງສອງຄົນມາເບື້ອງລະຄົນ ເພື່ອຈັກສິ້ນເຂົ້າປານສົ້ນທົວເດັກນ້ອຍແລະແຜດສຽງໄປໃສ່ພວກໜຸ່ມຂອງເຂົາ ການຜິດຖຽງກັນກໍ່ສົງບລົງທັນທີ.

ມີຄົນຜູ້ນຶ່ງ ທີ່ໄດ້ຮູ້ໄດ້ເຫັນເຫດການ ພວກທີ່ຜິດຖຽງກັນ ແລະເຫັນທັງເວລາວໍ່ຊິງຕັນພາມ້າໂດດຂ້າມຮົ້ວເພື່ອໄປຢຸດການຜິດຖຽງກັນຂອງພວກທະຫານ. ລາວຈຶ່ງມາສັງເກດໄດ້ວ່າທ່ານວໍ່ຊິງຕັນນີ້ ເປັນຄົນຜູ້ມີອຳນາດເໜືອຄົນທັງຫຼາຍ ຈະແມ່ນຍາມເຂົາໂມໂຫ ລາວກໍຍັງແກ້ໄຂໄດ້ ໃນຂະນະນັ້ນ ຄົນຜູ້ນັ້ນໄດ້

ກ່າວຕໍ່ໄປວ່າ ເປັນການແນ່ນອນແລ້ວ ທີ່ພວກເຮົາໄດ້ລົ້ມຜູ້ຖືກ
ຕອງ ເໝາະສົມ ແທແລວ ເພື່ອນຳພາພວກເຮົາໄປສູ່ຄວາມມີ
ເສຣີພາບ.

ເຖິງແມ່ນວ່າວໍ່ຊິງຕັນຈະເປັນຜູ້ນຳຜູ້ສາມາດພຽງໃດກໍດີ
ທາງສະພາຫຼວງ ຍັງເຮັດຄວາມຍາກໃຫ້ລາວຢູ່ ພວກນັກການ
ເມືອງເວົ້າວ່າ ຕອງແມນພວກເພິ່ນເປັນຝ່າຍເລືອກນາຍພົນໃຫ
ແກ່ວໍ່ຊິງຕັນ ສ່ວນພວກອື່ນກໍວ່າ ຕອງແມນພວກເພິ່ນເປັນຝ່າຍ
ເລືອກນາຍທະຫານໃຫ້ ເວລາວໍ່ຊິງຕັນ ຂໍໃຫ້ຈັດໄພ່ພົນຈຳນວນ
໔໐,໐໐໐ ຄົນມາຮັບໃຊ້ກອງທັບກຳນົດສາມປີ ທາງສະພາກໍບໍ່
ເຫັນດີນຳ ດັ່ງນັ້ນ ຈຶ່ງເກີດມີຄວາມລັ່ງເລຫນັກຂຶ້ນວ່າກອງທັບ
ແບບນັ້ນຈະສົມເປັນກອງທັບຂອງຊາດໄດບໍ່ ດັ່ງຫາດພົບມີຢູ່ວ່າ
ວໍ່ຊິງຕັນຕອງໃຊ້ເວລາ ຊອກເກນທະຫານໃໝ່ມາທົດແທນພວກ
ທີ່ລາອອກ ແລະເອົາປືນຫນີໄປພອມທັງຈາກການຮັບໃຊ້ກອງທັບ
ມາພຽງແຕ່ຫົກຫຼືສາມເດືອນເທົ່ານັ້ນ.

ການຊອກເອົາຜູ້ດີໆ ມາເປັນນາຍທະຫານ ກໍເປັນການ
ຍາກຫຼາຍແກ່ວໍ່ຊິງຕັນ, ແລະສິ່ງນຶ່ງທີ່ຜິດສັງເກດກໍຄືວ່າ ພວກທີ່
ວ່າ ມີຄວາມສາມາດດີກໍບໍ່ຢາກໃຫ້ຄວາມຮ່ວມໄມ້ຮ່ວມມືເລີຍ.
ພວກທີ່ໄດ້ຮັບປະກາດເປັນເອກະຣາດ ທີ່ຫນຸ່ມກວ່າວໍ່ຊິງຕັນກໍມີຢູ່
ຊາວຫົກຄົນ ບໍ່ມີຜູ້ໃດຈະຢາກໃຫ້ຄວາມຮ່ວມມືເລີຍ ພວກຜູ້ກາ
ຫານປ່ານປາຕຣິກ ແຮນຣີ ກໍພາກັນຄຶດວ່າຕົນບໍ່ໄດ້ເປັນນາຍ
ພົນຜູ້ຮັ້ງຈຶ່ງຂອງຄອບຄົວໃນເວີຈິເນັ້ຽ ຊື່ວ່າທ່ານລັນດອນ ຄາກເຕີ
ກໍບໍ່ໄປເຂົ້າກອງທັບ ເພາະວ່າແມ່ທ່ານບໍ່ໃຫ້ໄປ ທ່ານວໍ່ຊິງຕັນ

ໄດ້ຂຽນໄປເຕືອນຜູ້ເປັນພໍ່ວ່າ ລູກຊາຍບໍ່ໄປທຳໜ້າທີ່ຂອງມັນກໍ ແມ່ນຍອມນ້ຳຕາຂອງແມ່ມັນເອງ ວໍຊິງຕັນ ຄຶດວ່າລາວເອງກໍ ເຄີຍພົບບັນຫານີ້ກັບແມ່ຂອງລາວມາເໝືອນກັນ ຍາມແຕກອນ ພຸ້ນ ແຕ່ວ່າ ວໍຊິງຕັນບໍ່ກ່າວຫຍັງເລີຍດວຍວ່າ ບໍ່ມັກເວົ້າເຣື່ອງ ຂອງຕົນເອງໃຫ້ໃຜຟັງ.

ໃນຍາມເປັນເສີກຢູ່ນັ້ນ ມີນາຍພົນເຖິງ ໑໒ ຄົນ ໄດ້ ລາອອກ ຈາກກອງທັບ ດວຍເຫດຜົນ ສະຖານໃດສະຖານນຶ່ງ. ທ່ານວໍຊິງຕັນໄດເອີ້ນໃຫ້ເຂົາເຈົ້າກັບຄືນໄດບາງສ່ວນ ແຕ່ຫາກ ແມ່ນແຕ່ພວກເວີຈີເນັຽຂອງລາວເທົ່ານັ້ນ ທີ່ພໍເວົ້າພໍລົມກັນໄດ. ເວລາຕໍ່ມາ ກໍມີທ່ານນາຍພົນເອກ ເຕໂອໂດຣິກ ບເລຸນ ຂໍລາ ອອກໂດຍໄດໃຫ້ເຫດຜົນວ່າ ຕົນຂາດທຶນໃນການຄາ ທ່ານວໍຊິງ ຕັນຈຶ່ງບອກໄປວ່າຄົນຄືລາວນັ້ນ ເຖິງແມ່ນວ່າຈະຫຼຸບທຶນເທົ່າໃດ ກໍຄວນຢູ່ໃນກອງທັບນີ້.

ທ່ານວໍຊິງຕັນຂໍການຊ່ວຍເຫຼືອນຳສະພາຫຼວງຂໍແລວຂໍອີກ ຂໍຢູ່ໄດປີນຶ່ງເຕັມໆ ທາງສະພາກໍບໍ່ເຮັດຫຍັງໃຫ້ເລີຍ ແລະແມ່ນ ເວລາຣະດູຣອນໃນປີ ໑໗໗໖ ນັ້ນເອງ ທີ່ວໍຊິງຕັນຕອງສູນກອງ ທັບນອຍ ປະມານ ໖,໐໐໐ ຄົນ ທີ່ເກນໄພ່ມາຈາກທົ່ງນາມາ ເຝິກມາແອບປະມານເດືອນນຶ່ງສອງເດືອນ ເພື່ອຍົກໄປຕໍ່ສູ້ກັບ ທະຫານດີໆຂອງອັງກິດຈຳນວນມາກເຖິງ ໓໔,໐໐໐ ຄົນ ສິ່ງ ນີ້ຊີ້ໃຫ້ເຫັນຢ່າງບໍ່ຕອງສົງສັຍຫຍັງເລີຍວ່າ ປີ ໑໗໗໖ ເປັນປີທີ່ ອະເມຣິກາຕອງເສັຍຊັຍຕິດຕໍ່ກັນເລີຍໆ. ເຖິງແມ່ນວ່າມີ ຄົນ ເກັ່ງໆ ຂນາດທ່ານວໍຊິງຕັນ ມາເປັນຜູ້ນຳບັງຄັບບັນຊາ ກໍບໍ່

ສາມາດຈະເປັນໄປໄດ້ ທີ່ວ່າທະຫານຂອງສອງກອງທັບຢູ່ຄອນເນັກຕີແກດ ເດີຍໂຕນຄາຍ ພ່າຍຈາກແນວໜາ ມາແຕ່ຄິບເບ ນິວຢອກ ນັ້ນແລວ.

ເມື່ອກ່າວເຖິງເຣື່ອງຄິບ ເບ ມາຍາມໃດກໍເປັນເຣື່ອງທີ່ພາໃຫ້ວໍຊິງຕັນຮູ້ສຶກເສົ້າໃຈມາກໃນຊີວິດຂອງລາວ ເຮົາເຄີຍເຫັນມາຫຼາຍຕໍ່ຫຼາຍແລວ ທີ່ຄົນຜູ້ນີ້ມີຄວາມພິຈາຣະນາຢ່າງເລິກເຊິ່ງໃນສິ່ງຕ່າງໆ ແລະສາມາດຄວບຄຸມຕົນເອງ ໄດ້ດີສເມີ ແຕ່ວ່າ ເມື່ອໄດເຫັນອະເມຣິກັນ ໔,໐໐໐ ຄົນພາກັນແລນພ່າຍຍອມຢານທະຫານອັງກິດຈຳນວນເລັກນ້ອຍນັ້ນແລ້ວ ກໍ່ເລີຍໝົດສົດທ່າ ຄິດຄຽດຫຼາຍຈຶ່ງປົດໝວກລົງດິນແລວຮ້ອງຮາຍຂຶ້ນວ່າ "ໄພ່ພົນແບບນີ້ບໍ່ ທີ່ຈະໄປຕໍ່ສູ້ປ້ອງກັນປະເທດອະເມຣິການຳກັນກັບຂ້ອຍ?" ທັງຮ້ອງທັງໃຊ້ໄມ້ຄອນຊຸດເດ ຟາດໄປມາໃສ່ພວກນາຍທະຫານຢືນຢູ່ຮອບຕົວລາວ ແຕ່ປານນັ້ນກໍບໍ່ມີອັນໃດຈະດຶງດຶງຫຼັ້ກນຸກາງພວກເຂົາເຈົ້າໄວ້ວ່າ ຈະບໍ່ໃຫ້ເຂົາເຈົ້າແລນໜີຄືໂຕສັດປ່າໜີພ່າຍຈາກລາວ ພວກເຂົາກໍປະວໍຊິງຕັນຢູ່ກາງສນາມຜູ້ດຽວ ໄກຈາກພວກອັງກິດຮ້ອຍກວ່າແມກ ເທົ່ານັ້ນ.

ລາວກໍນັ່ງຢູ່ເທິງຫຼັງມາຢ່າງສຸດຈະຄຽດແຄນ ແລະເສົ້າໃຈ ຈົນຄາຍກັບວ່າ ຂໍໃຫ້ເຂົາຂ້າຖິ້ມໄປ ແຕ່ວ່າ ຝ່າຍອັງກິດເຫັນເຫດການເຊັ່ນນັ້ນ ນາຍພົນຢູ່ຜູ້ດຽວບໍ່ມີຜູ້ອາຣັກຂາ ກໍເຂົ້າໃຈຢ່ານເປັນແຜນນົ້ມນວນ ເພື່ອລວງເຂົາ ກໍເລີຍບໍ່ຮັດຫຍັງ. ແລວຈຶ່ງມີນາຍທະຫານຂອງວໍຊິງຕັນຜູ້ນຶ່ງ ມາຊອມເອົາວໍຊິງຕັນໜີໄປ ທານໂທມາສຊັບເຟີຊັນ ຜູ້ທີ່ເຄີຍໄດເຫັນທານວໍຊິງຕັນ

ຄຽດແຄ້ນແນວນັ້ນຕໍ່ອື່ນ ຍາມລາວເປັນປະທານາທິບໍດີຢູ່ນັ້ນ, ໄດ້ເລົ່າວ່າການມັກຄຽດງ່າຍເປັນກິລິຍາແຕ່ເດີມແລວ ປາກບໍ່ໄດ້ ກະທັ່ງເຖິງວ່າໄດ້ຮັບການຂໍຮ້ອງກໍບໍ່ເປັນຜົນ ມັນຄົງມີອັນໃດອັນນຶ່ງ ແບບຄົນອ່ຳອຽງຊ່ອນຢູ່ໃນຄວາມງຽບສງົບຂອງວໍຊິງຕັນນັ້ນ.

ມັນກໍບໍ່ມີຫຍັງຫຼາຍ ທີ່ພາໃຫ້ຄວາມຄຽດແຄ້ນນັ້ນເກີດຂຶ້ນໄດ້. ອັນນຶ່ງກໍແມ່ນການຄຽດໃຫ້ຄົນທີ່ແລ່ນໜີປະໃຫ້ເຫດເກີດຂຶ້ນ ລາວບໍ່ເຄີຍເກງກົວຫຍັງເລີຍໃນຍາມເຂົ້າສນາມຮົບທີ່ພວກອື່ນພາກັນແຕກຕື່ນໜີໄປ ລາວເຂັ້ມງວດແລະບໍ່ປານີແກ່ພວກທີ່ບໍ່ມີຄວາມກ້າຫານ ຍາມເມື່ອເຂົ້າສນາມຮົບຢູ່ລອງອາຍແລນ, ລາວຢ່າງຕູມຢູ່ທາງຫຼັງແຖວທະຫານອະເມຣິກັນ ແລະຖືປືນໄວສອງກະບອກກຽມໄວ ເມື່ອເຫັນຜູ້ໃດແລ່ນພາຍລາວຈະຍິງຖິ້ມທັນທີ.

ທ່ານວໍຊິງຕັນ ບໍ່ຢຸດຢັ້ງໃນການທົດລອງ ຄວບຄຸມຄວາມເປັນປ່າເຖື່ອນຂອງຄົນເຫຼົ່ານັ້ນ ແລະກໍເປັນທີ່ໄດ້ຜົນໃຫ້ແກ່ລາວດີແທ້. ບັດນີ້ ຈຸດໝາຍປາຍທາງຂອງລາວກວ້າງໄກແທ້ ບໍ່ແມ່ນແຕ່ຈະເປັນນາຍຕົນເອງເທົ່ານັ້ນ ແຕ່ແມ່ນຄວາມຕ້ອງການຈະສ້າງໃຫ້ເປັນປະເທດນຶ່ງຂຶ້ນ ເປັນປະເທດອະເມຣິກາອັນນຶ່ງອັນດຽວກັນ ບໍ່ມີສິ່ງໃດຈະສະແດງໃຫ້ເຫັນວ່າ ລາວເຮັດອັນໃດທຳອັນໃດກໍສຳເຣັດຜົນດີກວ່າໝູ່ ນອກຈາກທາງທີ່ລາວປະຕິບັດຕໍ່ທ່ານໂຊເຊັບຣິດ ເພື່ອນດີຂອງລາວ ທ່ານຣິດຜູ້ນີ້ມາຈາກຄອບຄົວທີ່ສຳຄັນຄອບຄົວນຶ່ງທີ່ຟີລາແດນເຟັຽ ແລະຢູ່ໃນຈຳ

ນວນນາຍທະຫານແລ້ວ ທ່ານວໍຊິງຕັນກໍຮັກທ່ານຣິດນ໌ຫຼາຍກ່ອນໝູ່ ທ່ານວໍຊິງຕັນຂຽນຈົດໝາຍໄປເລົ່າສູ່ລາວຟັງຢ່າງບໍ່ເກືງອີກເກງໃຈຫຼັງເລີຍ ກ່ຽວກັບເຣື່ອງທີ່ທະຫານໄດປະຕິບັດໜາທີ່ຢູ່ສນາມຣົບ ແລະກ່ຽວເຣື່ອງອື່ນອີກ ຊຶ່ງເປັນເຣື່ອງທີ່ລົມສູ່ຟັງໄດແຕ່ຜູ້ທີ່ລາວເຊື່ອໃຈໄດເດັດຂາດເທົ່ານັ້ນ.

ໃນຣະດູໜາວຂອງ ປີ ໑໗໗໖ ຍາມເມື່ອກອງທັບອະເມຣິກັນ ຖືກກອງທັບອັງກິດຕີຖອຍຜ່ານເມືອງນິວເຈີຊີນັ້ນ ທ່ານວໍຊິງຕັນໄດເປີດອ່ານຈົດໝາຍສະບັບນຶ່ງ ທີ່ຝາກມານຳນາຍພົນຊາກລີ ລີ ເພື່ອເອົາໄປໃຫທ່ານຣິດ. ທ່ານວໍຊິງຕັນນຶກວ່າຈົດໝາຍນັ້ນຄົງມີເຣື່ອງສຳຄັນສຳລັບລາວ ແຕ່ມັນກໍເປັນເຣື່ອງຂອງທ່ານລີ ຕອບຈົດໝາຍຂອງທ່ານຣິດ ຕ່າງຫາກ ຊຶ່ງເປັນເຣື່ອງທີ່ທ່ານຣິດກ່າວ ເຖິງແຕ່ຄວາມບໍ່ຈົບບໍ່ດີຂອງວໍຊິງຕັນ.

ຄົນທັມມະດາສ່ວນຫຼາຍ ກໍຕ້ອງຄຽດແລ້ວ ຢ່າງເວລາວໍຊິງຕັນ ແຕ່ລາວກ່ອນພຸ້ນ ກໍຄົງຮ້ອງເປັ່ງໄປໃສ່ທ່ານຣິດແລ້ວໃນເຣື່ອງທີ່ລາວເຮັດເຊັ່ນນັ້ນ ແຕ່ວໍຊິງຕັນກໍສົ່ງຈົດໝາຍໃຫ້ທ່ານຣິດທັງອະທິບາຍວ່າ ເປັນຫຍັງຈຶ່ງເປີດອ່ານຈົດໝາຍດ້ວຍນຶກວ່າແມ່ນເຣື່ອງຂອງລາວເບິ່ງໄດ. ໃນທັນໃດ ທ່ານຣິດກໍຂໍລາອອກຈາກກອງທັບ ແຕ່ວໍຊິງຕັນບໍ່ໄດໃຫອອກ. ສາມເດືອນຕໍ່ມາຫຼັງຈາກທີ່ວໍຊິງຕັນໄດຕັ້ງລາວຂຶ້ນເປັນນາຍພົນແລ້ວ ທ່ານຣິດຈຶ່ງຂຽນຈົດໝາຍໄປພິຈາຣະນາອະທິບາຍການເຮັດການທຳຂອງລາວສູ່ຟັງ ແລ້ວກໍຂໍໃຫວໍຊິງຕັນໄວໃຈລາວ.

ທ່ານວໍຊິງຕັນຈຶ່ງຕອບທ່ານຣິດໄປວ່າ ລາວໄດ້ຖືກກະທົບ

ກູະເທືອນຍ້ອນຈິດໝູາຍນັ້ນແທ້ ລາວອຸະທິບາຍວ່າຄວາມກະທົບ
ຍອນຈິດໝູາຍນັ້ນແທ ລູາວອະທິບາຍວາຄວາມກະທົບກູະເທືອນ
ນັ້ນ ບໍ່ແມ່ນຍອນເຣື່ອງວ່າ ຄວາມຄິດດີຂອງລາວນັ້ນໄດ້ຜິດໄປ
ນັ້ນເລີຍ ແຕ່ເປັນຍອນວ່າເປັນຫຍັງທ່ານຣິດບໍ່ມາລົມມາປຶກສາ
ໃນສິ່ງລາວຄິດເຫັນນັ້ນກ່ອນຈະໃຫ້ຜູ້ອື່ນມາເວົ້າໃຫ້ລາວ ຄວາມ
ຄິດຄວາມເຫັນຕ່າງໆຂອງທ່ານຣິດສເນີມາ ວໍຊິງຕັນກໍບໍ່ເຄີຍຂັດ
ຂືນ ແລະຣັບຟັງຢູ່ ອັນໃດລາວບໍ່ມັກລາວກໍພໍຈະບອກໃຫ້ວໍຊິງຕັນ
ຮູ້ໄດ້ສເມີ ຄຳຕອບທ່ານຣິດຄັ້ງນີ້ ສະແດງໃຫ້ເຫັນໄດ້ວ່າທ່ານ
ວໍຊິງຕັນມີກິຣິຍາໜັກແໜ້ນໃນລະຍະ ໑໘ ເດືອນ ທີ່ເປັນຜູ້ນຳ
ໜາຂອງຊາວອະເມຣິກັນ.

# ໗. ການທ້ອນໂຮມກຳລັງ

ຊາວອະເມຣິກັນເສັຽຊັຍຕິດໆຕໍ່ໆກັນສເມີມາ ຮອດເມື່ອສະພາຫຼວງຕ້ອງພາຍຈາກຟີລາແດນເຟັຽ ຢ່າງກະທັນຫັນ ປະແຕ່ວໍຊິງຕັນໄວ້ ເປັນຜູ້ຄວບຄຸມໝົດທັງຣັຖບານ ແລະ ການຕໍ່ສູ້ລາວມີສິດເຕັມປ່ຽນຢູ່ເຖິງແປດອາທິດ ເພື່ອສົ່ງທະຫານໄປແນວໜ້າ ເພື່ອຕັດສິນວຽກບ້ານການເມືອງຕ່າງໆທີ່ສຳຄັນ ແລະ ເພື່ອໄປໂຈມຕີບ່ອນໃດທີ່ລາວເຫັນສົມຄວນ ໃນລະຍະອັນສັ້ນໆນັ້ນ ລາວສາມາດທຳໄດ້ຕັ້ງຫຼາຍຢ່າງບໍ່ໜ້າເຊື່ອເລີຍ.

ມື້ຄືນນຶ່ງກາງຣະດູໜາວປີ ໑໗໗໖ ລາວໄດ້ຍ່າງຂ້າມທົ່ງນ້ຳກ້ອນແຫຼມແມ່ນ້ຳເດີລາແວ ໄປຮອດທີ່ແຕຣນຕູ້ນ ນິວເຈີຊີ ລາວໄດ້ຕໍ່ສູ້ຕີທັບພວກອັງກິດປະມານພັນຄົນ ໃຫ້ລ່າຖອຍໄປ ເມື່ອຊາບຂ່າວວ່າ ອັງກິດໄດ້ສົ່ງຫຼອດຄອນວາລລິດ ມາຕາມ

ທານກັນລາວ ວໍ່ຊິງຕັນຈຶ່ງໃຊ້ຫຼັກແບບກາງຄືນໃໝ່ອີກ ລາວໄດ້ຍົກຝູງຂອງລາວຢ່າງວ່ອງໄວ ຈົນວ່າພວກຂອງຄອນວາລິດມາຮອດບໍ່ທັນພວກອະເມຣິກັນໄດຍົກກັນໜີກ່ອນແລວ ວໍ່ຊິງຕັນຕັດໄປທາງຫຼັງພວກນັ້ນ ໘໐ ໄມ ເພື່ອໂຈມຕີສານກອງພັນຂອງອັງກິດໃຫ້ແຕກພ່າຍໄປທີ່ພຣິນເຊີຕົນ.

ໃນລະຍະແປດອາທິດ ທ່ານວໍ່ຊິງຕັນຕີເອົາຄືນໄດ້ກ່ວາເຄິ່ງຂອງນິວເຈີຊີໃຫ້ຝ່າຍອະເມຣິກັນ ໄດ້ຊັຍຊນະໄປສອງຄັ້ງ ອັນພາໃຫ້ເຂົາມີຫວັງຈະມີຊັຍຕໍ່ໄປອີກ. ແຕ່ໃນທີ່ສຸດນີ້ ແມ່ນລາວເຮັດຫຍັງແທ້? ແມ່ນລາວຮັບຈຳນົບສິດພິເສດທີ່ສະພາຫຼວງໄດ້ມອບໝາຍໃຫ້ແກ່ລາວ.

ມີບາງສິ່ງບາງຢ່າງໄດ້ຊີ້ໃຫ້ເຫັນວ່າວໍ່ຊິງຕັນມີຄວາມຍິ່ງໃຫຍ່ນັ້ນມາກກວ່າທ່າທີງຽບໆ ທີ່ລາວສິ່ງສິດພິເສດອັນລາວປະຕິບັດໄປຮຽບຮ້ອຍນັ້ນຄືນ. ຢູ່ໃນປະວັດສາດແລ້ວກໍມີນາຍພົນຫຼາຍຄົນທີ່ໄດ້ຮັບສິດພິເສດເຕັມເພື່ອໃຫ້ຄວບຄຸມຣັຖບານ ໂດຍພວກນີ້ບໍ່ປ່ອຍໃຫ້ປະຊາຊົນຕັດສິນເອົາຜູ້ທີ່ຈະມາເປັນຜູ້ນຳເຂົາ ສະພາຫຼວງຈຶ່ງຂອບອົກຂອບໃຈນຳວໍ່ຊິງຕັນ ໂດຍບໍ່ໄດ້ຖາມຄວາມຄິດເຫັນຂອງລາວ ໃນການແຕ່ງຕັ້ງນາຍທະຫານຜູ້ສຳຄັນ ເປັນຈຳນວນຫຼວງຫຼາຍໃຫ້ລາວ ແລ້ວຕໍ່ໄປວໍ່ຊິງຕັນກໍເປັນຝ່າຍທີ່ຕ້ອງຟັງບັນຫາຂອງພວກນາຍທະຫານເຫຼົ່ານັ້ນ.

ມັນກໍເປັນໜ້າສັງເກດຢູ່ ທີ່ວໍ່ຊິງຕັນ ທຳທຸກສິ່ງທຸກຢ່າງຕາມຄວາມປະສົງຂອງສະພາຫຼວງ ຊຶ່ງຕາມທັສນະແລ້ວເຮົາ ຖືວ່າຄົນຜູ້ນີ້ເປັນຜູ້ທີ່ຮູ້ດີວ່າອັນໃດຈະຄວນເຮັດໄປແນວໃດ ລາວຮູ

ວ່າຄົນຜູ້ຍິ່ງໃຫຍ່ທັງຫຼາຍທີ່ເຄີຍຢູ່ໃນສະພາຫຼວງມາ ແລະເຄີຍໄດ້ແຕ່ງປະກາດເອກຣາດ ໄດ້ຖືກພັດປ່ຽນອອກຈາກສິດແຕ່ນານແລ້ວ.

ແຕ່ສ່ວນວໍຊິງຕັນເອງລາວ ຮູ້ດີວ່າລາວໄດ້ຕໍ່ສູ້ມາເພື່ອອັນໃດ ລາວໄດ້ອະທິບາຍສູ່ທ່ານອາເບີດໂນຣິດ ນັກທຸຣະກິດຜູ້ນຶ່ງວ່າ ຄວາມຮັກແລະຄວາມຢາກມີເສຣີພາບເທົ່ານັ້ນ ທີ່ພາໃຫ້ລາວຕໍ່ສູ້ຊາວອັງກິດ ຍາມເມື່ອສະພາຫຼວງໄດ້ອະນຸມັດສິດພິເສດໃຫ້ລາວນັ້ນ ລາວໄດ້ຂຽນໄປບອກທ່ານອາເບີດໂນຣິດວ່າ ຜົນທີ່ສຸດມີແຕ່ປືນເທົ່ານັ້ນ ທີ່ຄວນເອົາມາໃຊ້ ເພື່ອປ້ອງກັນສິດເສຣີຂອງພວກເຮົາໄວ້ໄດ້, ສະນັ້ນເຮົາຈະເອົາປືນມຽນໄວ້ບໍ່ເວລາເຮົາຫາກໄດ້ເສຣີພາບແລ້ວ.

ຊາວອະເມຣິກັນທັງຫຼາຍຄວນຈົດຈຳໄວ້ສເມີວ່າ ແມ່ນຍ້ອນທ່ານວໍຊິງຕັນ ຜູ້ເປັນທະຫານຜູ້ເຂັ້ມແຂງນີ້ເອງ ທີ່ໄດ້ຂົນມາໄປແລກເອົາສິດເສຣີພາບມາໃຫ້ເຮົາ ມີແຕ່ວໍຊິງຕັນເທົ່ານັ້ນທີ່ນໍຈະເລົ່າໃຫ້ຮູ້ວ່າລາວໄດ້ເຮັດຫຍັງສູ່ອາເບີດໂນຣິດຟັງ ແລະໃນລະຍະສີ່ຊົ່ວໂມງຕໍ່ມາຈຶ່ງນຳເອົາກອງພົນທັງຫຼາຍຂອງລາວ ຊຶ່ງບໍ່ທັນເຄີຍຣົບປານໃດ ເດີນທາງໝົດຄືນໄປໂຈມຕີພວກອັງກິດຊຶ່ງບໍ່ທັນກຽມພ້ອມເພື່ອຣົບ ຢູ່ທີ່ພຣິນເຊີຕອນ.

ສະນັ້ນມັນບໍ່ເປັນຂອງແປກເລີຍ ທີ່ວ່າກອງທັບກໍຮັກຫອມລາວ ເພາະລາວບໍ່ເຫັນແບບຢ່າງຂອງນາຍພົນຫຼາຍໆຄົນທີ່ຢືນຢູ່ເບື້ອງຫຼັງ ໄກໆພຸ້ນແລ້ວໃຫ້ຄຳສັ່ງແຕ່ລູກນ້ອງໄປຕີ ລາວແທປືນດັ່ງບ່ອນໃດ ແມ່ນເບັດໄປໃສ່ບ່ອນນັ້ນ ຖ້າຜູ້ຄົນບໍ່ເຄີຍໄດ້ເຫັນ

ຄວາມກ້າຫານທີ່ແທ້ຈິງຂອງວໍຊິງຕັນແລ້ວ ກໍບໍ່ໜ້າປາກເຊື່ອໃນເຣື່ອງທັງຫຼາຍອັນກ່ຽວກັບລາວນີ້.

ຍາມເມື່ອການຕໍ່ສູ້ກັນເກີດຂຶ້ນຢູ່ພຣິນຊິຕອນນັ້ນ ກອງພັນຂອງອັງກິດໄດ້ຕານພວກແນວໜ້າອະເມຣິກັນໄວ້ ໃນຊົ່ວຣະຍະນຶ່ງ ທ່ານວໍຊິງຕັນຈຶ່ງເອົາໂອກາດນັ້ນສອນທະຫານຂອງຕົນບໍ່ໃຫ້ເຂົາມີຄວາມຢ້ານກົວ ພວກອັງກິດ ໂດຍວິທີຂຶ້ນຂີ່ມ້າແລ່ວອອກເລາະລຽບທາງໜ້າກອງພັນຂອງອັງກິດ ເພື່ອປ່າວເຕືອນຄົນຂອງລາວໃຫ້ພາກັນແບ່ງເປັນໝວດເປັນໝູ່ແລ້ວເຂົ້າຣົບ. ພໍດີຂີ່ມ້າເລາະໄປລະຫວ່າງເບື້ອງໜ້າທັງສອງກອງທັບ ທັງສອງຝ່າຍກໍລັ່ນປືນໃສ່ກັນຂຶ້ນ ມີນາຍທະຫານຂອງວໍຊິງຕັນຜູ້ນຶ່ງ ແມ່ນນາຍພັນເອກ ຈອນຟິດຈີໂຣນ ເຫັນຄັກແນ່ແລ້ວວ່າ ທ່ານວໍຊິງຕັນ ຖືກປືນຕາຍແລ້ວ ກໍຟ້າວເອົາໝວກມຸບໜ້າ ເພາະບໍ່ກ້າເບິ່ງເວລາວໍຊິງຕັນຈະຟຸບລົງ ພໍເມື່ອລາວເງີຍເບິ່ງອີກ ຈຶ່ງເຫັນໜ້າຊື່ນໜ້າບານຢູ່ເທິງຫຼັງມ້າແລ່ນເຣັ່ງອອກຈາກຄວັນລູກປືນ ແນມເບິ່ງພວກອັງກິດແລ່ນພ່າຍພວກທະຫານອະເມຣິກັນ.

ເມື່ອເຫັນພວກອັງກິດແລ່ນພ່າຍເຊັ່ນນັ້ນ ວໍຊິງຕັນຍັງໄລ່ຕິດຕາມເຂົ້າໄປບໍ່ຖອຍ ໄປຕາມໄປເລີຍມີແຕ່ລາວແລະນາຍພັນເອກ ຂອງລາວຜູ້ດຽວທ່ານຊະຕີພົມນ້ອຍແລ່ນ ຮູ້ສຶກວ່າຢູ່ໄກຈາກກອງທັບຂອງຕົນຫຼາຍຈົນວ່າເກືອບຖືກພວກສັດຕູທີ່ແລ່ນພ່າຍໄປນັ້ນມາໝຸ້ນຈັບກຸມພວກຕົນ ວໍຊິງຕັນຈຶ່ງອະທິບາຍແຜນທີ່ຕົນກະໄວ້ ເພື່ອໄລ່ພວກອັງກິດ ສູ້ນ້ອຍແລ່ນຟັງ ແລ້ວນ້ອຍແລ່ນກໍ່ໂງ່ເງີຊອກຫາຄົນຂອງຕົນ ພໍເມື່ອພາກັນງວກໄປມາພູ້ນພີ້ ຈຶ່ງຮູ້ວ່າ

ພວກຕົນຢູ່ປ່ຽວແລ້ວ.

ເມື່ອໜີບມາແລ້ວ ວໍຊິງຕັນຈິ່ງໄດ້ຍິນຜູ້ຄົນເວົ້າໃຫ້ຟັງວ່າ ຕົນຄວນຈະລະວັງເນື້ອລະວັງຕົວຫຼາຍກວ່ານັ້ນ ນາຍທະຫານທັງຫຼາຍຈຶ່ງມອບເຫັນວ່າວໍຊິງຕັນເອົາຊີວິດໄປສ່ຽງຕໍ່ອັນຕລາຍໂພດ ອັນນີ້ໄດໝັ້ນເຫັນໝັ້ນໄດເວົ້າກັນຫຼາຍເທື່ອແລວ ໃນຍາມເລວກັນ.

ຕົວຢ່າງກໍມີເຣື່ອງທີ່ເປັນໜ້າເຫຼືອເຊື່ອເຣື່ອງນຶ່ງໄດ້ມາ ຈາກນາຍທະຫານອັງກິດ ທ່ານຈອນເຟີກູຍຈັນ ທີ່ເປັນຜູ້ຍິງປືນແມ່ນແລະຍິງເກັ່ງກວ່າໝູ່ ໃນກອງທັບອັງກິດ ລາວໄດເລົ່າວ່າ ລາວໄດຈອບຢູ່ໃນປ່າ ທີ່ແບຣມດິວາຍ ໃກ້ຄ່າຍຂອງອະເມຣິກັນ ເພື່ອຊອກຮູ້ວ່າ ເຊົາທາງທ່າຈະເຮັດຫຍັງແດ່. ໃນທັນໃດນັ້ນ ກໍເຫັນຄົນສູງໃຫຍ່ຜູ້ນຶ່ງ ຂີ່ມາລອດຮີມຕົ້ນໄມ້ອອກມາ ນັ້ນແມ່ນທ່ານວໍຊິງຕັນ ຊຶ່ງເດີນທາງມາ ກັບນາຍທະຫານຜູ້ດຽວເທົ່ານັ້ນ ສ່ວນທ່ານເຟີກູຍຈັນ ແລະພັກພວກອັງກິດຂອງລາວທີ່ພັກຢູ່ນັ້ນ ກໍພ້ອມກັນຍົກປືນແມ່ນໃສ່ວ່າຈະຍິງວໍຊິງຕັນທີ່ບໍ່ຮູ້ເນື້ອຮູ້ຝັນຫຍັງເລີຍ ແຕ່ວ່າທ່ານເຟີກູຍຈັນບໍ່ຍິງ ແລະສັ່ງໃຫ້ພັກພວກເອົາປືນລົງມຽນ ແລວລາວຈຶ່ງອະທິບາຍສູ່ພັກພວກຂອງລາວຟັງວ່າມັນບໍ່ເປັນການຍຸຕິທັມທີ່ຈະມາລອບຍິງຄົນທາງຫຼັງ ໂດຍບໍ່ໃຫ້ໂອກາດແກ່ເຂົາມີທາງຕໍ່ສູ້ປ້ອງກັນຕົວເຂົາກ່ອນ.

ທ່ານເຟີກູຍຈັນ ຈຶ່ງຍ່າງອອກຈາກຕົ້ນໄມ້ມາຮ້ອງໄປໃສ່ອະເມຣິກັນທັງສອງຄົນ ໂດຍນຶກວ່າຢາກໃຫ້ເຂົາຍິງມາໃສ່ກ່ອນ ແລວເວລານັ້ນຄົນຈຶ່ງຈະໄດຂ່າເຂົາໂດຍບໍ່ໃຫ້ມີຄວາມກິນແໜງ

ວ່າຕົນລອບຍິງຄົນທາງຫຼັງ ວໍຊິງຕັນກໍຢຸດ ງວກໄປເບິ່ງ ປາຍປືນ ທີ່ທ່ານເຟີກຸຍຊົນ ກຳລັງແນເລັງໃສ່ຈະຍິງຢູ່ແລວ ບໍ່ຢາກບໍ່ຕອບຫຼັງແລວງວກກັບຄືນຢ່າງບໍ່ຟ້າວຟັ່ງ ຂີ້ມາຕໍ່ໄປເລີຍ ທ່ານເຟີກຸຍຊົນຄິດວ່າຖ້າຈະຂ້າລາວກໍຂ້າໄດຢ່າງສະບາຍແລວແຕ່ວ່າລາວຍັງແຕ່ບໍ່ທັນລັ່ນໄກປືນເທື່ອນັ້ນ ເພາະວ່າຄົນຜູ້ນັ້ນບໍ່ໄດເຮັດຫຍັງຜິດລາວ ແລະເປັນຜູທີ່ບໍ່ຄືນບໍ່ຢານຫຍັງ ຜົນທີ່ສຸດລາວກໍເລີຍປ່ອຍໃຫຜ່ານໄປໂດຍບໍ່ເຮັດຫຍັງເລີຍ ລູນຫຼັງຕໍ່ມາ ທ່ານເຟີກຸຍຊົນຈຶ່ງສືບຊາບວ່າຄົນຜູເກັ່ງກາຜູນັ້ນແມ່ນວໍຊິງຕັນ.

ເມື່ອຢູ່ສນາມຣົບທີ່ແບຣັນດີວາຍນັ້ນເອງ ທ່ານວໍຊິງຕັນແລະນາຍທະຫານຂອງລາວໄດຮັບຊາບ ຈາໄປແດ ວ່າທະຫານອັງກິດກຳລັງທາງທາມາຕີດານນຶ່ງຂອງກອງທັບອະເມຣິກັນ ພໍດີຂາວມາຮອດ ສຽງປືນສັດຕູກໍດັງມາແຕ່ເທິງໂພນພູນພອນໆກັນ. ວໍຊິງຕັນຈຶ່ງຟາວສັ່ງໃຫຍາຍກັມມາທາງເຫດເກີດຂຶ້ນ ເພື່ອໃຊເສັ້ນທາງທີ່ສັ້ນທີ່ສຸດ ລາວຈຶ່ງສັ່ງທານບຣາວ ທີ່ເປັນພໍ່ມາເຖົ້າໃຫຊ່ວຍລາວ ທານບຣາວຮູ້ເຂດແດນແຖວນັ້ນດີ ແຕ່ທາກວ່າລາວບໍ່ຢາກຕໍ່ສູ ຊ່ວຍບານຊ່ວຍເມືອງເທົ່າໃດ ລາວກໍທາທາງເລີ່ມາແກໂຕ ນຳວໍຊິງຕັນຫຼາຍຢ່າງວ່າ ໄປບໍ່ໄດຜົນທີ່ສຸດວໍຊິງຕັນຈຶ່ງສັ່ງນາຍທະຫານຂອງລາວຜູນຶ່ງລົງມາໄປບອກເຖົ້ານັ້ນວ່າໃຫເລືອກເອົາວ່າຈະຂຶ້ນມາໄປນຳຫຼືຈະຍອມໃຫຂ້າຖິ້ມ.

ທານບຣາວຈຶ່ງຟາວຂຶ້ນມ້າຢ່າງຂົມຂື່ນຝືດຝາດທີ່ສຸດໃນຊີວິດຂອງລາວ ຂີ່ໄປຂ້າມຮົ້ວ ຂ້າມໂນນສູງໂນນຕ່ຳໄປ ມ້າຂອງວໍຊິງຕັນກັບມ້າຂອງເຖົ້ານັ້ນແລ່ນຮຽງຕິດໆກັນໄປ ວໍຊິງຕັນຮອງ

ບອກເຖົ້າພໍ່ນາວ່າ "ຄົນໄປເລື້ອຍ ພໍ່ເຖົ້າຕ້ອງຄົນຕໍ່ໄປເລື້ອຍ ຜູ້ເຖົ້າກໍຕ້ອງຄົນຊ່ວຍກັນ".

ທ່ານວໍຊິງຕັນເປັນແມ່ທັບແລະເປັນນັກສູ້ກໍຈິງ ແຕ່ທ່ານກໍເປັນຜູ້ມີສິນມີທັມແທ້ ລາວບໍ່ເຄີຍສະແດງຄວາມລັງກຽດສ່ວນຕົວຕໍ່ພວກອັງກິດເລີຍ. ເຊັ່ນໃນເວລາຊຶ່ງປະທະກັນຢູ່ທີ່ພຣິນເຊີຕອນນັ້ນ ທ່ານວໍຊິງຕັນຕັ້ງເບິ່ງພວກອັງກິດໝູ່ນ້ອຍນຶ່ງຊຶ່ງທຳການສູ້ຣົບຢ່າງສຸດກຳລັງ ຕໍ່ພວກອະເມຣິກັນ ທີ່ມີຈຳນວນມາກ ລາວຈຶ່ງຮ້ອງປາວໄປເປັນກຳລັງໃຫ້ຄົນຂອງລາວ ໃຫ້ເບິ່ງຕົວຢ່າງໃນຄວາມສາມາດຂອງພວກອັງກິດ! ຫຼັງຈາກການຣົບໄດ້ສິ້ນສຸດລົງແລ້ວ ລາວກໍໄດ້ເວົ້າ ແລະເຮັດດີນຳພວກທີ່ຖືກບາດເຈັບ ແລະພວກນາຍອົມຕົວ ຢູ່ທີ່ພຣິນເຊີຕອນ ລາວໄດ້ເຫັນທະຫານອະເມຣິກັນຫຼາຍຄົນຣິບຮື້ເອົາເຄື່ອງ ຂອງທະຫານອັງກິດຜູ້ນຶ່ງທີ່ຖືກຍິງຈົນໝົດ ວໍຊິງຕັນ ເສັຽໃຈຫຼາຍ ຈຶ່ງສັ່ງເອົາພາຍໝົດ ແລ້ວສັ່ງເອົາຜູ້ໃໝ່ມາເຝົ້າຜູ້ຖືກຍິງນັ້ນຈົນກວ່າທ່ານໝໍອະເມຣິກັນຈະມາຮອດ.

ວໍຊິງຕັນ ລະມັດລະວັງທີ່ສຸດໃນການຈະສົ່ງຄົນໄປຕີເສິກ ຢ່າງຢູ່ທີ່ລອງອາຍແລນ ລາວຕັ້ງໃຈເບິ່ງນຳທະຫານຂອງລາວ ກຸ່ມນ້ອຍນຶ່ງກ້ຽງໃກ້ຈຸດທີ່ມາຈາກມາຣີແລນ ເຊິ່ງລາວຮູ້ແລ້ວວ່າ ຈະຕ້ອງເສັຽທີ່ໃຫ້ແກ່ທະຫານເສື້ອແດງຂອງອັງກິດອັນມີຈຳນວນ ມາກກວ່າ ລາວເບິ່ງພວກຂອງລາວທີ່ລົ້ມທາວຕາຍລົງໃນຍາມ ຣົບນັ້ນ ຈຶ່ງສະແດງຄວາມເສົ້າເສັຽໃຈເປັນອັນມາກໃຫ້ພວກທີ່ ຢູ່ນຳລາວນັ້ນຊາບໃນການສູນເສັຽຄົນດີໆເປັນຈຳນວນມາກ ໃນ

ວັນນັ້ນ ພໍເມື່ອລາວຈະຕ້ອງພາພວກຖອຍຫຼັງຜ່ານນິວເຈີຊີໄປນັ້ນ ທ່ານດານີແອລແນນ ຊຶ່ງເປັນຜູ້ນຶ່ງໃນພວກຢູ່ນິວເຈີຊີ ໄດ້ຕິດຕາມວໍຊິງຕັນໄປ ທ່ານແນນເລີຍໄປຖືກຂ້າຕາຍຢູ່ທີ່ພຣິນເຊີຕອນ ປະເນັຽ ແລະລູກສອງຄົນໄວ້ເບື້ອງຫຼັງ ນາງໝາຍເປັນຜູ້ທຸກຍາກອຶດຢາກ ຈຶ່ງໄດ້ຂຽນໄປຂໍຄວາມຊ່ວຍເຫຼືອນຳທ່ານວໍຊິງຕັນ ລາວຈຶ່ງສົ່ງຄຳຮ້ອງຂອງນາງນັ້ນໄປຫາສະພາຫຼວງ ຊຶ່ງໄດ້ຮັບຕອບມາວ່າ ບໍ່ມີເງິນຈະໃຫ້ຄອບຄົວຂອງພວກຜົວໄປເສັຽຊີວິດທີ່ແນວໜ້າ ວໍຊິງຕັນຈຶ່ງແຈ້ງຂ່າວ ຂອງສະພາໃຫ້ນາງແນນຟັງ ພ້ອມທັງຂຽນຈົດໝາຍແລະຝາກເງິນ ໕໐ ຫຼຽນໂດລາຂອງຕົນເອງໄປໃຫ້ນາງ.

ວໍຊິງຕັນ ເອົາໃຈໃສ່ນຳຄວາມຕ້ອງການ ຂອງລູກນ້ອງຂອງລາວສເມີ ໂດຍສະເພາະແມ່ນພວກທີ່ຖືກເຂົາກັກ ລາວສືບຖາມຫາຈົນເປັນທີ່ໝັ້ນໃຈວ່າເຂົາເຈົ້າມີຢູ່ມີກິນດີບໍ່ ລາວຊອກຫາຄົນມາຊ່ວຍດູແລຕ່າງລາວເປັນເວລາເຫິງນານ.

ໃນປີ ໑໗໗໘ ລາວໄດ້ເອີ້ນຫາທ່ານແອລີອາຊ ບູດີນົດ ຈາກ ນິວເຈີຊີ ໃຫ້ມາເຮັດວຽກຜູ້ຊ່ວຍລາວ ຢູ່ໃນຈົດໝາຍທີ່ທ່ານບູດີນົດຂຽນຕອບນັ້ນ ລາວໄດ້ເລົ່າເຖິງຄວາມດີຂອງທ່ານວໍຊິງຕັນຫຼາຍຢ່າງ ທີ່ຮ້ອງຂໍຄວາມຊ່ວຍເຫຼືອນຳເພື່ອນຮ່ວມຊາດໃນຍາມບ້ານເມືອງຄັບຂັນ.

ໃນເບື້ອງຕົ້ນ ທ່ານບູດີນົດບໍ່ຍອມຮັບວຽກນັ້ນ ໂດຍອະທິບາຍວ່າ ພວກທີ່ຖືກກັກຂັງບໍ່ມີຫຍັງກິນ ແລະຝ່າຍອະເມຣິກັນກໍບໍ່ມີເງິນແລະສະບຽງຕ່າງໆສົ່ງໃຫ້ພວກເຂົາ ວໍຊິງຕັນຈຶ່ງຝາວ

ຕອບໄປ ແລະບູດີນັດກໍໄດ້ປ່ຽນຈິດໃຈ ແລະຄວາມຄິດ ທ່ານວໍ
ຊິງຕັນຂຽນວ່າ ຖ້າບູຣຸດໃນຊາດຫາກບໍ່ຊ່ວຍເຫຼືອແລ້ວ ລາວກໍ
ຈະເສັຽຫວັງທັງໝົດ ລາວເອງກໍບໍ່ສາມາດຈະເຮັດໄດ້ໝົດ
ທຸກຢ່າງ ວຽກການທຸກໆຢ່າງ ປ່ອຍຢູ່ບ່າຂອງລາວ ຊຶ່ງບໍ່ສາ
ມາດທຳໄດ້ຜູ້ດຽວ ທ່ານວໍຊິງຕັນໄດ້ບອກນຳທ່ານບູດີນັດວ່າ ຖ້າ
ລາວມີທາງ ທີ່ຈະຊ່ວຍເຫຼືອຊາວອະເມຣິກັນ ທີ່ຖືກກັກຂັງໄດ້ນັ້ນ
ວໍຊິງຕັນຂໍໃຫ້ຄວາມໝັ້ນສັນຍາວ່າຈະສນັບສນູນແລະຈັດຊ່ວຍທຸກ
ຢ່າງທີ່ລາວຊ່ວຍໄດ້ ທ່ານບູດີນັດໄດ້ຕອບຄືນວ່າ ທາງນຶ່ງທີ່ພໍຄິດ
ຊ່ວຍໄດ້ກໍຄື ເອົາເງິນເຈົ້າຂອງມາໃຊ້ຈ່າຍ ທ່ານວໍຊິງຕັນຈຶ່ງ
ບອກລາວວ່າ ຖ້າສະພາຫາກບໍ່ໃຊ້ແທນເງິນທີ່ຈະໃຊ້ຈ່າຍໄປນັ້ນ
ລາວຈະເປັນຜູ້ແບ່ງສ່ວນແທນເງິນທີ່ເສັຽໄປນັ້ນ.

ພວກອັງກິດບໍ່ສລາດພໍທີ່ເອົາຊນະກັບວໍຊິງຕັນໄດ້ ແຕ່ໃດ
ມາເຂົາພຍາຍາມຫາເຮັດໃຫ້ຊື່ສຽງລາວຕ່ຳຕ້ອຍລົງ ແລະໝົດ
ຄວາມສຳຄັນໄປ ໃນປີ ໑໗໗໖ ເມື່ອທ່ານ ວໍຊິງຕັນທຳການຕໍ່
ຕ້ານຢູ່ທີ່ບອຊຕັນ ລາວໄດ້ຮັບຈົດໝາຍສະບັບນຶ່ງ ຂອງນາຍພົນ
ວິນລຽມ ຮູເວີ ຊຶ່ງເຂັນວໍຊິງຕັນວ່າ "ທ່ານຢອຣ໌ຊ ວໍຊິງຕັນ"
ລາງ ແທນທີ່ຈະເຂັນວ່າ "ນາຍພົນ ວໍຊິງຕັນ" ວໍຊິງຕັນຈຶ່ງ
ຕອບໄປທັນທີໂດຍເຂັນວ່າ ທ່ານ "ວິນລຽມ ຮູເວີ" ທັມມະດາ
ແທນທີ່ຈະເຂັນວ່າ "ນາຍພົນ ຮູເວີ".

ໃນປີຕໍ່ໄປ, ພໍດີ ທ່ານຮູເວີ ກຽມທ່າວ່າຈະຕີເອົານິວ
ຢອກ ແລ້ວມີຈົດໝາຍການນຶ່ງສົ່ງເຖິງ "ທ່ານຢອຣ໌ຊ ວໍຊິງຕັນ"
ວໍຊິງຕັນຈຶ່ງສົ່ງບໍ່ໃຫ້ນາຍທະຫານຮັບຈົດໝາຍນັ້ນ ໃນວັນຕໍ່ມາ

ໃຫ້ຮົບນາຍທະຫານຂອງຕົນ ສ່ວນຣອມມີແມນກໍລົບແລ້ວພ່າຍ ພໍດີສິບສອງຊົ່ວໂມງຕໍ່ມາເມື່ອທ່ານນາຍພົນມົນຕາຂົ້ມຈຶ່ງເຫັນແຕ່ທະຫານຂອງວໍຊິງຕົນລອນຕົນໄວ້ແລ້ວ.

ໃນເດືອນຕໍ່ໄປ ກອງທັບຂອງວໍຊິງຕັນ ກໍນ້ອຍລົງນ້ອຍລົງ ແລະສະພາເອງກໍບໍ່ສາມາດຈະຫາທະຫານມາແທນໃຫ້ ໃນປີ ໑໗໗໗ ເມື່ອລາວມີແຕ່ ໔,໔໐໐ ຄົນ ແລະຝ່າຍອັງກິດມີ ໑໗,໐໐໐ ຄົນ ວໍຊິງຕັນຈຶ່ງຫຼອກຝ່າຍອັງກິດອີກ ລາວຈັດເອົາຄົນໄປວາງໄວ້ ເຮືອນແຄມຖນົນສາຍສຳຄັນຂອງ ເມືອງໂມຣິດ ນິວເຈີຊີ ຢູ່ເຮືອນລະສອງສາມຄົນ ວິທີນີ້ ຜູ້ຄົນເຂົ້າໃຈວ່າວໍຊິງຕັນ ຕ້ອງມີກອງທັບໃຫຍ່ ໃນວັນຕໍ່ມາ ມີພໍ່ຄ້າຜູ້ນຶ່ງ ມາແຕ່ນິວຢອກ ມາບອກປ່າວຂ່າວວ່າ ອັງກິດໄດ້ທຳການທາຣຸນໃຫ້ແກ່ຕົນ ສ່ວນວໍຊິງຕັນບໍ່ໄດ້ໂງ່ແລະຮູ້ເຖິງກົນນັກສືບທັນທີ ແຕ່ກໍທຳທ່າວ່າບໍ່ຮູ້ຫຍັງແລະທັງສັ່ງລູກນ້ອງໃຫ້ທຳເປັນບໍ່ຮູ້ເໝືອນກັນ.

ວໍຊິງຕັນ ຈຶ່ງສັ່ງໃຫ້ນາຍທະຫານຄົນຢ່າງລັບໆ ໃຫ້ແຕ່ງແຜນການໃໝ່ ເພື່ອໄປລວງໃຫ້ອັງກິດເຊື່ອວ່າອະເມຣິກັນເກີດມີກຳລັງແຂງແຮງຂຶ້ນກວ່າແຕ່ກ່ອນຫຼາຍ ແລ້ວຈຶ່ງເຊີນພໍ່ຄ້ານັ້ນມາກິນແລງນຳລາວ ຢູ່ໂຕະທານລາວເອົາແຜນການໃໝ່ທີ່ແຕ່ງແລ້ວວາງມຽນໄວ້ ພໍໃຫ້ເຫັນໃຫ້ເບິ່ງກັນໄດ້ ເວລາຊຸມເຂົ້າກັນນັ້ນ ວໍຊິງຕັນໄດ້ອອກໄປນອກຊົ່ວຣະຍະນຶ່ງພໍໃຫ້ນັກສືບເຫັນແຜນລັບທີ່ລາວຢາກໃຫ້ເຫັນນັ້ນ ນັກສືບກໍຟ້າວໄປອ່ານເບິ່ງແຜນຊຶ່ງມັນ ເຂົ້າໃຈວ່າແມ່ນແຜນລັບຂອງວໍຊິງຕັນແທ້ໆ.

ເຊົ້າມື້ໃໝ່ມາ ນັກສືບນັ້ນກໍກັບຫາຍໄປແລ້ວ ຜູ້ບັນຊາ

ກູ້ານຝ່າຍອັງກິດ ທ່ານນາຍພົນວິນລຽມຮູເວີ ຢູ່ທີ່ນິວຢອກ ເລີຍບໍ່ກ້າຈະໄປຮົບອະເມຣິກັນ ໑໔,໐໐໐ ຄົນ ຊຶ່ງຢູ່ຕາມສາຍພູອ້ອມເມືອງໂມ້ຣິສທາວ ແລະອີກຢ່າງນຶ່ງ ວໍ່ຊິງຕັນ ກໍໄດກະຈະຕໍ່ສູ້ໃນມໍ້ໃໝພູນ.

ຫຼາຍອາທິດຕໍ່ມາ ວໍ່ຊິງຕັນໄດ້ໝູ້ນເງິນ ຈ້າງນັກສືບຜູ້ນຶ່ງ ຊຶ່ງເຄີຍເຮັດວຽກໃຫ້ອັງກິດ ເພາະວ່າ ລາວຈະຮູ້ໃຊ້ໃຫ້ມັນໄປກະຈາຍຂ່າວປອມໄດ ລາວຈຶ່ງສັ່ງນາຍທະຫານໃຫ້ຈົດບັນທຶກເອົາຂໍ້ຄວາມອັນບໍ່ຈິງທີ່ນັກສືບກ່າວນັ້ນ ເພື່ອວ່າເຂົາຈະຮູ້ໄດ້ບອກຄວາມບໍ່ຈິງແນ່ນອນດຽວກັນໃຫ້ພວກນັກສືບທີ່ອັງກິດສົ່ງມາຄອຍວິທີ້ນ ວໍ່ຊິງຕັນຈຶ່ງຮູ້ໄດ້ແນ່ວ່າ ພວກສັດຕູຈະໄດ້ຍິນຄວາມດຽວກັນຈາກຫຼາຍຄົນຕ່າງກັນ.

ເມື່ອວໍ່ຊິງຕັນ ແລະກອງທັບຂອງລາວອ່ອນແຮງຫຼາຍໃນລະດູໜາວຢູ່ຕາມທົ່ງຮາບຟອກ ລາວກໍຍັງພິຈາລະນາ ຫາທາງລວງນາຍພົນຮູເວີໄດວ່າ ອະເມຣິກັນຍັງແຂງແຮງ ຢູ່ໃນແຜນຂອງເຂົາເຈົ້າ ເທື່ອນີ້ລາວມີຄວາມກ້າສ່ຽງຫຼາຍກວ່າແຕ່ກ່ອນ ລາວສົ່ງນັກສືບຂອງລາວຜູ້ນຶ່ງໄປຫາຮູເວີ ພ້ອມກັບເອກສານລັບໂດຍແມ່ນວໍ່ຊິງຕັນຂຽນເອງ ຮູເວີກໍເຊື່ອລາວ ຫຼາຍເດືອນຕໍ່ມາວໍ່ຊິງຕັນຈຶ່ງຂຽນຈົດໝາຍຫຼາຍໆສະບັບເປັນເນື້ອຄວາມບໍ່ຈິງຈັກຢ່າງກ່ຽວກັບກຳລັງກອງທັບອະເມຣິກັນ ລາວຍັງຂຽນໂຄງການປອມອີກຫຼາຍອັນວ່າຈະໂຈມຕີເອົາຟີລາແດນເຟັຽ ແລະນິວຢອກ ເມື່ອເຫັນວ່າເປັນຮອຍມືຂອງວໍ່ຊິງຕັນເອງເປັນຜູ້ຂຽນ ທ່ານຮູເວີ ກໍເຊື່ອວ່າຈະແມ່ນແທ້ ວໍ່ຊິງຕັນ ແລະຈອນຄລາກ ນາຍທະ

ຈຶ່ງມີນາຍທະຫານຜູ້ສຳຄັນຜູ້ນຶ່ງຂອງອັງກິດຢາກຂໍພົບ "ນາຍພົນ ວິຊິງຕັນ" ແລະທານວິຊິງຕັນຕອບໄປວ່າ ຍິນດີພົບກັບຮູເວີ.

ບໍ່ນານນາຍພົນຮູເວີກໍເລີກເຫຼັ້ນທາທາງເຮື່ອງເລັກນອຍ ອັນນັ້ນ ແຕ່ວ່າຍັງ ນາຍພົນໃຫມ່ອີກ ຮັ່ງຮີ ຄລິງຕັນ ກັບມາທົດ ລອງທຳນອງເກົ່ານີ້ ລາວສົ່ງຈົດໝາຍຫາວິຊິງຕັນ ໂດຍຂຽນ ລົງໜາຊອງວ່າ "ທ່ານວິຊິງຕັນ" ເສີຍໆ ວິຊິງຕັນຮູແລວຈຶ່ງ ເອົາຈົດໝາຍມຽນໄວໂດຍບໍ່ໄຂອອກອານ ລາວຈຶ່ງບອກນາຍ ທະຫານອັງກິດຜູ້ມາສົ່ງວ່າ ຈົດໝາຍນີ້ ແມ່ນສົ່ງໃຫ້ນາຍຜູ້ນຶ່ງ ທີ່ຢູ່ຮັດເວີຈີເນັຽ ແລະລາວຈະສົ່ງໃຫ້ນາຍນັ້ນຫຼັງຈາກແລວ ເສິກ ລາວເວົ້າຕໍ່ໄປວ່າ "ແຕ່ນີ້ໄປຮອດມື້ເສິກແລວ ຈົດໝາຍ ນີ້ຈະຕອງອັດໄວດັ່ງນີ້ " ໃນຊົ່ວໂມງຕໍ່ມາຜູ້ສົ່ງຈົດໝາຍຂອງ ຄລິງຕັນ ຈຶ່ງຖືຈົດໝາຍການໃໝ່ກັບຄືນມາ ອັນມີເນື້ອຄວາມ ຢ່າງດຽວກັນກັບການກອນ ແຕ່ຫາກວ່າ ເທື່ອນີ້ແມ່ນສົ່ງເຖິງ "ນາຍພົນວິຊິງຕັນ".

# ໔. ຄວາມເຂັ້ມແຂງ ແລະຄວາມສຽວສລາດ

ເວລາໃດພວກສັດຕູທົ່ວໄປ ເກີດມີຄວາມຫຍຸ້ງຍາກຂຶ້ນ ວໍຊິງຕັນກໍສະແດງຄວາມດີຕໍ່ເຂົາທັນທີ ລາວເຄີຍໃຫ້ຄວາມອຸ້ມຊູ ແກ່ "ບູຣຸດ ຈອນນີ" ເບີກໂກຍນີ ຊຶ່ງຖືກພວກອະເມຣິກັນຈັບ ໄດ້ຢູ່ຊາຣາໂຕກາ ໂດຍຂໍໃຫ້ສະພາອະນຸຍາດ ໃຫ້ພູກຮອໄດ້ກັບ ຄືນເມືອທີ່ອັງກິດ ດ້ວຍວິທີນີ້ ເບີກໂກຍນີ ຈະສາມາດຕອບໃຫ້ ພວກທີ່ຢູ່ໃນຣັຖບານອັງກິດຊາບເຖິງຜູ້ທີ່ບໍ່ດີໃຈນຳລາວ ວໍຊິງຕັນ ໄດ້ຂຽນໄປເລົ່າ ໃຫ້ທ່ານເບີກໂກຍນີຟັງວ່າ ລາວເຂົ້າໃຈ ໃນ ຄວາມຮູ້ສຶກຂອງທ່ານເບີກໂກຍນີດີ ໃນຍາມລາວເປັນທະຫານຢູ່ ນັ້ນ ທ່ານເບີກໂກຍນີ ກໍນຳຈົດໝາຍນັ້ນ ອ່ານສູ່ຣັຖບານອັງກິດ ຟັງ ແລະເວົ້າວ່າເຖິງແມ່ນວ່າ ຈົດໝາຍນັ້ນໄດ້ມາຈາກສັດຕູກໍ່ ຕາມ ແຕ່ມັນກໍສະແດງໃຫ້ຮູ້ກັນໄດ້ວ່າທ່ານວໍຊິງຕັນເປັນຄົນດີແທ້.

ສະຖານໃດກໍດີ ທ່ານວໍຊິງຕັນຮູ້ສຶກຕົວສເມີວ່າ ລາວທາງການຕໍ່ສູ້ເພື່ອຊີວິດຂອງລາວ ບໍ່ເຄີຍມີນາຍພົນຜູ້ໃດ ຈະຮຽນຮູ້ສິລປະໃນການຣົບໄດໄວເໝືອນວໍຊິງຕັນໂດຍສະເພາະໃນຍາມຍາກໃນລະດູໜາວປີ ໑໗໗໖-໗໗ ນັ້ນ ບ່ອນໃດຫຼືອັນໃດທີ່ລາວເອົາຊນະທາງກຳລັງບໍ່ໄດລາວກໍເອົາຊນະທາງຄວາມຄິດປັນຍາ ບໍ່ນານລາວກໍກາຍເປັນນັກສືບຜູ້ສຳຄັນຜູ້ນຶ່ງໃນປວັດສາດ.

ໃນເບື້ອງຕົ້ນ ລາວທຳໜາທີ່ທາງນັກສືບບໍ່ໄດຜົນດີປານໃດ ເນື່ອງຈາກວ່າ ວໍຊິງຕັນ ຊ່າງເກັບຄວາມລັບໃນແຜນການຂອງລາວ ຈົນວ່າຄົນຜູ້ນຶ່ງຊຶ່ງນາທັນເຮັນ ຖືກອັງກິດຈັບໄປແຂວນຄໍຍອນເຣື່ອງນັກສືບ ພໍເມື່ອເດີນທາງກັບມາທາງແມ່ນ້ຳເດລາແວ ວໍຊິງຕັນ ຈຶ່ງຝາກຂຽນຈົດໝາຍ ໄປຟີລາແດລເຟັຽ ເພື່ອຂໍເງິນມາຈ້າງພວກນັກສືບ.

ໃນວັນຕໍ່ມາຈຶ່ງຫານັກສືບຜູ້ດີໆໄດ້ຜູ້ນຶ່ງ ຊື່ວ່າຈອນຮອນນີແມນ ລາວເຄີຍເປັນທະຫານອັງກິດເທື່ອນຶ່ງ ຊຶ່ງຮັກສາຄວາມລັບຂອງອະເມຣິກາໄວເປັນຢ່າງດີ ທ່ານວໍຊິງຕັນໄດສັ່ງໃຫ້ລາວໂຕນຈາກກອງທັບແລະໄປທີ່ແຕຣນຕັນ ນິວເຈີຊີ ເພື່ອໄປເຂົ້າຮ່ວມພວກນ້ຳຝ່າຍຕໍ່ຕ້ານຊ່ວຍອັງກິດ ແບບນີ້ເຂົາຈຶ່ງຈະບໍ່ມີສົງສັຍໃນຕົວຂອງຮອນນີແມນວ່າເປັນນັກສືບໃຫ້ອະເມຣິກັນ ແລວວໍຊິງຕັນຈຶ່ງປະກາດວ່າ ຮອນນີແມນເປັນຄົນຂາຍຊາດ ເປັນຄົນບໍ່ຈິງໃຈຮັບໃຊ້ປະເທດຕົນ ວໍຊິງຕັນຈະໃຫ້ຣາງວັນແກ່ຜູ້ທີ່ຈັບຄົນຂາຍຊາດຜູ້ນັ້ນໄດ.

ອະເມຣິກັນທັງຫຼາຍ ໄດ້ຮັບຊາບວ່າ ຕ້ອງຈັບຄົນຜູ້ນັ້ນ

ໃຫ້ໄດ້ທັງເປັນ ດ້ວຍວ່າ ທ່ານວໍຊິງຕັນ ຈະຕ້ອງເອົາມັນມາ
ແຂວນຄໍໃຫ້ຄົນເຫັນ.

ເມື່ອເປັນເຊັ່ນນັ້ນແລ້ວ ທ່ານຣອນນິແມນ ກໍທຳເປັນຜູ້ສນິດສນົມນຳນາຍພົນໂຈແຣນຣານ ໄດ້ດີຢູ່ທີ່ແຕຣນຕັນ ແລະສາມາດຮູ້ແຜນທີ່ອັງກິດທາງໄວ້ຢູ່ທີ່ແຕຣນຕັນໄດ້ຢ່າງຖືກຖ້ວນ ຕໍ່ມາຈຶ່ງປ່ອຍຕົວໃຫ້ຝ່າຍອະເມຣິກັນຈັບກຸມຕົວ ວໍຊິງຕັນ ຈຶ່ງກັກເອົາຣອນນິແມນຜູ້ຂາຍຊາດມາສອບຖາມ ສອງຕໍ່ສອງ ໃນເຄິ່ງຊົ່ວໂມງເທົ່ານັ້ນ ທ່ານຣອນນິແມນກໍລາຍງານໃຫ້ທ່ານວໍຊິງຕັນຮູ້ທຸກຢ່າງທີ່ຕ້ອງການກ່ຽວກັບແຕຣນຕັນ ເສັດແລ້ວວໍຊິງຕັນຈຶ່ງໄຂປະຕູສົ່ງໃຫ້ທະຫານເອົາຕົວຂອງຣອນນິແມນໄປແຂວນໃນມື້ອື່ນເຊົ້າ.

ເມື່ອຄ່ຳມາ ໄຟຊຸປໂລກເກີດໄໝ້ຂຶ້ນ ແລະພວກຍາມຈຶ່ງຟ້າວພາກັນປຸ່ມໄປມອດໄຟ ບໍ່ໃຫ້ລາວໄປອີກ ແຕ່ພໍເມື່ອໄຟມອດແລ້ວ ມາຊອກຫາຣອນນິແມນບໍ່ເຫັນ ວໍຊິງຕັນໄດ້ຊ່ວຍໃຫ້ມັນໂຕນພາຍເອງ ເຫດນັ້ນ ຈຶ່ງບໍ່ມີໃຜຮູ້ແນ່ວ່າ ຍອນອັນໃດແທ້ ແລ້ວທ່ານນາຍພົນກໍເກີດໂມໂຫຮາຍ ໃຫ້ພວກທີ່ເລີ່ນເລີ່ປະໃຫ້ຣອນນິແມນລັກໜີໄດ້ ວັນຕໍ່ມາຣອນນິແມນຈຶ່ງໄປຮອດແຕຣນຕັນ ແລ້ວໄປເລົ່າເລື່ອງວ່າຕົນເຮັດແນວໃດຈຶ່ງສາມາດໂຕນພາຍມາໄດ້ ທ່ານຮູ້ນຖາມເຖິງກຳລັງຂອງຝ່າຍອະເມຣິກັນມີພຽງໃດ ຣອນນິແມນໄດ້ບອກວ່າ ກອງທັບອະເມຣິກັນ ອ່ອນແຮງເຕັມທີ ຢ່ອນເຂົ້າເສັ້ງຊັຍມາຫຼາຍແລະບໍ່ມີສະບຽງອາຫານພຽງພໍ.

ສ່ວນຮ້ານເອງທີ່ບໍ່ເຄີຍຄຶດວ່າ ກອງທັບອະເມຣິກັນແຂງແຮງດີນັ້ນ ກໍຮູ້ສຶກສະບາຍໃຈ ແລະຊຸມນ່ວນຊື່ນກິນແລງກັນຢ່າງ

ທ່ານຂອງລາວ ທີ່ຮູ້ວ່ານັກສືບຂອງຕົນໄປທຳງານຢ່າງໄດ້ຜົນຈິງ ສັດຕູທົ່ງນຳກົນອຸບາຍຂອງຕົນແລ້ວກໍ່ຮູ້ສຶກຫວ່າງໃຈໄປເມື່ອຮູ້ວ່າ ທ່ານຮູ້ວິທີຮັບຕອນນັກສືບຂອງຕົນຜູ້ນຶ່ງເປັນພິເສດດີແລ້ວ ທ່ານຄລາກ ຈຶ່ງຂຽນໄປຂ່າວວໍຊິງຕັນວ່າ "ບັດນີ້ທ່ານຈະໄດ້ຕົວຈິງໃສ່ອິດພຸນແລ້ວ".

ພໍເມື່ອຮົບເລື້ອງກັນໄດ້ກຳນົດສາມປີ ວໍຊິງຕັນກໍ່ສາມາດຈັດພວກນັກສືບຂຶ້ນໄດ້ສາມສາຍ ຕ່າງກັນຢູ່ໃນກອງທັບຂອງພວກອັງກິດຂອງຢູ່ທີ່ນິວຢອກ ນັກສືບຜູ້ນຶ່ງສຳຄັນທີ່ສຸດ ກໍ່ແມ່ນຜູ້ເຈົ້າຂອງໜັງສືພິມຂອງຝ່າຍອັງກິດຂອງ.

ພວກນັກສືບຢູ່ນິວຢອກ ເປັນພວກສຳຄັນຫຼາຍ ທີ່ເອົາໃຈຄວາມພິຈາລະນາ ບໍ່ໃຫ້ກອງທັບອະເມຣິກັນເສັຽຊັຍ ໃນປີ ໑໗໘໐ ພວກນັກສືບຂອງວໍຊິງຕັນໝູ່ນຶ່ງໄດ້ຮູ້ແຜນການຂອງສັດຕູ ທີ່ກຽມຈະໂຈມຕີຝ່າຍຝຣັ່ງ ຢູ່ທີ່ໂຣດອາຍແລນ ທາງທິດຕາເວັນອອກສ່ຽງເໜືອ ເມື່ອຊາບແລ້ວ ວໍຊິງຕັນຈຶ່ງຮີບຈັດການດ່ວນ ລາວປ່ອຍໃຫ້ສັດຕູຍາດເອົາແຜນໄວ້ ແຕ່ແມ່ນແຜນປອມວ່າລາວຈະນຳທະຫານເຂົ້າໄປນິວຢອກ ຝ່າຍອັງກິດຈຶ່ງຕັດສິນບໍ່ເດີນທາງຕໍ່ໄປຫານິວຢອກ.

ວໍຊິງຕັນ ຍັງສາມາດຮູ້ໄດ້ຢ່າງວ່ອງໄວ ໃນແຜນທີ່ເອົາວາງໄວ້ເພື່ອລົ້ມລາວແລ້ວຈະເປັນນາຍຜູ້ບັນຊາການແທນ ໃນປີ ໑໗໗໗ ວໍຊິງຕັນຮົບພວກອັງກິດ ເພື່ອຕີເອົາຟີລາແດນເຟັຽ ຊຶ່ງເປັນເມືອງສູນກາງຫຼືວ່າເມືອງຫຼວງຂອງຣັຖບານອະເມຣິກັນ ລາວຈຶ່ງໄດ້ສົ່ງທະຫານດີ ໓,໐໐໐ ຄົນ ເພື່ອໄປຊ່ວຍນາຍພົນ

ເກດ ຢູ່ສນາມຣົບຕໍ່ສູ້ພວກອັງກິດທີ່ຊາຣາໂຕກາ.

ເວລານັ້ນທ່ານວໍຊິງຕັນເສັຽຊັຍໃນການປ້ອງກັນເມືອງຟີລາແດນເຟັຽ ໄວ້ໃນເວລາດຽວກັນ ທ່ານເກດໄດ້ຊັຍຊນະຢູ່ທີ່ຊາຣາໂຕກາ ເມື່ອເຫັນວ່າ ວໍຊິງຕັນ ເສັຽຊັຍໃນຍາມນັ້ນ ທ່ານເກດກໍ່ຕັ້ງຕົ້ນຫາທາງຢ່າງລັບໆ ເພື່ອຍາດແຍ່ງເອົາໜ້າທີ່ຂອງວໍຊິງຕັນ ມັນມີພວກອັງກິດໃໝ່ກຸ່ມນຶ່ງຊຶ່ງຄຽດແຄ້ນ ຢູ່ໃນສະພາ ແລະບໍ່ພໍໃຈໃຫ້ວໍຊິງຕັນ ເປັນຜູ້ບັນຊາການແຕ່ຕົ້ນພຸ້ນມາຄອຍຊ່ວຍແຜນຂອງທ່ານເກດ ເພື່ອລົ້ມທ່ານວໍຊິງຕັນ.

ທ່ານເກດບໍ່ສົ່ງຂ່າວດີມີຊັຍ ໄປໃຫ້ວໍຊິງຕັນຊາບນຳເລີຍ ວໍຊິງຕັນສືບຊາບໄດ້ນຳນາຍທະຫານຂອງລາວເອງຜູ້ນຶ່ງ ຊຶ່ງລັດທາງຄືນສົ່ງໜັງສືຜູ້ນຶ່ງນຳຂ່າວໄປສົ່ງສະພາແລ້ວກໍ່ນຳເອົາ ຈົດໝາຍນັ້ນໄປໃຫ້ນາຍພົນເບິ່ງ ລາວຮູ້ຢູ່ກ່ອນແລ້ວວ່າ ທ່ານເກດຊ່ອນທາງຈະແຍ່ງໜ້າທີ່ການຂອງຕົນ ເມື່ອໄດ້ໂອກາດ ເຫັນວ່າພວກອັງກິດເຂົ້າລ້ອມເມືອງຊາຣາໂຕກາແລ້ວ ລາວຈຶ່ງເອົາຈົດໝາຍນັ້ນໃຫ້ນາຍທະຫານຂອງລາວອ່ານ ປະກາດແຮງໆໃຫ້ໄດ້ຍິນທົ່ວກັນ ພໍດີອ່ານຈົບທຸກຄົນກໍ່ພາກັນຈ້ອງມອງໄປເບິ່ງໜ້າວໍຊິງຕັນ ມີທ່ານນາຍພົນຜູ້ນຶ່ງຊື່ທ່ານພິກເກີຣິງ ມັກເລົ່ານິທານຢູ່ເລື້ອຍ ລາວຈຳໄດ້ຢູ່ວ່າ ເວລານັ້ນລາວສັງເກດວ່າ ວໍຊິງຕັນບໍ່ເຫັນສະທົກ ສະເທືອນຫຍັງ ແລະມີໜ້າຕາເບີກບານຢູ່ຢ່າງເດີມ ທ່ານພິກເກີຣິງຜູ້ບໍ່ເຄີຍຄິດວ່າ ວໍຊິງຕັນເປັນນາຍພົນຜູ້ຍິ່ງໃຫຍ່ ນັບແຕ່ບັດນັ້ນມາ ກໍ່ເກີດຄວາມເຊື່ອຖືຂຶ້ນທັນທີ ທ່ານວໍຊິງຕັນໄດ້ສະແດງໃຫ້ລາວເຫັນວ່າຄົນຕ້ອງມີກຽດໄດ້ເຊັ່ນນັ້ນ ແລ້ວ

ທ່ານພິກເກີຣິງຈຶ່ງເວົ້າວ່າ "ຄົນຜູ້ນີ້ບໍ່ທະເຍີທະຍານໃນເຣື່ອງສ່ວນຕົວ ແຕ່ສຳລັບປະເທດຊາດແລ້ວ ລາວເປັນໄດ້ທຸກຢ່າງ".

ທ່ານວໍຊິງຕັນ ສັງເກດໄດ້ວ່າ ທ່ານເກດພ້ອມໝູ່ພວກຂອງລາວຫ້າງຫາ ທາງຈະທຳລາຍລາວ ນັ້ນກໍເຊັ່ນດຽວກັນອີກ ເຮົາຈະຮູ້ໄດ້ວ່າວໍຊິງຕັນມີການປ່ຽນແປງຫຼາຍໃນປີຕໍ່ໆມາ ແທນທີ່ຈະໄປຮອງກ່າວຜິດຖຽງກັນ ລາວບໍ່ເວົ້າແລະບໍ່ເຮັດຫຍັງໝົດ ມີແຕ່ຖ້າເບິ່ງສິ່ງໃດສິ່ງນຶ່ງຊຶ່ງເຂົາຈະເຮັດຜິດ.

ບັດນີ້ທາງສະພາກໍຕັດສິນ ບໍ່ໃຫ້ວໍຊິງຕັນໃຊ້ຄົນເກີນກວ່າ ໑,໔໐໐ ຄົນທີ່ຢູ່ໃນກອງທັບທ່ານເກດ ມີອະເມຣິກັນຜູ້ນຶ່ງ ຊື່ວ່າ ບົງຊາແມງຣາດ ທີ່ຄາຍກັບວ່າເປັນເພື່ອນຂອງວໍຊິງຕັນ ໄດ້ຂຽນຂ່າວຈົດໝາຍຢ່າຍອອກ ຂໍໃຫ້ຫາຜູ້ໃໝ່ແທນວໍຊິງຕັນ ຈົດໝາຍນັ້ນບໍ່ມີລາຍເຊັນຊື່ ທ່ານເກດກໍເວົ້າຕໍ່ນາຍພົນອື່ນໆຕໍ່ໄປຢ່າງລັບໆວ່າກອງທັບບໍ່ດີໃຈນຳວໍຊິງຕັນແລະເວົ້າວ່າຈະເປັນພັຍອັນນຶ່ງແກ່ຄວາມຫວັງ ນຳຊັຍຊະນະຂອງພວກເຂົາ ບໍ່ນານ ຈຳພວກຄົນກໍບໍ່ມັກວໍຊິງຕັນ ຣ່ວມເຂົ້າໄປນັ້ນມີທັງນາຍທະຫານຜູ້ສຳຄັນຜູ້ນຶ່ງຊື່ວ່າໂທມາສກົງແວ ທ່ານກົງແວນັ້ນເປັນຄົນແບບສົບສໍ່ມັກເວົ້າແຕ່ແນວຄົນສົບຟັງ ລາວຂຽນຈົດໝາຍຫຼາຍສະບັບ ໄປຫາທ່ານເກດກ່າວວ່າກອງທັບອະເມຣິກັນບໍ່ດີປານໃດ ແລະລາວເອງຮູ້ສຶກເສັຍໃຈຍອມວ່າມີທ່ານເກດແຕ່ຜູ້ດຽວ.

ແຕ່ເມື່ອກ່າວເຖິງເຣື່ອງແຜນການຂອງເຂົາແລ້ວ ມັນບໍ່ເປັນຜົນດີແກ່ເຂົາປານໃດ ຈົດໝາຍສົນເທຂອງທ່ານຣາສການນຶ່ງ ໄດ້ໄປຮອດມືຂອງທ່ານປາຕຣິກແຮນຣີ ຊຶ່ງເປັນຜູ້ປົກຄອງ

ເມືອງເວີຊີເນັຽໃນຍາມນັ້ນ ແລະຜູ້ຈັດສົ່ງຈົດໝາຍນັ້ນຕໍ່ໄປໃຫ້ວໍຊິງຕັນ ທ່ານແຮນຣີໄດ້ຂຽນບອກໄປວ່າ "ຂ້າພະເຈົ້າເສັຽໃຈທີ່ວ່າຕ້ອງມີຄົນຜູ້ນຶ່ງ ອັນມັນເອງວ່າ ມັນເປັນເພື່ອນຂອງຂ້າພະເຈົ້າ ແລະບໍ່ແມ່ນເພື່ອນຂອງທ່ານ". ເວລາທ່ານເກດລົມນຳລາວວ່າ ຢາກເລີກການບັງຄັບບັນຊາຂອງວໍຊິງຕັນ ໄປມອບໃຫ້ນາຍພົນ ດານຽນມໍກັນ ທ່ານ ປາຕຣິກແຮນຣີ ກໍຕອບໄປທັນທີທ່ານ ແຮນຣີ ເວົ້າວ່າ ຢາກຂໍຮ້ອງແຕ່ຢ່າງດຽວ ຄືບໍ່ໃຫ້ກາວເຣື່ອງຈະຫາຄົນມາເປັນຜູ້ບັງຄັບບັນຊາແທນທ່ານວໍຊິງຕັນອີກຈັກເທື່ອ ລາວກ່າວວ່າ "ຂ້າພະເຈົ້າຈະບໍ່ຍອມຮັບໃຊ້ບັງຄັບບັນຊາຂອງຄົນອື່ນໄດນອກຈາກວໍຊິງຕັນ".

ພັກພວກຂອງທ່ານເກດຈຶ່ງສັງເກດໄດ້ວ່າ ເຂົາບໍ່ທັນມີຄວາມເຂັ້ມແຂງພຽງພໍຢູ່ໃນສະພາ ເພື່ອຈະເອົາຜູ້ໃໝ່ມາແທນປ່ຽນບ່ອນວໍຊິງຕັນ ໃນຍາມນັ້ນ ທ່ານເກດ ຈຶ່ງເອົາຈົດໝາຍຂອງທ່ານກົງແວມາໃຊ້ເພື່ອພົນປໂຍດຂອງລາວ ໂດຍການສົ່ງຕໍ່ໃຫ້ພັກພວກຂອງຕົນອ່ານຢ່າງສະບາຍໆ ລາວກະວ່າບໍ່ຈຳເປັນຈະເພີ່ມເຕີມເນື້ອຄວາມໃດໆອີກ ກໍຄົງຈະເປັນທີ່ເຂົ້າໃຈໄດ້ເຂົາເຮັດເຖິງປານນັ້ນ ວໍຊິງຕັນ ກໍຍັງເສີຍຢູ່ ບໍ່ເຮັດຫຽັງແກ່ເຂົາ.

ຕໍ່ມາວັນເວລາທີ່ຄອຍຖ້າຢູ່ນັ້ນກໍມາເຖິງ ມີນາຍທະຫານຜູ້ນຶ່ງຂອງທ່ານເກດ ຊື່ວ່າ ເຈັມ ວິລກິນຊັນ ຖືກເຊີນໄປກິນແລງນຳນາຍພົນຫຼອດສະເຕີລິງ ຊຶ່ງເປັນເພື່ອນຮັກແພງ ຂອງວໍຊິງຕັນ ເມື່ອທ່ານວິລ ກິນຊັນ ເມົາແດແລວ ກໍກ່າວຫຼາຍສິ່ງ

ຫຼາຍແນວ ເໝືອນເນື້ອຄວາມທີ່ມີໃນຈົດໝາຍຂອງທ່ານກົງແວ ທ່ານສະເຕີລິງ ຈຶ່ງຟ້າວຈົດຈຳເອົາຂໍ້ຄວາມທັງມວນແລ້ວກໍຝາກໄປໃຫ້ວໍຊິງຕັນຮູ້ ຊາບແລ້ວ ວໍຊິງຕັນຈຶ່ງກັ່ນເອົາເນື້ອຄວາມສັ້ນໆໄປຫາທ່ານກົງແວ ໂດຍຄັດເອົາເນື້ອຄວາມບາງຕອນຂອງນາຍພົນກົງແວທີ່ຂຽນໄປຫາທ່ານເກດ ທ່ານກົງແວກໍຮູ້ສຶກຕົວວ່າຕາມຈົດໝາຍທີ່ຕົນອ່ານຢູ່ນັ້ນ ທ່ານວໍຊິງຕັນຄົງຮູ້ເຖິງແຜນການທຸກຢ່າງທີ່ພວກຕົນຄິດຈະໂຄ່ນລົ້ມເຂົາ.

ຈົດໝາຍສັ້ນໆຂອງວໍຊິງຕັນທີ່ສົ່ງໄປນັ້ນ ເປັນຄ້າຍໆກັບວ່າ ນ້ຳໜັກອັນໜັກໄປທັບເຕັງພວກຄົນທີ່ຊອກທາງຕໍ່ຕ້ານລາວ ທ່ານກົງແວຣ້ອນໃຈ ຈຶ່ງໄປຫາວໍຊິງຕັນ ເພື່ອແກ້ຜິດວ່າຕົນບໍ່ໄດ້ຂຽນຈົດໝາຍນັ້ນ ໄປຫາທ່ານເກດເລີຍ ສ່ວນທ່ານເກດເອງກໍຊາບຂ່າວວ່າ ວໍຊິງຕັນ ໄດ້ສືບຊາບ ແລະຮູ້ເຣື່ອງຕ່າງໆທີ່ເກີດຂຶ້ນ ກໍເກີດມີຄວາມຢ້ານກົວ ແລະຜົນທີ່ສຸດຈຶ່ງຂຽນໄປອະທິບາຍຕົ້ນເຣື່ອງທັງໝົດຂອງຈົດໝາຍທີ່ຕົນຂຽນຫາທ່ານກົງແວ.

ທ່ານວໍຊິງຕັນຈຶ່ງຂຽນຕອບທ່ານເກດໂດຍກ່າວວ່າ ລາວເອງບໍ່ຊາບວ່າເກດແລະກົງແວຮູ້ຈັກກັນ ຫຼື ບໍ່ຮູ້ວ່າ ເຂົາເຈົ້າຫາກໄດ້ຂຽນຈົດໝາຍລັບຫາກັນ ຍິ່ງໄປກວ່ານັ້ນ ວໍຊິງຕັນກ່າວຕໍ່ໄປວ່າ ລາວບໍ່ຄິດວ່າຈົດໝາຍເຫຼົ່ານັ້ນໝາຍຈະກ່າວເຣື່ອງກ່ຽວກັບຕົນ ວໍຊິງຕັນເວົ້າຕື່ມໄປວ່າ ໃນເບື້ອງຕົ້ນລາວເຊື່ອວ່າ ທ່ານເກດ ຢາກຂ່າວໃຫ້ຮູ້ວ່າລາວຖືກຢູ່ໃນອັນຕະຣາຍຂອງ "ສັດຕູລຶກລັບ" ວໍຊິງຕັນຈຶ່ງຮູ້ພາຍຫຼັງວ່າ ເຣື່ອງທີ່ຕົນເຊື່ອນັ້ນຜິດຈາກຄວາມຈິງໄປ.

ວໍຊິງຕັນຈຶ່ງຂຽນໄປລາຍງານເຣື່ອງທຸກຢ່າງ ໃຫ້ສະພາ ຊາບຕາມສົມຄວນ ແລວກໍຄອຍເບິ່ງທ່ານເກດ ທ່ານກີງແວແລະ ພັກພວກຂອງເຂົາທີ່ຈະຫຼອກລວງກັນຕໍ່ໄປ ຜູ້ໃດກໍຕັ້ງຕົ້ງປະຈານ ອອກວ່າ ແຕ່ຜູ້ອື່ນພູມເປັນຄົນທີ່ເວົ້າຄວາມບໍ່ຈິງ ທ່ານເກດແລະ ທ່ານວິລກິນຊັນ ກໍພອມແລວທີ່ຈະໂດນກັນ ແຕ່ຄາວນຶ່ງທ່ານເກດ ຈຶ່ງກ່າວສະແດງຄວາມເສັຽໃຈເປັນອັນມາກ ໃນສິ່ງທີ່ຕົນໄດທຳ ໄປນັ້ນ ໃຫ້ທ່ານວິລກິນຊັນຊາບ.

ທ່ານກີງແວກັບຄືນເມືອປະເທດຝຣັ່ງ ແຕ່ວ່າສຳລັບທ່ານ ເກດແລ້ວຍັງດັນເວົ້າຄວາມບໍ່ດີໃຫ້ວໍຊິງຕັນຕໍ່ໄປ ຈົນເຖິງສອງປີ ລາວລົງໄປທາງແຖວໃຕ ເພື່ອໄປປ້ອງກັນ ຣັດກາໂຣລາຍນາ ເໜືອແລະໃຕ ໄວ້ຈາກພວກອັງກິດ ເປັນກອງທັບທີ່ແຂງແຮງ ແລະນຳໜ້າໂດຍທ່ານ ຫຼອດ ຄອນວາລລິດ ທ່ານເກດກັບກອງ ທັບ ທີ່ມີຄົນບໍ່ເຄີຍເຫັນສນາມຣົບມາກ່ອນ໌ ຖືກສັ່ງໃຫ້ໄປຕໍ່ຕ້ານ ພວກຂອງ ຄອນວາລລິດຢູ່ທີ່ຄາມແດນ ພາກເໜືອຂອງກາໂຣ ລາຍນາ ໃນເວລາປະມານນຶ່ງຊົ່ວໂມງ ລາວກໍເສັຽກອງທັບ ແລະຊື່ສຽງ ທີ່ວ່າເປັນນາຍພົນຜູ້ສາມາດນັ້ນ ກໍເສັຽໄປໝົດ ຊອກມາຕົວທີ່ແລ່ນໄວທີ່ສຸດ ໄດແລວກໍຟ້າວເປີດໂດຍບໍ່ຢຸດບໍ່ເຊົາ ຈົນໄປຮອດ ໑໖໐ ໄມໄກຈາກແນວໜ້າ ພວກອະເມຣິກັນທັງ ຫຼາຍ ກໍຫົວຂວັນ ແລະຂໍໃຫ້ເອົາລາວອອກຈາກກອງທັບ ແຕ່ວ່າ ວໍຊິງຕັນ ບໍ່ເຄີຍກ່າວຄຳດຽວ ໃສ່ຜູ້ທີ່ເປັນສັດຕູຂອງຕົນທີ່ກຳລັງ ລົ້ມ ເປັນເວລາເຖິງສອງປີ ກ່ອນທີ່ວ່າ ສະພາຈະຄອຍຕັດສິນ ເຣື່ອງຂອງທ່ານເກດ ຕໍ່ມາແລວວໍຊິງຕັນຈຶ່ງສເນີເອົາທ່ານເກດ

ໃຫ້ເປັນຜູ້ບັງຄັບແຕ່ສ່ວນນ້ອຍຂອງກອງທັບອະເມຣິກັນ ລາວກໍຮັບເອົາຕາມຄຳສເນີແລ້ວກໍຮັບໃຊ້ດ້ວຍດີຕລອດໄປຈົນເສິກສງົບລົງ.

ເຮົາພໍຈະສັງເກດໄດ້ດີວ່າ ທ່ານວໍຊິງຕັນໄດ້ຕໍ່ສູ້ກັບສັດຕູທີ່ຢູ່ໃນບ້ານໃນເຮືອນຕົນເອງ ແລະໃນເວລາດຽວກັນກໍຕ້ອງຮັກສາໃຫ້ເປັນຮູບກອງທັບໄວ້ ໂດຍຮິບໂຮມເອົາສິ່ງທີ່ແຕກກະແຈກກະຈາຍໄປທົ່ວໃນຍາມໜາວຊ້ຳອີກ ເພື່ອຈະໃຫ້ເປັນໄປຕາມຄວາມຄິດຈິດໃຈອັນດີດັ່ງຄາດໝາຍໄວ້ ໃນຍາມສະຖານະການເປັນເຊັ່ນນັ້ນ ມັນບໍ່ແມ່ນຂອງງ່າຍເລີຍ ໃນເວລາດຽວກັນນັ້ນເປັນຍາມທີ່ລຳບາກດ້ວຍວ່າ ວໍຊິງຕັນໄດ້ສະແດງຄວາມດີຍິ່ງຕໍ່ເພື່ອນຮັກຂອງລາວເອງ ທ່ານບຣາຍແອນ ແຟ້ກ ໃນຍາມນັ້ນທ່ານບຣາຍແອນໄດ້ກາຍເປັນຝ່າຍນິຍົມອັງກິດແລ້ວ ແຕ່ສະຖານກໍຕາມ ວໍຊິງຕັນກໍຢາກເຫັນເພື່ອນເກົ່າຂອງຕົນ.

ກັນດານຫຼາຍທີ່ວໍຊິງຕັນໄປພົບກັບບຣາຍແອນ ທ່ານເກດກັບພັກພວກຂອງລາວ ຈຶ່ງຕັ້ງຄຳຖາມຫາເຫດຜົນອັນໃດວໍຊິງຕັນຈຶ່ງໄປພົບຄົນທີ່ເຂົ້າຂ້າງຂອງອັງກິດ ແຕ່ວ່າວໍຊິງຕັນເປັນຄົນໃຈກາແລະຈັດການຮັບຕ້ອນທ່ານບຣາຍແອນດ້ວຍມິດພາບອັນແທ້ຈິງດັ່ງທີ່ເຄີຍມີຕໍ່ກັນ ຄາວບ້ານເມືອງບໍ່ຜຸດຂອງຕອງຖຽງກັນທີ່ເມົາເວີນົງພຸນ ລາວຍັງໄດ້ຊ່ວຍເຫຼືອໃຫ້ທ່ານບຣາຍແອນກັບຜ່ານຄືນໄປສູ່ນິວຢອກດ້ວຍຄວາມປອດພັຍ ຍາມເມື່ອໄປຮອດນິວຢອກທ່ານ ບຣາຍແອນ ແຟ້ກ ຮູ້ສຶກເສັຽໃຈນຳທ່າທີ ທີ່ພວກອັງກິດສະແດງອອກວ່າ ໄດ້ຂຽນໄປຂອບໃຈວໍຊິງຕັນ ທີ່ມາພົບພໍ້ລາວເວົ້າວ່າເຖິງແມ່ນພວກເຂົາເຈົ້າບໍ່ຖືນະໂຍບາຍການເມືອງຄືກັນ

ກໍຕາມ ວໍຊິງຕັນກໍຍັງເປັນຜູ້ດີແກ່ລາວຢູ່ສເມີ ແລະຖືວ່າສິ່ງນີ້ມີຄຸນຄ່າມາກກວ່າທຸກສິ່ງທຸກຢ່າງທີ່ລາວເຄີຍໄດ້ຮັບມາ.

## ລ. ຂັ້ນຊັຍຊະນະ

ໃນຖານະເປັນຄົນໜຸ່ມຜູ້ນຶ່ງ ຢູ່ແຕ່ໃນບ້ານໃນເມືອງຕົນຂອງ ວໍຊິງຕັນ ບໍ່ລ້ງບໍ່ເຄີຍພົບຄົນທີ່ມາແຕ່ປະເທດອື່ນປານໃດ ສມັຍກ່ອນເສິກສົງຄາມ ລາວເຄີຍຄິດສເມີວ່າ ຄົນທີ່ປາກພາສາຕ່າງປະເທດນັ້ນ ເປັນຄົນທີ່ບໍ່ມີການສຶກສາດີ ຄືພວກອື່ນ ບັດນີ້ ລາວໄດ້ປ່ຽນຄວາມຄິດເກົ່ານັ້ນແລ້ວ ທ່ານວໍຊິງຕັນຍິນດີຮັບເອົາທຸກຄົນເຂົ້າໃນກອງທັບຂອງລາວ ແລະສາມາດເຮັດໃຫ້ຄົນເຊື່ອຖືແລະຮັກແພງລາວໄດ້ພ້ອມໆກັນ.

ອີກປະການນຶ່ງ ຜູ້ໃດຈະຖືສາສນາໃດລາວກໍບໍ່ໄດ້ບັງຄັບ ບັນຊາຂອງວໍຊິງຕັນ ແຕ່ຈາກຫຼາຍບ່ອນ ແລະຈາກຫຼາຍສາສນາ ມາຢູ່ພາຍໃຕ້ບັງຄັບບັນຊາຂອງວໍຊິງຕັນ ແຕ່ຫາກບໍ່ມີຄວາມຫຍຸ້ງຍາກປະການໃດ ລາວຮູ້ຄົນຂອງລາວດີ ແລະຫຼັກສຳຄັນຂອງລາວ ກໍມີຢູ່ວ່າຈະຕ້ອງຮັກສາກອງທັບ ໃຫ້ເປັນກອງທັບຢູ່ນຳກັນໄດ້ ເພື່ອໄວ້ຕີເສິກໃຫ້ຊນະ.

ສົງຄາມບໍ່ພຽງແຕ່ຈະປ່ຽນຄວາມນຶກຄິດບາງຢ່າງ ຂອງວໍຊິງຕັນເທົ່ານັ້ນ ແຕ່ມັນໄດ້ພາລາວພາກຈາກໄກໝູ່ເພື່ອນແລະຊີວິດແຕ່ປາງນ້ອນຈົນຍາມລາວຢູ່ເວີຊີເນັຍກ່ອນ ເກີດສົງຄາມພຸ້ນ ລາວໄດ້ພົບພໍ້ທ່ານ ບຣາຍແອນ ແຟຟັກ ແຕ່ກໍບໍ່ແມ່ນແຕ່ຜູ້ດຽວເທົ່ານັ້ນ ອັນທີ່ວໍຊິງຕັນເຄີຍລົ້ງເຄີຍຮັກແຕ່ປາງກ່ອນພຸ້ນ ໃນປີທີ່ມີເສິກສົງຄາມ ຈະລຳບາກພຽງໃດກໍຕາມ ນາງມາກຕາ ວໍຊິງຕັນກໍຕ້ອງໄປຫາຜົວ ທຸກໆລະດູໜາວ ເພື່ອບັນເທົາຈິດໃຈໃຫ້ໜັກເປັນເບົາ ນາງມາກຕາທີ່ຜົວຄິດວ່າເຄີຍເປັນຄົນງຽບມັກຢູ່ແຕ່ໂດດດຽວນັ້ນ ໄດ້ປ່ຽນເປັນຜູ້ໃຫມ່ໝົດໃນຍາມຍາກເກີດຂຶ້ນ ລາວເດີນທາງໃນລະຍະໄກກວ່າ ໗໐໐ ໄມ ຂ້າມແມ່ນ້ຳ ນ້ຳກ້ອນແລະຖນົນອັນກັນດານ ເພື່ອໄປຢູ່ໃກ້ງຜົວ ຕາມຈິງແລ້ວ ກໍເຫັນວ່າ ເປັນຄວາມຈຳເປັນແທ້ ໃນຍາມໜາວປີ ໑໗໗໗ ລາວໄປຮອດພໍດີຍາມຜົວປ່ວຍ ລາວໄດ້ໄປປິ່ນປົວ ຈຶ່ງຫາຍປ່ວຍ ແຕ່ກ່ອນເມື່ອລາວໄປຮອດຫຼາຍອາທິດ ລາວຄິດວ່າ ຈະບໍ່ລອດ ລາວຈຶ່ງແຕ່ງຕັ້ງໃຫ້ທ່ານນາຕາແນນກຣີນ ໃຫ້ເປັນຜູ້ເອົາການບັງຄັບແທນ.

ສິ່ງທີ່ກັນດານແກ່ນາງມາກຕາ ບໍ່ແມ່ນມີແຕ່ຄວາມເຈັບປ່ວຍຂອງຜົວລາວ ແລະຖນົນຫົນທາງບໍ່ສະດວກເທົ່ານັ້ນ ທ່ານວໍຊິງຕັນ ຍັງມີພວກທະຫານຄະນະນຶ່ງ ມາຄອຍຮັກສາປ້ອງກັນເປັນ "ພວກອາຣັກຂາຊີວິດ" ໃຫ້ທ່ານຄົນພວກນີ້ໄດ້ປະຕິຍານວ່າຈະປົກປັກຮັກສາທ່ານຜູ້ບັນຊາການສູງສຸດນີ້ ດ້ວຍເລືອດເນື້ອຊີວິດຂອງເຂົາ ຖ້າເຖິງຂັ້ນຈຳເປັນ ຄວາມລະແວງລະວັງຂອງ

ຝ່າຍອະເມຣິກັນຢ່າງນຶ່ງ ກໍແມ່ນຢ້ານວ່າພວກອັງກິດຈະມາລອບ
ລັກພາຕົວທ່ານວໍຊິງຕັນໄປ ເມື່ອໃດທາງກໍມີຂ່າວວ່າ ວໍຊິງຕັນ
ອາດຈະຖືກຈັບກຸມນັ້ນ ພວກອາຣັກຂາກໍຟ້າວຈັດກຸ່ມລັດໄວທັງທາ
ຊ່ອງ ພ້ອມກຽມຕັ້ງປືນຕາມປ່ອງຢ້ຽມທຸກປ່ອງ ຢູ່ພາຍໃນເຮືອນ
ຂອງວໍຊິງຕັນ ຍາມກາງຄືນຫຼາຍໆຄືນ ດວຍອາກາດໜາວອັນຈົ້ວ
ຈັດ ນາງມາກຕານອນສນິດມິດຊິດຢູ່ໃນຕຽງ ຊຶ່ງຢູ່ນອກຫອງ
ແລວມີແຕ່ພວກທະຫານຢືນຍາມຈັບປືນຈໍ່ຢູ່ນຳແຖວປ່ອງຢ້ຽມຂອງ
ລາວ ຊີວິດໃນກອງທັບນີ້ ເມື່ອຄິດແລວກໍບໍ່ແມ່ນວ່າ ຫຽງ
ຍາກຢູ່ເລື້ອຍດອກ ພວກນາຍທະຫານ ກໍມີຫຼາຍຜູ້ຫຼາຍຄົນເອົາ
ເມັຽໄປຢູ່ນຳ ຜູ້ຍິງພວກນັ້ນຈຶ່ງຊູກຊ່ອນອ່ວນກັນ ຈັດໃຫ້ມີຄວາມ
ເບີກບານໃຈອົ້ນແກ່ວໍຊິງຕັນ ແລວລາວກໍ່ຮວມຈັດລາຍການຮື່ນ
ເຮີງອົ້ນ ໃນທົ່ນໃດ ຢູ່ໃນກອງທັບ ສວນນາງມາກຕາ ຊຶ່ງອວນ
ຫຼາຍ ຈຶ່ງມີແຕ່ອອນຊອນເບິ່ງໝູ່ຟ້ອນ ສ່ວນສິດຕຣີອື່ນໆ ກໍແສນ
ດີໃຈທີ່ໄດຟ້ອນແທນມາກຕາ ມີຜູ້ນຶ່ງງາມ ໃນ ສິດຕຣີເຫຼົ່ານັ້ນ
ແມ່ນກາເຕີຣິນ ກຣີນ ເມັຽຂອງນາຍພົຣອງທີ່ສອງຂອງວໍຊິງຕັນ.

ມີເທື່ອນຶ່ງໃນຍາມຣາຕຣີນາງກາເຕີຣິນ ຮູ້ສຶກມີຄວາມ
ສຳຣານບານໃຈຫຼາຍ ຈຶ່ງເລົ່າໃຫ້ພູມພູ້ຟັງວ່າຕົນຟ້ອນງາມປານ
ໃດກໍຟ້ອນໄດ ວໍຊິງຕັນຈຶ່ງຂໍໃຫ້ລອງຟ້ອນນຳລາວເບິ່ງ ເພື່ອ
ເປັນການຢັ້ງຢືນ ທັງສອງກໍພາກັນໄປທີ່ໃຈກາງຫອງແລວກໍຟ້ອນ
ໄປ ຟ້ອນໄດສາມຊົ່ວໂມງພໍດີ ນາງກຣີນ ຊຶ່ງມີອາຍຸອ່ອນກວ່າ
ວໍຊິງຕັນເຄິ່ງນຶ່ງທັງເວົ້າທັງຫົວວ່າຕົນເມື່ອຍຫຼາຍແລວຟ້ອນຕໍ່ໄປ
ບໍ່ໄດດອກ ຍັງມີຫຼາຍເຣື່ອງຢູ່ເປັນຮູບແນວນີ້ ອັນສະແດງໃຫ

ເຮົາຮູ້ວ່າ ວໍຊິງຕັນເປັນຜູ້ມັກມ່ວນແລະພ້ອມໆກັນນັ້ນກໍເປັນນາຍ ແມ່ທັບຜູ້ສາມາດນຳດວຍ. ວໍຊິງຕັນເປັນຜູ້ສຳຄັນຫຼາຍຢູ່ ແຕ່ກໍ ບໍ່ແມ່ນຈະສຳຄັນໂພດໄປຈົນວ່າ ບໍ່ມີເວລາຈະມ່ວນຊື່ນນຳໝູ່ພູ່ມ ດອກ.

ກ່ຽວກັບການເວົ້ານຳສີດຕຣີແລ້ວ ທ່ານ ວໍຊິງຕັນເປັນ ຜູ້ນຶ່ງທີ່ນັບໄດ້ວ່າສົມເປັນສຸພາບບຸຣຸດທີ່ພ້ຽບພ້ອມທຸກປະການ ແຕ່ ກໍມີຫຼາຍເທື່ອທີ່ຕ້ອງພົບພໍ້ກັບສິ່ງບໍ່ເປັນຫນ້າອອນຊອນປານໃດນຳ ພວກຍິງສາວຊາວເວີຊິເນັຽ ແຕ່ຄາວກ່ອນພູ່ນໄດ ເປັນບົດຮຽນ ອັນນຶ່ງໃຫ້ແກ່ລາວ ມີນາຍທະຫານຫນຸ່ມຜູ້ນຶ່ງມາຫາລາວ ເພື່ອຂໍ ລາພັກ ຈັກວັນ ຈັກຄາວ ໄປຢາມຄູ່ຮັກທີ່ໂສກເສົ້າຫຼາຍເພາະ ໄກກັນ ວໍຊິງຕັນຈຶ່ງຍິ້ມຕອບຕາມທີ່ເຄີຍຮູ້ມາແລ້ວເລີຍບອກນາຍ ທະຫານຜູ້ນັ້ນວ່າໃຫ້ລາວໄປບໍ່ໄດ້ ລາວແຖມວ່າ "ຜູ້ຍິງເຂົາບໍ່ພໍ ວ່າຈະຕາຍນຳຂອງແນວນັ້ນດອກ".

ມີເທື່ອໃໝ່ອີກ ວໍຊິງຕັນ ກ່າວໄປເຂົ້າຂ້າງທາງການ ແຕ່ງດອງມີຄູ່ຄອງເປັນຄອບຄົວ ການມີຄູ່ຄອງຫວັງຢູ່ເປັນສຸກນີ້ ວໍຊິງຕັນທຽບໃສ່ກັນກັບຄວາມປ່ວຍໄຂ້ ຊຶ່ງຄົນຜູ້ນຶ່ງຈະຕ້ອງເທື່ອ ນຶ່ງໃນຊີວິດຂອງຕົນ.

ບາງທີກິຣິຍາຂອງຄົນຜູ້ນຶ່ງອາດຈະຮູ້ກັນໄດ້ໃນສິ່ງເລັກໆ ນ້ອຍໆ ທີ່ລາວທຳ ວໍຊິງຕັນນີ້ ເປັນຜູ້ທີ່ເປັນຫ່ວງນຳຄົນຫຼາຍ ລາວຫ່ວງນຳຄວາມເປັນຢູ່ ນຳຄວາມມີອະນາໄມ ແລະຄວາມ ຄິດຈິດໃຈອີກດວຍ ມີແຂກຜູ້ນຶ່ງທີ່ມາຢ້ຽມຢາມເມົາເວີນົ້ງ ໄດ້ ເລົ່າວ່າຕົນເກີດເຈັບປ່ວຍຂຶ້ນຢ່າງກະທັນຫັນ ໃນເວລາທຽວຄົນ

ບໍ່ດົນລາວເລີຍເຫັນເຈົ້າຂອງເມືອງເມົ້າເວີນົງ ຢອຣ໌ຊ ວໍຊິງຕັນ ມາຢືນຢູ່ຂ້າງໆຕຽງຂອງລາວ ເພື່ອຍື່ນຈອກນ້ຳຊາຣ້ອນໆໃຫ້ດື່ມ.

ມື້ໜຶ່ງ ເວລາວໍຊິງຕັນ ເປັນປະທານາທິບໍດີ ຢູ່ນັ້ນ ລາວເດີນທາງມາກໍ່ໄປແລ້ວ ຈຶ່ງສັ່ງຄົນຜູ້ໜຶ່ງ ໄປຂ່າວໃຫ້ຫຼ້າງໜ້າຊາບໄດ້ ກ່ອນວ່າ ທ່ານປະທານາທິບໍດີ ກະວ່າຈະໄປຄ້າງຄືນໃນເຮືອນຂອງພວກນັ້ນ ວໍຊິງຕັນ ຮູ້ກ່ອນແລ້ວວ່າ ເດີນທາງມາກໍໄກຫຼາຍ ແລະຖະໜົນກໍລຳບາກ ຄົນຜູ້ທີ່ໄປຂ່າວໄວ້ກ່ອນນັ້ນຈະຕ້ອງເມື່ອຍຫຼາຍເວລາໄປຮອດ ສະນັ້ນທ່ານປະທານາທິບໍດີສະຫະຣັດຈຶ່ງຂຽນຕ່ອຍໃສ່ລູມຈົດໝາຍຂ່າວນັ້ນວ່າ ຂໍໃຫ້ຊາວບ້ານຫາເຄື່ອງດື່ມສູ່ລາວໃຫ້ພຽງພໍດ້ວຍ.

ຍັງມີບາງຄາວທີ່ວໍຊິງຕັນທຳເປັນຜູ້ດີຫຼາຍບໍ່ໄດ້ ຍາມໃດທີ່ມີອະເມຣິກັນທີ່ເປັນຝ່າຍອັງກິດມາຈັບເອົານາຍທະຫານອະເມຣິກັນ ໄປແຂວນຄໍນັ້ນ ວໍຊິງຕັນໄດ້ຂໍໃຫ້ແຂວນຄໍ ນາຍເຂົານັ້ນເໝືອນກັນ ເມື່ອໃດພວກອັງກິດຫາກບໍ່ສິນຍອມໃນເຣື່ອງນີ້ ວໍຊິງຕັນຈຶ່ງເລືອກເອົານາຍທະຫານໜຸ່ມອັງກິດ ຊຶ່ງຕົນຈັບໄດ້ນັ້ນມາແຂວນຄໍເໝືອນກັນກັບອັງກິດແຂວນຄໍພວກອະເມຣິກັນ.

ມື້ໜຶ່ງ ວໍຊິງຕັນ ຕ້ອງໄດ້ໃຊ້ຄວາມພິຈາຣະນາຢ່າງລະອຽດທີ່ສຸດ ກ່ອນຈະສັ່ງໃຫ້ເຂົາເອົາທ່ານຈອນອັງເດຣ ໄປແຂວນຄໍ ທ່ານຈອນອັງເດຣເປັນຜູ້ກ້າຫານທັງເປັນນາຍທະຫານທີ່ໜ້າຮັກທີ່ຖືກຈັບຍາມລາວກຽມມາຕີເອົາຄ້າຍອະເມຣິກັນຄ້າຍໜຶ່ງ ໃນເຣື່ອງນີ້ທາງຝ່າຍອັງກິດອ້າງວ່າຄົນຜູ້ນີ້ເຂົ້າເຂດໄປໃນ

ຍາມທີ່ໄດ້ມີສົນຍາສງົບເສິກ ລະຫວ່າງອັງກິດ ແລະອະເມຣິກັນ ແລວ ດັ່ງນັ້ນຈຶ່ງບໍ່ຄວນຖືວ່າ ຄົນຜູ້ນັ້ນເປັນນັກສືບ ໃນສະຖານໃດກໍ່ດີ ທ່ານວໍຊິງຕັນ ບໍ່ຮູ້ເຫັນພ້ອມແລະຕອບໄປວ່າ ຄວາມປະພຶດຂອງນາຍອັງເດຣບໍ່ໄດ້ໃຫ້ກັບຄວາມສງົບເລີຍ.

ກິຣິຍາທ່າທີຂອງອັງເດຣ ເປັນທີ່ຈັບອົກຈັບໃຈອະເມຣິກັນທຸກຄົນທີ່ລາວຮູ້ຈັກ ມີຫຼາຍຄົນໄດ້ມາຮ້ອງຂໍໃຫ້ວໍຊິງຕັນໂຍະຍານໃຫ້ອັງເດຣມີອິນທີຊີວິດຕໍ່ໄປ ແຕ່ວໍຊິງຕັນຫາກບໍ່ປ່ຽນຄວາມທີ່ລັ່ນໄປແລ້ວ ມີແຕ່ສເນີທາງດຽວເທົ່ານັ້ນ ຄື: ຈະປ່ອຍອັງເດຣໄດ້ຢູ່ ຖ້າວ່າພວກອັງກິດຫາກຈະປ່ອຍນັກສືບຂອງລາວ ຜູ້ຊື່ວ່າເບເນດິກ ອາກໂນ ຖ້າວ່າພວກອັງກິດຫາກບໍ່ເຫັນພ້ອມຄຳສເນີນີ້ ວໍຊິງຕັນກະໄວ້ແລ້ວວ່າ ຈະເຮັດຫຍັງ ວໍຊິງຕັນ ຮູ້ສຶກມື່ນສົ່ນ ໃນເວລາເຊັ່ນນີ້ ໃສ່ເຈັ້ຽໃຫ້ຄຳສັ່ງ ເອົາອັງເດຣໄປຂ້າເວລາຫ້າໂມງຂອງບ່າຍວັນນັ້ນ.

ທ່ານອັງເດຣໄດ້ຕາຍໄປ ແບບຜູ້ກ້າຫານແທ້ ແລະພວກອັງກິດໄດ້ປະນາມວໍຊິງຕັນວ່າ ເປັນຜູ້ຂ້າຄົນ ໃນຍາມນັ້ນເປັນເວລາອັນລຳບາກແທ້ແກ່ວໍຊິງຕັນ ວ່າຈະຄວນຕັດສິນເຮັດແນວໃດດີ ຈະມີການໂຍະຍານແດ່ດີບໍ່ ໃນເວລາອະເມຣິກັນອອນກຳລັງນຳເສິກສົງຄາມນີ້ ແລະອີກຢ່າງນຶ່ງກໍ່ເປັນຍາມເຈຣະຈາຫາຄວາມສງົບກັບພວກອັງກິດອີກດ້ວຍ ຄິດເບິ່ງດີໆແລ້ວ ຄວາມອອນແອນີ້ເອງເປັນບ່ອນເຊື່ອຍອິງຢ່າງງ່າຍໆ ແກ່ຜູ້ຍອມຈຳນົນ.

ວໍຊິງຕັນເຄີຍເປັນຜູ້ນຳທະນາມາແລ້ວ ແລະບັນດາພວກຜູ້ນຳທະນາທັງຫຼາຍ ແມ່ນຈະມີແນວໂສກເສົ້າຫຼືວ່າລຳບາກພຽງໃດ

ກໍຕ້ອງສາມາດຕັດສິນໄດ້ຢູ່ສເມີ ພວກທີ່ເປັນລູກນ້ອງ ບາງທີກໍລືມໄປວ່າຜູ້ເປັນນາຍຢູ່ເປົ່າປ່ຽວ (ບໍ່ມີບ່ອນປຶກສາ ຢາກເຮັດຫຍັງເຮັດໄປ) ແຕ່ກໍມີຫຼາຍໆຄັ້ງ ທີ່ວ່າເຂົາຮູ້ສຶກແສນດີໃຈທີ່ມີຄົນຄືວໍຊິງຕັນຢູ່ນຳ ໄດ້ປີນຶ່ງຫຼັງຈາກທີ່ທ່ານອັງເດຣຕາຍໄປແລ້ວ ວໍຊິງຕັນ ກັບພວກນາຍທະຫານຝຣັ່ງ ໄດ້ຂີ່ກຳປັ່ນກັບຄືນມາຕາມລຳແມ່ນ້ຳໄປຫາບ່ອນເຂົາເຈົ້າເຄີຍຢູ່ແຕ່ກ່ອນພຸ້ນ ຍາມນັ້ນເປັນລະດູໜາວ ແມ່ນ້ຳກໍໄຫຼເປັນແກງຫຼາຍ ມີທັງນ້ຳເປັນໂງ່ນເປັນກ້ອນ ລົມແຮງກໍຕັ້ງຕົ້ນພັດມາ ຟອງນ້ຳກໍພັດຍອກໃສ່ຫົວກຳປັ່ນ ພວກລູກເຮືອຜູ້ນຶ່ງເກີດມີຄວາມຢ້ານກົວຫຼາຍ ເພາະຢ້ານກຳປັ່ນຈະຫຼົ້ມ ເຫັນດັ່ງນັ້ນໃຜກໍພາກັນຢ້ານຫຼາຍຂຶ້ນທຸກທີ ເຫັນບໍ່ເປັນທ່າວໍຊິງຕັນຈຶ່ງຍົກມືຂຶ້ນແລ້ວຮ້ອງເປັນກຳລັງໃຈໄປວ່າ "ເພື່ອນຮັກທັງຫຼາຍ ຈົ່ງພ້ອມກັນອົດທົນແລະກ້າຫານ" ອະທິບາຍວ່າໜ້າທີ່ຂອງລາວແມ່ນຕ້ອງພາໝູ່ໄປ ແລະລາວບອກນຳໝູ່ວ່າຈະນຳກຳປັ່ນເຂົ້າຝັ່ງໃຫ້ໄດ້ ດ້ວຍຄວາມລົງເຄີຍມີເຣື່ອງເຊັ່ນນີ້ມາແຕ່ກ່ອນພຸ້ນແລ້ວ ຢູ່ນຳແຄວແມ່ນ້ຳໂປໂຕມັກ ວໍຊິງຕັນ ຈຶ່ງພາໝູ່ຈອດຈົນໄດ້ຢ່າງປອດພັຍ.

ເມື່ອເສິກສົງຄາມຍືດເຍື້ອຍາວນານໄປເທົ່າໃດ ວໍຊິງຕັນ ຍິ່ງກາຍເປັນພໍ່ຜູ້ນຶ່ງ ເຊິ່ງຄົນທັງຫຼາຍເພິ່ງອີງ ເມື່ອເວລາລາວຍັງໜຸ່ມຢູ່ພຸ້ນ ມັກມີຜູ້ເຖົ້າຜູ້ແກ່ ໃຫ້ຄວາມຊ່ວຍເຫຼືອລາວ ບັດນີ້ເມື່ອໄດ້ເປັນຜູ້ບັນຊາການທະຫານແລ້ວ ຈຶ່ງເປັນພຽນເປັນໂອກາດໃຫ້ຕອບແທນຄວາມດີມູນຄຸນເໝືອນດັ່ງລາວເຄີຍໄດ້ຮັບມາແຕ່ກ່ອນ ລາວຊອກເອົາຜູ້ໜຸ່ມ ມາຊ່ວຍເປັນນາຍທະຫານ

ຂອງລາວ ສົນໃຈໃນການຈະຊ່ວຍເຫຼືອເຂົາເຈົ້າ ແລະສ່ວນຫຼາຍແລວກໍ່ຊ່ວຍເຫຼືອເຂົາເຈົ້າໄປ ເປັນຕັ້ງຫຼາຍໆປີ.

ໃນການໃຫຄວາມຊ່ວຍເຫຼືອນີ້ ວໍ່ຊິງຕັນກໍໃຊຄວາມພິຈາຣະນາຢ່າງຖວນຖີ່ ຄືວ່າເຂົາເຈົ້າຈະຕອງມີທັງຄວາມກາຫານແລະຈິດໃຈອັນເຫຼື້ອມໃສ ຊຶ່ງຄຶດເບິ່ງແລວມັນບໍ່ມີຄວາມດີທັງສອງຢ່າງນີ້ ພ້ອມກັນໄດເລື້ອຍໆຢູ່ໃນຄົນຜູ້ດຽວ ໃນຂັ້ນແຣກ ທ່ານວໍ່ຊິງຕັນໄດ້ມີຄວາມສັງເກດໃນໜຸ່ມອາຍຸ ໔໐ ປີ ຜູ້ຊື່ວ່າ ອາເລັກແຊນເດີ ແຮ ມິນຕັນ ໃນເວລາລາວໄປສູ້ຣົບ ໄດດີຢູ່ທີ່ແຕຣນຕັນ ແລະຢູ່ພຣິນເຊີຕັນ ສ່ວນແຮມິນຕັນເອງ ບໍ່ເປັນເໝືອນດັ່ງໜຸ່ມທັງຫຼາຍ ຊຶ່ງວໍ່ຊິງຕັນເຄີຍຄຶດວ່າເປັນຄືຄົນໃນ "ຄອບຄົວ" ເຖິງແມ່ນວ່າວໍ່ຊິງຕັນຈະສະແດງຄວາມພໍໃຈແລະຄວາມສນິດສນົມນຳເຂົາກໍດີ ທັງສອງຝ່າຍ ບໍ່ເຄີຍວ່າຈະສນິດສນົມກັນໄດຢ່າງໃກຊິດ ແຕ່ແລວມາມີເທື່ອນຶ່ງເຂົາເຈົ້າໄດຄຽດໃຫກັນຢ່າງຮຸນແຮງຊ້ຳ.

ຕາມທີ່ທ່ານແຮມິນຕັນ ເລົ່າວ່າມີມື້ນຶ່ງ ລາວຍ່າງກາຍທ່ານວໍ່ຊິງຕັນໄປທາງຫ້ອງການຂອງທ່ານ ວໍ່ຊິງຕັນເອງ ທ່ານວໍ່ຊິງຕັນຈຶ່ງບອກກັບທ່ານແຮມິນຕັນວ່າ ມີເຣື່ອງຢາກລົມນຳລາວ ແຮມິນຕັນຕອບວ່າ ຂໍໃຫ້ເອົາຈົດໝາຍທີ່ລາວຖືຢູ່ໃນມືນັ້ນໄປສົ່ງໃຫນາຍທະຫານຜູ້ນຶ່ງແລວ ຈະກັບຄືນມາຫາ ເວລາກັບຄືນມາລາວຊ້ຳມາພໍ້ ແລະລົມເຣື່ອງວຽກກັບນາຍທະຫານອີກຜູ້ນຶ່ງ ພໍເມື່ອແຮມິນຕັນໄປຮອດສຸດຫອງ ຈຶ່ງເຫັນທ່ານວໍ່ຊິງຕັນຄອງຖາລາວທັງຄຽດຄືດງຢູ່.

ທ່ານວໍຊິງຕັນຈຶ່ງເວົ້າວ່າ "ທ່ານນາຍພົນແຮມິນຕັນ ຈົ່ງແມ່ນເຈົ້າໃຫ້ຂອຍຖາພໍ່ ແລວກໍບອກທ່ານແຮມິນຕັນວ່າ ການເຮັດເຊັ່ນນັ້ນນຳກັນ ເປັນການບໍ່ດີ ແຕ່ທ່ານແຮມິນຕັນຕອບຄືນວ່າ ລາວບໍ່ເຫັນພອມໃນຄຳທັກທວງອັນນັ້ນ ແຕ່ວ່າທ່ານວໍຊິງຕັນກໍບໍ່ຍອມແລະບອກວ່າຕອງແຍກທາງກັນ ປະມານຊົ່ວໂມງນຶ່ງ ວໍຊິງຕັນຈຶ່ງສົ່ງນາຍທະຫານຜູໃຫຍ່ ຄືທ່ານຕັນທາຍແມນ ໄປບອກທ່ານແຮມິນຕັນວ່າເສັຽໃຈທີ່ໄດເວົ້າແຮງໄປແລວນັ້ນ ແຕ່ໂດຍບໍ່ນຶກບໍ່ຝັນ ທ່ານແຮມິນຕັນກັບບໍ່ຍອມຮັບໃນຄຳຖແລງອັນນັ້ນ ລາວຈຶ່ງຕອບນຳທ່ານທາຍແມນໄປວ່າ ລາວຕັດສິນໃຈແລວວ່າ ຈະຕອງໜີຈາກກັນແລະຈະບໍ່ກັບຄືນ.

ແລວແຮມິນຕັນຈຶ່ງຂໍນຳທາຍແມນວ່າ ຢ່າເລົ່າເຣື່ອງນີ້ສູ່ໃຜຟັງ ໃນເວລາດຽວກັນນັ້ນລາວກໍຮີບຂຽນຈົດໝາຍໄປເລົ່າເຣື່ອງນີ້ສູ່ໝູ່ເພື່ອນຂອງລາວຟັງ ສ່ວນວໍຊິງຕັນບໍ່ໄດຖືຊາຫຍັງ ຍັງຊອກຫາໜາທີ່ການໃໝ່ໃຫແຮມິນຕັນອີກຊ້ຳ ໃນເຣື່ອງນີ້ ວໍຊິງຕັນຮູດີ ເພື່ອຫຼົບຕາກາຍຂອງເລັກງານຢູ່ໃນກິຣິຍາອ່ອນແອຂອງຄົນຜູ້ນຶ່ງ ແລະໄປຖືເອົາດານຊຸນວູທີ່ພູມເປັນແກ່ ໃນຫຼາຍເດືອນຕໍ່ມາ ກໍມີພວກຂອງຄອນວາລລິດ ມາປິດລອມພວກອະເມຣິກັນຢູ່ທີ່ຢອກທາວ ເວີຊີເນັຽ ວໍຊິງຕັນເຫັນສົມຄວນແລວກໍມອບວຽກສຳຄັນອັນມີກຽດນັ້ນໃຫແຮມິນຕັນເປັນຜູບັງຄັບບັນຊາ ແຮມິນຕັນ ກໍນຳເອົາກຳລັງພົນຂອງລາວ ເຂົ້າຕີເອົາຢອກທາວ ປະມານນຶ່ງຊົ່ວໂມງກໍເປັນທີ່ຮຽບຮອຍດີ ຍອນນາຍທະຫານໜຸກຄືນໃນກອງທັບ ແຮມິນຕັນໄດສູ້ຮົບຢ່າງພິລະອາດຫານເປັນການ

ສະແດງຢັ້ງຢືນໃຫ້ວໍຊິງຕັນຮູ້ໃນຄວາມໄວ້ເນື້ອວາງໃຈລາວ.

ໃນຍາມນັ້ນ ວໍຊິງຕັນ ໄດ້ພູກຮັກພູກແພງອີກກັບຄົນຜູ້ນຶ່ງ ຊື່ວ່າ ລາຟາແຢັດ ໃນຂັ້ນຕົ້ນ ກໍຄິດວ່າຄົງເປັນໄປບໍ່ໄດ້ທີ່ວ່າຜູ້ນຶ່ງເປັນຄົນໜຸ່ມນ້ອຍ ເມືອງເວີຊີເນັຽ ມີອາຍຸຮອດ ໔໐ ປີ ແລ້ວ ແລະອີກຜູ້ນຶ່ງຈາກຄອບຄົວຝຣັ່ງຮັ່ງມີພ້ອມທັງມີອຳນາດ ຈະມາເປັນຜູ້ຮັກແພງຖານມິດສນິດສນົມກັນໄດ້ ເຣື່ອງມີຢູ່ວ່າ ພໍ່ຂອງລາຟາແຢັດໄດ້ເສັຽຊີວິດຢູ່ສນາມຣົບຕັ້ງແຕ່ລາວຫາກໍເກີດ ລາຟາແຢັດຈຶ່ງຄິດເອົາວ່າວໍຊິງຕັນເປັນຄ້າຍງກັບພໍ່ຂອງຕົນ ອາດເນື່ອງຈາກວ່າ ນາງມາກຕາ ບໍ່ມີລູກໃຫ້ວໍຊິງຕັນລ້ຽງ ອີກປະການນຶ່ງ ລາຟາແຢັດຈະເຮັດຈະເວົ້າຫຍັງກໍເຮັດຢ່າງກົງໄປກົງມາ ອັນພາໃຫ້ວໍຊິງຕັນເຊື່ອໄດ້ທັງໝົດ ມີຄາວນຶ່ງທີ່ກອນເວກັບພວກນາຍທະຫານກຽມຢ່າງລັບໆ ເພື່ອສູ້ມືກັບວໍຊິງຕັນ ພວກເຂົາ ໄດ້ໄປຊວນເອົາລາຟາແຢັດ ໃຫ້ມາກິນແລງຮ່ວມພວກນຳເຂົາ ແຕ່ວ່າບໍ່ບັນລຸຜົນ ຄຳຕອບຂອງລາຟາແຢັດໄດ້ເປັນໄປໃນທຳນອງວ່າຍົກຈອກຂຶ້ນດື່ມກໍຮອງຂໍໃຫ້ແຕ່ວໍຊິງຕັນຢູ່ເຢັນເປັນສຸກ.

ຫຼາຍເດືອນຕໍ່ມາ ຫຼັງຈາກ ທ່ານລາຟາແຢັດ ກັບເມືອເມືອງຝຣັ່ງ ເພື່ອຂໍຄວາມຊ່ວຍເຫຼືອມາສູ້ສົງຄາມ ທ່ານວໍຊິງຕັນໄດ້ມີໂອກາດກິນແລງກັບເພື່ອນຝຣັ່ງເສດຜູ້ນຶ່ງແລ້ວ ກໍຖືໂອກາດນັ້ນຖາມຂ່າວຫາ ລາຟາແຢັດ ວໍຊິງຕັນຊາບວ່າຜູ້ໃດກໍຮັກແລະດີໃຈນຳທຸກສິ່ງທຸກຢ່າງທີ່ ລາຟາແຢັດ ເຮັດມາ ຢູ່ໃນອະເມຣິກາ ວໍຊິງຕັນຍິ່ງຮູ້ສຶກເປັນສຸກ ແລະພາກພູມໃຈເປັນອັນມາກເມື່ອໄດ້ຍິນແຕ່ສິ່ງດີໆກ່ຽວກັບລູກຂອງຕົນ.

ເຖິງແມ່ນວ່າ ວໍຊິງຕັນຈະຮັກແພງລາຟາແຢັດຫຼາຍພຽງໃດກໍດີ ແຕ່ວໍຊິງຕັນກໍບໍ່ໄດ້ປ່ອຍໃຫ້ຄວາມຮູ້ສຶກອັນນັ້ນ ມາເປັນນາຍການຈະຕັດສິນໃຈດອກ ໃນປີ ໑໗໗໘ ລາຟາແຢັດໄດ້ຂໍອະນຸຍາດນຳວໍຊິງຕັນ ເພື່ອກຳບັງຄັບບັນຊາ ສ່ວນນຶ່ງຂອງກອງທັບໄປຕີການາດາທີ່ລາວຄິດວ່າ ພວກຝຣັ່ງທີ່ຢູ່ແຖວນັ້ນຈະໃຫ້ຄວາມຊ່ວຍເຫຼືອລາວ ເພື່ອປາບພວກອັງກິດ ວໍຊິງຕັນ ບໍ່ເຫັນພ້ອມນຳແຜນການອັນນີ້ ເພາະວ່າ ກອງທັບມີຄວາມອ່ອນແອຢູ່ຫຼາຍແລ້ວໃນຍາມນັ້ນ ລາຟາແຢັດ ໄດ້ບອກໃຫ້ສະພາຊາບວ່າ ຖ້າບໍ່ໃຫ້ລາວໄປຕີການາດາຕາມທີ່ກະໄວ້ພວກຊາວທີ່ຢູ່ເອີຣົບ ຈະບໍ່ສັຣເສີນວ່າ ລາວເປັນນາຍທະຫານທີ່ສາມາດ ສະພາຢາກຈະພ້ອມທາງລາຟາແຢັດແລ້ວຈຶ່ງຂຽນໄປຫາວໍຊິງຕັນໃນເຣື່ອງນີ້ແຕ່ວ່າ ວໍຊິງຕັນຕອບວ່າ ລາຟາແຢັດບໍ່ຄວນຈະນຶກຄິດໄປແບບນັ້ນແລະລາຟາແຢັດ ອາດຈະສິນໃຈ ນຳແຕ່ເຣື່ອງຄວາມຄິດຄວາມເຫັນຂອງປະຊາຊົນເກີນໄປ.

ໃນຈົດໝາຍການໃໝ່ອີກ ວໍຊິງຕັນ ຈຶ່ງມາຊົມນະສູດຟັງເບິ່ງຄັກໆໃນເຫດຜົນທີ່ລາຟາແຢັດຢາກໄປຕີການາດາ ວໍຊິງຕັນກໍເລີຍຄິດໄປວ່າລາຟາແຢັດອາດຈະທຳງານໃຫ້ຣັຖບານຝຣັ່ງກໍເປັນໄດ້ ວໍຊິງຕັນຈຶ່ງອະທິບາຍເອງວ່າ ຖ້າວ່າຝຣັ່ງຫາກຄອບຄຸມການາດາອີກ ເຂົາກໍຄົງໄປທ້ວງທຸກແຫ່ງຂອງສະຫະຣັຖຢູ່ແລ້ວຝ່າຍຝຣັ່ງໄດ້ຄອບຄຸມ ນິວ ອອກເລອັງ ຢູ່ທາງເຂດໃຕ້ພຸ້ນແລ້ວແລະເຫັນວ່າເປັນລົ້ງເປັນເດີຍກັນກັບພວກແຂກຢູ່ແຖວສາຍແດນນັ້ນດີແທ້ ວໍຊິງຕັນຈຶ່ງຄິດຄຳນຶ່ງວ່າອາດຈະບໍ່ປອດພັຍແກ່ອະເມ

ຣິກາ ເຖິງແມ່ນວ່າ ວໍຊິງຕັນຢາກຈະຄິດຄືເຣັດຄືນຳຝ່າຍຝຣັ່ງທີ່ຫາກເປັນມິດປະເທດໃຫມ່ຂອງອະເມຣິກາ ສິ່ງເກີດໄດ້ຢ່າງຄັກແນ່ວ່າ ການຮັກການສົນໃຈນຳຊາດຂອງຕົນເອງນັ້ນ ຄວນຈະມາກ່ອນສິ່ງອື່ນ.

ແຕ່ກ່ອນມາ ທີ່ວ່າທ່ານວໍຊິງຕັນເຄີຍແພ້ເສິກປະຕິວັດມານັ້ນ ກໍ່ເພາະວ່າ ວໍຊິງຕັນສາມາດມອງເຫັນເຫດການໄດ້ຢ່າງແຈ່ມແຈ້ງດີ ເມື່ອຮູ້ວ່າເຂດປົດປ່ອຍຈະບໍ່ສາມາດຈັດໃຫ້ມີກອງທັບຢ່າງເຂັ້ມແຂງໄດ້ ເພື່ອຊະນະພວກອັງກິດ ລາວຈຶ່ງພິຈາຣະນາໃຊ້ຫົວຄິດເຣັດເສິກອັນຍາວນານ ແລ້ວກໍ່ຄ່ອຍໆຮັບຕົນມາໃນທຳນອງນັ້ນ ລາວຮູ້ວ່າ ກອງທັບຂອງລາວບໍ່ມີຄົນທີ່ໄດ້ຮັບການເຝິກແອບຄັກແນ່ ລາວຈຶ່ງພະຍາຍາມຕີພວກອັງກິດແຕ່ເມື່ອໃດພໍຈະຕີໄດ້ ມີຫລາຍຜູ້ຫລາຍຄົນໄດ້ເວົ້າໃຫ້ວ່າວໍຊິງຕັນນີ້ພະຍາຍາມເຣັດການປະຕິວັດໄປແບບລາວເອງ ມີຝຣັ່ງຜູ້ນຶ່ງ ທີ່ຢູ່ນຳຝ່າຍອະເມຣິກັນ ໄດ້ຂຽນຄວາມຄິດເຫັນຂອງລາວ ກ່ຽວກັບເສິກປີດກູນ ໄວ້ ສະພາກໍ່ຖືກແຕກແຍກກັນຕາມລາວວ່າ ຜູ້ນັ້ນກໍ່ເວົ້າໃສ່ຮ້າຍປ້າຍສີຜູ້ນີ້ ໂດຍເກັບເອົາເຣື່ອງປະເທດ ເຣື່ອງເສຣີພາບມາລົມກັນ ພາໃຫ້ເກີດມີບັນຫາຫລາຍອັນ ໃນລະຫວ່າງພວກເອົາເຈົ້າ ແລະລະຫວ່າງຣັດຕໍ່ຣັດດ້ວຍ ລາວເວົ້າວ່າ ສ່ວນວໍຊິງຕັນເອງເປັນຄົນທີ່ເຂັ້ມແຂງແທ້ຂອງອະເມຣິກາ.

ມີຫລາຍຄົນພາກັນລາອອກຈາກສະພາແລະກອງທັບ ບາງຄົນກໍ່ໄປເປັນນັກການເມືອງຢູ່ໃນຣັດຂອງຕົນເອງ ບາງຄົນກໍ່ຫນີອອກໄປເພື່ອຄ້າຂາຍເພື່ອເກັບຊັບທີ່ຕົນໄດ້ເສັຽໄປໃນຍາມເສິກ

ພູມ ບາງຄົນກໍເວົ້າວ່າ ຢູ່ໃນສະພາແລະໃນກອງທັບນັ້ນມາກໍເຫິງ
ນານແລ້ວ ສ່ວນວໍຊິງຕັນເອງ ກໍພະຍາຍາມຢູ່ສືບມັ້ນ ເດືອນຕໍ່
ເດືອນ ປີຕໍ່ປີ ເປັນລຳດັບສເມີມາ ມີຫຼາຍຕໍ່ຫຼາຍເທື່ອທີ່ລາວບໍ່
ເວົ້າຮອດ ອາຫານບໍ່ມີເງິນໃຊ້ ຈົນວ່າລູກນ້ອງຫາງຫາຈະໜີ
ອອກແລ້ວ ລາວກໍບໍ່ຢຸດ ສ່ວນຈົດໝາຍ ລາຍງານແລະຄຳສັ່ງ
ປະຈຳວັນ ກໍມີມາຈາກໂຮງການຂອງລາວພູມ ບໍ່ໄດ້ເວັ້ນບໍ່ໄດ້
ຂາດລະຍະ ສິ່ງທີ່ວໍຊິງຕັນຂຽນໄດ້ໂຮມເປັນປຶ້ມໄດ້ ໓໙ ເຫຼັ້ມ
ແລະເປັນເອກສານແຕ່ລະຢ່າງໄດ້ ໔໕,໐໐໐ ຢ່າງ ແລະໃນ
ລະຫວ່າງແປດປີທີ່ເປັນເສິກປະຕິວັດຢູ່ນັ້ນ ລາວຂຽນໄດ້ຫຼາຍ
ກວ່າເຄິ່ງຂອງຈຳນວນໜັງສືທັງໝົດທີ່ກ່າວມາ ສິ່ງເຫຼົ່ານີ້ໃຫ້
ເຮົາເຫັນນ້ຳວຽກນ້ຳການຂອງວໍຊິງຕັນເຮັດມາ.

ມີຫຼາຍເທື່ອວໍຊິງຕັນຕອງຄິດວ່າ ອາດຈະຂຽນຕໍ່ໄປບໍ່ໄດ້
ເພາະວ່າເລື່ອງຈະຂຽນນັ້ນມັນຍາວໂພດ ມັນເປັນເລື່ອງທີ່ໂສກ
ເສົ້າໂພດ ໃນທີກເດືອນຕົ້ນປີ ໑໗໘໑ ທຸກສິ່ງທຸກຢ່າງພາກັດວ່າ
ເປັນແນວເສັຽຫາຍໝົດ ທະຫານຂອງລາວບາງຄົນກໍຄິດນອກ
ໃຈຕໍ່ສູ້ລາວ ພວກອັງກິດເກັບຈົດໝາຍໄດ້ສະບັບນຶ່ງທີ່ວໍຊິງຕັນ
ຂຽນຫາພີ່ນ້ອງລາວ ເພື່ອເລົ່າຄວາມບໍ່ຈົບບໍ່ດີໃນການຊ່ວຍເຫຼືອ
ຂອງຝຣັ່ງໃຫ້ແວີຊີເນັຽ ໃນນັ້ນລາວກໍເວົ້າແຕ່ຄວາມຈິງທັງໝົດ
ຈຶ່ງບໍ່ມີອັນໃດທີ່ຈະເປັນເຫດເປັນພັຍແກ່ລາວ ລາວກໍເວົ້າຢ່າງ
ແຈ່ມແຈ້ງວ່າ ໄດ້ຂຽນຈົດໝາຍລາຍງານແນວນັ້ນ ກອງບັນຊາ
ການຝຣັ່ງກໍຈຳເປັນໄດ້ເຮັດດີໄປ ຈົນໃຫ້ທຸກສິ່ງທຸກຢ່າງ ແນວບໍ່
ຈົບບໍ່ດີອັນມີມາແລ້ວນັ້ນສູນສິ້ນໄປ.

ຂ່າວມາຈາກເວີຊີເນັຍ ກໍເປັນຂ່າວບໍ່ດີປານໃດ ພວກອັງກິດພາກັນຈູດຢາວເຜົາເຮືອນ ຕາມແຖວຢູ່ແຄມແມ່ນ້ຳໂປໂຕມັກອີກ ກຳປັ່ນຂອງສັດຕູລຳນຶ່ງ ໄດ້ມາຈອດໃກ້ໆ ເມົ້າເວີນົງ ແລະຜູ້ທີ່ເຝົ້າເຮືອນຢູ່ເມົ້າເວີນົງ ຊື່ວ່າລັນ ວໍຊິງຕັນ ກໍເລີຍຂຶ້ນກຳປັ່ນໄປນຳເຂົາ ເປັນຜູ້ປຸງອາຫານໃຫ້ແກ່ຄົນຂອງເຈົ້າຊີວິດ ເພື່ອຂໍໃຫ້ເຂົາສົ່ງຍອມ ສິ່ງພວກຄົນທີ່ເປັນຂ້າທາດ ແຕ່ກ ພາຍຈາກເມົ້າເວີນົງຄືນໃຫ້ຕົນຄອຍດີ ທ່ານວໍຊິງຕັນຊາບຂ່າວແລ້ວ ເລີຍຂຽນຈົດໝາຍໄປວ່າ ໃຫ້ທ່ານລັນວ່າ "ໄດ້ຍິນຂ່າວວ່າເຂົາຈູດເຮືອນຂອຍເອງ...ຍັງອາວໄດ້ກ່ອນໄດ້ຍິນຂ່າວວ່າລັນໄດ້ຍອມໄປເຂົ້າເປັນລູກລ່ອງຂອງພວກອັງກິດ".

ຕໍ່ມາຊ້ຳໄດ້ຊາບຂ່າວວ່າ ແມ່ລາວໄປປ່າວຂ່າວວ່າຕົນທຸກຍາກຫຼາຍ ຈົນວ່າສະພາຢູ່ເວີຊີເນັຍ ຈະຕ້ອງໄດ້ເອົາເງິນໃຫ້ເປັນການບັນເທົາ ວໍຊິງຕັນຍິ່ງຮູ້ສຶກໂສກເສົ້າແລະເປັນທຸກໃຈທີ່ສຸດ ລາວຈຶ່ງຂຽນໄປບອກຢ່າງຍືດຍາວວ່າ ຖ້າວ່າເປັນການຈຳເປັນແທ້ນັ້ນ ມີອັດນຶ່ງກໍຈະຕ້ອງແບ່ງໄປໃຫ້.

ວໍຊິງຕັນເລີຍລໍຟັງຢູ່ຈົນໝົດຣະດູຮ້ອນໃນປີ ໑໗໘໑ ຈົນໄດ້ຮັບຊັຍຊນະ ທີ່ລາວຄິດໄວ້ຈາກຢອກທາວ ລາວໄດ້ຊັຍຊນະດັ່ງນີ້ ແບບດຽວກັນກັບແຕ່ລັ້ງກ່ອນໆ ທີ່ລາວເຄີຍໄດ້ມາແລ້ວ ຄືໂດຍການຫຼອນຕີສັດຕູຢ່າງງຽບໆເວລາເຂົ້າເຜີ.

ໃນເວລາກອງທັບອະເມຣິກັນແລະກອງທັບຝຣັ່ງຄອຍຖ້າຈົ່ງໜວະຢູ່ຂ້າງນອກນິວຢອກ ພວກນັກສືບຂອງວໍຊິງຕັນບໍ່ໄດ້ເສັຽເວລາເລີຍ ເພື່ອເຮັດໃຫ້ຝ່າຍອັງກິດເຂົ້າໃຈວ່າ ອະເມຣິກັນ

ມີແຜນການຈະໄປຕີເອົາເມືອງທີ່ຖືກອັດລ້ອມໄວ້ຢ່າງແໜ້ນໜາ ນັ້ນ ມື້ນັ້ນວໍຊິງຕັນໃຊ້ເວລານຶ່ງຊົ່ວໂມງເພື່ອລົມນຳຜູ້ທີ່ເປັນໝູ່ຮັກແພງອັງກິດຄົນນຶ່ງ ເພື່ອຖາມເຖິງເຂດທີ່ຄົນຂອງລາວຈະໄປລີ້ຫຼົບຢູ່ໄດ້ ແລ້ວກໍ່ຂໍບໍ່ໃຫ້ເວົ້າເຣື່ອງທີ່ຖາມນີ້ ສູ່ໃຜຟັງເປັນເດັດຂາດ ຄົນອະເມຣິກັນຜູ້ທີ່ວໍຊິງຕັນລົມຢູ່ນຳນັ້ນຕອບວ່າ "ຂ້ອຍແນ່ໃຈທີ່ສຸດວ່າ ນາຍພົນຝ່າຍອັງກິດຄົງໄດ້ຊາບເຣື່ອງນີ້ແລ້ວໃນຄືນນັ້ນ".

ວໍຊິງຕັນ ມີແຜນການດີອັນນຶ່ງ ລາວຕັ້ງຕົ້ນວາງທ່າທາງໃຫ້ອັງກິດເຊື່ອວ່າກອງທັບຂອງລາວຫາງຫາຈະຢູ່ບ່ອນທີ່ຢູ່ມາແຕ່ກ່ອນພຸ້ນຢ່າງແໜ້ນໜາຖາວອນ ກ່ອນຈະຍົກໄປຕີພວກອັງກິດ. ຕາມທີ່ແທ້ແລ້ວໃນຂະນັ້ນ ລາວໄດ້ນຳພວກຂອງລາວຂ້າມຜ່ານນິວເຈີຊີຕັ້ງແຕ່ມື້ທີ່ເຂົາເອົາກັນລົງໄປທາງໃຕ້ ເພື່ອໄປອັດລ້ອມພວກຂອງຄອນວາລິດຢູ່ທີ່ຢອກທາວ ຈົນວ່າ ພວກອະເມຣິກັນກັບຝຣັ່ງເຂົ້າໄປຮອດພາກໃຕ້ຂອງຟີລາແດນເຟັຍແລ້ວ ຝ່າຍອັງກິດຈຶ່ງຮູ້ແນ່ວ່າ ພວກນີ້ມີແຜນຈະຕີເອົານິວຢອກໂດຍທາງລັກ.

ມີເຫື່ອດຽວນັ້ນເອງທີ່ວໍຊິງຕັນມຸ່ງໜ້າໄປຕີຢອກທາວນັ້ນ ລາວໄດ້ໃຫ້ຄວາມສຳຄັນແທ້ໆທີ່ຈະໃຫ້ໄດ້ໄຊຍະຊະນະແກ່ລາວ ມັນເປັນເວລາທີ່ລາວຊາບຂ່າວວ່າ ທ່ານແມ່ທັບເຮືອຝຣັ່ງ ຊື່ ເດີກຣາດ ໄດ້ເຂົ້າມາຮອດອ່າວຊີຊາພີກ ແລະເປັນເວລາທີ່ພວກຂອງຄອນວາລິດຖືກຈັບໃນເມືອງນ້ອຍແຫ່ງນຶ່ງແລ້ວ ວໍຊິງຕັນຈຶ່ງຝາກໄປບອກຂ່າວໃຫ້ນາຍພົນຝຣັ່ງໂຣຊັມໂບ ຊາບນຳ ຢູ່ທີ່ແຊສເຕີແປນຊິນເວເນັຍ ເມື່ອກຳປັ່ນຂອງໂຣຊັມໂບເຂົ້າໃກ້ຝັ່ງ

ແລ້ວ ວໍຊິງຕັນຈຶ່ງປິດໝວກໂບກໄປມາຢ່າງຊື່ນຊົມ ເມື່ອໂຣຈັນ ໂບ ອອກຈາກກຳປັ່ນມາ ວໍຊິງຕັນກໍຣີບສົ່ງຂ່າວດີສູ່ຟ້າ.

ນາຍທະຫານຜູ້ນຶ່ງຂອງໂຣຈັນໂບ ເວົ້າວ່າ ບໍ່ທັນເຄີຍ ເຫັນໃຜຈະດີໃຈທີ່ສຸດຄືທ່ານນາຍພົນວໍຊິງຕັນໃນວັນນັ້ນ ຜູ້ນຶ່ງອີກ ເວົ້າວ່າ ວໍຊິງຕັນເລີກຍົດແລະທ່າທີເປັນຜູ້ນຳຂອງພາກເໜືອ ຂອງອະເມຣິການັ້ນອອກ ແລ້ວມາເປັນພຽງຄົນທັມມະດາທີ່ຊົມ ຊື່ນຍິນດີນຳຄວາມໄດ້ຜົນດີມີຊັຍຂອງປະເທດຕົນເອງເທົ່ານັ້ນ.

ມີຄືນນຶ່ງ ໃນເວລາມືດແລະຝົນຕົກທະຫານຂອງວໍຊິງຕັນ ພວກນຶ່ງໄດ້ພາກັນແບ່ງໄປທາງນອກ ເພື່ອກຽມຈະໄປທຳການສູ້ ຣົບກັນຢູ່ປອກທາງ ເຂົາເຫັນຄົນຜູ້ນຶ່ງສູງໃຫຍ່ນຸ່ງເຄື່ອງດຳຍ່າງ ມາທາງເຂົາຢູ່ ຫ່າງຈາກພວກອັງກິດ ພຽງແຕ່ ໘໐໐ ຫລາ ເຂົາກໍຮູ້ສຶກຢ້ານຕົກໃຈ ເຂົາບໍ່ນຶກວ່າຈະແມ່ນທະຫານ ເຂົາຄິດ ວ່າຕ້ອງແມ່ນນັກສືບ ແລະຄິດວ່າຈະຂ້າຖິ້ມແລ້ວ ເຂົາຈຶ່ງໄດ້ວ່າ ແມ່ນວໍຊິງຕັນເອງ ແຕ່ເມື່ອລາວເວົ້າເທົ່ານັ້ນ ແລ້ວຈຶ່ງຮູ້ອີກວ່າ ລາວຕັ້ງໃຈມາເບິ່ງແຍງແບ່ງເບົາເອົາສູ້ ທັງສ່ຽງຕໍ່ອັນຕະຣາຍ ທັງມອບນຳລູກນ້ອງຂອງລາວ.

ຫຼາຍມື້ຕໍ່ມາ ເວລາວໍຊິງຕັນກຳລັງສຶກສາຊຸມເບິ່ງທ່າທີ ຂອງພວກອັງກິດ ມີລູກປືນຕົກໃກ້ໆວໍຊິງຕັນ ແລະໝູ່ພວກ ແຕກ ຂຶ້ນແຮງຫຼາຍຈົນຂີ້ດິນຟຸ້ງຖືກພວກເຂົາເຈົ້າ ແຕ່ວໍຊິງຕັນເອງບໍ່ ຫົວຊາຊ້ຳ ລາວສຶກສາເບິ່ງທ່າຂອງພວກອັງກິດຕໍ່ໄປ ທະຫານ ນຶ່ງປິດໝວກອອກມາເບິ່ງວ່າຂີ້ດິນຕິດໝວກຫຼາຍປານໃດ ແລະ ຢາກໃຫ້ວໍຊິງຕັນເຫັນນຳແດ່ ວໍຊິງຕັນຈຶ່ງເອີ້ນໃສ່ວ່າ "ທ່ານ

ອີແວນເຣີຍ ທາງທີ່ດີແລ້ວ ເຈົ້າເອົາຂັ້ນຕົນນັ້ນຕິດເມືອເຮືອນໃຫ້ເມັຽແລະລູກເຈົ້າດີກວ່າ".

ຫລັງຈາກໄດ້ຜົນດີມີຊັຍຊະນະຢູ່ທີ່ປອກທາວແລ້ວ ວໍຊິງຕັນຈຶ່ງຂຽນເປັນເນື້ອຄວາມງ່າຍໆຢ່າງຄົນທັມມະດາສາມັນ ໄປສົ່ງຂ່າວໃຫ້ສະພາຟັງ ພຽງແຕ່ເວົ້າວ່າ ຂໍຖືເປັນກຽດຂ່າວວ່າກອງທັບອັງກິດ ແລະພວກກອງບັນຊາການຂອງທ່ານຫລອດຄອນວາລິດ ຖືກປາບຊັຍແລ້ວ ລາວບໍ່ໄດ້ເລົ່າແມນແຕ່ ຄຳດຽວເລີຍວ່າ ລາວໄດ້ເຮັດຫຍັງແດ່ ມີແຕ່ວ່າບັນດານາຍທະຫານແລະພວກພົນຂອງລາວໄດ້ສູ້ຮົບຢ່າງອາດຫານດີ ແລວກໍເລີຍໄດ້ຊັຍຊະນະໄວ້ກ່ອນຄວາມຄາດໝາຍຊ້ຳ.

ທ່ານວໍຊິງຕັນກັບໂຣຊັມໂບທັງສອງ ພ້ອມພາກັນໄປຕ້ອນຮັບພວກສວາມີພັກຂອງຝ່າຍທ່ານຄອນວາລິດ ເມື່ອໄດ້ຮັບໜັງສືອັນເຊັນຊື່ກັນຮຽບຮ້ອຍແລ້ວ ວໍຊິງຕັນ ກໍເຊັນຊື່ລົງໄປ ເພື່ອເພີ້ມເຕີມຄຳອີກວ່າ ສິ່ງເຫຼົ່ານີ້ໄດ້ທຳກັນຢູ່ທີ່ປອກທາວໃນວັນທີ໑໙ ເດືອນຕຸລາ ໑໗໘໑.

ໃນຕອນບ່າຍຂອງວັນດຽວນັ້ນ ເວລາພວກອັງກິດເດີນອອກມາເພື່ອມອບອາວຸດປືນຂອງເຂົານັ້ນ ເຂົາຍັງຫົດລອງອີກເປັນສຸດທ້າຍ ເພື່ອເຮັດໃຫ້ວໍຊິງຕັນໝົດຄວາມສຳຄັນໄປ ໂດຍວິທີເວົ້າແກ້ຫນ້າວ່າ ທ່ານຄອນວາລິດມາບໍ່ໄດ້ ເພາະບໍ່ສະບາຍ ຈຶ່ງໄດ້ສົ່ງແຕ່ຜູ້ຮອງມານເອງ ວໍຊິງຕັນໄດ້ກຽມພ້ອມໄວ້ກ່ອນແລ້ວ ລາວໄດ້ຫລີກອອກໄປທາງນຶ່ງແລ້ວ ໂດຍປ່ອຍໃຫ້ພວກອັງກິດທຳການມອບກັບຜູ້ຮອງຕົນເໝືອນກັນ.

ພິດພີທີສວາມິພັກເສັດຮຽບຮ້ອຍແລ້ວວໍຊິງຕັນກໍ ສະແດງຄວາມຮັກແພງຕໍ່ກອງທັບທີ່ຖືກປຣາຊັຍນັ້ນເປັນຢ່າງດີ ໃນງານຣາຕີກິນລ້ຽງຈັດໃຫ້ແກ່ຄອນວານລິດແລະນາຍທະຫານຂອງລາວ ທ່ານໂຣຊັມໂບໄດ້ຍົກຈອກຂຶ້ນດື່ມ ຖວາຍພອນແກ່ເຈົ້າຊີວິດຝຣັ່ງ ຄອນວານລິດຕອບສັ້ນໆວ່າ "ແດ່ເຈົ້າຊີວິດ" ຕໍ່ໄປວໍຊິງຕັນກໍຍົກຈອກຂຶ້ນແລ້ວຕວງຫາວ່າ ທ່ານຄອນວານລິດ ຈະຄິດຫຍັງແລ້ວກ່າວວ່າ "ແດ່ປະເທດອັງກິດ" ທັງເວົ້າຕື່ມໄປວ່າ ຖ້າຫາກວ່າເຈົ້າຊີວິດຈະຢູ່ແຕ່ໃນປະເທດຂອງຕົນບໍ່ໄປກວນໃຜແລ້ວ ລາວດີໃຈແລະຈະດື່ມຈົນໝົດແກ້ວເປັນກຽດແດ່ເຈົ້າຊີວິດ.

# ໑໐. ການກໍ່ຕັ້ງໃຫ້ເປັນຊາດຂຶ້ນ (ການເຮັດໃຫ້ຊາດເກີດຂຶ້ນໄດ້)

ປອກທາວເປັນແຫ່ງນຶ່ງທີ່ໄດ້ດຶງເອົາວໍ່ຊິງຕັນໃຫ້ກັບຄືນເມືອເວີຊີເນັຽ ອັນເປັນຖິ່ນເດີມຂອງລາວ ຫຼັງຈາກມີເສິກສົງຄາມມາໄດ້ຕັ້ງຫົກປີ ຮູ້ສຶກອົບອຸ່ນ ແລະເປັນສຸກທີ່ສຸດທີ່ໄດ້ກັບຄືນມາເຫັນຖິ່ນຖານບ້ານບ່ອນ ພ້ອມທັງໜ້າຕາອັນຍິ້ມແຍ້ມແຈ່ມໃສທີ່ລາວເຄີຍຮັກເຄີຍແພງມາແຕ່ກ່ອນພຸ້ນ ຮູ້ສຶກເປັນສຸກ ອີກປະການນຶ່ງ ນຳໂຊກຊັຍຊູນະທີ່ໃໝ່ໆ ແຕ່ພ້ອມໆກັນນັ້ນກໍ່ມີທັງຄວາມໂສກເສົ້າແກມຢູ່ດ້ວຍ ມີທ່ານ ແຈກ ຄັສຕິ ແຕ່ກ່ອນພຸ້ນເມື່ອແມ່ລາວສິ້ນຍອມພ້ອມພຽງແລ້ວຈຶ່ງໄດ້ໄປ ເຂົາເປັນນາຍທະຫານຢູ່ໃນກອງທັບ ຂອງວໍ່ຊິງຕັນ ເມື່ອລາວມີອາການປ່ວຍເກີດຂຶ້ນ ວໍ່ຊິງຕັນຈຶ່ງສົ່ງລາວໄປທີ່ແອນທັມ ໃກ້ງເມົ້າເວີນົງໃຫ້ໄປຢູ່ນຳອາຂອງລາວ ແລ້ວລາວໄດ້ສັ່ງໃຫ້ທ່ານໝໍແກຣກ ປິ່ນປົວເບິ່ງແຍງໃຫ້ ທັງເອີ້ນເອົານາງມາກຕາ ກັບເມັຽຂອງແຈກເຊິ່ງຊື່ນາງແນນລີແລະພວກລູກຂອງລາວຈາກເມົ້າເວີນົງໃຫ້ມາ

ຢູ່ນຳລາວ ບໍ່ເປັນແຕ່ບຸນ ການດູແລປິ່ນປົວອັນໃດກໍບໍ່ໄດ້ຜົນ.

ສາມອາທິດຕໍ່ມາ ຫຼັງຈາກການສູ້ຣົບ ທີ່ຢອກທາວແລ້ວ ວໍຊິງຕັນໄດ້ຂີ່ມ້າໝົດຄືນ ໃຫ້ຮອດແອນທັນແຕ່ເດິກເພື່ອໄປຖາມຂ່າວເທົ່ານັ້ນ ແລະກໍຊາບວ່າ ແຈກຈະບໍ່ຢືນຕໍ່ໄປ ເຖິງຈະບໍ່ຢືນປະການໃດກໍດີ ວໍຊິງຕັນກໍສຸດໃຈທີ່ໄດ້ມາຮູ້ມາເຫັນຜູ້ທີ່ລາວຮັກລາວແພງຫຼາຍທີ່ສຸດນັ້ນ ພໍເມື່ອທ່ານໝໍບອກວ່າ ບໍ່ມີຫວັງ ແລ້ວວໍຊິງຕັນກໍໄດ້ຮ້ອງໄຫ້ຂຶ້ນ ແຕ່ໃນຊົ່ວລະຍະນຶ່ງລາວກໍຄຶດເຫັນຄືນອື່ນເຊັ່ນນີ້ ຈຶ່ງອອກໄປກ່າວເປັນເນື້ອຄວາມອັນຈົບງາມບາງເລັກນ້ອຍນຳພວກຜູ້ຍິງທີ່ໂສກເສົ້າຢູ່ນັ້ນ.

ອາທິດຕໍ່ມາ ຈຶ່ງໄປຍາມແມ່ຂອງລາວ ສິ່ງນີ້ບໍ່ຄ່ອຍຈະເປັນການສະດວກສະບາຍໃຈແກ່ລາວປານໃດ ອາຍຸກໍແກ່ໄດ້ ໘໑ ປີແລ້ວ ເປັນລູກຊາຍຂອງແມ່ຜູ້ເຂັ້ມງວດກວດຂັນ ເປັນທັງຜູ້ຊະນະສົງຄາມຂອງສັດຕູທີ່ເປັນຊາດຍິ່ງໃຫຍ່ເຂັ້ມແຂງຂອງໂລກແມ່ຜູ້ເຄີຍຮາຍເຄີຍວ່າໃຫ້ລູກນັ້ນ ເປັນທັມມະດາແລ້ວ ຍັງນີ້ລາວກໍຍັງເປັນເພງເກົ່າຢູ່ ທັງຊຸກໃຈວ່າ ລູກບໍ່ມີສຸຂພາບແຂງແຮງ ຍອນເສິກສົງຄາມຫົກປີຜ່ານມານັ້ນ ຕໍ່ໄປລາວຈຶ່ງເວົ້າເຣື່ອງເພື່ອນຝູງແຕ່ເກົ່າແຕ່ຫຼັງພຸ້ນມາ ແຕ່ເຣື່ອງວ່າ ຊັຍຊນະແນວຍິ່ງໃຫຍ່ນັ້ນ ລາວບໍ່ໄດ້ຍົກອອກມາເລີຍ.

ຜົນທີ່ສຸດກໍເລີຍຕັດສິນໃຈໄປພອນ ເພື່ອເປັນກຽດແກ່ລູກຢູ່ທີ່ເຟຣເດີຣິກເບີກ ເມື່ອສອດແຂນກັບລູກຊາຍຈູງແມ່ເຂົ້າໄປໃນຫ້ອງ ແມ່ເຫັນວ່າລູກຕົນຖືກຕ້ອນຮັບຢ່າງເປັນຜູ້ຍິ່ງໃຫຍ່ເໝືອນເດີມ ລູກນຳລູກຊົ່ວລະຍະນຶ່ງແລ້ວຈຶ່ງອະທິບາຍວ່າ ເຖິງເວລາ

ແລ້ວ ທີ່ພູ້ເຖົ້າຈະຕ້ອງໄປນອນ ແລະໃຫ້ລູກຊາຍເປັນຜູ້ພາແມ່ເມືອ ແລ້ວວໍ່ຊິງຕັນກໍກັບຄືນໄປມ່ວນຊື່ນນຳໝູ່ຕູ່ໄປແລະເລົ່າລືມສູ່ເພື່ອນຝູງທັງພວກໃກ້ຄຽງຟັງວ່າຫຼັງຈາກທີ່ໄດ້ສູ້ຣົບພວກອັງກິດມາແລ້ວລາວມີເວລາຕັ້ງໜວງໝາຍໃນໂອກາດເຊັ່ນນີ້ ໃນຄືນນັ້ນເຮົາຈະສັງເກດໄດ້ວ່າ ລາວພາໝູ່ຟ້ອນລຳ ແລະມ່ວນຊື່ນກັນຢ່າງເປັນສຸກໃຈແທງ.

ສຳລັບວໍ່ຊິງຕັນແລ້ວ ການທີ່ມີຊັຍໄດ້ປົດປ່ອຍເອົາຢອກທາວໄດ້ນັ້ນຍັງບໍ່ເປັນທີ່ສິ້ນສຸດຂອງສົງຄາມເທື່ອ ລາວພັກຜ່ອນຢູ່ເມົ້າເວີນົງເຮືອນທີ່ຮັກຂອງລາວໄດ້ພຽງແຕ່ສອງມື້ ແລ້ວກໍ່ຂຶ້ນໄປຢູ່ພາກເໜືອອີກສອງປີ ເພື່ອໄປຈັດຊວນອອນເອົາສະພາທີ່ບໍ່ເຄີຍສິ້ນໃຈ ໃນການເຮັດການສ້າງປ່ານໃດນັ້ນ ໃຫ້ມັກວຽກມັກການ ເຖິງແມ່ນວ່າບໍ່ມີເສີກສົງຄາມກໍ່ດີແຕ່ລາວກໍໄດ້ຄິດໄວ້ສເມີວ່າ ຈະຕ້ອງໃຫ້ມີກອງທັບກຽມໄວ້ ໃຫ້ອະເນຣກັນເຈຣະຈາໄດ້ຢ່າງເຂັ້ມແຂງໃນຍາມສງົບ ເທື່ອນີ້ກໍ່ບໍ່ຕ່າງແຕ່ຄາວກ່ອນ ຍອມວ່າບໍ່ມີສະບຽງອາຫານ ເຄື່ອງນຸ່ງຂອງຖີ້ແລະເງິນກໍ່ຂາດເຂີນ. ເມື່ອມາຄິດຈະຊອກຫາຄວາມສັນຕິສຸກເທົ່າໃດ ບັນຫາຕ່າງໆກໍແຜງຂຶ້ນມາເທົ່ານັ້ນຢູ່ໃນກອງທັບທີ່ອັບສົນຈົນໃຈນັ້ນ.

ບັນຫາອັນນຶ່ງອັນຍາກເກີດຂຶ້ນ ເມື່ອພວກນາຍພົນຂອງວໍ່ຊິງຕັນສິ່ງຈົດໝາຍມາເວົ້າວ່າ ຖ້າຢາກໃຫ້ມີຣັຖບານດີເກີດໄດ້ແກປະເທດນີ້ ກໍ່ແມ່ນແຕ່ໃຫ້ວໍ່ຊິງຕັນເປັນເຈົ້າຊີວິດສາ. ວໍ່ຊິງຕັນຈຶ່ງຕອບໄປວ່າ ໃນຍາມໄປສູ້ຣົບຕີບຕີສັດຕູຢູ່ນັ້ນກໍ່ບໍ່ເຫັນວ່າຈະມີສິ່ງໃດພາໃຫ້ລຳບາກຍາກໃຈຫຼາຍກວ່າຂ່າວວ່າ ກອງທັບ

ຈະມີຫົວຄິດແນວນີ້  ລາວແຖມຄຳໃຫ້ພວກພົນຂອງລາວອີກ ວ່າ ຖ້າເຂົາເຈົ້າຫາກຮັກປະເທດເຂົາເຈົ້າ  ຖ້າບໍ່ຢາກໃຫ້ສິ່ງຮ້າຍທີ່ເປັນມານັ້ນຕົກມາເປັນໃສ່ເຂົາເຈົ້າແລະລູກເຕົ້າຂອງເຂົາເຈົ້າອີກ ແລະຖ້າວ່າເຂົາເຈົ້າຫາກນັບຖືລາວ ຂໍໃຫ້ລືມຄວາມຄິດວ່າຢາກໃຫ້ລາວເປັນເຈົ້າຊີວິດນັ້ນເສັຽ.

ທາງສະພາກໍໄດ້ຕັດສິນປ່ຽນໃຈໃນສິ່ງທີ່ສັນຍາໄວ້  ສັນຍາມີຢູ່ວ່າ ຈະໃຫ້ບັນດານາຍທະຫານໄດ້ຮັບເງິນທີ່ເຂົາເຈົ້າໄດ້ຮັບໃຊ້ຣາຊການແຕ່ກ່ອນພຸ້ນມາ  ແລະໃຫ້ເຂົາເຈົ້າໄດ້ຮັບເງິນເດືອນຫ້າປີຫຼືວ່າໃຫ້ເຂົາເຈົ້າໄດ້ເງິນເດືອນເຄິ່ງນຶ່ງໄປຕລອດຊີວິດຂອງເຂົາເຈົ້າ ມາບັດນີ້ຈຶ່ງມີປະກາດວ່າບໍ່ໄດ້ດອກ ຈຳພວກນາຍທະຫານທີ່ຍາກຈົນ ຊຶ່ງໄດ້ຂາຍເຄື່ອງນຸ່ງຖື ເພື່ອມາຊື້ເຂົ້າປາອາຫານພວກທີ່ໃຊ້ຢືມຂອງເຂົາ ເພື່ອໄປຫາໂຮເນື້ອມາເປັນອາຫານນັ້ນ ກໍເກີດຄຽດແຄ້ນຂຶ້ນຢ່າງໃຫຍ່  ເຂົາເຈົ້າຈຶ່ງເຮັດຈົດໝາຍວຽນສະບັບນຶ່ງເຕືອນກັນໃຫ້ສູ້ເພື່ອກູ້ສິດເຂົາເຈົ້າ ໃນຈົດໝາຍນັ້ນເຂົາເຈົ້າໄດ້ຖາມເຖິງເຫດຜົນວ່າເປັນຫຍັງຈຶ່ງໃຫ້ແຕ່ພວກເຂົາເຈົ້າເປັນຝ່າຍເສັຽປຽບຈາກການປະຕິວັດແຕ່ຝ່າຍດຽວ  ຫຼາຍມື້ຕໍ່ມາ ກໍມີຈົດໝາຍສະບັບໃໝ່ອອກມາອີກມີເນື້ອຄວາມຮ້າຍແຮງກວ່າເກົ່າອີກ ເມື່ອເປັນເຊັ່ນນີ້ຈົດໝາຍຍັງຊຶກຊວນວ່າ ຈະມີຄວາມສງົບມາແລ້ວກໍຕາມ ພວກເຈົ້າຢ່າວາງປືນຂອງໝູ່ເຈົ້າ  ຈົນເຖິງເວລາທີ່ພວກເຈົ້າຈະໄດ້ຮັບຄວາມເປັນທັມຕາມສັນຍາຕາມສິດຂອງພວກເຈົ້າ.

ສອງວັນຕໍ່ມາ ວໍຊິງຕັນຈຶ່ງຮຽກປະຊຸມພວກນາຍທະຫານ

ເທື່ອນີ້ ຜູ້ທີ່ເຂົ້າໃຈແລະເຄີຍຄິດວ່າ ການປະຕິວັດເປັນຂອງທີ່ເກີດມາໄດງາຍ ໃນນັ້ນມີນອຍຄົນທີ່ຈະເຂົ້າໃຈວາການເຣີ່ມຕົ້ນເປັນຊາດຂຶ້ນໄດນັ້ນແມ່ນເປັນເວລາຫຽງຍາກລຳບາກທີ່ສຸດ ໃນວັນທີ ໑໘ ເດືອນ ມີນາ ໑໗໗໕ ເປັນເວລາທີ່ອະເມຣິກາຈະຕອງຕັດສິນໃຈວາ ຈະເດີນທາງເສັ້ນໃດໃນອະນາຄົດ. ໃນເວລານັ້ນມີພວກຄຽດແຄນ ພາກັນເຄີຍຂະບວນເຂົ້າໄປສູ່ໂຮງການ ວໍຊິງຕັນ ກັບຫົວໜານາຍທະຫານກໍ່ພາກັນອອກໄປສູ້ພວກເຂົາ ໃນຂນະນັ້ນ ວໍຊິງຕັນຈຳເປັນໄດໃຊອຳນາດອັນເດັດຂາດ ປາບໃຫຮາບຄາບໄປຕາມທາງປະຕິວັດ ອັນເຄີຍເປັນມາໃນປວັດສາດ: ໂດຍວິທີສາງຣັຖບານຂຶ້ນດວຍກຳລັງທັບ ໃນຍາມນັ້ນ ກອງທັບຂອງອະເມຣິກັນກໍ່ກຽມພ້ອມ ແລະຫັນທາງທີ່ຈະກຳອຳນາດໃນວັນນັ້ນປີ ໑໗໘໙ ຈຶ່ນວາ ວໍຊິງຕັນຂອງໄດຂຶ້ນໄປກາວຕໍ່ພວກເຂົາເຈົ້າ.

ລາວລົມນຳບັນດານາຍທະຫານ "ໃນຖານເພື່ອນມິດຄ້າຍກັບນອງອາຍ" ເພື່ອຂໍບໍ່ໃຫເຂົາເຈົ້າເອົາຄວາມຄິດຊົ່ວປ່າວຂາວກັນມາຄາວກ່ອນນັ້ນ ລາວຈຶ່ງໃຫສັນຍາໄວວາຈະທຳທຸກສິ່ງທຸກຢ່າງໃນຂອບເຂດອຳນາດຂອງລາວ ເພື່ອເອົາຊຸມະສະພາຈົນໄດໃນເຣື່ອງໜີ້ຢູ່ນັ້ນ ລາວຂໍນຳພວກເຂົາເຈົ້າບໍ່ໃຫທຳສິ່ງໃດສິ່ງນຶ່ງ ຊຶ່ງຈະເຊື່ອມເສັຽກຽດ ແລະຊື່ສຽງອັນດີຂອງເຂົາເຈົ້າ ລາວຂໍໃຫເຂົາເຈົ້າສະແດງໃຫໂລກຮູດວຍການ ກະທຳຂອງເຂົາເຈົ້າວາຄວາມປະພຶດຂອງຄົນນັ້ນຍັງມີທາງຈະທຳໃຫ ນັ້ນດີເລີດໄດຢູ່ມາກ.

ຕໍ່ໄປວໍ່ຊິງຕັນຈຶ່ງຕັ້ງຕົ້ນອ່ານຈົດໝາຍກ້ານນຶ່ງຂອງທ່ານ ໂຈແຊບໂຈນ ທີ່ເປັນສະມາຊິກສະພາຜູ້ນຶ່ງ ຈາກເວີຊີເນັຍ ຜູ້ທີ່ພອມທາງກອງທັບ ແລະເຫັນດີນຳຄຳຂໍຂອງກອງທັບ ອານຸຍູ້ຕັ້ງຫຼາຍຊົ່ວໂມງ ແລະຕົວໜັງສືກໍຂຽນບໍ່ແຈ້ງ ຕາວໍ່ຊິງຕັນຮູ້ສຶກເມື່ອຍເລີຍ ເຫັນບໍ່ຄັກ ລາວຈຶ່ງເອົາແວ່ນຕາສຳລັບອ່ານໜັງສືທີ່ໄດ້ມາຈາກຟີລາແດນເຟັຍມາໃສ່ ລາວຂໍໂທດນຳພວກພົນຂອງລາວທີ່ໄດ້ເຮັດໃຫ້ເຂົາເຈົ້າຖາ ເຮັດວຽກເຮັດການມາກໍຫຼາຍປີເພື່ອຊວນຊູເຂົາເຈົ້າ ລາວຈຶ່ງຮູ້ວ່າດຽວນີ້ເລີຍເບິ່ງບໍ່ເຫັນຄັກປານໃດ.

ເນື້ອຄວາມອັນຈິງໃຈໃນທຳນອງເວົ້າຢ່າງງ່າຍໆນັ້ນໄດ້ເປັນສິ່ງທີ່ເຖິງອົກເຖິງໃຈພວກຄົນຢູ່ໃນຫ້ອງນັ້ນ ພໍດີອ່ານຈົດໝາຍນັ້ນສຸດວໍ່ຊິງຕັນກໍອອກຈາກຫ້ອງໄປຫຼາຍເດືອນມາພວກພົນທັງຫຼາຍຈຶ່ງລົງມະຕິກັນວ່າຈະລືມຄວາມຄິດທີ່ເຄີຍຄຽດແຄນຕັ້ງມີໃນຈົດໝາຍວຽນນັ້ນ ແລ້ວພາກັນມອບຄວາມຫວັງໃນອະນາຄົດໄວ້ນຳວໍ່ຊິງຕັນ.

ເມື່ອກັບມາຮອດໂຮງການແລ້ວ ທ່ານວໍ່ຊິງຕັນກໍຂຽນຈົດໝາຍເວົ້າເປັນເນື້ອຄວາມອັນເຂັ້ມແຂງເດັດຂາດໄປຫາສະພາເພື່ອຂໍໃຫ້ພວກພົນຂອງລາວໄດ້ຮັບສິ່ງທີ່ເຂົາຄວນໄດ້ ຕາມທີ່ສັນຍາໄວ້ ລາວຂຽນວ່າ ທະຫານຂອງລາວບໍ່ໜາຈະໄປຮັບເສິກແລ້ວປະປ່ອຍໃຫ້ເຂົາເຖົ້າແກ່ໄປເອງ ໂດຍບໍ່ມີໄດ້ຈ້າງ ແຕ່ອັດດຽວ ເຂົາບໍ່ຄວນຈະກາງຕໍ່ມີຊີວິດນຳຂອງທານຈາກຄົນໃຈບຸນທານໃຫ້ເທົ່ານັ້ນ ຫຼື ບໍ່ຄວນສະແດງວ່າ ເຂົາເປັນຄົນທີ່ບໍ່ມີຄຸນ

ຄ່າຫລັງ ເຂົາບໍ່ຄວນປ່ອຍໃຫ້ຊີວິດເປັນໄປແບບຍາກຈົນ ເພາະວ່າເຂົາເຄີຍຜ່ານຊີວິດອັນມີກຽດມາກແລວ ຖ້າວ່າ ພວກເຂົາເຈົ້າຫາກປ່ອຍໃຫ້ສິ່ງບໍ່ດີເຫຼົ່ານັ້ນ ມາຄອບຄອງຈິດໃຈແລວ ວໍຊິງຕັນຈະຮູ້ສຶກເສັຽອົກເສັຽໃຈທີ່ສຸດ "ໃນຊີວິດຂ້າງໜ້າຂອງລາວເອງ".

ເດືອນນຶ່ງຕໍ່ມາ ກໍໄດ້ຍິນຂ່າວຄວາມສງົບ ແລະທາງສະພາກໍລົງມະຕິ ຈະຈ່າຍເງິນໃຫ້ແກ່ພວກນາຍທະຫານ ທີ່ໄດ້ອອກຈາກກອງທັບໄປແລວນັ້ນເຕັມທັງຫ້າປີ ການປະຕິວັດກໍເລີຍເລີກໄປ.

ວໍຊິງຕັນໄດ້ລະງັບການປະຕິວັດ ໂດຍບໍ່ໃຫ້ມີການແກ້ດົງກັນໄປໃນທາງບໍ່ດີ ແລວລາວຈຶ່ງແນະນຳກັນໄປໃນທາງທີ່ ຈະນຳຜົນ ປໂຍດອັນດີມາໃຫ້ແກ່ຊາດ ພໍເມື່ອເຖິງເວລາທີ່ລາວຈະຕອງລາຈາກໜ້າທີ່ຜູ້ບັນຊາການສູງສຸດແລວ ລາວໄດ້ສົ່ງໜັງສືໄປຫາຜູ້ປົກຄອງ ແລະຄະນະແຕ່ງກົດໝາຍໃນ ໑໓ ຣັດ ໃນນັ້ນລາວກ່າວວ່າຕາມຄວາມສັງເກດຂອງລາວແລວ ລາວຄິດວ່າວິທີການປົກຄອງປະເທດແບບປັດຈຸບັນນີ້ ບໍ່ແມ່ນແບບທີ່ດີສຳລັບໃຊ້ໃນການປົກຄອງປະເທດເລີຍ ລາວໄດ້ຂໍໃຫ້ບັນດາຣັດຕ່າງໆໂຮມເຂົ້າກັນຢູ່ພາຍໃຕ້ຜູ້ນຳຜູ້ດຽວ ລາວຍັງໄດ້ຂໍໃຫ້ຄົນໃນສະຫະຣັດລືມຄວາມບາດໝາງກັນທັງໝົດ ແລວມາຫອມໂຮມກັນສ້າງຄວາມດີແກ່ປະເທດ ອັນທີ່ລາວຕັ້ງໃຈເຮັດໃຫ້ຄົນທັງຫລາຍເຂົ້າໃຈ ກ່ອນອື່ນນັ້ນ ແມ່ນຢາກໃຫ້ບັນດາຣັດຕ່າງໆຢູ່ຫອມໂຮມກັນໃນຮູບນັ້ນເລື້ອຍໄປ ໂດຍບໍ່ມີການແຕກແຍກອອກ

ຈາກກັນຈັກເທື່ອ ການກະທຳອັນໃດທີ່ຈະພາໃຫ້ຣັດທັງຫຼາຍແຍກອອກຈາກກັນນັ້ນໃຫ້ຖືວ່າ ເປັນສິ່ງທີ່ຜິດຫຼັກຂອງເສຣີພາບແລະເອກຣາດຂອງອະເມຣິກາ.

ເປັນເວລາສີ່ປີເຕັມ ທີ່ຄົນຂອງວໍຊິງຕັນຈະເຂົ້າໃຈວ່າລາວເປັນຜູ້ສລາດຫຼັກແຫຼມພຽງໃດ ຕໍ່ຈາກນັ້ນແມ່ນພວກສະມາຊິກຂອງຣັດຕ່າງໆ ທີ່ມາປະຊຸມຢູ່ຟີລາແດນເຟັຽ ເພື່ອຮ່າງຣັຖທັມມະນູນ ຈຶ່ງໄດ້ມີໂອກາດເຂົ້າໃຈ ໃນຄວາມສລາດຫຼັກແຫຼມຂອງວໍຊິງຕັນວ່າ ລາວເປັນຜູ້ເຮັດໃຫ້ມີທັມມະນູນເກີດຂຶ້ນ ໃນຂນະນັ້ນເອງເຂົາເຈົ້າຈຶ່ງແຕ່ງຕັ້ງແຜນການໄວ້ໃຫ້ບັນດາຣັດທັງຫຼາຍກັບກາຍເປັນປະເທດອັນນຶ່ງອັນດຽວຂຶ້ນ. ຜູ້ທີ່ນັ່ງເປັນປະທານຂອງກອງປະຊຸມພວກບັນຍາຊົນທີ່ຮ່າງຣັຖທັມມະນູນນັ້ນແມ່ນຢອຣ໌ຊ ວໍຊິງຕັນເອງ ເວລາມີການຜິດຖຽງກັນກ່ຽວກັບການຈະຮັບຮອງເອົາຣັຖທັມມະນູນ ຊຶ່ງແບ່ງແຍກປະເທດນັ້ນ ກໍແມ່ນຢອຣ໌ຊ ວໍຊິງຕັນອີກ ເປັນຜູ້ມີພາຣະໜ້າທີ່ຫຼາຍກວ່າຜູ້ອື່ນ ເພື່ອແກ້ໄຂຄວາມເຂົ້າໃຈກັນຜິດທັງມວນ ໃນທີ່ກອງປະຊຸມລົງສົນຍາກັນທີ່ເວີຊີເນັຽ ວໍຊິງຕັນ ກໍສາມາດລະງັບການຜິດຖຽງກັນຢ່າງດຶງດັງຂອງທ່ານປາຕຣິກ ແຮນຣີ ກັບພວກນັກໂຕ້ວາທີຫຼາຍຄົນ ໂດຍບໍ່ໄດ້ກ່າວເວົ້າອັນໃດເລີຍ ລາວຊະນະດ້ວຍຄະແນນສຽງທາສຽງເທົ່ານັ້ນ ຊຶ່ງສະແດງວ່າ ເປັນຄະແນນສຽງທີ່ສົມບູນພຽງພໍດີແລ້ວ ສຳລັບຊາວອະເມຣິກັນສ່ວນຫຼາຍ ເຂົ້າໃຈທ່ານຢອຣ໌ຊ ວໍຊິງຕັນທີ່ເປັນຜູ້ຄິດແຕ່ງຣັຖທັມມະນູນມານັ້ນ ເປັນທີ່ເໝາະສົມດີສຳລັບປະເທດຊາດແລ້ວ.

ອີກປະການນຶ່ງ ເຊິ່ງເຂົາເຈົ້າຍັງໄດ້ລົງມະຕິ "ຮັບຮອງ" ເວລາເຂົາເຈົ້າສາບານວ່າ ຈະໃຫ້ ປອຣ໌ຊ ວໍຊິງຕັນ ປົກຄອງປະເທດຊາດໄປພາຍໃຕ້ກົດໝາຍຣັຖທັມມະນູນ ແລະເປັນປະທານາທິບໍດີຜູ້ທີ່ນຶ່ງອີກດ້ວຍ. ຜູ້ສຳຄັນໆຂອງຊາດ ທົ່ວທັງປະເທດ ໄດ້ສົ່ງຈົດໝາຍໄປຫາລາວທີ່ເມົ້າເວີນົງ ເພື່ອບອກໃຫ້ລາວຮັບ ໃນຂັ້ນຕົ້ນ ວໍຊິງຕັນກໍບໍ່ຢາກຮັບໜ້າທີ່ນັ້ນ ລາວເວົ້າວ່າ ຄວາມຄິດອັນນັ້ນພາໃຫ້ລາວເສົ້າໃຈ ອາຍຸລາວກໍ່ ໕໗ ປີ ແລະພົບພໍ້ກັບຄວາມຍາກລຳບາກທັງໄດ້ໃຊ້ກຳລັງທຸກຢ່າງມາເຖິງແປດປີເຕັມ ໄດ້ຮັບກຽດທັງຄວາມຍ້ອງຍໍຈາກຜູ້ຄົນມາຫຼາຍແລ້ວ ບັດນີ້ມາຖືກເຊີນໃຫ້ເຂົ້າຮັບໜ້າທີ່ບ່ອນອາດຈະພາໃຫ້ຊື່ສຽງເສັຽຫາຍໄປກໍເປັນໄດ້ ຢູ່ໃນສນາມຮົບ ຊຶ່ງລາວໄດ້ລະວັງມາແລະບໍ່ສມັກໄປພົວພັນນຳການເມືອງຂອງໂລກ ຖ້າວ່າລາວຫາກຮັບ ລາວຈະຕ້ອງໄດ້ພາກຈາກທີ່ຮັກທີ່ແພງຂອງລາວ ຄືເມົ້າເວີນົງ ແລະຈະບໍ່ໄດ້ຊ່ວຍເຫຼືອເພື່ອນຊາວໄຮ່ຊາວນາດ້ວຍກັນ ແຕ່ວ່າໃນເມື່ອຣັດຫາກລົງມະຕິຕັ້ງລາວເປັນປະທານາທິບໍດີຜູ້ທີ່ນຶ່ງແລ້ວ ລາວເລີຍຮັບວຽກນັ້ນ ດ້ວຍຄິດເຫັນວ່າ ເປັນຄວາມຮຽກຮ້ອງຕ້ອງການຂອງປະເທດຊາດຈຶ່ງຂືນບໍ່ໄດ້.

ແລ້ວລາວກໍຂຽນຈົດໝາຍສົ່ງຂ່າວ ທ່ານ ແຮນຣີ ນົກ ເຊິ່ງເປັນເພື່ອນເກົ່າຂອງລາວ ລາວບອກວ່າ ການທີ່ໄດ້ຮັບເປັນຜູ້ນຳຂອງຣັຖບານນີ້ດ້ວຍຄວາມຮູ້ສຶກຕ່າງຄືນຜູ້ອື່ນຊຶ່ງວ່າຈະຕ້ອງຕາຍ ຍອມການເຮັດການທຳຕ່າງໆ ອັນຜິດພາດຂອງລາວເອງ ລາວໄປຮັບໜ້າທີ່ໃໝ່ ດ້ວຍຄວາມໝາຍຢ່າງແຮງກ້າ

ເພື່ອຢັ້ງຢືນວ່າຣັຖທັມມະນູນຊຶ່ງລາວເປັນຜູ້ບາກບັ່ນຮຽກຮ້ອງຂຶ້ນ ມາແລະຮັບຮອງແລວນັ້ນ ຕອງເປັນຜົນອັນສຳເຣັດ.

ວຽກຂອງລາວເປັນວຽກໜັກແລະຍາກ ມັນບໍ່ຕ່າງຫຍັງ ກັບການຈັດຕັ້ງຣັຖບານນຶ່ງຂຶ້ນ ແຕ່ກ່ອນມາ ບໍ່ທັນເຄີຍທົດລອງ ຫຍັງມາເລີຍ ທຸກສິ່ງທຸກຢ່າງຈະຕ້ອງໄດ້ເປັນການຕັດສິນກັນ ເປັນຄັ້ງແຣກ ຮວມທັງວ່າສະພາຈະຕັ້ງເອີ້ນຊື່ໃຫ້ລາວວ່າແນວ ໃດ ເຂົາເຈົ້າໄດ້ຕັດສິນຮັບຄຳວ່າ "ປະທານາທິບໍດີ" ມີຄວາມ ຫຍຸ້ງຍາກອັນນຶ່ງຕື່ມເຂົ້າອີກ ທີ່ວ່າວໍຊິງຕັນຕ້ອງໄດ້ພະຍາຍາມ ເຮັດວຽກໃຫ້ໄດ້ຢ່າງຮອບຄອບກັບ ຜູ້ແທນການອື່ນໆ ຊຶ່ງໃຊ້ວິທີ ທຳງານແບບເກົ່າໆພຸ້ນຢູ່ ເຈົ້າຫົວໜ້າຜແນກເຫຼົ່ານັ້ນ ສົ່ງສາຍ ງານຕ່າງໆໃຫ້ສະພາໝົດໂດຍບໍ່ຜ່ານທາງປະທານາທິບໍດີເລີຍ.' ຖ້າວ່າ ວໍຊິງຕັນ ຫາກບອກໃຫ້ສົ່ງລາຍງານຕ່າງໆຂອງພວກນັ້ນ ຜ່ານລາວຕາມທີ່ບົ່ງໄວ້ໃນຣັຖທັມມະນູນນັ້ນ ກໍເກີດຂັດແຍ້ງກັນ ຂຶ້ນທັນທີລະຫວ່າງປະທານາທິບໍດີ ແລະສະພາ ອັນນີ້ ເຄີຍເຮັດ ເຄີຍມີມາຫຼາຍເທື່ອແລ້ວ ແຕ່ກ່ອນພຸ້ນວໍຊິງຕັນຈຶ່ງປະຕິບັດຕໍ່ມາ ເພື່ອຢັ້ງຢືນຄວາມຕັດສິນໃຈຂອງລາວນັ້ນຈະດີພຽງໃດ.

ລາວໄດ້ເຕືອນເຂົາເຈົ້າໄວ້ກ່ອນແລ້ວວ່າ ບໍ່ມີການຈຳ ເປັນຫຍັງໃນຂັ້ນຕົ້ນນີ້ ທີ່ຈະຕ້ອງການເອົາລາຍງານນຳຜແນກ ເຫຼົ່ານັ້ນ ລາວໄດ້ປ່ອຍໃຫ້ເຂົາເຈົ້າສົ່ງລາຍງານໄປໃຫ້ສະພາ ຕໍ່ໄປ ລາວດຳເນີນວຽກການໄປໂດຍການອ່ານຮູ້ຈາກໜັງສືພິມ ແລະຈົດໝາຍຂອງເຂົາເຈົ້າເອງ ພໍໄດ້ສາມເດືອນແລ້ວ ລາວຈຶ່ງຂໍໃຫ້ສົ່ງລາຍງານຫຍໍ້ກ່ຽວກັບວຽກຂອງເຂົາເຈົ້າມາໃຫ້

ລາວ ປາກົດວ່າບໍ່ມີຜູ້ໃດຄຽດຫຼືຂັດຂ້ອງຫຍັງ ແລ້ວລາວກໍໃຊ້ວິທີນຸ່ຄ່ອຍໆຕັ້ງຕົ້ນທຳການ ດູແລ ກວດເບິ່ງວຽກ ຂອງແຜນການຕ່າງໆຂອງຣັຖບານ ໂດຍຖືກຕ້ອງຕາມສິດແລະອຳນາດຕ່າງໆທີ່ມອບໝາຍໃຫ້ລາວດັ່ງໄດ້ລະບຸໄວ້ໃນຣັຖທັມມະນູນ ໃນເດືອນຕໍ່ໄປລາວຈຶ່ງຄ່ອຍໆກວດເບິ່ງວຽກໃນແຜນກູອື່ນອີກຕໍ່ໄປ.

ເຖິງແມ່ນວ່າ ທຸກສິ່ງທຸກຢ່າງຈະຕ້ອງຂຶ້ນກັບຜູ້ນຳຜູ້ເຂັ້ມແຂງກໍຈິງ ວໍຊິງຕັນ ຍັງຍິນດີປຶກສາຫາລືນຳສະພາຢູ່ສເມີ ໃນເຣື່ອງຕ່າງໆ ແຕ່ວ່າຫຼັງທີ່ດລອງມາຫຼາຍຄັ້ງຈຶ່ງມີປະສົບການອັນບໍ່ເປັນໜ້າເພິ່ງພໍໃຈຊັ້ໃຫ້ເຫັນວ່າ ປະທານາທິບໍດີບໍ່ສົມຄວນຈະຕ້ອງຢູ່ໃກ້ຊິດຕິດພັນກັບສະພາ ລາວເລີຍຕັດສິນໃຈວ່າທາງທີ່ດີແລ້ວລາວຈະຂຽນໄປຫາສະພາ ຫຼືຈະສົ່ງຜູ້ໃດຜູ້ນຶ່ງໄປອະທິບາຍໃຫ້ຟັງ ເພື່ອຈະໄດ້ປະຕິບັດໄປຕາມແນວຄວາມຄິດຂອງລາວແລ້ວຈຶ່ງຕັ້ງຕົ້ນທຳງານໄປໃນທຳນອງນັ້ນ ໂດຍບໍ່ໄດ້ທຳໃຫ້ໃຜເສັຽໃຈຈັກຄົນໃນສະພາ.

ຄວາມຫຍຸ້ງຍາກອັນນຶ່ງໃນໜ້າທີ່ວຽກການຂອງວໍຊິງຕັນກໍແມ່ນການຈັດຄົນເຂົ້າຮັບໜ້າທີ່ຕ່າງໆຂອງຣັຖບານ ຜູ້ໃດກໍປະສົງຢາກໄດ້ໜ້າທີ່ສຳຄັນໃນຣັຖບານ ນາຍທະຫານໃນກອງທັບແລະພວກອື່ນກໍພາກັນຍື່ນຄຳຮ້ອງມາຂໍເຮັດການນຳຣັຖບານຂອງສະຫະຣັຖ ວໍຊິງຕັນ ໄດ້ຕອບຄຳຮ້ອງທັງຫຼາຍເຫຼົ່ານັ້ນ ຕາມທີ່ລາວເຄີຍເວົ້າໄວ້ແຕ່ກ່ອນລາວມາຮັບເປັນຫົວໜ້າຣັຖບານ ຜູ້ໃດຜູ້ນຶ່ງຫາກພະຍາຍາມເອື່ອຍເອົາເຣື່ອງຄອບຄົວ ຫຼືເພື່ອນຝູງພັກພວກມາອ້າງ ເພື່ອຊອກການເຮັດນັ້ນ ອາດມີຫວັງນ້ອຍທີ່ສຸດ

ທີ່ຈະຖືກຮັບເອົາ.

ໃນຄວາມຄິດຈິດໃຈຂອງວໍຊິງຕັນແລ້ວ ສິ່ງສຳຄັນກ່ອນໝູ່ແມ່ນຕ້ອງມີຫຼັກກົດໝາຍທີ່ດີທີ່ສຸດ ເພື່ອວ່າ ຜູ້ຄົນຈຶ່ງຈະໄດ້ຮັບຄວາມເປັນທັມຢ່າງຖືກຕ້ອງຕາມກົດໝາຍ ລາວໃຊ້ເວລາຕັ້ງນານຫຼາຍຊົ່ວໂມງ ເພື່ອຄັດເລືອກ ແລະຊອກຫາວ່າຈະແຕ່ງໃຜມາເປັນຜູ້ຕັດສິນຢູ່ໃນສານສູງສຸດ ຊຶ່ງຕ້ອງເປັນຄນະຈ່າສານຜູ້ສຳຄັນທີ່ສຸດຂອງສະຫະຣັດ ທາງສະພາໄດ້ກຳນົດ ຈຳນວນຈ່າສານໄວ້ແຕ່ຫົກຄົນ ຊຶ່ງໃນຄະນະນັ້ນມີຜູ້ຢາກເປັນໆຈຳນວນເຖິງຮ້ອຍກວ່າຄົນຢູ່ແລ້ວ ວໍຊິງຕັນຈຶ່ງຕັດສິນໃຈເລືອກເອົາຈ່າສານຫົກທ່ານຈາກຣັດທີ່ມີຣາສດອນຫຼາຍ ສຳລັບຜູ້ຈະເປັນຫົວໜ້າຝ່າຍຍຸຕິທັມຫຼືຫົວໜ້າສານນັ້ນ ວໍຊິງຕັນໄດ້ຕັ້ງໃຫ້ທ່ານຈອນເຈທີ່ນິວຢອກ ທີ່ເປັນຜູ້ສາມາດໃນດ້ານກົດໝາຍມາວ່າໜ້າທີ່ການ.

ທີ່ປຶກສາຂອງສາຂາສະພາອະເມຣິກັນ ກໍ່ຍິນດີຮັບເອົາໝົດທຸກຄົນໃນຄະນະທີ່ວໍຊິງຕັນຢາກຕັ້ງໃຫ້ວ່າໜ້າທີ່ສຳຄັນໆທັງຫຼາຍເຫຼົ່ານັ້ນ ສຳລັບວຽກແນວອື່ນ ຊຶ່ງຈະຕ້ອງມີການຕັ້ງກັນໃສ່ ລາວກໍ່ເຮັດໄດ້ເຊັ່ນດຽວກັນ ໂດຍໃຊ້ວິທີຄັດເລືອກເອົາຄົນຂອງລາວຢ່າງເໝາະສົມດີມາຈາກຣັດຕ່າງໆ ຣັດໃດກໍ່ຮູ້ສຶກພໍອົກພໍໃຈໝົດ ແລະບໍ່ມີການຢານກັນລື່ນກັນເຫຼືອ ວໍຊິງຕັນຍັງເປັນນັກການເມືອງທີ່ມີຄວາມສາມາດອີກດ້ວຍ ລາວແຕ່ງຕັ້ງຜູ້ນຶ່ງ ຢູ່ເວີຊິເນັຽຜູ້ທີ່ລົງມະຕິຄັດຄ້ານຣັຖທັມມະນູນໃຫ້ໄປປະຕິບັດໜ້າທີ່ອັນສຳຄັນ ເພື່ອເປັນວິທີເອົາຊະນະຈິດໃຈຄົນ ໃນຣັດທີ່ເປັນບ້ານເກີດຂອງຕົນເອງໃຫ້ຮັບນັບຖືຣັຖທັມມະນູນ.

ສ່ວນພວກອື່ນທີ່ວໍຊິງຕັນຄັດເລືອກເອົາເຂົ້າຮັບໜ້າທີ່ສຳຄັນນຳໃນວົງຣັຖບານຂອງລາວກໍມີແຕ່ຜູ້ສາມາດເຊັ່ນ ໂໝາສ ແຈບເຟີຊັນ ອາເລັກ ຊັນເດີ ແຮມິນຕັນ ແລະພວກເພື່ອນເກົ່າຂອງລາວແຕ່ປາງຢູ່ກອງທັບນຳກັນພູມ ຄື ແຮນຣີນັກ ກ່ອນຈະຕັດສິນໃຈໃນສິ່ງສຳຄັນອັນໃດອັນນຶ່ງ ວໍຊິງຕັນ ມັກຈະໄປປຶກສາຫາລືນຳຄົນພວກນີ້ເສັຽກ່ອນ.

ໃນທ້າຍປີ ໑໗໘໙ ລາວໄດ້ຂຽນໜັງສືຫາ ເພື່ອນຜູ້ນຶ່ງຊື່ ກາເວີເນີມໍຣິດ ເພື່ອເລົ່າສູ່ຟັງວ່າ ຣັຖບານແຫ່ງຊາດໄດ້ຖືກຈັດຕັ້ງຂຶ້ນແລ້ວ ແລະຕາມທີ່ໄດ້ຍິນມາທຸກຄົນກໍປາກົດວ່າຊົມຊື່ນຍິນດີນຳແທ້ໆ. ແຕ່ໃນເວລາດຽວກັນນັ້ນ ສິ່ງທີ່ເກີດຢູ່ພາຍໃນຫຼືຢູ່ພາຍນອກສະຫະຣັດ ນັ້ນສະແດງໃຫ້ຮູ້ວ່າປະເທດຊາດກໍຮູ້ສຶກຕ້ອງການກຳລັງປັນຍາແລະການຕັດສິນໃຈຈາກວໍຊິງຕັນຫຼາຍຂຶ້ນສເມີ.

ເມື່ອພວກຊາວໄຮ່ຊາວນາ ໗.໐໐໐ ຄົນໄດ້ລວມກັນຕໍ່ສູ້ບໍ່ຍອມເສັຽຄ່າລາຍໄດ້ເຂົ້າຣັດ ວໍຊິງຕັນກໍໄດ້ຈັດເອົາກອງທັບໄປລະງັບເຫດການທັນທີ ເມື່ອພວກອິນເດັຽໄດ້ສູ້ຮົບກັບກອງທັບທີ່ເອີ້ນວ່າກອງທັບຈຳເປັນຂອງອະເມຣິກັນ ນັ້ນ ວໍຊິງຕັນກໍໄປລະງັບໄດ້ອີກຢ່າງໄວວາ ລາວໄດ້ສົ່ງບັນດານາຍພົນຜູ້ສຳຄັນຂອງລາວໄປສູ່ເຂດຊາຍແດນ ເພື່ອຢຶດເອົາດິນດານຕາເວັນຕົກພາກເໜືອເພື່ອໃຫ້ຊາວອະເມຣິກັນຈັບຈອງຢູ່ສ້າງ ແລະໄດ້ໄປບັງຄັບໃຫ້ຊາວອັງກິດອອກຈາກບໍຣິເວນດີຕຣອຍ.

ຕໍ່ໆມາວໍຊິງຕັນຈຶ່ງສັງເກດໄດ້ວ່າ ຄວາມຫວັງອັນແຮງ

ກ້າຂອງອະເມຣິກັນຢາກຢູ່ເປັນອັນນຶ່ງອັນດຽວກັນນັ້ນ ມັນຂຶ້ນຢູ່ນຳອຳນາດ ແລະຄວາມເຂັ້ມແຂງຂອງປະທານາທິບໍດີຂອງອະເມຣິກັນເອງຕລອດເວລາທີ່ເປັນປະທານາທິບໍດີນວໍຊິງຕັນເຮັດໃຫ້ແນ່ໃຈຂອງລາວວ່າ ບໍ່ໃຫ້ມີຜູ້ໃດຣິບລູອຳນາດນັ້ນໄດ້. ແລະເຣື່ອງແນວນີ້ ມີປວັດໄດ້ເວົ້າເລົ່າຕໍ່ກັນມາແລ້ວ ຈື່ນຈຳກັນໄດ້ໃນຄາວທີ່ພວກນາຍພົນຊາວອັງກິດ ທົດລອງຢາກຢຸບຍອບລາວໃຫ້ຕຳຕອຍແລະໄຮ້ຄວາມສຳຄັນລົງດ້ວຍການກາວນາມລາວວ່າ "ທ່ານ" ແທນທີ່ຈະວ່າ "ນາຍພົນ" ຕາມສົມຄວນ.

ເຣື່ອງເກີດຂຶ້ນເມື່ອເວລາວໍຊິງຕັນໄປຢາມເມືອງນາຊາຊູແຊດ ຊຶ່ງທ່ານຈອນ ແຮນຄຸກ ເປັນຜູ້ປົກຄອງເມືອງນັ້ນ ແຜນການໄປຢ້ຽມຢາມຄັ້ງນີ້ ກໍ່ເພື່ອໃຫ້ແຮນຄຸກມາພົບກັບວໍຊິງຕັນຢູ່ໃນຫ້ອງຂອງລາວກ່ອນ ແລ້ວໃຫ້ມີການກິນລ້ຽງຮັບຕ້ອນກັນຢ່າງໃຫຍ່ຕິດຕາມໃນຂັ້ນຕໍ່ໄປ ຢູ່ທີ່ເຮືອນຂອງແຮນຄຸກເອງ. ກ່ອນເວລາເລັກນ້ອຍທີ່ຈະໄດ້ພົບກັນ ແຮນຄຸກໄດ້ສັ່ງຄົນໄປຄອບວ່າບໍ່ສະບາຍແລະບໍ່ສາມາດໄປຮ່ວມການກິນລ້ຽງໄດ້ ເມື່ອເປັນເຊັ່ນນັ້ນ ວໍຊິງຕັນກໍ່ສັງເກດໄດ້ທັນທີວ່າ ຄົນຜູ້ນັ້ນທີ່ເຄີຍເປັນສັດຕູກັນມາແລ້ວໃນສະພາກົດໝາຍ ຢາກສະແດງຄວາມເປັນຜູ້ຍິ່ງໃຫຍ່ຂອງເມືອງນາຊາຊູແຊດອອກມາ ໂດຍວິທີການຂັດໃຫ້ປະທານາທິບໍດີມາຢາມຕົນກ່ອນ ສ່ວນວໍຊິງຕັນ ບໍ່ໄດ້ສະແດງຄວາມຄຽດແຄ້ນຫຍັງອອກມາ ພຽງແຕ່ສັ່ງອອກໄປວ່າ ຈະບໍ່ໃຫ້ມີການກິນລ້ຽງຢ່າງຄຶກຄື້ນໃນຄືນນັ້ນ ມື້ຕໍ່ມາແຮນຄຸກຈຶ່ງສັ່ງຄົນລາວໄປຫາວໍຊິງຕັນຫຼາຍຄັ້ງ ເພື່ອໄປຂໍອະພັຍໂທດ ພໍເມື່ອໄດ້ຮັບຄຳບອກ

ວ່າ "ປະທານາທິບໍດີຂອງສະຫະຣັດ" ມີເວລາຈະຮັບລາວໄດ້ໃນເວລາບ່າຍນຶ່ງຫາສອງໂມງ ທ່ານແຮນຣູກ ຜູ້ປົກຄອງເມືອງຈຶ່ງຟ້າວພົ່ງໄປພົບທ່ານປະທານາທິບໍດີໃນບໍ່ຊ້າ.

ການໄປຢ້ຽມຢາມຖາມຂ່າວນີ້ ເປັນໂອກາດໃຫ້ປະເທດຊາດໄດ້ເຫັນປະທານາທິບໍດີເຣັດວອຍກ໌ ການໄປຢ້ຽມຢາມຖາມຂ່າວນີ້ ຍັງເປັນໂອກາດໃຫ້ວໍຊິງຕັນສ້າງຄວາມຮູ້ສຶກຢ່າງເປັນພີ່ເປັນນ້ອງກັນ ໃຫ້ເກີດມີຂຶ້ນແກ່ຊາວອະເມຣິກັນ ທີ່ຖືສາສນາຕ່າງໆທຸກສາສນາ ທົ່ວທຸກແຫ່ງຢູ່ພາຍໃນປະເທດ ການໄປຢ້ຽມຢາມຖາມຂ່າວຜູ້ຄົນ ທີ່ຖືສາສນາຫຼາຍສາສນາຕ່າງໆກັນຢູ່ໃນປະເທດດຽວກັນນີ້ ວໍຊິງຕັນໄດ້ບອກເຂົາເຈົ້າວ່າ ຣັຖບານຂອງສະຫະຣັດ ບໍ່ໄດ້ມີຈຸດປະສົງຈະສົ່ງເສີມສາສນາໃດສາສນານຶ່ງ ໃຫ້ລື່ນເຫລືອກັນເລີຍ ທຸກໆຄົນມີສິດເລືອກນັບຖືປະຕິບັດສາສນາທີ່ຕົນມັກ ວໍຊິງຕັນເວົ້າວ່າ ຣັຖບານອະເມຣິກັນມີຄວາມປະສົງພຽງແຕ່ຂໍໃຫ້ຜູ້ທີ່ຢູ່ໃນປະເທດຈົ່ງຢູ່ໄປດ້ວຍກັນຢ່າງເປັນສຸກຕາມກົດໝາຍຂອງແຜ່ນດິນບັນຍັດນັ້ນດ້ວຍ.

ເວລາທີ່ ວໍຊິງຕັນພົບພໍ້ກັບຄວາມຫຍຸ້ງຍາກທີ່ສຸດ ກໍແມ່ນເວລາຮັບຕຳແໜ່ງເປັນປະທານາທິບໍດີ ເພື່ອລະງັບການຣົບຣາຂ້າຟັນຢູ່ທາງຝ່າຍພວກອັງກິດ ຫຼື ຝ່າຍປະຕິວັດຝຣັ່ງເສດ ອັນເກີດມີຢືດເຢື້ອ ມາແຕ່ພອນເສີກໃນປີ ໑໗໙໓ ພຸ້ນ ຄວາມຮູ້ສຶກອັນຮ້າຍແຮງຂອງຊາວອະເມຣິກັນ ແທບເກືອບຈະແບ່ງປະເທດຊາດອອກເປັນສອງຝ່າຍ ເຫດທີ່ພາໃຫ້ຣັຖບານ ວໍຊິງຕັນແຍກອອກເປັນສອງນັ້ນເປັນດັ່ງນີ້: ທ່ານແຈບເຟີຊັນ ຢູ່ຝ່າຍ

ຝຣັ່ງເສດ ທ່ານແຮມູ້ນຕັນຢູ່ຝ່າຍອັງກິດ ມີຫຼາຍໆເທົ່າ ທີ່ວ່າຊີ
ວິດອັງຫຼູຍທີ່ ໑໖ ແລ້ວ ກໍຕັ້ງຕົ້ນທຳສົງຄາມກັບອັງກິດ, ແລະ
ປາວຮ້ອງຂໍ "ໃຫ້ຜູ້ຄົນທັງຫຼາຍຈົ່ງຮ່ວມກັນທຳສົງຄາມສູ້ກັບເຈົ້າ
ຊີວິດໂດຍທົ່ວໄປ" ຜູ້ນຳຫນາຄົນໃໝ່ຂອງຝຣັ່ງເສດໄດ້ຂໍຮ້ອງ
ໃຫ້ສະຫະຣັດອະເມຣິກາທີ່ເປັນປະເທດໃໝ່ປະເທດນຶ່ງຈົ່ງເຂົ້າ
ຮ່ວມທຳສົງຄາມນຳກັນ ເຣື່ອງນີ້ບໍ່ທັນມີຜູ້ໃດໄດ້ສາງສຸມາຫຼາຍ
ກວ່າ ທ່ານຍອຣ໌ຊ ວໍຊິງຕັນ ເພື່ອໃຫ້ມີຄວາມສຸກກຸ້ມອຸ່ນເຢັນນັ້ນ
ແຕ່ແລ້ວ ວໍຊິງຕັນກໍບໍ່ແມ່ນແນວຄົນ ທີ່ຈະໄປເຂົ້າຮ່ວມເຣັດເສິກ
ໄດ້ຢ່າງງ່າຍດາຍດອກ ລາວຕອບໄປວ່າປະເທດຝຣັ່ງເສດແລະ
ປະເທດອະເມຣິກາໄດ້ຕົກລົງເຫັນດີຊ່ວຍເຫຼືອກັນແລະກັນ ແຕ່
ເມື່ອເກີດມີສົງຄາມຂຶ້ນມາ ຈາກປະເທດອື່ນເທົ່ານັ້ນ ລາວວ່າ
ແຕ່ໃນສົງຄາມປັດຈຸບັນນີ້ ແມ່ນຝຣັ່ງເອງ ເປັນຝ່າຍກໍ່ການຣົບ
ຣາຊາຟັນ ອີກຢ່າງນຶ່ງຣັຖບານ ທີ່ຝ່າຍອະເມຣິກາໄດ້ເຈັນສັນ
ຍານຳນັ້ນ ກໍໄດ້ປ່ຽນແປງສູນຫາຍໄປແລ້ວ ເຫດຜົນປະການ
ນຶ່ງອີກກໍ່ຄືວ່າ ການຄ້າຂອງອະເມຣິກາສ່ວນຫຼາຍ ຕິດຕໍ່ທາງອັງ
ກິດ ຖ້າຈະໃຫ້ໄປເຂົ້າຮ່ວມ ທຳສົງຄາມ ດັ່ງນີ້ ອາດຈະເປັນ
ການບໍ່ຮອບຄອບປານໃດສຳລັບອະເມຣິກາ ຊຶ່ງຍັງເປັນປະເທດ
ຂຶ້ນໃໝ່ ດັ່ງນັ້ນວໍຊິງຕັນຈຶ່ງຕັດສິນໃຈ ວ່າຈະບໍ່ເຂົ້າຮ່ວມທຳສົງ
ຄາມນຳຈັກຝ່າຍເລີຍຈະແມ່ນອັງກິດຫຼືຝຣັ່ງກໍຕາມ.

ຝ່າຍຝຣັ່ງເສດ ແລະພັກພວກ ທີ່ສນັບສນູນຊ່ວຍເຫຼືອ
ເຂົາ ໄດ້ພາກັນທຳທຸກຢ່າງເພື່ອໃຫ້ວໍຊິງຕັນ ປ່ຽນຄວາມຄິດ
ຈິດໃຈຂອງລາວ ເຂົາເຈົ້າໄດ້ຂຽນຂ່າວວິຈານແນວບໍ່ດີ ກ່ຽວ

ກັບວໍຊິງຕັນຫຼາຍຢ່າງ ລົງໃນໜັງສືພິມ ເຂົາເຈົ້າໄດ້ສົ່ງພວກ
ໄປປ່າວຫວງ ເລາະໄປຕາມເສັ້ນຖນົນ ຟີລາແດນເຟັຽ ທ່ານ
ແອດມົງ ເຊີເນ ນາຍທະຫານຜູ້ສຳຄັນຜູ້ນຶ່ງຂອງຣັຖບານຝຣັ່ງ
ເສດສົ່ງມາລົງຢູ່ທີ່ຊາແລດໂຕນ ກາໂຣລາຍນາ ນັ້ນກໍ່ຕັ້ງຕົນສະ
ແດງບົດບາດແບບເພິ່ນເປັນເຈົ້າຂອງປະເທດຂ້ອນເໝືອນກັນກັບ
ວ່າວໍຊິງຕັນບໍ່ມີສິດຫຍັງເລີຍ ລາວຈ້າງຄົນເພື່ອໄປສູ້ຣົບກຳປັ່ນ
ຂອງອັງກິດ ແລະວາງໂຄງການວ່າ ຈະນຳເອົາກຳລັງຕີເຂົ້າ
ໄປໃນພາກເໜືອດ້ານຕາເວັນຕົກຂອງການາດາ ລາວເວົ້າ
ອ້າງອອກວ່າຈະຈັດເປັນກອງທັບຂ້ອນ ເພື່ອໄປສູ້ຣົບພວກສະເປນ
ຢູ່ຟລໍຣິດາແລະລຸຍຊີອານາ ຢູ່ທາງພາກໃຕ້ ແລະປ່ອຍໃຫ້ນາຍ
ທະຫານຂອງຣັຖບານຝຣັ່ງເສດ ຊຶ່ງຢູ່ໃນບ້ານໃນເມືອງຂອງອະ
ເມຣິກັນ ເປັນຝ່າຍຊີ້ຂາດວ່າຈະຄວນຕັດສິນແນວໃດກ່ຽວກັບກຳ
ປັ່ນຂອງອັງກິດທີ່ຖືກຢຶດໄດ້ມາ.

ເວລາທ່ານເຊີເນ ເດີນທາງໄປທີ່ຟີລາແດນເຟັຽ ກໍ່ມີ
ພວກຄົນຄັບຄັ່ງມາຮັບນາຕອນ ຜູ້ສຳຄັນໆກໍ່ຟ້າວພາກັນຈັດການ
ກິນລ້ຽງກັນຂ້ອນຕ້ອນຮັບ ຫຼັງຈາກລາວມາຮອດໄດ້ຫາອາທິດ ທີ່
ເປັນເວລາອັນຊານານ ແລ້ວລາວຈຶ່ງໄປຢາມວໍຊິງຕັນ ທ່າທີ
ຂອງວໍຊິງຕັນໃນເວລາຮັບຕ້ອນນັ້ນ ໄດ້ເປັນໄປຢ່າງຮອບຄອບດີ
ແຕ່ບໍ່ເປັນທີ່ສນິດສນົມແກ່ລາວ ນາຍເຊີເນຜູ້ອາຍຸ ໓໐ ປີ ຈຶ່ງ
ເຂົ້າໃຈແລະເຫັນວ່າຕົນບໍ່ຖືກຮັບຕ້ອນເປັນຢ່າງດີຈາກປະທານາ
ທິບໍດີ ເພື່ອນຂອງລາວຢູ່ໃນວົງຈົດໝາຍເຫດ ກໍ່ນຳຂ່າວໃນ
ທາງບໍ່ດີກ່ຽວກັບວໍຊິງຕັນໄປຂຽນປ່າວໃຫ້ປະຊາຊົນຊາບວ່າ ວໍ

ຊິວຕັນໄດ້ເຮັດແຕ່ແນວຜິດຕາມສາຍຕາຂອງພວກປະຊາຊົນຂອງລາວ.

ນາຍເຊີເນ ຍິ່ງສະແດງທ່າທີອັນຂີງຂັງ ຂອງຕົນຕໍ່ໄປເລື້ອຍໆ ລາວໄດ້ຂໍໃຫ້ວໍຊິວຕັນປ່ອຍຕົວອະເນຣິກັນສອງຄົນ ຊຶ່ງຖືກຂັງຢູ່ທີ່ຟີລາແດນເຟັຽ ຍອມເປັນໃຈອັງກິດ ແລະຍອມການສ້າງເຫດອັນຕະລາຍອັນເປັນພັຍແກ່ປະເທດຊາດ ນາຍເຊີເນໄດ້ຂຽນຈົດໝາຍເມື່ອບ້ານເພື່ອຂາວວ່າຕົນຖືກເຊື້ອເຊີນໄປພູກຫີນຫູກແຫງ ແລະວ່າ "ອາຍເຖົ້າ ວໍຊິວຕັນ" ເຫັນເຊັ່ນນັ້ນກໍ່ພໍດີໃຈນຳໂຊກຊັຍນັ້ນ.

ໃນເວລານັ້ນ ພວກເຈົ້າຂອງຈົດໝາຍເຫດ ທີ່ພອມຝ່າຍຝຣັ່ງ ກໍ່ພາກັນໃຊ້ຄວາມຫຍາບຊາທີ່ສຸດ ມາຂຽນຂາວຂອງວໍຊິວຕັນ ຜູ້ເປັນຫົວໜ້າພວກລົງຂາວ ອະກູສິນ ອັນນີ້ ຜູ້ນຶ່ງແມ່ນໝູ່ເພື່ອນຂອງທ່ານແຈບແຟຊັນເອງ ຊື່ວ່າ ທ່ານ ຟີລິບເຟຣໂນ ຜູ້ທີ່ໃຊ້ເວລາສ່ວນຫຼາຍຢູ່ແນວໜ້າໃນຖັນແຖວພວກປະຕິວັດ ພາກອິນດີ ຕາເວັນຕົກ ເຟຣໂນໄດ້ຂຽນວິຈານລົງວ່າວໍຊິວຕັນເປັນຄົນອ່ອນແອຢູ່ນຳແຕ່ພວກລູບແຂງພັນຂາ ຊອມຊໍ່ຮັບແຕ່ໜ້າທີ່ອັນເຂົາມັກ ລາວບອກໃຫ້ວໍຊິວຕັນວ່າ ການເປັນປະທານາທິບໍດີນັ້ນຈະບໍ່ຍືນຍາວດອກ ເປັນ ຄຳເວົ້າຂອງລາວແບບທາທາຍວ່າຊີວິດຂອງວໍຊິວຕັນຈະເປັນອັນຕະລາຍ.

ພວກອື່ນຍັງໃຊ້ຄວາມຫຍາບຊາຫນັກລົງໄປອີກມາຕໍ່ຕ້ານວໍຊິວຕັນ ຂອງຂົດຽດຈັ່ງໄຮອັນບໍ່ເຄີຍໄດ້ຍິນເວົ້າໃຫ້ໃຜຈັກເທື່ອເຂົາກໍ່ເກັບອອກມາເວົ້າໃຫ້ວໍຊິວຕັນໃນຍາມນັ້ນ ພວກເດີນກະ

ບ່ອນທີ່ເຂົ້າຝ່າຍຝຣັ່ງເສດ ກໍພາກັນຮ້ອງວິພາກວິຈານໄປເຕັມຖນົ້ນຈຶ່ງພາໃຫ້ເກີດຄວາມຮ້ອນຮົນເປັນຫ່ວງຮອດຄວາມປອດພັຍຂອງປະທານາທິບໍດີຍອນ ວໍຊິງຕັນ ຈຳຕ້ອງໄດ້ຂໍໃຫ້ທ່ານແຈບເຟີຊັນ ບອກເພື່ອນຂອງລາວງົດການກະທຳເຊັ່ນນັ້ນ ແລະບອກວ່າ ລາວຮູ້ສຶກເສັຽໃຈເປັນອັນມາກ ທີ່ຖືກຄົນຂຽນຂ່າວແນວບໍ່ຈິງບໍ່ດີອອກວິຈານ ເປັນແບບຄວາມເວົ້າຢ່າງໄຮ້ມະນຸສທັມ ຫຼັງຈາກໄດ້ຊາບຂ່າວອັນເປັນເຣື່ອງພິເສດ ທີ່ສ້າງຄວາມເສັຽຫາຍອອກໃນຈົດໝາຍເຫດແລ້ວ ວໍຊິງຕັນກໍເກີດມີຄວາມຄຽດແຄ້ນຍິ່ງຢູ່ໃນທີ່ປະຊຸມແຫ່ງນຶ່ງລາວຈຶ່ງຮ້ອງປ່າວຂຶ້ນວ່າ ລາວຈະໄປຢູ່ໃນຂຸມຝັງສົບຂອງລາວພຸ້ນ ມາກກວ່າບ່ອນລາວຢູ່ດຽວນີ້ ລາວເວົ້າຕໍ່ໄປວ່າ ໃນຊີວິດຂອງລາວທີ່ມີຕໍ່ໄປນັ້ນລາວຊອບໃຈໄປດຳເນີນວຽກການແບບຊາວໄຮ່ຊາວນາພູມຫຼາຍກວ່າຈະຢູ່ເປັນເຈົ້າ.

ສິ່ງທັງຫຼາຍເຫຼົ່ານີ້ ພາໃຫ້ປະທານາທິບໍດີເຖົ້າ ຜົມ ປີ ອ່ອນກຳລັງແລ້ວເລີຍປ່ວຍ ໃນຈົດໝາຍສະບັບນຶ່ງທີ່ແຈບເຟີຊັນຂຽນໄປຂ່າວເພື່ອນຂອງລາວໆໄດ້ເວົ້າວ່າ ລາວເສົ້າໃຈຫຼາຍທີ່ເຫັນປະທານາທິບໍດີບໍ່ສະບາຍ ແຈບເຟີຊັນຂຽນວ່າ ແນ່ນອນວໍຊິງຕັນຕ້ອງປ່ວຍໜັກຍ້ອນຫຼາຍສິ່ງຫຼາຍຢ່າງທີ່ລາວຮູ້ຮັດ ແລະຂຽນເວົ້າສຽດສີລາວ ແຈບເຟີຊັນເລົ່າຕໍ່ໄປວ່າ "ຂ້ອຍຄິດວ່າລາວເປັນທຸກນຳຂອງເຫຼົ່ານັ້ນ ຫຼາຍກວ່າທຸກຄົນທີ່ຂ້ອຍເຄີຍເຫັນມາ".

ໃນເວລານັ້ນ ນາຍເຊີເນ ກໍເດີນທາງອ້ອມຮອບປະເທດຢ່າງສະບາຍໃຈ ແລະຖືກຕ້ອນຮັບເປັນຢ່າງດີຈາກທຸກຄົນ

ຕໍ່ໜ້າປະຊາຊົນແລ້ວ ວໍຊິງຕັນໄດ້ວາງທ່າຢ່າງງຽບໆ ບໍ່ຕອບ
ໂຕ ນາຍເຊີເນ ແລະເພື່ອນຂອງລາວແຕ່ປະການໃດ ແຕ່ປະ
ທານາທິບໍດີຮູ້ແລ້ວວ່າ ລາວເຮັດຫຍັງ ລາວເຫຼັ້ນລູກໄມ້ທີ່ລາວ
ມັກທີ່ສຸດ ຄືວ່າຄອຍຖ້າໂອກາດທີ່ສັດຕູຈະເຮັດສິ່ງໃດສິ່ງນຶ່ງພາດ
ພັ້ງກ່ອນອື່ນ ແລ້ວລາວກໍໄດ້ຂໍໃຫ້ຄົນຜູ້ນຶ່ງຂອງລາວຢູ່ເມືອງປາຣີ
ໃຫ້ສົ່ງຂ່າວທຸກຢ່າງທີ່ລາວຮູ້ມາໃຫ້ຮູ້ນຳ ໃນຊົ່ວເວລາສັ້ນໆເທົ່າ
ນັ້ນ ວໍຊິງຕັນກໍສາມາດຮູ້ຄວາມອ່ອນແອຂອງນາຍເຊີເນ ຄືວ່າ
ລາວມັກລືມເລື່ອງແຜນການຂອງລາວ ສູ່ຄົນພາຍນອກຟັງຫຼາຍ
ໂພດ.

ໃນຍາມນັ້ນ ວໍຊິງຕັນເສີຍຢູ່ ບໍ່ເຮັດຫຍັງບໍ່ເວົ້າຫຍັງ
ອັນຈະພາໃຫ້ໄດ້ເວົ້າລົມນຳປະຊາຊົນ ລາວຖ້າເສີຍຢູ່ ລາວຊີ້
ແຈ້ງອີກໃຫ້ເປັນທີ່ຮູ້ຕື່ມເທົ່ານັ້ນວ່າ ອະເມຣິກັນຈະບໍ່ເຂົ້າຝ່າຍ
ຝຣັ່ງແລະບໍ່ເຂົ້າຝ່າຍອັງກິດ ເພື່ອສູ້ຣົບກັນ ລາວຊອມເບິ່ງແລ້ວ
ກໍຮູ້ວ່ານາຍເຊີເນກຳລັງເສັຽຄວາມເຊື່ອເຟື່ອຈາກຊາວອະເມຣິ
ກັນລົງໄປເລື້ອຍໆ.

ຫຼັງຈາກ ນາຍເຊີເນ ທີ່ຖືລອງຍຶດເຮືອກຳປັ່ນອັງກິດມາ
ແຊມອາວຸດໃສ່ ແລ້ວບັງຄັບໃຫ້ໄປສູ້ຣົບຕໍ່ຕ້ານພວກອັງກິດຄືນ
ວໍຊິງຕັນກໍໄດ້ຫາຈັ້ງເຂົ້າຂັດຂວາງເພື່ອລະງັບນາຍເຊີເນ ນາຍ
ເຊີເນຄຽດແຮງຫຼາຍ ຈຶ່ງຍົວະໃຫ້ວໍຊິງຕັນປ່ອຍໃຫ້ຊາວອະເມຣິ
ກັນ ຕັດສິນໃຈເອງວ່າ ເຂົາຈະໄປສູ້ຣົບຕໍ່ຕ້ານພວກອັງກິດຫຼືບໍ່.

ນີ້ແມ່ນໂອກາດທີ່ ວໍຊິງຕັນ ຄອຍຖ້າມາ ເພື່ອຢາກຮູ້ວ່າ
ເພື່ອນຮ່ວມຊາດຂອງລາວເອງຈະເຂົ້າຝ່າຍປະທານາທິບໍດີຂອງ

ເຂົາເພື່ອໄປຕໍ່ສູ້ນາຍເຊີເນຫຼືບໍ່? ໃນເຣື່ອງນີ້ ວໍຊິງຕັນໄດ້ຊີ້ແຈ້ງຊ່ວຍພວກເຂົາເຈົ້າໃນການຈະຕັດສິນໃຈ ໂດຍເລົ່າໂລມິໃຫ້ຜູ້ຄົນຮູ້ເຖິງຄວາມຊົ່ວຂອງນາຍເຊີເນ ແລະຈົດໝາຍຫຼອກລວງຂອງມັນ ຂຽນມາຫາຣັຖບານອະເມຣິກັນ ຕັ້ງແຕ່ມັນເມື່ອຮອດເມືອງຝຣັ່ງ.

ເມື່ອຊາບລາຍລະອຽດທີ່ນາຍເຊີເນຂຽນເຣື່ອງໃດແລ້ວ ຊາວອະເມຣິກັນທັງຫຼາຍກໍເກີດມີຄວາມຄຽດແຄ້ນຂຶ້ນ ພວກປະຊາຊົນຈຶ່ງຈັດໃຫ້ມີການປະຊຸມກັນຂຶ້ນ ຕາມເມືອງຕໍ່ກັນໄປ ແລະພາກັນຂຽນຫາວໍຊິງຕັນເພື່ອແຈ້ງວ່າ ພວກເຂົາເຈົ້າເຊື່ອຖືແລະໄວ້ໃຈນຳລາວ ບັດນີ້ຈຶ່ງເປັນໂອກາດອັນງ່າຍແກ່ວໍຊິງຕັນ ເພື່ອຂໍຮ້ອງໃຫ້ຣັຖບານຝຣັ່ງ ຮຽກເອົາຕົວຂອງນາຍເຊີເນ ກັບເມືອເມືອງຝຣັ່ງ ແຕ່ວ່ານາຍເຊີເນບໍ່ກ້າກັບເມືອ ເພາະຢ້ານຖືກປະຫານຊີວິດ ຖ້າວ່າກັບເມືອ ດ້ວຍຄວາມດີອັນມີປະຈຳໃຈຢູ່ແລ້ວ ວໍຊິງຕັນກໍອະນຸຍາດໃຫ້ຄົນຜູ້ເຄີຍເປັນສັດຕູຂອງຕົນ ໃຫ້ຢູ່ໃນອະເມຣິກາຕໍ່ໄປຢ່າງສະບາຍ.

ເຖິງແມ່ນວ່າຈະມີແຕ່ຄວາມຫຍຸ້ງຍາກເກີດຂຶ້ນຢູ່ເລື້ອຍໆກໍຕາມ ວໍຊິງຕັນພະຍາຍາມເຮັດໃຫ້ອະເມຣິກາຫຼີກຈາກສົງຄາມຢູ່ສເມີ ໃນເວລານັ້ນ ວໍຊິງຕັນໄດ້ຍິນວ່າລາຟາແຢດ ຜູ້ທີ່ເຄີຍຮ່ວມຮົບນຳຝ່າຍຝຣັ່ງເສດ ຖືກບັງຄັບໃຫ້ໂຕນໜີ ຈາກເພື່ອນຮ່ວມຊາດຂອງຕົນ ໃນຍາມນັ້ນລາວໄດ້ຕົກຢູ່ໃນມືຂອງພວກອົສຕຣຽນ ວໍຊິງຕັນພິຈາຣະນາຊ່ວຍລາວ ໂດຍຝາກເງິນໄປຊ່ວຍຄອບຄົວຂອງລາວ.

ວໍຊິງຕັນມີຄວາມຫຍຸ້ງຍາກຫນັກຫຼາຍພໍສົມຄວນແລ້ວ ລາຟາແຢດຊ້ຳເອົາມາຕື່ມໃຫ້ອີກ ລາວເອົາລູກຊາຍຂອງລາວຊື່ວ່າ ຢອ໌ຊ ວໍຊິງຕັນ ລາຟາແຢດ ມາອະເມຣິກາ ໃນເວລາທີ່ສະຫະຣັດບໍ່ໄດ້ເປັນມິດກັບຝ່າຍຝຣັ່ງຫຼືຝ່າຍອັງກິດ ເຖິງແມ່ນວ່າຈະເປັນການເສັຽອົກເສັຽໃຈພຽງໃດກໍຕາມ ວໍຊິງຕັນໄດ້ຕັດສິນໃຈບໍ່ພົບຫນ້າຊາຍຫນຸ່ມ ແຕ່ຢ່າງໃດກໍດີ ລາວໄດ້ເຮັດທຸກຢ່າງແລ້ວເພື່ອໃຫ້ແນ່ໃຈວ່າເດັກຈະຕ້ອງມີເງິນພຽງພໍສຳລັບເດີນທາງຢູ່ໃນອະເມຣິກາ ແລະໃຫ້ມີຜູ້ຮັກຜູ້ແພງເບິ່ງດູແລຊ່ວຍ.

ຮອດທ້າຍປີທີ່ແປດແລ້ວ ທີ່ລາວດຳຣົງຕຳແຫນ່ງເປັນປະທານາທິບໍດີ ລາວຈຶ່ງພາຊາຍຫນຸ່ມ ເມື່ອຢູ່ເຮືອນທີ່ເມົ້າເວີນົງນຳ ແລະຄຣູສອນລາວກໍຢູ່ນຳກັນນັ້ນປະມານປີກວ່າ ຈົນວ່າລາຟາແຢດ ໃຫຍ່ເພິ່ງຕົນເອງໄດ້ ວໍຊິງຕັນເອົາເງິນຮ້ອຍໂດລາໃຫ້ລູກຊາຍຂອງລາຟາແຢດ ເພື່ອຊື້ເຄື່ອງນຸ່ງຕາມໃຈມັກ ເວລາເຖິງຍາມສັ່ງລາກັນ ວໍຊິງຕັນຈຶ່ງເອົາເງິນໃຫ້ຕື່ມອີກ ໓໐໐ ໂດລາ ເພື່ອເປັນຄ່າເດີນທາງກັບເມືອຝຣັ່ງເສດ.

# ໑໑. ການຈາກໄປອັນແສນເສົ້າ

ໃນຖານະເປັນປະທານາທິບໍດີ ວໍຊິງຕັນໄດ້ຮັບເງິນປີລະ ໒໕,໐໐໐ ໂດລາ ແຕ່ເມື່ອໃດລາວຕ້ອງການເງິນຫຼາຍກວ່ານັ້ນ ລາວຈຳເປັນໄດ້ແບ່ງທີ່ດິນຂອງລາວຂາຍ ດ້ວຍວ່າເວລາຢູ່ໄກ ເມົ້າເວີນົງ ບ່ອນດິນຂອງລາວຢູ່ ແລ້ວ ເປັນການລຳບາກແກ່ ລາວ ເພື່ອຈະບົວລະບັດມັນເໝືອນແຕ່ກ່ອນ.

ໂຊກຜົນອັນນຶ່ງ ທີ່ວ່າ ເມົ້າເວີນົງຕ້ອງສູນເສັຽເງິນລາຍ ໄດ້ນັ້ນ ກໍເປັນນຳວໍຊິງຕັນບໍ່ຢາກຂາຍຄົນທີ່ເປັນຂ້ອຍຂ້ານາໃຊ້ ຂອງລາວ ທີ່ລາວມີໄວ້ຈົນເຫຼືອໃຊ້ ເພື່ອເຮັດວຽກໄຮ່ວຽກນາ ຂອງລາວ ນັບແຕ່ອາຍຸຢ່າງເຂົ້າຂອນເຄິ່ງຄົນແລ້ວ ວໍຊິງຕັນໄດ້ ປ່ຽນຄວາມຄິດໃໝ່ກ່ຽວກັບການຄວບຄຸມພວກທີ່ເປັນຂ້ອຍຂ້ານາ ໃຊ້ ລາວມີພວກຂ້ອຍຂ້ານາໃຊ້ປະມານ ໓໐໐ ຄົນ ຊຶ່ງລາວ ມີຄວາມດີຕໍ່ເຂົາສເມີ ແຕ່ວ່າເຣື່ອງນີ້ເປັນເຣື່ອງບໍ່ພໍໃຈແກ່ວໍຊິງ ຕັນ ດ້ວຍວ່າຄົນທັງຫຼາຍຊື້ຂາຍຄົນຄືກັນກັບສັດໂພດໄປ.

ເມື່ອເປັນດັ່ງນີ້ ກໍມີການອະພິປາຍສິດຂອງມະນຸດສູ່ຊາວໜຸ່ມຟັງຢ່າງກວ້າງຂວາງ ເພື່ອສະແດງໃຫ້ຮູ້ທົ່ວກັນວ່າ ວໍຊິງຕັນ ບໍ່ເຫັນພ້ອມການທີ່ຈະຊື້ຂາຍຄົນໄປເປັນທາດ ມື້ນຶ່ງມີຄົນຜູ້ນຶ່ງຂໍເອົາຄົນທີ່ເປັນຂ່ອຍຂ້າຂອງລາວມາໃຊ້ໜີ້ ວໍຊິງຕັນ ຕາງເງິນທີ່ລາວເປັນໜີ້ ວໍຊິງຕັນເລີຍຕອບວ່າ ລາວຮັບບໍ່ໄດ້ ແລະຈະບໍ່ຊື້ຄົນມາເປັນທາດອີກແລ້ວ ລາວເວົ້າຕໍ່ໄປວ່າ ລາວຢາກຂໍໃຫ້ພາກັນເຊົາຊື້ຂາຍຄົນແບບນີ້ ບໍ່ຢາກໃຫ້ມີອີກຕໍ່ໄປ.

ໃນຈຳນວນຄົນໃຊ້ຂອງວໍຊິງຕັນ ມີຜູ້ນຶ່ງຊື່ວ່າ ບິລລີ ໄດ້ເດີນທາງໄປມານຳລາວແທບທຸກບ່ອນຕາມສນາມຮົບ ໃນປີຕໍ່ໆມາສຸດທ້າຍນີ້ ຄົນໃຊ້ຜູ້ນັ້ນໄດ້ພລາດລົ້ມ ຂາຫັກທັງສອງເບື້ອງຈົນຈະຍ່າງບໍ່ໄດ້ ເມື່ອວໍຊິງຕັນ ໄດ້ລາອອກຈາກໜ້າທີ່ເປັນປະທານາທິບໍດີແລ້ວ ນາຍບິລລີໄດ້ຂໍຕິດຕາມວໍຊິງຕັນໄປຊື້ງຫຼວ ລາວກໍບໍ່ຂືນ ແຕ່ພໍເມື່ອເດີນໄປຮອດຟີລາແດລເຟັຽ ບິລລີຮູ້ສຶກເຈັບປວດຫຼາຍເດີນທາງຕໍ່ໄປບໍ່ໄດ້ ລາວຈຶ່ງໄດ້ຢູ່ທີ່ນັ້ນ ເມື່ອເຖິງນິວຢອກແລ້ວ ວໍຊິງຕັນ ຈຶ່ງຂຽນຈົດໝາຍຄືນໄປຂໍໃຫ້ບິລລີຫາຍປ່ວຍໄວໆ ແລ້ວໃຫ້ຄືນໄປຢູ່ເມົ້າເວີນົງທັນທີ ວ່າແຕ່ລາວຍັງໄດ້ ຫຼືວ່າບິລລີຈະຢາກໄປຫາລາວຢູ່ນິວຢອກພຸ້ນ ກໍໄດ້ຄືກັນ ບິລລີໄດ້ຮັບໃຊ້ລາວມາຕັ້ງຫຼາຍປີແລ້ວ ວໍຊິງຕັນຈຶ່ງຍິນດີຈະສນອງຄວາມຮອງຂໍອັນສົມເຫດສົມຜົນໃຫ້ແກ່ບິລລີ.

ກ່ອນທີ່ ວໍຊິງຕັນ ຈະສິ້ນຊີວິດໄປ ລາວໄດ້ຂຽນບອກໄວ້ຂໍໃຫ້ບິລລີແລະພວກຄົນໃຊ້ທີ່ເປັນທາດທັງຫຼາຍຢູ່ເມົ້າເວີນົງ ຈຶ່ງຖືກປ່ອຍໃຫ້ມີອິສຣະໝົດທຸກຄົນ ສ່ວນບິລລີ ທີ່ເຖົ້າແກ່ ແລະບໍ່

ສາມາດຍ່າງໄປມາໄດ້ນັ້ນ ວໍຊິງຕັນໄດ້ສັ່ງໄວ້ວ່າ ຖ້າລາວມັກ ລາວຈະຢູ່ເມົ້າເວີນັງຕໍ່ໄປເທົ່າໃດພຸ້ນກໍໄດ້ ວໍຊິງຕັນຍັງໄດ້ສັ່ງ ເງິນທຸກໆປີ ເພື່ອເອົາໃຫ້ບິລີຊື້ເຄື່ອງກິນແລະເຄື່ອງນຸ່ງຫົ່ມ.

ຄວາມຮັກຄວາມແພງອັນເລິກເຊິ່ງ ລະຫວ່າງວໍຊິງຕັນ ກັບຄົນທີ່ເປັນທາດຂອງລາວນັ້ນ ຍາວນານໄປຈົນເຖິງວັນສຸດ ທ້າຍຂອງຊີວິດລາວ ຕໍ່ໄປຮອດຍາມທີ່ວໍຊິງຕັນຈະສິ້ນໃຈ ມີຜູ້ນຶ່ງຊື່ ກຣິສໂຕເຟີ ໃນຈຳພວກທາດຂອງລາວ ມາຢືນຫຼັ່ງນ້ຳຕາ ສະແດງຄວາມຄິດເຖິງຢູ່ຂ້າງຕຽງຂອງລາວ ວໍຊິງຕັນປາກບໍ່ໄດ້ ວໍຊິງຕັນປາກບໍ່ໄດ້ແລ້ວຍ້ອນຄວາມເຈັບປວດ ມີແຕ່ຍົກມືຊີ້ບອກ ເພື່ອບອກໃຫ້ກຣິສໂຕເຟີ ຮູ້ແລະໃຫ້ໄປນັ່ງຢູ່ໃຫ້ສະບາຍ.

ມີຜູ້ຈຳໄດ້ຢູ່ວ່າ ວໍຊິງຕັນແລະເມັຍຂອງລາວໄດ້ລ້ຽງດູ ເນັນລີ ແລະຢອຣ໌ຊ ວໍຊິງຕັນ ປາກກີ ຄັດຕິດ ຊຶ່ງເປັນລູກຂອງ ແຈກ ຄັດຕິດ ຍາມເອົາພາກັນໄປຫາວໍຊິງຕັນ ໃນປີທີ່ນຶ່ງທີ່ລາວ ເປັນປະທານາທິບໍດີ ທີ່ນິວຢອກ ແນນລີອາຍຸໄດ້ສິບປີແລະຢອຣ໌ຊ ໄດ້ແປດປີ ແນນລີເປັນເດັກນ້ອຍຜູ້ຍິງທີ່ໜ້າຮັກ ແນນລີດີໃຈ ຫຼາຍທີ່ໄດ້ໄປເຫັນເມືອງໃຫຍ່ ແລະວໍຊິງຕັນກໍມັກຊື້ຂອງຕ້ອນມາ ໃຫ້ ພາໄປຍ່າງຫຼິ້ນໄປຊົມມາຫຼາຍ ເມື່ອເວົ້າວຽກການບ້ານເມືອງ ແລ້ວ ວໍຊິງຕັນກໍມັກນັ່ງຟັງສຽງນາງນ້ອຍຮ້ອງເພງມ່ວນໆໃຫ້ຟັງ ລາວເວົ້າໃຫ້ມາກຕາເທື່ອນຶ່ງວ່າ ມາກຕາພາແນນລີເຫຼັ້ນດົນຕຣີ ເປັນເວລາເຫິງໂພດ ວັນລະຫ້າຊົ່ວໂມງທຸກມື້ ໃນທຸກໆເຣື່ອງທີ່ ກ່ຽວກັບພວກລູກຂອງລາວແລ້ວ ມາກຕາດີອົກດີໃຈ ແລະເຮັດ ຕາມໃຈມັກຕໍ່ໄປ.

ໃນລະຍະແປດປີທີ່ວໍຊິງຕັນເປັນປະທານາທິບໍດີນັ້ນ ແນນລີກໍໃຫຍ່ເປັນສາວງາມໜ້າຮັກໜ້າແພງອັ້ນ ພວກຜູ້ບ່າວກໍມີຫຼາຍຄົນມາຫຼິ້ນນຳລາວ ແລະຢາກຂໍລາວໄປເປັນເມັຽ ແຕ່ວ່າ ແນນລີບໍ່ມັກໃຜຈັກຄົນ ນີ້ປາກົດວ່າຜູ້ບ່າວພວກນັ້ນເລີຍບໍ່ໄດໄປກ່ຽວກັບນາງອີກ ວໍຊິງຕັນຈຶ່ງໄດຂຽນໜັງສືໄປບອກເຕືອນແນນລີວ່າ ບໍ່ຕອງຄິດຫຼາຍຫຼືເປັນແຮງໂພດໄປວ່າຈະບໍ່ກ່ຽວຂອງນຳເຣື່ອງມັກເຣື່ອງຮັກນີ້ ເພາະໃນເຣື່ອງມະນຸດຄົນເຮົານີ້ ມັນມີທາງ ທີ່ຈະພາໃຫເກີດເຣື່ອງເປັນຟືນເປັນໄຟນັ້ນໄດຫຼາຍຢ່າງ ຊຶ່ງເຮົາເບິ່ງກັນຢ່າງເພີ່ນໆແລວປາກົດວ່າພັນງຽບພັນຫຼັບເສີຍຢູ່.

ວໍຊິງຕັນເລົ່າບັນຍາຍມານີ້ ແນນແຕ່ເຣື່ອງທີ່ລາວເອງຜ່ານຮູ້ມັກມາໝົດແລວ ບັດນີ້ນກໍພຽງແຕ່ເປັນເຣື່ອງເສົ້າໆເລັກນ້ອຍທີ່ສະທ້ອນຄືນມາ ໃນເມື່ອລາວຄິດພໍວັນເກົ່າວັນຫຼັງແຕຄັ້ງຢູ່ແບນວີວພູນ ຫຼັງຈາກວັນເວລາທີ່ວໍຊິງຕັນເປັນປະທານາທິບໍດີສິ້ນສຸດລົງບໍ່ເທົ່າໃດ ທ່ານບຣາແອນ ແຟຟີກກໍມາຂ່າວໃຫວໍຊິງຕັນຟັງວ່າຕົນຈະກັບໄປປະເທດອັງກິດເປັນເວລາຊົ່ວຄາວ ວໍຊິງຕັນຈະຢາກຝາກຈົດໝາຍນຳລາວໄປຫາຊານລີບໍ? ວໍຊິງຕັນຍິນດີເປັນອັນມາກ ແລ້ວລາວກໍຊອນມາກຕາມາຂຽນຈົດໝາຍຢ່າງຍືດຍາວ ເຕັມແຕຂ່າວຂອງພວກໝູ່ເພື່ອນຫຼາຍຄົນ ໃນຕອນສຸດທ້າຍພູນ ວໍຊິງຕັນຈຶ່ງຂຽນຄວາມຂອງລາວເອງແຖມໃສ່ ລາວຂ່າວວ່າໃນລະຍະ ໘໔ ປີທີ່ຜ່ານມານັ້ນໄດ້ມີການປ່ຽນແປງເກີດຂຶ້ນຫຼາຍສິ່ງຫຼາຍຢ່າງ ການປ່ຽນແປງອັນໜວງຫຼາຍເຫຼົ່ານັ້ນ ທີ່ມີນກ່ຽວກັບຜູ້ຄົນ ແລະສິ່ງຂອງບໍ່ສາມາດຈະເອົາມາເລົ່າຫຼືຂຽນ

ອອກໃຫ້ຮູ້ໃຫ້ເຫັນໃນຈົດໝາຍນີ້ໝົດໄດ້ ເຣື່ອງທັງໝົດທີ່ຜ່ານມາແລ້ວນັ້ນ ບໍ່ມີຫວັງຈະສາມາດລືບລ້າງໄດ້ "ວັນເວລາອັນແສນສຸກ ຢ່າງສຸດຫົວອົກຫົວໃຈຂອງຊີວິດຂອງຂ້ອຍ ທີ່ຂ້ອຍຮູ້ສຶກຊາບຊຶ້ງເປັນອັນມາກເວລາຂ້ອຍຢູ່ໃກ້ເຈົ້າ".

ວໍຊິງຕັນໄດ້ຂໍໃຫ້ຊານລີກັບຄືນມາເຮືອນເພື່ອກັນພາມ່ວນຊື່ນນຳໝູ່ເພື່ອນແລະຄອບຄົວອີກ ແຕ່ວ່າຊານລີຫາກຕັດສິນໃຈຢູ່ອັງກິດພຸ້ນ ໄດ້ຫາສິບປີຕໍ່ມາ ເວລາຈົດໝາຍຂອງນາງຖືກເອົາຄືນມາທີ່ສະຫະຣັດ ເຣື່ອງລັບກ່ຽວກັບຄວາມມັກຄວາມຮັກຂອງວໍຊິງຕັນຈຶ່ງເກີດເປັນເຣື່ອງຕື່ນເຕັ້ນຂອງຄົນທັງຊາດ.

ໃນສະຖານໃດກໍດີ ຄວາມຄິດຮອດຄິດເຖິງທີ່ວໍຊິງຕັນມີຕໍ່ຊານລີ ແລະເຣື່ອງເກົ່າເຣື່ອງໜັງ ທີ່ຜ່ານມານັ້ນ ບໍ່ໄດ້ປ່ຽນຄວາມຮັກຂອງລາວ ທີ່ມີຕໍ່ມາກູຕາເລີຍ ຊຶ່ງຄິດເບິ່ງແລ້ວວ່າຄວາມຮັກອັນນັ້ນໄດ້ ໜັກແໜ້ນເລິກເຊິ່ງອີກຫຼາຍ ໃນປີທີ່ລາວເປັນປະທານາທິບໍດີນັ້ນ ຄວາມເປັນຜູ້ຍິງທີ່ເຂັ້ມແຂງ ໃນຍາມມີເສິກສົງຄາມ ເປັນທາງນຶ່ງທີ່ມາກູຕາ ສະແດງອອກໃຫ້ຮູ້ເຖິງຄວາມເດັດດ່ຽວຂອງນາງ ເພື່ອຊ່ວຍເຫຼືອຊວນຊູຜົວ ບັນລຸຊີວິດການຈະບໍຣິຫານວຽກບ້ານການເມືອງ ວໍຊິງຕັນຄິດວ່າຢາກໃຫ້ມີໜ້າມີກຽດອັນສົມຄວນແກ່ສຳນັກງານຂອງປະທານາທິບໍດີ ແຕ່ວ່າໃນຍາມມີງານກິນລ້ຽງຕ່າງໆແລ້ວ ວໍຊິງຕັນຊ້ຳຖືກຢູ່ຫ່າງໄກຢູ່ເລື້ອຍເລີຍເປັນແຕ່ໂອກາດທີ່ທຳໄດ້ຍາກ ໃນເວລາເຊັ່ນນັ້ນມາກູຕາຈຶ່ງໄດ້ຊ່ວຍຜົວ ດ້ວຍການແນະນຳຫຼືຮັບຕ້ອນແຂກຄົນສຳຄັນ ດ້ວຍວິທີການອັນຮຽບຮ້ອຍແບບລາວເອງ.

ມາກຕາໄດ້ຊ່ວຍຊີວິດ ວໍຊິງຕັນໄວ້ໄດ້ສອງຄັ້ງ ທີ່ລາວປ່ອຍເກືອບບໍ່ຕລອດຊີວິດເທື່ອໜຶ່ງແມ່ນຍາມລາວຂຶ້ນເປັນປະທານາທິບໍດີໃໝ່ໆ ລາວກໍບໍ່ຢູ່ສະບາຍຕັ້ງຫຼາຍໆອາທິດ ເຈັບປວດຫຼາຍທັງເວັນແລະຄືນ ສອງປີຕໍ່ມາກໍເຈັບອີກ ແລະມີເທື່ອນຶ່ງທ່ານໝໍຈີນໄດ້ບອກວ່າ ລາວເກືອບຕາຍຍ້ອນ ເທື່ອນັ້ນກໍແມ່ນມາກຕາອີກທີ່ຊ່ວຍເອົາລາວໃຫ້ມີຊີວິດຄືນມາໄດ້.

ໃນລະຫວ່າງຫຼາຍໆປີທີ່ວໍຊິງຕັນເປັນປະທານາທິບໍດີຢູ່ນັ້ນ ພວກທະຫານເຖົ້າທະຫານເກົ່າ ກໍພາກັນມາຢ້ຽມຢາມລາວຢູ່ເປັນນິດ ດ້ວຍຄິດຮອດແລະຮູ້ວ່າພວກຕົນຈະຖືກຮັບຕ້ອນດີ ຈາກນາຍເກົ່າຂອງຕົນຕາມເຄີຍ ເຖິງແມ່ນວ່າ ວໍຊິງຕັນຈະບໍ່ມີເວລາພົບໜ້າພໍ່ຕາເຂົາເຈົ້າທົ່ວທຸກຄົນກໍຕາມ ວໍຊິງຕັນຍັງໄດ້ສັ່ງໃຫ້ຫາເຂົ້າສູ່ເຂົາເຈົ້າກິນ ແລະເອົາເງິນໃຫ້ເພື່ອສົ່ງເຂົາເຈົ້າເມືອ ມື້ນຶ່ງມີທະຫານຜູ້ນຶ່ງມາຮອດເວລາວໍຊິງຕັນກິນລ້ຽງກັນໃນງານສຳຄັນ ຜູ້ເຝົ້າຍາມປະຕູໄດ້ຢຸດລາວໄວ້ບໍ່ໃຫ້ເຂົ້າໄປໃນ ແລ້ວບອກກັບລາວດີໆວ່າໃຫ້ຖ້າຢູ່ທາງນອກ ຫຼາຍຊົ່ວໂມງຜ່ານໄປໃຜກໍເມືອໝົດແລ້ວ ວໍຊິງຕັນກໍຫວ່າງວ່າຈະໄປນອນແລ້ວ ແຕ່ທະຫານຍັງຖ້າຢູ່ທີ່ນັ້ນ ເມື່ອຊາບວ່າມີທະຫານຄອຍຖ້າພົບລາວຢູ່ແຕ່ຫົວຄ່ຳພູ້ນຈົນປານນີ້ ວໍຊິງຕັນຈຶ່ງເອີ້ນໃຫ້ເຂົ້າມາພົບ ແລະລົມກັນໄປຮອດເຣື່ອງຄາວຢູ່ສນາມຣົບນຳກັນຈົນເດິກ ເວລາຈາກກັນ ປະທານາທິບໍດີກໍເອົາເງິນໃຫ້ຜູ້ມາຢາມຕາມຄຳຂໍຂອງລາວ ເວລາລາວອອກພົ້ນປະຕູໄປ ທະຫານຜູ້ນັ້ນຈຶ່ງເວົ້າຕໍ່ນາຍເຝົ້າປະຕູວ່າ ລາວຮູ້ດີວ່າທ່ານນາຍພົນຈະບໍ່ລືມທະຫານ

ເກົ່າຈັກເທື່ອ.

ໃນລະຫວ່າງຫຼາຍເດືອນ ກ່ອນເວລາຈະລາອອກຈາກໜ້າທີ່ເປັນປະທານາທິບໍດີ ວໍຊິງຕັນຊ້ຳມາເປັນທຸກເປັນຮ້ອນນຳເຣື່ອງທີ່ປະຊາຊົນບໍ່ດີໃຈ ກ່ຽວກັບເຣື່ອງສົນຍາການຄ້າທີ່ຈອນ ເຈ ໄດ ເຊັນຊື່ກັບປະເທດອັງກິດ ຕາມຄວາມເຫັນຂອງທ່ານແຈບເຟີຊັນແລະພັກພວກຂອງລາວ ເຫັນວ່າ ເຈ ໄດສເນີໃຫ້ກຳໄລຝ່າຍອັງກິດຫຼາຍໂພດ ເຣື່ອງນີ້ກໍ່ເຫັນວ່າເປັນຄວາມຈິງຢູ່ບາງສ່ວນ ແຕ່ຕາມທີ່ວໍຊິງຕັນຊຶ່ງເປັນຝ່າຍຄິດກົງໄປກົງມານັ້ນເຫັນວ່າ ເໝາະສົມດີແລ້ວ ຊຶ່ງວ່າເປັນເຣື່ອງທີ່ປະເທດບໍ່ຕ້ອງການເລີຍ.

ຕໍ່ມາ ຈຶ່ງເຫັນເປັນຄວາມຈິງວ່າ ວໍຊິງຕັນເວົ້າຖືກ ເນື່ອງຈາກວ່າ ສົນຍາການຄ້າ ໄດ້ກາຍເປັນຜົນດີແກ່ປະເທດ ຜົນອັນດີທີ່ເກີດມີຈາກສົນຍາເຣັດກັນນຳພວກອັງກິດນັ້ນ ບໍ່ດົນໄດ້ສະແດງໃຫ້ພວກທີ່ຂຽນ ແລະວິຈານຄວາມບໍ່ດີໃຫ້ວໍຊິງຕັນນັ້ນຮູ້ວ່າພວກຕົນໄດ້ເຣັດຜິດໄປ. ມັນເປັນຄວາມຈິງແທ້ທີ່ວ່າ ຄົນຜູ້ຮັກສາຊື່ສຽງຂອງຕົນໄວ້ຄືວໍຊິງຕັນນີ້ ຕ້ອງຮູ້ສຶກເປັນທຸກເປັນຮ້ອນນຳທັນທີນຳເຣື່ອງອັນຈະພາໃຫ້ເກີດຄວາມບໍ່ດີຂຶ້ນ. ກ່ຽວກັບເຣື່ອງຫຍຸ້ງຍາກທັງຫຼາຍເຫຼົ່ານັ້ນ ວໍຊິງຕັນພະຍາຍາມຫາຫົນທາງແລະໂອກາດລະວັງບມັນໃຫ້ຮຽບຮ້ອຍໄປໃນຍາມເປັນປະທານາທິບໍດີຢູ່ນັ້ນ ດ້ວຍທາງສັນຕິວິທີອັນເລັກອັນນ້ອຍ ຊຶ່ງຜູ້ຄົນບໍ່ຄ່ອຍໄດ້ຮູ້ໄດ້ສັງເກດເທົ່າໃດ.

ແມ່ນໃນປີສຸດທ້າຍຂອງປະທານາທິບໍດີນັ້ນເອງ ມີນັກສິລປິນອະເມຣິກັນຜູ້ນຶ່ງຊື່ວ່າ ກິນເບີດ ຈະຕູອາດ ໄດ້ແຕ້ມຮູບອັນສອງຄືຂອງວໍຊິງຕັນໄວ້ ຮູບນີ້ເປັນຮູບທີ່ເຮົາເຫັນອອກໃນເງິນໂດລາອະເມຣິກັນນັ້ນເອງ ມັນເປັນຮູບທີ່ວ່າບໍ່ໄດ້ເລືອກລັກປານໃດ ຊຶ່ງຄອບຄົວຂອງວໍຊິງຕັນບໍ່ໄດ້ນັບວ່າ ເປັນຮູບທີ່ຄ້າຍລາວແທ້ ຢ່າງວ່າຕາສອງເບື້ອງນັ້ນ ມີຫນ້ອຍນຶ່ງສະແດງທ່າເສົ້າໂພດ ມັນບໍ່ໄດ້ "ຄວາມຫມາຍຢ່າງທັນໃຈ" ເຫມືອນຂອງຈິງຖ້າຈະແທກໃຫ້ລັກແນ່ແລ້ວ ໂດຍສະເພາະ ລະຍະລະຫວ່າງດັງແລະສ່ວນລຸ່ມຂອງຫນ້າແລ້ວ ແມ່ນບໍ່ຖືກຕ້ອງ.

ທ່ານຈະຕູອາດ ຊຶ່ງເປັນຜູ້ສາມາດບອກເຖິງນິສັຍໃຈຄໍຂອງຄົນໄດ້ນັ້ນ ໄດ້ສັງເກດເບິ່ງວໍຊິງຕັນ ຢ່າງລະອຽດແລ້ວໃນເວລາລາວແຕ້ມ ລາວບອກວ່າ ສິ່ງທີ່ລາວສາມາດອ່ານອອກໃນໃບຫນ້າຂອງປະທານາທິບໍດີກໍຄື ຣັກຊິງ ອັນມີຄວາມຫມາຍເຖິງ "ຄວາມເຂັ້ມແຂງຢ່າງບໍ່ມີໃຜລົບຫນ້າໄດ້" ຖ້າແມ່ນວ່າ ວໍຊິງຕັນ ຫາກຖືກໄປມີກໍາເນີດເກີດຢູ່ໃນປ່າໃນດົງ ລາວກໍຄົງເປັນເຈົ້າແຫ່ງຄົນຢູ່ໃນປ່າດົງນັ້ນ ນາງເຈນຈະຕູອາດ ຊຶ່ງເປັນລູກສາວຂອງຊ່າງແຕ້ມຮູບໄດ້ເລົ່າສູ່ຫລາຍຜູ້ຫລາຍຄົນຟັງ ເຖິງເຣື່ອງວ່າພໍ່ຂອງລາວມີຄວາມເຊື່ອຖືອັນໃດ ວໍຊິງຕັນໄດ້ຍິນເຣື່ອງນີ້ນໍາເພື່ອນເກົ່າທີ່ເຄີຍຢູ່ກອງທັບມານໍາກັນ ຊື່ວ່າ ໄລຮອດ ແຮນຣີລີ ທ່ານລີ ເລົ່າສູ່ຟັງວ່າລາວໄດ້ເຫັນຮູບຂອງວໍຊິງຕັນຊຶ່ງ ເບິ່ງແລ້ວແລ້ວຄືກັນກັບລາວຫລາຍ ລາວວ່າຈະຕູອາດໄດ້ລືມສູ່ລາວຟັງວ່າ ໃນທ່າທີຂອງວໍຊິງຕັນມັນເຕັມແຕ່ຄວາມຕຶງຄຽດ ນາງມາກ

ຕາ ບໍ່ຄ່ອຍດີໃຈນຳຄວາມບອກເລົ່າຂອງຊະຕູອາດນັ້ນພຽງໃດ. ແຕ່ຕໍ່ມາ ທ່ານລີຈິ້ງບອກນາງວ່າ "ລາວຕື່ນໃສ່ວ່າ ທ່ານປະທານາທິບໍດີມີທ່າທີຕຶງຄຽດຈິງ ແຕ່ທ່ານຫາກຊ່າງມີແລະຊ່າງຄອບຊຸມມັນໄດ້ຢ່າງອັສຈັນແທ້".

ວໍຊິງຕັນໄດ້ຍິນ ກໍຍິ້ມຮັບ ແລະເວົ້າວ່າ "ລາວເວົ້າຖືກແລ້ວ".

ໃນວັນສຸດທ້າຍຣາຊການ ຂອງປະທານາທິບໍດີ ຍັງມີນັກຂ່າວຂຽນຈົດໝາຍເຫດຜູ້ນຶ່ງ ຊຶ່ງບໍ່ດີໃຈເພາະວ່າວໍຊິງຕັນບໍ່ໄດ້ເຂົ້າຮ່ວມກັບຝ່າຍຝຣັ່ງເສດໃນຍາມນັ້ນ ໄດ້ຂຽນຂ່າວສົ່ງໄປເພື່ອຕໍ່ຕ້ານວໍຊິງຕັນອີກເທື່ອນຶ່ງ ຂ່າວຂຽນບອກວ່າ ຄົນຜູ້ທີ່ເປັນຕົ້ນເຫດສ້າງເຣື່ອງບໍ່ດີຕ່າງໆແກ່ປະເທດຊາດນັ້ນ ດຽວນີ້ໄດ້ກາຍເປັນຄົນບໍ່ມີຄວາມສຳຄັນຫຍັງລື່ນຄົນທັມມະດາສາມັນນີ້ແລ້ວ ລາວຈະບໍ່ມີສິດຫຍັງອີກອັນຈະເປັນໂອກາດໃຫ້ລາວໄດ້ທຳຄວາມເສື່ອມເສັຽໃຫ້ແກ່ສະຫະຣັດຕໍ່ໄປແລ້ວ ລາວຂຽນວ່າ ວັນເວລາອັນສງ່າຜ່າເຜີຍອັນເບີກບານສຳຣານໃຈ ອັນເຮົາຖ້າເຮົາຄອຍນັ້ນ "ບັດນີ້ໄດ້ມາເຖິງແລ້ວ".

ຖ້າວ່າ ພົງສາວະດານຫາກຂຽນໂດຍນັກຂຽນຂ່າວຈົດໝາຍເຫດດັ່ງນັ້ນ ຄົນອາດເຊື່ອວ່າສິ່ງທີ່ວໍຊິງຕັນໄດ້ລະແວງລະວັງນັ້ນ ໄດ້ເກີດໄດ້ເປັນຄວາມຈິງຜ່ານມາແທ້ ສ່ວນຄວາມລືຊາປາກົດຍົດສັກຊື່ສຽງອັນດີ ທີ່ລາວເຄີຍມີປະດັບກາຍມາຈາກຫຼາຍສນາມຣົບ ເພື່ອການປະຕິວັດພາຍຫຼັງພູມ ໄດ້ເກີດກັບກາຍຫາຍສູນໄປ ໃນຄວາມມືດມົນອົນທະການ ດ້ານການເມືອງຂອງໂລກ

ແລ້ວ ແຕ່ວ່າພົງສາວະດານນີ້ໄດ້ຈາຣຶກໄວ້ຫຼາຍແຫ່ງຢູ່ ບ່ອນຈາ
ຣຶກທີ່ສຳຄັນນັ້ນແມ່ນມັນຊ້ວຍຢູ່ໃນສ່ວນເລິກຂອງຈິດໃຈຄົນພຸ້ນ ໃນ
ວັນສຸດທ້າຍ ທີ່ຜູ້ຄົນໂຮມກັນ ມາທຳການຄາຣະວະສົ່ງລາຢອ໌ຣຊ
ວໍຊິງຕັນຕາມທາງທີ່ຄວນນັ້ນ ເປັນພິທີທີ່ຖືກຕ້ອງແກ່ທັງສອງກ້ຳ
ສອງຝ່າຍແທ້ແລ້ວ.

ວໍຊິງຕັນກັບເມືອເຮືອນແລ້ວ ກໍເກັບເອກສານມ້ຽນໄວ້
ເປັນລະບຽບຈົບງາມ ລາວໄປຫາງຫາເພື່ອຈະກັບເມືອຢູ່ເມົາ
ເວີນົງ ຫວັງຈະໄປເວົ້ານຳວຽກໄຮການນາ ຈົນເຖິງວັນສິ້ນຊີ
ວິດຂອງລາວໃນປີ ໑໗໙໙ ກ່ອນຈະຈາກໄປລາວໄດ້ໄປຢ້ຽມ
ຢາມປະທານາທິບໍດີຄົນໃໝ່ ທ່ານຈອນ ອາດັມ ຜູ້ທີ່ຢູ່ໃກ້ຄຽງ
ກັນແລະເພື່ອອວຍຊັຍໃຫ້ພອນແກ່ກັນແລະກັນ ບັດນີ້ລາວ ກໍເປັນ
ຢອ໌ຣຊ ວໍຊິງຕັນ ຄົນທັມມະດາ ບໍ່ແມ່ນທ່ານນາຍພົນ ບໍ່ແມ່ນປະ
ທານາທິບໍດີ ແລ້ວ ແລະຕໍ່ໄປກໍບໍ່ມີການຈຳເປັນໃຫ້ຜູ້ໃດຈະຕ້ອງ
ໄດ້ເຮັດອັນໃດ ຫຼືເວົ້າອັນໃດນຳລາວ ດ້ວຍຄວາມລະມັດລະວັງ
ຫຼືເກງອົກເກງໃຈເໝືອນຄາວກ່ອນພຸ້ນ ບຶດນຶ່ງລາວງວກຫຼັງໄປ
ເລີຍ ເຫັນປະຊາຊົນອັ່ງອໍກັນເຕັມຖນົນ ຍ່າງນຳຫຼັງກັນມາຢ່າງ
ງຽບໆ ສຸດຕາມເສັ້ນທາງ.

ວໍຊິງຕັນ ຈຶ່ງຕັ້ງຂວຍໜ້າ ມາຫາພວກປະຊາຊົນໝູ່ນັ້ນ
ທັງນ້ຳຕາໄຫຼອອກ ລາວຕັ້ງໃຈຢືນຢູ່ຢ່າງສງົບເປັນຊົ່ວຣະຍະນຶ່ງ
ຢູ່ຕໍ່ໜ້າພວກປະຊາຊົນ ຕໍ່ໄປລາວກໍຍ່າງຜ່ານປະຕູເຂົ້າໄປຂ້າງ
ໃນທຳນຽບ ພໍດີຫວິດຫຼັງປະຕູກໍງັບເຂົ້າ ພວກຜູ້ຄົນທັງຫຼາຍທີ່ອ້ອງ
ອໍຢູ່ນັ້ນ ຕ່າງກໍພາກັນຈົ່ມຫາຈາຣອດ ຄ່ອຍດັງສນັ່ນຂຶ້ນຕາມໆກັນ

ໄປ.

ນັ້ນເປັນສຽງດັງສນັ່ນອັນໂສກເສົ້າ ຄິດຮູ້ອດຄິດູເຖິງ ຂອງປະຊາຊົນທີ່ພາກັນມາສົ່ງລາຄາຣະວະກັນ ກັບຜູ້ຮັກ ຜູ້ແພງ ອັນສູດທີ່ວໃຈຂອງພວກເຂົາເຈົ້າ.



74-061 (7